# ເຈົ້າອະນຸ 1767 - 1829

# ປະຊາຊົນລາວ ແລະ ອາຊີອາຄະເນ

## ( ເລື່ອງເກົ່າ, ບັນຫາໃໝ່ )

ໂດຍ: ດຣ. ມະຍຸຣີ ແລະ ດຣ. ເຜີຍພັນ ເຫງົ້າສີວັທນ໌



ຄຳນຳ
ຂອງ
ທ່ານ ສີຊະນະ ສີສານ
ປະທານຄະນະກຳມະການ
ຄົ້ນຄວ້າວິທະຍາສາດສັງຄົມແຫ່ງຊາດ

ສຳນັກພິມຈຳໜ່າຍ ສ.ປ.ປ.ລາວ.

1988

# ເຈົ້າອະນຸ 1767 - 1829

## ປະຊາຊົນລາວ ແລະ ອາຊີອາຄະເນ

### ( ເລື່ອງເກົ່າ, ບັນຫາໃໝ່ )

ໂດຍ : ດຣ. ມະຍຸຣີ ແລະ ດຣ. ເຜີຍພັນ ເຫງົ້າສີວັທນ໌

ສຳນັກພິມຈຳໜ່າຍ ສ.ປ.ປ.ລາວ

ວຽງຈັນ, ສິງຫາ 1988

ເຈົ້າອະນຸ 1767 - 1829

ປະຊາຊົນລາວ ແລະ ອາຊີອາຄະເນ

( ເລື່ອງ ເກົ່າ , ບັນຫາໃໝ່ )

ພິມຄັ້ງທີ່ ໜຶ່ງ ຈຳນວນ 5.000 ຫົວ

ພິມແລ້ວ ວັນທີ່ 26 ສິງຫາ 1988

ອະນຸຍາດພິມ ເລກທີ່ 027/ພ.ຈ.ໝ. ສິງຫາ 1988



ສະຫງວນລິຂະສິດ.



ພິມທີ່ ໂຮງພິມແຫ່ງລັດ

# ຄຳນຳ ຂອງ ສີຊະນະສີສານ

ຂ້າພະເຈົ້າໄດ້ອ່ານຮ່າງປຶ້ມເຈົ້າອະນຸ ( ໑໗໖໗-໑໘໒໙), ປະຊາຊົນລາວ ແລະ ອາຊີອາຄະເນ ( ໂຣນພິດສັ້ນ ) ທີ່ຂຽນໂດຍ ດຣ. ມະຍຸຣີ ແລະດຣ. ເພັຍພັນ ເຫງົ້າສີວັທນ໌. ປຶ້ມຫົວນີ້ຜູ້ຂຽນໄດ້ລົງເລິກໃນການຄົ້ນຄວ້າ, ພິສູດຄວາມຈິງ ກ່ຽວກັບເລື່ອງຂອງເຈົ້າອະນຸທີ່ໄດ້ນຳພາປະຊາຊົນລາວກອບກູ້ ອິດສະຫຼະພາບຈາກສະຫຍາມ ກ່ອນໜ້ານີ້ ໑໖໑ ປີ. ໃນການຂຽນປຶ້ມຫົວນີ້ໂດຍທົ່ວໄປແລ້ວດຣ. ມະຍຸຣີ ແລະດຣ. ເພີຍພັນເຫງົ້າສີວັທນ໌ໄດ້ອ້າງອີງໃສ່ເອກະສານທີ່ພວກນັກຂຽນຊາວຕະວັນຕົກ, ພວກນັກຂຽນໄທ, ພວກນັກຂຽນຫວຽດນາມ, ພວກນັກຂຽນລາວ , ສະເພາະຢ່າງຍິ່ງແມ່ນອ້າງອີງໃສ່ພວກນັກຂຽນຊາວຕະວັນຕົກທີ່ມີໜ້າຢູ່ບາງກອກໃນສະໄໝເຈົ້າອະນຸນຳພາປະຊາຊົນລາວກອບກູ້ອິດສະຫຼະພາບ. ສ່ວນດຣ.ມະຍຸຣີ ແລະ ດຣ. ເພີຍພັນ ເຫງົ້າສີວັທນ໌ ພຽງແຕ່ເຮັດໜ້າທີ່ ບັນນາທິການເທົ່ານັ້ນ. ຈາກນັ້ນປຶ້ມຫົວນີ້ ຈຶ່ງເປັນທີ່ເຊື່ອຖືໄດ້ວ່າເປັນເອກະສານທີ່ເປັນຄວາມຈິງ.

ໃນໄລຍະທີ່ຜ່ານມາ ໄດ້ມີນັກປະຫວັດສາດຊາວຕະວັນຕົກ , ໄທ, ລາວ ໄດ້ຂຽນກ່ຽວກັບປະຫວັດສາດລາວຫຼືຂຽນໃນແງ່ໃດແງ່ໜຶ່ງຂອງປະຫວັດສາດລາວ. ແຕ່ໃນນັ້ນກໍມີຈຳນວນບໍ່ນ້ອຍທີ່ໄດ້ຂຽນໄປຕາມຄວາມເຫັນອັດຕະວິໄສຂອງເຂົາ ຊຶ່ງບໍ່ຖືກກັບຄວາມເປັນຈິງ, ຍິ່ງໄປກວ່ານັ້ນຍັງພິກປິ້ນປະຫວັດສາດຂອງລາວອີກຊ້ຳ

ມີປັດຊະຍາເມທີຜູ້ໜຶ່ງໄດ້ເວົ້າວ່າ :" ການຂຽນ ປະຫວັດສາດຕ້ອງອີງໃສ່ເອກະສານທີ່ພິສູດວ່າມີຄວາມຈິງ ແລະ ຄວາມຈິງນັ້ນກໍ່ບໍ່ຕ້ອງໄປຄຳນຶງວ່າມັນຈະຮັບໃຊ້ຊົນຊັ້ນໃດ ".

ດ້ວຍເຫດນັ້ນ ຈຶ່ງເຫັນວ່າການຄົ້ນຄ້ວາຂອງດຣ.ມະຍຸຣີແລະ ດຣ. ເພີຍພັນ ເຫງົ້າສີວັທນ໌ ເພື່ອຫາຄວາມຈິງໃນເລື່ອງ ເຈົ້າອະນຸນັ້ນໄດ້ເປັນການຄົ້ນຄ້ວາທີ່ມີຄຸນຄ່າສູງ ຊຶ່ງຄວນແກ່ການ ຊົມເຊີຍເປັນຢ່າງຍິ່ງຂ້າພະເຈົ້າເຫັນວ່າປຶ້ມຫົວນີ້ ບໍ່ສະເພາະແຕ່ຈະເປັນປະໂຫຍດແກ່ຜູ້ທີ່ສົນໃຈໃນການຄົ້ນຄ້ວາປະຫວັດສາດລາວ , ແຕ່ຍັງໃຫ້ຄວາມພາກພູມໃຈແກ່ນັກອ່ານຊາວລາວທີ່ໄດ້ຮູ້ແຈ້ງເຖິງວິລະບຸລຸດແຫ່ງຊາດຂອງຕົນ, ຮູ້ແຈ້ງເຖິງຄວາມພິລະ ອາດຫານຂອງປະຊາຊົນລາວທີ່ຍອມຕາຍດີກວ່າທີ່ຈະເປັນຂ້ອຍຂ້າໃຫ້ ຕ່າງຊາດ.

ເຈົ້າອະນຸ, ເຈົ້າລາຊວົງໄດ້ລ່ວງລັບໄປແລ້ວ, ແຕ່ ພາລະກິດຂອງພວກເພິ່ນຍັງຄົງຢືນຢົງຢູ່ນຳພວກເຮົາ. ມູນເຊື້ອ ແຫ່ງການຕໍ່ສູ້ອັນພິລະອາດຫານຂອງບັນພະບຸລຸດທີ່ໄດ້ຕົກທອດມາສູ່ພວກເຮົານັ້ນ ຈະບໍ່ສູນຫາຍໄປຈັກເທື່ອ, ມັນຈະຢູ່ນຳພວກເຮົາ ໄປເທົ່າຊົ່ວເຊັ່ນລູກຫລານເຫລັນ, ອະນຸຊົນຮຸ່ນຫລັງ ແລະກໍ່ຍ້ອນມູນເຊື້ອອັນນັ້ນ, ປະຊາຊົນລາວຈຶ່ງໄດ້ມີຄວາມພິລະອາດຫານ ໃນການຕໍ່ຕ້ານພວກລ່າເມືອງຂຶ້ນຝະລັ່ງ, ໃນການກູ້ຊາດຕ້ານອະເມລິກາຜູ້ຮຸກຮານ ຈົນສາມາດປົດປ່ອຍທົ່ວປະເທດ ແລະ ກໍ່ຕັ້ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວຂຶ້ນ. ປະຈຸບັນ ສາທາ

ລະບະລັດປະຊາທິປະໄຕປະຊາຊົນລາວໄດ້ເປັນພາຄີຂອງ ວົງຄະນາຍາດບັນດາປະເທດສັງຄົມນິຍົມ, ເປັນພາຄີຂອງ ວົງຄະນາຍາດບັນດາປະຊາຊາດໃນໂລກຢ່າງສົມກຽດ. ໃນຂະບວນ ແຫ່ງການສ້າງສາປະເທດຊາດ, ເຖິງແມ່ນວ່າຈະມີອຸປະສັກ ແລະ ຄວາມຍາກລຳບາກຫລາຍປະການ, ແຕ່ປະຊາຊົນລາວກໍ່ມີອະນາຄົດອັນແຈ່ມໃສ .

ວຽງຈັນ, ວັນທີ ໑໖ ເມສາ ໑໙໘໘

ສີຊະນະ ສີສານ
ປະທານຄະນະກຳມະການຄົ້ນຄວ້າ
ວິທະຍາສາດສັງຄົມແຫ່ງຊາດ.

# ສາລະບານ

ໜ້າ


- ຄຳນຳຂອງ ທ່ານ ສີຊະນະ ສີສານ, ປະທານ ຄະນະ ກຳມະການຄົ້ນຄວ້າວິທະຍາສາດສັງຄົມແຫ່ງຊາດ........1
- ສາລະບານ ..............................4

1- ເບື້ອງຫລັງຂອງສົງຄາມກັບສູນເຊື້ອຊາດລາວທີ່ສະຫຍາມໄດ້ກໍ່ຂຶ້ນໃນປີ ໑໘໔໗ ........................6

( ເອກະສານອ້າງອີງຂອງບົດ "ເບື້ອງຫລັງຂອງສົງຄາມກັບສູນເຊື້ອຊາດລາວທີ່ສະຫຍາມໄດ້ກໍ່ຂຶ້ນໃນປີ ໑໘໔໗ )...39

2- ໝາກໄມ້ ບໍ່ຫ່ອນຫລົ່ນໄກກົກ ..................69

3- ມະຫາອຳນາດໂລກແລະການເມືອງໂຮງເຂດ. ການພົວພັນ ແບບສານຫລ່ຽມລະຫວ່າງອັງກິດກັບບາງກອກແລະປະຊາຊົນລາວໃນຊ່ວງ ເວລາທີ່ ຈອນ ຄຣາເຟີດ ( John CRAWFURD) (1825-1826) ແລະເຮນລີ ເບີກເນ ( Henry BURNEY ) (1825 - 1826) ຖືກສົ່ງມາເປັນທູດຢູ່ບາງກອກ ( ສະຫຍາມ )..................78

- ເອກະສານອ້າງອີງຂອງບົດ " ມະຫາອຳນາດໂລກ ..108

4- ຣາວຫຽນເວັດສີສະເກດ ......................138

- ເອກະສານອ້າງອີງ ຂອງບົດ " ຣາວຫຽນ ..." ..152

- ຮູບປະກອບ : ..............................

1)- ແຜນທີ່ ຂອງແຫລມອິນດູຈີນ ສະໄໝ ເຈົ້າອະນຸ, ແຕ້ມໂດຍ ຣອນເອາ ອັງກິດ ແຊມສ ໂລວ ໃນ ປີ ໑໘໒໔-໑໘໒໕ ....................18
2)- ແຜນທີ່ການເມືອງຂອງທະວີບອາຊີອາຄະເນໃນຕົ້ນ ສະຕະວັດທີ ໑໙ ....................19
3)- ແຜນທີ່ຍຸດທະສາດທີ່ກອງທັບບາງກອກໃຊ້ເພື່ອບຸກລຸກ ຮຸກຮານ ປະຊາຊົນລາວໃນປີ ໑໘໒໗ ............31
4)- ພະແກ້ວມໍລະກົດ ....................33
5)- ສະລ່ຽງຊ້າງທີ່ເຈົ້າອະນຸສົ່ງເຖິງເຈົ້າຊີວິດຫລວງພຸະບາງ ເພື່ອຊັກຊວນໃຫ້ພ້ອມກັນຕ້ານການຍຶດຄອງແລະແຜ່ອານາ ເຂດຂອງສະຫຍາມ ....................34
6)- ເຈົ້າລາຊະວົງສູ້ກັບຈອມທັບໄທພະຍາບໍດິນ..........74
7)- ຄຶນລາວ ....................75
8)- ຮາວຫຽນວັດສີສະເກດ ....................139

24/VII
ຫ້າມຈຳໜ່າຍ

## 1. ເບື້ອງຫລັງຂອງສົງຄາມດັບສູບເຊື້ອຊາດລາວທີ່ສະຫຍາມໄດ້ກໍ່ຂຶ້ນໃນປີ 1827

<u>ໝາຍເຫດ</u> :

- ບົດນີ້ ດຣ. ມະຍຸຣີ ເຫງົ້າສີວັດ ໄດ້ເອົາໄປສະເໜີ ເປັນພາສາອັງກິດທີ່ກອງປະຊຸມສາກົນທີ່ມະຫາວິທະຍາໄລແຫ່ງຊາດອົດສະຕາລີ ທີ່ ແຄນເບລາ ໃນວັນທີ ໙-໖ ກໍລະກົດ ປີ ໑໙໘໗ ກ່ຽວກັບ " ການຄົ້ນຄວ້າໄທ ".
- ບົດນີ້ ຍັງຈະຖືກພິມເປັນພາສາຝະລັ່ງຢູ່ໃນ ວາລະສານ

" ຟຣັ່ງເອີ-ອາຊີ " (France-Asie) ທີ່ມີສຳນັກຕັ້ງຢູ່ ປາຣີ ( ນະຄອນຫລວງ ຟະລັ່ງ ) ແລະໂຕກຽວ ( ຍີ່ປຸ່ນ ); ແລະ ຍັງຈະຖືກພິມເປັນພາສາໄທຢູ່ໃນວາລະສານ " ສິລະປະ -ວັດທະນະທຳ " ທີ່ບາງກອກ, ໄທ. ນອກຈາກນັ້ນຍັງຈະໄດ້ ພິມເປັນພາສາອັງກິດຢູ່ໃນວາລະສານກ່ຽວກັບປະຫວັດສາດອາຊີ ອາຄະເນ.

- ບົດນີ້ຍັງຖືກເອົາໄປເຜີຍແຜ່ ຢູ່ທີ່ມະຫາວິທະຍາໄລ ປາຣີ (ນະຄອນຫລວງ ຝລັ່ງເສດ ໃນວັນທີ ໓/໖/໑໙໘໘ .

ໃນຕົ້ນສະຕະວັດ ທີ ໑໙ ເມືອງວຽງຈັນເປັນນະຄອນຫລວງ ທີ່ຮຸ່ງເຮືອງເຫລືອງເຫລື້ອມ. ຈອນ ຄຣາເຟີດ(john CRAWFURD) ທູດອັງກິດທີ່ເຂົ້າມາເຈລະຈາສັນຍາຢູ່ບາງກອກໃນປີ ໑໘໒໒ , ໃນ ຂະນະທີ່ບັນລະຍາຍເຖິງເມືອງວຽງຈັນທີ່ພູກ່ຽວ ເອີ້ນວ່າ " ເມືອງລ້ານຊ້າງ , ນະຄອນຫລວງຂອງລາວ " ໄດ້ ບັນທຶກ ໄວ້ວ່າ: " ຕາມການເລົ່າບອກຂອງຄົນຜູ້ໜຶ່ງ, ເມືອງນີ້ມີ ພົນ ລະເມືອງໜາແໜ້ນກວ່າບາງກອກ " (໑) . ໝ່ອມເຈົ້າທັບ , ນາຍພົນໄທໃນກອງທັບຂອງກົມໝື່ນເສນີບໍລິລັກໄດ້ຍອງຍໍ ສັນລະ ເສີນຄວາມສວຍສົດງົດງາມແລະຄວາມອຸດົມຮັ່ງມີຂອງ ນະຄອນ ຫລວງວຽງຈັນທີ່ພູກ່ຽວໄດ້ເຫັນເທື່ອທຳອິດ (໒). ໝ່ອມ ເຈົ້າ ທັບໄດ້ມານຳກອງທັບເພື່ອປະຕິບັດຄຳສັ່ງອັນສຽບຂາດ ຂອງເຈົ້າ ຊີວິດສະຫຍາມ, ລາຊະການທີ ໓ , ທີ່ບອກໃຫ້ເຜົາຜານ ວຽງ ຈັນໃຫ້ຍັງເຫລືອແຕ່ພຽງດິນກັບນ້ຳເທົ່ານັ້ນ (໓). ກອງທັບ ສະ ຫຍາມໄດ້ມາວຽງຈັນເຖິງສອງຄັ້ງເພື່ອຈະສຳເລັດໜ້າທີ່ດັ່ງກ່າວ ຄືໃນປີ ໑໘໒໗ ແລະ ໃນປີ ໑໘໒໘ ແລະ ທັງສອງຄັ້ງນັ້ນກໍແມ່ນ ເພື່ອພະຍາຍາມຈະດັບສູນກຳລັງຂອງເຈົ້າອະນຸ .

໔໐ ປີພາຍຫລັງເຫດການ ດັ່ງກ່າວ; ໃນເວລາຢຸດພັກ,ຄົ້ນ ຄວ້າສະພາບການຢູ່ທີ່ວຽງຈັນ, ຄະນະກຳມະການຂອງ ຝະລັ່ງ ເພື່ອສຳຫລວດແມ່ນ້ຳຂອງໄດ້ໃຊ້ເວລາສອງມື້ຄື ວັນທີ ໓ ແລະ ວັນທີ ໔ ເມສາ ປີ ໑໘໖໗, ເພື່ອຊັກຖາມຄົນລາວບາງຄົນທີ່ຍັງ ຄົງຄ້າງຢູ່, ກ່ຽວກັບຂໍ້ແທ້ຈິງດ້ານປະຫວັດສາດຂອງລາຊະອານາ

ຈັກວຽງຈັນ (໔). ໃນບົດຄວາມທີ່ພິມເຜີຍແຜ່ໃນ ວາລະສານ ສອງໂລກ (Revue des Deux Mondes) ໃນປີ໑໘໖໙ ໂດຍພາດຫົວເລື່ອງວ່າ " ວຽງຈັນແລະການຮຸກຮານ ຍຶດຄອງຂອງໄທ ", ລຸຍເດີການເນີ (Louis de CARNE), ຜູ້ຕາງໜ້າຂອງກະຊວງການຕ່າງປະເທດຝະລັ່ງເຊິ່ງເປັນຄະນະກຳມະການສຳຫລວດແມ່ນ້ຳຂອງ, ໄດ້ຂຽນວ່າ " ຄົນລາວຜູ້ຮັບເຄາະຮ້າຍໄດ້ຖືກດັບສູນເຊື້ອຊາດຫລືຖືກກວດໄປໄທໝົດ, ນະຄອນຫຼວງຂອງລາວຍັງເຫລືອແຕ່ຊາກເໝືອນດັ່ງເມືອງ ເຊລູຊາແລມ ( Jérusalem ) ທີ່ໄດ້ຖືກກອງທັບໂລມັນ (Romain) ປາບປາມທຳລາຍໃນເມື່ອກ່ອນ "(໕). ໑໐໐ ປີພາຍຫລັງ ບົດຄວາມຂອງລຸຍເດີການເນີ (Louis de CARNE), ນັກປະຫວັດສາດຜູ້ລືຊື່ຂອງໂລກຄື ດີ.ຈີ.ອີ. ຮອນ(D.G.E-HALL) ໄດ້ເວົ້າຄ້າຍຄືກັບເພາະວ່າຜູ້ກ່ຽວໄດ້ຂຽນວ່າ " ສະຫຍາມ ໄດ້ເຜົາຜານວຽງຈັນຢ່າງຮາບກ້ຽງທີ່ສຸດ " (໖). ໃນບໍ່ໆມານີ້ , ໃນປີ ໑໙໘໖ ອາເທີ ດົມແມນ (Arthur DOMMEN), ໄດ້ຂຽນວ່າ " ຊາວສະຫຍາມຊຶ່ງໃນຂະນະນັ້ນໄດ້ປະຕິບັດ ນະໂຍບາຍແຜ່ອິດທິພົນຢ່າງຂະຫຍັນມັງມໍ່ຢູ່ໃນດິນແດນຂອງລາວນັ້ນ ໄດ້ທຳລາຍຈູດເຜົາລ້າງຜານວຽງຈັນຄືດັ່ງພວກໂລມັນ (Romain) ໄດ້ທຳລາຍເມືອງ ກາກຕາເຊີ (Carthage) ຢ່າງຮາບກ້ຽງພາຍຫລັງສົງຄາມ ປູຍນິກ ( Punic )ຄັ້ງທີສອງ"(໗)

ຈົນຮອດປະຈຸບັນ, ປະຫວັດສາດຂອງສົງຄາມ ດັ່ງກ່າວ ຖືກ

ເຜີຍແຜ່ຈາກແຫລ່ງຜູກຂາດອັນດຽວຄື " ພະລາຊະພົງ ສາວະດານຂອງລາຊະການທີ ໑ ໃນລາຊະວົງບາງກອກ " ຊຶ່ງ ຂຽນໂດຍເຈົ້າພະຍາທິບພະກາລະວົງ(໑໘໑໔-໑໘໗໐) (໘). ເອກະສານປະຫວັດສາດນີ້ເປັນພຽງແຕ່ " ປະຫວັດສາດຂອງເຈົ້າ ຂຸນມູນນາຍ " (໙) ທີ່ແນໃສ່ເຜີຍແຜ່ " ໃຫ້ບູຊາປະຫວັດສາດສະຫຍາມ, ວັດທະນະທຳສະຫຍາມ ແລະ ສັງຄົມສະຫຍາມ " ແຕ່ໃນຕົວຈິງ, " ປະຫວັດສາດສະຫຍາມ " ໝາຍເຖິງປະຫວັດ-ສາດຂອງເຈົ້າຊີວິດສະຫຍາມ ແລະ ກິດຈະການຂອງເຂົາເຈົ້າ. " ວັດທະນະທຳສະຫຍາມ " ໝາຍເຖິງ ວັດທະນະທຳທີ່ຖືກຮັບຮູ້ຈາກເຊື້ອເຈົ້າເຊື້ອຈອມຢູ່ບາງກອກແລະນຳເອົາມາໃຊ້ຢູ່ ອ້ອມແອ້ມບາງກອກເທົ່ານັ້ນ"ແລະ"ສັງຄົມສະຫຍາມ"ໝາຍເຖິງ"ສັງຄົມຂອງບາງກອກເທົ່ານັ້ນ "(໑໐). " ເອກະສານເພື່ອ ບູຊາເຈົ້າຈອມ "(໑໑) ໄດ້ເຜີຍແຜ່ " ທັດສະນະທີ່ວ່າປະເທດ ສະຫຍາມບໍ່ພຽງແຕ່ເປັນຜູ້ເຄີຍໄດ້ຮັບເຄາະຮ້າຍບໍ່ວ່າຈາກພະມ້າຫລືຈາກພັນທະມິດຂອງຕົນໃນບາງຄັ້ງບາງຄາວຢູ່ລ້ານນາ ແລະຢູ່ໃນລັດຂອງພວກມອນ ແຕ່ຍັງໄດ້ຖືກທັກຫລັງຈາກພວກຜູ້ນຳໃນ ຫົວເມືອງຂຶ້ນລາວ ແລະ ຂະເໝນທີ່ໄດ້ສວຍໂອກາດໃນເວລາທີ່ລາຊະອານາຈັກສະຫຍາມອ່ອນແອລົງເພື່ອກໍ່ການກະບົດຫລືເຂົ້າ ມາຮຸກຮານສະຫຍາມ. ເພື່ອປົກປ້ອງການຮຸກຮານທີ່ສະຫຍາມໄດ້ດຳເນີນໄປໃນຫລາຍຄັ້ງຫລາຍຄາວ,...( ປະຫວັດສາດທາງການນີ້ )... ໄດ້ຍົກເອົາ " ສິດຕອບໂຕ້ " ເພື່ອເປັນຂໍ້ແອບອ້າງ.

ທັດສະນະນີ້ກໍໄດ້ລົບລ້າງແນວຄິດທີ່ຈະລົບຄວາລຶງເລີກ. ກ່ຽວກັບທາດແທ້ກະທາຍສົງຄາມຂອງສະຫຍາມເອງແລະແທນທີ່ຈະ ສະແຫວງຫາເຫດຜົນໃຫ້ລານຄຳແຫງແລະຜູ້ນຳອື່ນໆຂອງສະຫຍາມທີ່ກໍດຂື້ຫລາຍປະຊາຊາດທີ່ມີມູນເຊື້ອເກົ່າແກ່ອັນໜ້ານັບຖື ມາເປັນຂ້ອຍຂ້າ, ທັດສະນະນີ້ກໍພຽງແຕ່ຍົກຍ້ອງສັນລະເສີນເຫດການດັ່ງກ່າວຍ້ອນວ່າແມ່ນສະຫຍາມເປັນຜູ້ເຮັດ "(໑໘).

ແຕ່ປັດຈຸບັນນີ້ຢູ່ໄທ, ໄດ້ມີບາງທັດສະນະໃໝ່ກ່ຽວກັບ ເຫດການປີ ໑໘໔໗. ຕົວຢ່າງກໍຄືຜົນງານອັນເດັ່ນຈັດຂອງສາດສະດາຈານທະຫວັດ ປຸນໂນທົກ ກ່ຽວກັບ" ພົນວຽງ ",ບົດຄວາມຂອງສາດສະດາຈານສະລອງ ສູນທະລາວານິດ ກ່ຽວກັບ" ປະຫວັດການພົວພັນ ລາວ-ໄທ ກ່ອນສະຕະວັດທີ ໒໐ "; ແລະ ວິທະຍານິພົນ ຂອງ ດຣ. ພັນສາ ສິນສະຫວັດ ເລື່ອງ" ການ ພົວພັນບາງກອກ-ວຽງຈັນໃນລາຊະການທີສາມ,໑໘໒໔-໑໘໔໗"(໑໙) ແລະ ການວິໃຈຂອງປຣະທີບ ຊຸມພົລ .

ນອກຈາກນັ້ນກໍຄວນນຶກເຖິງຜົນງານອັນຊຸດົມຮົ່ງມີ ຂອງ ດຣ. ແຄນນອນ ເບລແຊບເລີ (Dr Kennon Breazeale) ກ່ຽວກັບ " ການເອົາລັດຂອງລາວເຂົ້າຢູ່ໃນລາຊະອານາຈັກສະຫຍາມ " ແລະປື້ມຂອງສະນິດ ສະໝຸກການ(Snit Smuckarn) ກັບ ແຄນນອນ ເບລແຊບເລີ (Kennon Breazeale)ກ່ຽວກັບ " ຊາວພວນຢູ່ສະຫຍາມ. ວັດທະນະທຳທີ່ສະແຫວງ ຫາຄວາມຄົງຕົວເພື່ອຢູ່ລອດ ". ຜົນງານດັ່ງກ່າວນີ້ກໍບໍ່ຫາລ້າງ ບົດ

ຄວາມອົບໜັກແໜ້ນຂອງ ດາວິດ ວາຍຢັດ (Dvid WYTT) ທີ່ຂຽນກ່ຽວກັບ " ສະຫຍາມ ແລະ ລາວ- ໑໗໖໗-໑໘໒໗ " (໑໔).

ແຫລ່ງເອກະສານຂອງລາວກ່ຽວກັບເຫດການໃນປີ ໑໘໒໗-໑໘໒໘ ໄດ້ເປັນສິ່ງທີ່ຫາຍາກທີ່ສຸດ. ອັນນີ້ກໍເປັນໜ້າເສຍ ດາຍ ເນື່ອງຈາກວ່າແຫລ່ງເອກະສານນັ້ນແມ່ນຂຽນດ້ວຍໃບລານທີ່ພ່ອຍທີ່ສຸດ, ແລະຍັງໄດ້ຮັບຄວາມເສຍຫາຍຈາກດິນຟ້າອາກາດ,ແມງໄມ້, ກາລະເວລາແລະສົງຄາມ. ຕາມການບອກເລົ່າ ຂອງເຈົ້າອາວາດຢູ່ຫລວງພະບາງ, ກອງທັບສະຫຍາມຕ້ອງໄດ້ ໃຊ້ຊ່າງຈັດໂຕເພື່ອຕ່າງ ເອກະສານໃບລານອັນສຳຄັນສຳຄັນຈາກວຽງຈັນໄປຍັງບາງກອກໃນປີ ໑໘໒໗ (໑໕) ແລະ ຊ້າງອີກ໒໐ ກ່ວາໂຕຕ່າງເອກະສານອື່ນໆໄປໄວ້ເມືອງຍະໂສທອນ(ນອກຈາກນັ້ນເພິ່ນກໍມີຄວາມອຶດອັດແໜ້ນໃຈເພື່ອຈະເວົ້າສູ່ຟັງຕໍ່ ກ່ຽວກັບເຫດການໃນໄລຍະນັ້ນເໝືອນດັ່ງອັງລີ ເດດີເອ (Henri DEYDIER )ໄດ້ຂຽນໃນປີ ໑໙໕໔:" ຂ້າພະເຈົ້າເຂົ້າໃຈວ່າຢູ່ໃນລາວຖ້າຜູ້ໃດສົນໃຈກ່ຽວກັບປະຫວັດສາດເຫດການທີ່ເກີດຂຶ້ນໃນ ໑໐໐ ຫລື ໑໕໐ ປີຄືນຫລັງນັ້ນ, ຜູ້ນັ້ນແມ່ນກ່ຽວພັນເຂົ້າໃນການເມືອງປັດຈຸບັນ ແລະ ຖືກດຶງເຂົ້າໃນການເປັນມາ ຂອງບາງຄອບຄົວໃຫຍ່ທີ່ມີອິດທິພົນກຳອຳນາດໃນລາຊະອານາຈັກລາວ ທຸກການບັນທຶກກ່ຽວກັບປະຫວັດແຂວງວຽງຈັນກໍໄດ້ສູນຫາຍໄປ , ແຕ່ລະຄັ້ງຂ້າພະເຈົ້າຮູ້ວ່າມີຮ່ອງຮອຍເອກະສານໃບລານກ່ຽວກັບ

ປະຫວັດສາດເມືອງວຽງຈັນນັ້ນມີຢູ່ບ່ອນໃດບ່ອນໜຶ່ງກໍປາກົດວ່າ ມີຄົນເອົາໄປເຊື່ອງເມື່ອເວລາ ຂາພະເຈົ້າຈະຂໍໄປເບິ່ງບາງຕອນຂອງປະຫວັດສາດລາວກາຍເປັນອັນຫວງແໜນຂອງບາງ ຄອບຄົວທີ່ເຊື່ອງຊ້ອນໄວ້, ການເປັນປໍລະປັກທີ່ມີມາລະຫວ່າງບາງ ຄອບຄົວ ສັກດີນາໃຫຍ່ໃນລາຊະອານາຈັກວຽງຈັນມີຜົນກະທົບຈົນເຖິງປັດຈຸບັນ " (໑໖) ( ໝາຍເຖິງເວລາທີ່ຜູ້ກ່ຽວຂຽນໃນ ປີ ໑໙໔໔ ).

ເຖິງຢ່າງໃດກໍດີ, ອາດເປັນໄປໄດ້ສຳລັບນັກຄົ້ນຄວ້າຜູ້ໂຊກດີ ແລະ ທັງມີຄວາມມານະອົດທົນທີ່ຈະຄົ້ນພົບແຫລ່ງ ເອກະສານລາວດັ້ງເດີມກ່ຽວກັບສະໄໝນັ້ນ. ຕາມທີ່ພວກເຮົາຮູ້, ຮອດປະຈຸບັນ, ກໍມີພຽງແຕ່ນັກຄົ້ນຄວ້າສອງຄົນ ທີ່ໄດ້ນຳເອົາແຫລ່ງ ດັ່ງກ່າວມາໝູນໃຊ້: ຄືຜົນງານຄົ້ນຄວ້າຂອງມະຫາສີລາ ວີລະວົງ ແລະ ຂອງ ມະຫາຄຳ ຈຳປາ ແກ້ວມະນີ (໑໗).ນອກຈາກນັ້ນ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມຂອງກະຊວງສຶກສາ ແຫ່ງ ສ.ປ.ປ.ລາວ ກໍໄດ້ອ້າງອີງແຫລ່ງດັ່ງກ່າວເຊັ່ນດຽວກັນໃນຮ່າງປະຫວັດສາດລາວທີ່ສະຖາບັນໄດ້ຄົ້ນຄວ້າສຳເລັດລົງໃນປີ ໑໙໘໗ ນີ້ .

ຢູ່ໃນບົດສະເໜີນີ້, ພວກເຮົາຈະຈຳກັດຕົນເອງພິຈາລະນາແຕ່ເອກະສານທີ່ມີຊື່ວ່າ : " ຈົດໝາຍເຫດຫຍໍ້ເມືອງວຽງຈັນ" ແລະ "ພົງສາວະດານເມືອງວຽງຈັນ " (໑໘) ເທົ່ານັ້ນ .

ຢູ່ວັດຫໍພະແກ້ວທີ່ວຽງຈັນໄດ້ມີຈົດໝາຍເຫດຫຍໍ້ ເມືອງວຽງ

ຈີນສະບັບໜຶ່ງທີ່ກ່າວເຖິງເຫດການປະຫວັດສາດ,ແຕ່ລະປີໆຈາກ ປີ ໑໖໗໑-໑໘໓໖. ນອກຈາກນັ້ນກໍຍັງມີອີກສະບັບໜຶ່ງຢູ່ ພະລາຊະວັງ ຫລວງພະບາງ ( ທີ່ປ່ຽນມາເປັນຫໍສະໝຸດແຫ່ງຊາດຕັ້ງແຕ່ປີ ໑໙໗໙ ເປັນຕົ້ນມາ ). ເນື້ອໃນຂອງເອກະສານນີ້ກໍຄືກັນກັບສະບັບວັດຫໍພະແກ້ວໂດຍພື້ນຖານແລະອັນແຕກຕ່າງກັນ ແມ່ນພຽງແຕ່ວ່າສະບັບພະລາຊະວັງຫລວງພະບາງສ່ວນໃຫຍ່ໄດ້ ເນັ້ນໃສ່ເຫດການຢູ່ໃນນະຄອນຫລວງຂອງລາຊະອານາຈັກຫລວງ ພະບາງໃນສະຕະວັດທີ ໑໙. ສະບັບນີ້ໄດ້ໄລ່ເຫດການດຽວກັນ ແຕ່ໄດ້ປະວ່າງການບັນທຶກແຕ່ປີ ໑໗໑໒-໑໗໕໕, ຍັງມີອີກສະບັບ ທີສາມທີ່ເອີ້ນວ່າສະບັບຂອງເຈົ້າກະຕິຍະ, ຂຽນໃນປີ ໑໘໙໔ ທີ່ເລົ່າເຫດການ ມາແຕ່ປີ ໑໖໙໘ ເຖິງປີ ໑໘໓໔. ອີກສະບັບ ທີ ໔ ທີ່ບໍ່ມີຊື່ຂອງຜູ້ຣິດຈະນາ ແລະ ຖືກພິມເຜີຍແຜ່ເໝືອນກັນຢູ່ໃນຊຸດປະຊຸມພົງສາວະດານ ( ບາງກອກ ) (໑໙) ໄດ້ບັນທຶກເຫດການແຕ່ປີ ໑໖໙໘ ເຖິງປີ ໑໘໕໘; ຍັງມີອີກສະບັບທີ ໔ ທີ່ ໂອກຸດເສີເຕີ ປາວີ (Auguste PAVIE) ໄດ້ພົບ ທີ່ວັດໃໝ່ ( ຫລວງພະບາງ ) ແລະ ໄດ້ແປເປັນພາສາຝະລັ່ງແລະພິມອອກໂດຍພາດຫົວເລື່ອງວ່າ " ການບັນທຶກເຫດການ ແຕ່ລະປີຂອງປະຫວັດສາດປະເທດລ້ານຊ້າງຮົ່ມຂາວ" ທີ່ກ່າວເຖິງ ໄລຍະ ປີ ໑໕໕໙ ຮອດປີ ໑໘໕໕ (໒໐). ສະບັບທີ ໖ ຄື ເອກະສານທີ່ຄົ້ນພົບໃນປີ ໑໙໓໙ຢູ່ກອງທາດວັດຍອດແກ້ວສີວິໄຊ,ແຂວງມຸກດາຫານ (ໄທ)ທີ່ສາດສະດາຈານ ສະລອງ ສູນທະລາວານິດ

ໄດ້ມີອັດທະຍາໄສອັດເປັນສຳເນົາສົ່ງໃຫ້ພວກເຮົາ.

ແຫລ່ງເອກະສານປະຫວັດສາດອັນທີສອງປະກອບດ້ວຍພົງສາວະດານ ເມືອງວຽງຈັນ. ຊາກເລີ ອາກແຊມໂບນ(Charles ARCHAIMBAULT)(໘໑) ໄດ້ກ່າວເຖິງໂດຍໄດ້ໃຫ້ຊື່ວ່າ:"ກອງເອກະສານຂອງ ຊຸປະຣາດ " ສະບັບໜຶ່ງອີກຂອງ ພົງສາວະດານເມືອງວຽງຈັນໄດ້ມີການຮັກສາໄວ້ທີ່ໂຮງຮຽນ ຝະລັ່ງເສດເພື່ອຄົ້ນຄ້ວາກ່ຽວກັບພາກຕາເວັນອອກໄກ ( ມີທີ່ຕັ້ງຢູ່ປາຣີ ) ໃນເລກໝາຍ " ລາວ ປ໒"(໘໒) ໂດຍພາດຫົວເລື່ອງວ່າ:"ພົງສາວະດານວຽງຈັນ ທະນຸລີສີສັດຕະນາຄະນາຫຸດ ລ້ານຊ້າງ ຮົ່ມຂາວ ແປເປັນພາສາ ຝະລັ່ງ ".

ປະຫວັດຫຍໍ້ເມືອງວຽງຈັນໄດ້ກ່າວໄວ້ໃນຕອນໜຶ່ງວ່າ "ສັກກະຫລາດໄດ ໑໘໔ ຕົວ ປີມົດ ( ມະເມຍ ) ໄຫອອກສັກ ເລກເມືອງລາວທັງຫລາຍນອກວ່າວຽງຈັນແຕ່ປີເກົ່າເທົ່າຮອດປີ ສັນ (ວອກ)" (ສະບັບ ເຈົ້າ ກະຕິຍະ. ໜ້າ ໑໓໖ ). ໃນປີ ໑໘໘໔, ເຈົ້າໜ້າທີ່ຂອງບາງກອກໄດ້ຂຶ້ນມາສັກເລກທົ່ວ ເມືອງຮາບສູງ ໂຄລາດ , ອຸບົນ, ຍະໂສທອນ, ສຸວັນນະພູມ, ກາລະສິນ ... " ແນ່ນອນແລວການສັກເລກຂອງປະຊາຊົນສາມັນໄທທັງປວງ ... ເປັນເຫດການທີ່ບໍ່ທີ່ອັນທຽບໄດ ແມ່ນແຕ່ໃນລະບົບການເມືອງອັນຮ້າຍກາດທີ່ສຸດໃນປະຫວັດມະນຸດ " ( ໘໘ ) ເປັນທີ່ໜ້າສັງເກດວ່າແມ່ນ ເອກະສານຄື " ພົ້ນວຽງ ", ວິໄຈດ້ວຍຄວາມພາກພຽນໂດຍທະຫວັດ ປຸ່ມໂນທົກ, ປະຊາຊົນທີ່ຕັ້ງ

ພູມລຳເນົາຢູ່ຮາບສູງໂຄລາດ ເປັນຜູ້ບັນທຶກຄວາມຄຽດແຄ້ນຂອງ
ຊາວລາວຕໍ່ນະໂຍບາຍອັນທາລຸນຄືການສັກເລກຂອງ ບາງກອກ
ເຊິ່ງເປັນການດຳເນີນການລັດຖະປະຫານແບບງຽບໆອີກ ແບບ
ໜຶ່ງເພື່ອເອົາເຂົາເຈົ້າມາເປັນຄົນໄທທັງໝົດ. " ການເມືອງ
ຂອງເຫລັກເຜົາໄຟຈີນແດງ " ອັນນີ້ແມ່ນບໍ່ເຄີຍປະຕິບັດມາກ່ອນ
ຈັກເທື່ອໃນລະດັບນີ້ໃນລາຊະການກ່ອນໆ ແລະ ໄດ້ຢັ້ງຢືນ ໃຫ້
ເຫັນຄວາມລົ້ມເຫລວຂອງຄວາມພະຍາຍາມເພື່ອປາບປາມ ແລະ
ຍຶດຄອງພາຍຫລັງທີ່ບັນດາກອງທັບຂອງເຈົ້າຕາກສິນໄດ້ ຮຸກຮານ
ບັນດາ ເມືອງລາວໃນປີ ໑໗໗໘. ການຮຸກຮານດັ່ງກ່າວໄດ້ ນຳ
ເອົາມາຄອງອຳນາດກຸ່ມຜູ້ນຳທ້ອງຖິ່ນໃໝ່ທີ່ເປັນ ປໍລະປັກຕໍ່ກຸ່ມ ຜູ້
ນຳເດີມໃນຫລາຍຫົວເມືອງລາວ, ແລະພວກກຸ່ມຜູ້ນຳໃໝ່ນີ້ເປັນ
ເຊື້ອສາຍຂອງຄອບຄົວ ພະວໍລະພິຕາ (໔໓) ທີ່ນັກປະຫວັດສາດ
ໄທ ເອີ້ນວ່າ ພະວໍແລະພະຕາ ແລະແນໃສ່ " ໂຄ່ນລົ້ມລະບອບ
ການເມືອງຢູ່ໃນຝັ່ງຊ້າຍແມ່ນ້ຳຂອງຈາກແຕ່ຝັ່ງຂວາໄປ" (໔໔).

ພາຍຫລັງຂຶ້ນຄອງອຳນາດແລ້ວ, ລາຊະການທີສາມໄດ້ແຕ່ງ
ຕັ້ງທັນທີ, ນອກຈາກຜູ້ຮອງເຈົ້າຊີວິດໂດຍມີຊື່ວ່າ ບໍວອນ, ພຽງ
ແຕ່ເຈົ້ານາຍສອງຄົນເທົ່ານັ້ນ ຄື : ຫົວໜ້າມະຫາດເລັກ ແລະ
ຫົວໜ້າສັກເລກ ( ໔໕). ອັນນີ້ເປັນໜ້າທີ່ຮັບຜິດຊອບ ຍຸດທະ
ສາດເພື່ອປະຕິບັດແນວທາງຂອງໄທໃນການກືນກິນ ປະເທດລາວ
ທັງໝົດທັງເພື່ອດັບສູນລະບົບການຈັດຕັ້ງການເມືອງຂອງລາວ .

ນະໂຍບາຍນີ້ໄດ້ສະແດງອອກຢ່າງຈະແຈ້ງໃນເອກະສານສະ

ຖືຕືອັບໜຶ່ງ. ໃນວັນທີ ໔໐ ມັງກອນ ປີ ໑໙໔໗, ພໍ່ຄ້າ ອາວຸດ ອັງກິດຜູ້ໜຶ່ງຊື່ວ່າ ເອ.ມາລອັກ ( A.MALLOCH ) ໄດ້ຮັບເອກະສານລັບຈາກເຈົ້າໜ້າທີ່ລັດຖະບານໄທ ຜູ້ໜຶ່ງ ທີ່ ເອົາມາຈາກກອງເອກະສານບັນທຶກພົນລະເມືອງຂອງໄທ. ເອກະ ສານນັ້ນໄດ້ຂຶ້ນ " ບັນຊີລາຍຊື່ຂອງແຂວງ, ເມືອງຂຶ້ນ,ເມືອງ, ແລະ ບ້ານຂອງສະຫຍາມ ໂດຍໄດ້ເຈາະຈົງໃສ່ພົນລະເມືອງແຕ່ ລະປະເພດ ແລະ ໄດ້ແບ່ງອອກເປັນຄົນໄທ, ຄົນຈີນ, ຄົນເປກູ ຄົນຂະເໝນ, ຄົນຕາວອນ, ຄົນຫວຽດ, ຄົນລາວ, ຄົນມາລາ ຢູ, ຄົນມໍ ແລະ ຄົນຖືສາສະໜາເຢຊູ ". ພາຍຫລັງໄດ້ສຶກສາ ສະຖິຕິທີ່ມາລອັກ ( A.MALLOCH ) ໄດ້ເອົາມາ ເຜີຍແຜ່ ແລະ ທໍາສະໝຸດ ວະຊິຣະຍານ ໄດ້ພິມອອກຢູ່ໃນອັນທີ່ເອີ້ນວ່າ : " ເອກະສານ ເບີກເບ " (໔ຝ), ເຮົາສັງໃສວ່າຄົງຈະແມ່ນ ການຈັດຕັ້ງເຮັດໃຫ້ມີການຮົ່ວໄຫລ, ເອກະສານນີ້ໄດ້ຖືກດັດແປງ ແລ້ວເພື່ອເຮັດໃຫ້ພວກອັງກິດເສຍທິດ- ແຕ່ຈຸດສໍາຄັນທີ່ໜ້າສົນໃຈ ໃນເອກະສານແມ່ນເປັນໄປຢ່າງບໍ່ຄາດຝັນ. ຢູ່ໃນໂຕເມືອງ ທີ່ ເປັນລາວແທ້ໆເຊັ່ນວຽງຈັນ, ຫລວງພະບາງ, ຈໍາປາສັກ(ເອກ ກະສານ ມາລອັກ ( MALLOCH ) ເອີ້ນວ່າ ປາສັກ) ປະ ຊາຊົນທັງປວງຂອງເມືອງຫລືປະເທດເຫລົ່ານັ້ນ ( ເພາະເປັນນີ ລາຊະອານາຈັກລາວ ) ແມ່ນເຕັມໄປດ້ວຍແຕ່ຄົນ : ສະ ຫຍາມແລະ ສ່ວນປະເພດຄົນລາວຢູ່ໃນປະເທດລາວເອງບໍ່ມີ ແມ້ ແຕ່ພຽງໜຶ່ງຄົນ.




ແຜນທີ່ການເມືອງຂອງທະວີບອາຊີອາຄະເນ ໃນ ສະຕະວັດ ທີ ໑໙.

- ແຜນທີ່ນີ້ໄດ້ປະກອບຢູ່ໃນປຶ້ມຂອງ ອາໂນເດ ເກລຊົງ : ລາຊະອານາຈັກ ສະຫຍາມ ປາຣີ ໑໘໗໘.

- ອອເນດ ເກລຊົງ ເປັນຜູ້ຕາງໜ້າ ຂອງ ເຈົ້າຊີວິດໄທຢູ່ທີ່ປະເທດຝະລັ່ງເສດ .




ແຜນທີ່ແຕ້ມໂດຍ ຮ້ອຍເອກອັງກິດ ເຈມສໂລວ. (ປີ ໑໘໒໔ )
ຄັດອອກຈາກບົດຂອງ ລາຣີ ສະແຕກແຕນ" ແຜນທີ່ ສະຫຍາມ
ຂອງໂລວ " ວາລະສານ ຂອງສະມາຄົມ ສະຫຍາມ ບາງກອກ
໑໙໖໕. ໜ້າ ໑໔໐ .

| ຊື່ຂອງແຂວງ ເມືອງ.... | ຄົນສະຫຍາມ | ຄົນຈີນ | ຄົນລາວ | ຄົນໂກແຊງຊິນ | ຄົນຂະເໝນ | ຄົນມາແລ | ຄົນເປກູ |
|---|---|---|---|---|---|---|---|
| ເມືອງວຽງຈັນ | ໑໕໐,໐໐໐ | ໖.໐໐໐ | - | - | - | - | - |
| ເມືອງປາກສູກ | ໗,໕໐໐ | ໕໕໐ | - | - | - | - | - |
| ເມືອງຫລວງພະບາງ | ໑໔,໕໐໐ | ໕໕໐ | - | - | - | - | - |
| ເມືອງຊຽງໃໝ່ | ໗໔,໐໐໐ | ໓໐໐ | - | - | - | - | - |

ດັ່ງນັ້ນ ຄົນລາວບໍ່ມີຫົນທາງອື່ນນອກຈາກການລຸກຮືຂຶ້ນເພື່ອປົກປັກຮັກສາເອກະລັກ, ປົກປ້ອງຊາດຂອງເຂົາເຈົ້າແລະເພື່ອກອບກູ້ເອົາອິດສະລະພາບທີ່ໄດ້ສູນເສຍໄປໃນປີ ໑໗໗໘. ຖ້າບໍ່ ດັ່ງນັ້ນ ປະຊາຊົນລາວກໍ່ຈະເສຍໄປໝົດທຸກສິ່ງທຸກຢ່າງຍ້ອນ ນະໂຍບາຍຂອງບາງກອກທີ່ແນໃສ່ເຮັດໃຫ້ລາວກາຍເປັນສະຫຍາມ, ແນໃສ່ເຮັດໃຫ້ລັດຂອງລາວກາຍເປັນແຂວງໜຶ່ງຂອງສະຫຍາມ, ຕາມແນວທາງທີ່ລາຊະການທີສາມໄດ້ປະກາດອອກໃນປີ ໑໘໒໔ ທີ່ສັ່ງໃຫ້ສັກເລກຢູ່ທຸກເມືອງລາວນັ້ນກໍ່ໝາຍຄວາມວ່າຖືຄົນລາວ ເປັນຄົນສະຫຍາມ; ໝາຍຄວາມວ່າຖືພົນລະເມືອງຢູ່ລາວເປັນ ສັນຊາດສະຫຍາມ.

ກົມສິລະປະກອນ ( ບາງກອກ ) ໄດ້ພິມເອກະສານ ສະບັບໜຶ່ງທີ່ພາດຫົວຂໍ້ວ່າ " ປາບກະບົດວຽງຈັນ", ແຕ່ໃນຕົວຈິງແລ້ວການລຸກຮືຂຶ້ນໃນເວລານັ້ນບໍ່ແມ່ນເປັນພຽງແຕ່ການລຸກຮື ຂຶ້ນຂອງຄົນວຽງຈັນຫລືຂອງເຈົ້າອະນຸເທົ່ານັ້ນແຕ່ມັນຍັງແມ່ນການລຸກຮືຂຶ້ນຂອງປະຊາຊົນລາວທັງປວງ (໒໗). ເຈມສ໌ໂລ (James Low ), ນັກຄົ້ນຄວ້າກ່ຽວກັບສະຫຍາມໃນໄລຍະນັ້ນ(໒໘) ໄດ້ຂຽນໃນລາຍງານສະບັບໜຶ່ງລົງວັນທີ ໑໔ ສິງຫາ ໑໘໒໖ວ່າ ປະເທດສະຫຍາມໄດ້ປະຕິບັດຢ່າງເປັນລະບົບ"ແນວທາງ ຂະຫຍາຍອານາເຂດ "(໒໙), "ໃນເວລາທີ່ການຂົ່ມຂູ່ຂອງ ພະມ້າຕໍ່ປະເທດໃກ້ຄຽງຖືກສະລາຍໂຕໄປ( ຍ້ອນໄຊຊະນະຂອງອັງກິດຢູ່ພະມ້າ ), ປະເທດສະຫຍາມໄດ້ມີເວລາເພື່ອປັບປຸງ ກຳລັງ

ຂອງຕົນໃຫ້ເຂັ້ມແຂງ ... ສະຫຍາມອາດຈະເຫັນໄດ້ວ່າຄົງຈະຍາກຖາຢາກຂະຫຍາຍອານາເຂດໄປທາງຕາວັນຕົກ, ..., ແຕ່ວ່າແຫລມ ມາລັກກາ (Malacca) ທີ່ຢູ່ກ້ອງສະຫຍາມນັ້ນ ກໍຍັງເປັນເຫຍື່ອຢູ່ໃນກຳມືຂອງສະຫຍາມ. ສະຫຍາມອາດຈະ ຫັນຄວາມສົນໃຈຂອງຕົນໄປຍັງຂະເໝນແລະ ລາວອີກດ້ວຍວ່າ ທັງສອງອານາຈັກນີ້ບໍ່ສາມາດຈະຕານທານສະຫຍາມໄດ້ເຫິງນານ" (໓໐). ໃນເອກະສານສະບັບໜຶ່ງທີ່ຂຽນຂຶ້ນໃນເດືອນຕຸລາ ປີ ໑໘໒໖, ເຈມສ໌ໂລ ( James Low ) ໄດ້ສັງເກດວ່າ" ປະເທດໄກຄຽງຂອງສະຫຍາມຢູ່ທາງເໜືອຄືພວກລາວ ຊຽງໃໝ່ ແລະ ລາວລານຊາງກຽມພອມຈະປະກາດເອກະລາດຂອງຕົນ" (໓໑). ໃນໂຕຈິງ, ເຈົ້າອະນຸໄດ້ສະແຫວງຫາຊ່ອງທາງ ເພື່ອກອບກູ້ເອົາເອກະລາດຄືນມາແຕ່ດົນນານແລວ ແລະ ຢ່າງນ້ອຍກໍແມ່ນແຕ່ປີ ໑໘໐໔ ອັນເປັນເວລາທີ່ເຈົ້າອະນຸໄດ້ສົ່ງທູດໄປ ຫາເຈົ້າ ຈັກກະພັດ ຢາລອງ ( Gialong )ທີ່ນະຄອນຫຼວງເວ້ ( Hué ). ແຕ່ເຈົ້າ ຈັກກະພັດ ຢາລອງ(Gialong) ບໍ່ໄດ້ຕອບສະໜອງຕາມການສະເໜີຂອງເຈົ້າອະນຸ.ໃນເດືອນພະຈິກປີ ໑໘໒໖, ເຈົ້າຈັກກະພັດມິງມັງ ( Minh Manh ) ຜູ້ຂຶ້ນຄອງລາດແທນຢາລອງ ( Gialong) ຍັງໄດ້ສົ່ງທູດ ມາວຽງຈັນເພື່ອຫ້າມປາມເຈົ້າອະນຸບໍ່ໃຫ້ຕໍ່ຕານການຍຶດຄອງຂອງສະຫຍາມຢູ່ໃນລາວແລະບໍ່ໃຫ້ສ້າງຄວາມປັ່ນປ່ວນຕໍ່ສະຫຍາມ(໓໒). ເຮນຣີ ເບີກເນ ( Henry BURNEY ) ທີ່ອັງກິດສົ່ງມາເຊັນ

ສັນຍາກັບລາຊະວົງບາງກອກໃນປີ ໑໘໔໖ ໄດ້ຂຽນວ່າ "...ມັນຈະເປັນໄປໄດ້ຢ່າງແນ່ນອນວ່າປະເທດສະຫຍາມຈະເສຍອິດທິພົນທັງໝົດໃນແຂວງລາວ, ແລະຖ້າບັນດາແຂວງ (ໃນຕົວຈິງແມ່ນລັດລາວຕ່າງໆ) ໂຮມເຂົ້າກັນເປັນກ້ອນໜຶ່ງກ້ອນດຽວກັນແລ້ວ, ພວກເຂົາເຈົ້າຈະສາມາດສ້າງບັນຫາໃຫຍ່ທີ່ສຸດໃຫ້ແກ່ສະຫຍາມ" (໓໓).

ການສັກເລກໄດ້ກໍ່ໃຫ້ເກີດຄວາມອຶນລະຫົ່ນອັນໃຫຍ່ຫຼວງພາຍໃນໝູ່ປະຊາຊົນ. ເຈົ້າອະນຸກໍໄດ້ເວົ້າພາດພິງເຖິງໂດຍທາງອ້ອມກ່ຽວກັບເຫດການນີ້ໃນໜັງສືຂອງເພິ່ນທີ່ສົ່ງເຖິງລາຊະການທີສາມໃນວັນທີ ໑໗ ມັງກອນປີ ໑໘໒໗ (໓໔). ເຈົ້າອະນຸ ໄດ້ຕອບໂຕ້ຕໍ່ການສັກເລກໂດຍສັ່ງໃຫ້ຕັດສູນເຈົ້າໜ້າທີ່ສະຫຍາມ ທີ່ມາສັກເລກ (໓໕). ຄຳສັ່ງນີ້ໄດ້ຖືກມອບໝາຍໃຫ້ກອງທັບລາວທີ່ປະຕິບັດໜ້າທີ່ໃນການພັນຂະຫຍາຍກຳລັງຢູ່ໃນຮາບສູງ ໂຄລາດ ເພື່ອເອົາປະຊາຊົນກັບຄືນມາວຽງຈັນຫລືເຂົ້າມາຝັ່ງຊ້າຍ ແມ່ນ້ຳຂອງເວົ້າທົ່ວໄປເພື່ອຍັບຢັ້ງກິດກັບແຜນການຮຸກຮານຂອງກອງທະຫານສະຫຍາມທີ່ໄດ້ຕັ້ງປ້ອມໝັ້ນຢູ່ເມືອງປລາຈີນບູລີ ແລະ ເມືອງເກົ່າ ( ອະຍຸດທະຍາ ) ແລະ ຢູ່ທາງເມືອງໄທຝ່າຍເໜືອເປັນເວລາສອງປີກ່ວາມາແລ້ວ.

ການກືນກິນລາວດ້ານການເມືອງ ແລະ ດ້ານດິນແດນ ໂດຍຜ່ານວິທີການສັກເລກໄດ້ຖືກປະຕິບັດໄປຄຽງຄູ່ກັນກັບ ມາດຕະການອື່ນໆທີ່ແນໃສ່ຍຸບຍອບກຽດສັກສີຂອງລາຊະວົງວຽງຈັນ. ເຈົ້າລາຊະ

ວົງວຽງຈັນທີ່ເປັນອົງມົງກຸດສືບທອດພະລາຊະບັນລັງວຽງຈັນ ຖືກສົ່ງໃຫ້ນຳພາຊາວລາວໄປເຮັດວຽກສັບພະທຸກຫລາຍປະເພດຄື : ຕັດຕົ້ນຕານຈາກເມືອງສຸພັນບຸລີແລ້ວແກ່ດຶງໄປຫາເມືອງ ສະໝຸດປລາການເພື່ອສຽບລົງໃນກາງນ້ຳຢູ່ປາກນ້ຳເຈົ້າພະຍາ; ຕັດຕົ້ນໄຜ່ ໔.໐໐໐ ລຳເພື່ອເອົາໄປຕັນປາກແມ່ນ້ຳ. ອັນນີ້ກໍເພື່ອຕ້ານທານການໂຈມຕີຂອງອັງກິດທີ່ຊິນຊັ້ນກຳອຳນາດບາງກອກຄິດ ວ່າຈະມີ[໑໕]ຂຶ້ນຢ່າງແນ່ນອນ. ເອກະສານເບີກເນ ( BURNEY Papers ) ໄດ້ຢັ້ງຢືນວ່າວຽກສັບພະທຸກດັ່ງກ່າວໄດ້ມີແທ້ ໃນທ້າຍປີ ໑໘໒໔. ວຽກສັບພະທຸກນີ້ແມ່ນວຽກກາກກຳ, ເສື່ອມເສຍກຽດເໝືອນດັ່ງທີ່ເຕີມ ວິພາກຄະນະຈິດໄດ້ຂຽນໄວ້, ແລະຜູ້ຂຽນຍັງໄດ້ຢືນຢັນວ່າໄດ້ເປັນຕົ້ນເຫດອັນໜຶ່ງຂອງການລຸກຂຶ້ນ[໑໖] ເພື່ອກອບກູ້ເອກະລາດຂອງລາວໃນປີ ໑໘໒໖ (໙໖).

ເຈົ້າອະນຸເອງກໍຕົກເປັນຜູ້ທີ່[໑໗]ຖືກດູຖູກດູໝິ່ນເຊັ່ນດຽວກັນຢູ່ໃນໜັງສື[໑໘]ທີ່ລາຊະວົງເວ້ ( Hué ) ຂຽນຫາລາຊະວົງບາງກອກໃນທ້າຍປີ ໑໘໒໘ ແລະ ເຈົ້າພະຍາບໍດິນທອນເດຊາໄດ້ພິມອອກໃນປຶ້ມຄວາມຊົງຈຳຂອງຕົນກ່ຽວກັບສົງຄາມ ໂດຍຂຽນວ່າ: "ເມື່ອຄັ້ງເຈົ້າອະນຸລາວວຽງຈັນເປັນຜູ້ກໍ່ເຫດຂຸ່ນເຄືອງ ຕໍ່ສະຫຍາມເພາະເຈົ້າອະນຸລົງມາເຝົ້າທີ່ກຣຸງເທພ, ຄັ້ງນັ້ນ ຂຸນນາງ ຜູ້ໃຫຍ່ຝ່າຍໄທຫລາຍຄົນພູດຈາທຳກິຣິຍາດູໝິ່ນດູຖູກເຈົ້າອະນຸຫລາຍ ໆ ແລະເຈົ້າຜູ້ຊາຍເຊິ່ງເປັນເຈົ້ານ້ອງນ້ອຍໆຕ່າງມານດາ ກັບພະເຈົ້າແຜ່ນດິນໄທນັ້ນເປັນຈຳນວນຫລາຍອົງຊວນກັນຂື່ນເຫັງ ຂື່ມຂີ່

ເຈົ້າອະນຸຕ່າງໆນາໆເພາະເຫັນວ່າເປັນລາວ (ພວກເຮົາຂໍເນັ້ນ: " ຂົ່ມເຫັງຂົ່ມຂີ່ເຈົ້າອະນຸຕ່າງໆນາໆເພາະເຫັນວ່າເປັນລາວ") ຝ່າຍເຈົ້າອະນຸກໍຖືໂຕວ່າເປັນເຊື້ອສາຍສືບກະສັດມາຫລາຍຊົ່ວອົງ ແລ້ວມາຖືກເຈົ້າເດັກເລັກເດັກນ້ອຍຂົ່ມເຫັງແລະຖືກຂຸນນາງໄທດູໝິ່ນຈຶ່ງເສຍໃຈ, ກັບຄືນໄປເມືອງວຽງຈັນຈຶ່ງຈັດການ ກອງທັບຍົກລົງມາເຮັດເສິກແກ້ແຄ້ນຕອບແທນກັບໄທ..."(໕໗).

ຊາກເລີ ກູດສະລາຟ ( Charles GUTZSLAFF ) ທີ່ເປັນຊຸນພໍ່ ອາເມລິກາ ມາປະຕິບັດໜ້າທີ່ໃໝ່ໆຢູ່ທີ່ ບາງກອກ ປີ ໑໘໒໘ໄດ້ຢືນຢັນເຫດການນີ້ດັ່ງຕໍ່ໄປນີ້ :"...ພວກສະຫຍາມໄດ້ໃຊ້ທຸກເລ່ຫລ່ຽມເພື່ອບີບບີ້ພົນລະເມືອງຂອງເຈົ້າລາວ ເຈົ້າໜຶ່ງທີ່ເປັນເຈົ້າປະເທດເສຍສ່ວຍໃຫ້ສະຫຍາມ.ເຈົ້ານີ້ ເຈົ້າວຽງຈັນທີ່ໃນເມື່ອກ່ອນໄດ້ຮັບການຍົກຍໍ່ຈາກເຈົ້າຊີວິດຜູ້ກ່ອນຂອງສະຫຍາມ( ໝາຍເຖິງລາຊະການທີ ໒ ) ເນື່ອງຈາກວ່າ ຜູ້ກ່ຽວຖືກຮັບຕ້ອນໃນເວລາປຽມຍາມ ( ບາງກອກ )ຄັ້ງສຸດທ້າຍດ້ວຍເຮືອຄຳແລະຖືກຫາມດ້ວຍຕັ່ງຝອກເງິນ ..." (໕໘)ເຖິງຢ່າງໃດກໍດີ, ພາຍຫລັງທີ່ລາຊະການທີສາມຂຶ້ນກຳອຳນາດແລ້ວ, ເຈົ້າອະນຸຈຳຕ້ອງໄດ້ອອກຈາກບາງກອກຢ່າງບໍ່ໄດ້ໄປສັ່ງລາເຈົ້າຂຸນມູນນາຍສະຫຍາມຕາມພິທີການ. ຕາມການບອກເລົ່າ ຂອງເຈົ້າລາຊະວົງເທົາກິນໝື່ນ ວາຣະຊະພອນປະທິຫານທີ່ໄດ້ຂຽນວ່າ: " ລາຊະວົງຮອງລົງມາແຕ່ຫລັງຊ້າງເວົ້າກັບພວກບ່າວໄພ່ ເປັນຄຳລາວວ່າ: "ເຮົາຢູ່ເມືອງໄທບໍ່ໄດ້ກິນເຂົ້າໃໝ່ທັງປາກໍ ເປັນ

ກ້າງ, ກັບຄືນໄປເມືອງລ້ານຊ້າງຈະໄດ້ກິນເຂົ້າໃໝ່ທັງປາກໍ່ມັນ" ແລ້ວເຈົ້າລາຊະວົງກໍ່ຟ້າວມາຮອດວຽງຈັນ ແລະ ກໍ່ເຂົ້າຫາເຈົ້າອະນຸຜູ້ເປັນພໍ່ທັນທີແລ້ວເວົ້າວ່າ : " ຂ້າພະເຈົ້າບໍ່ຂໍເປັນ ຂີ້ຂ້າພວກໄທອີກແລ້ວແຕ່ນີ້ຕໍ່ໄປ, ເທື່ອນີ້ຈະຕ້ອງຄິດການໃຫຍ່, ບິດາຈະເຫັນເປັນປະການໃດ ?" (ມັມ). ພົງສາວະດານ ວຽງຈັນໄດ້ຢ້ຳຄືນອີກກ່ຽວກັບອິດທິພົນຂອງເຈົ້າລາຊະວົງຕໍ່ເຈົ້າອະນຸ . ສະພາວະການລະຫວ່າງບາງກອກກັບວຽງຈັນກໍ່ໄດ້ເຂົ້າສູ່ ບ່ອນແຕກຫັກກັນ. ດັ່ງນັ້ນເຈົ້າລາຊະວົງຈຶ່ງໄດ້ພິສູດຄວາມຈິງດັ່ງກ່າວໃນຄວາມເວົ້າຂອງພື້ນທີ່ໄດ້ເວົ້າມາຂ້າງເທິງນັ້ນໂດຍປັ້ນ ສຸພາສິດໄທທີ່ວ່າ " ໄປໄທກິນປາມາລາວກິນເຂົ້າ ". ທັດສະນະນີ້ກໍ່ໄດ້ສະແດງອອກເຊັ່ນດຽວກັນຢູ່ໃນເພັງ " ລາວແຄນ" (໔໐)ທີ່ເອີ້ນກັນທົ່ວໄປວ່າ " ລາວແພນ ". ຢູ່ໃນເພັງ" ລາວແພນ " ນີ້ທີ່ເປັນເພັງນິຍົມກັນຢູ່ໄທ, ຊະເລີຍເສິກລາວຜູ້ໜຶ່ງສະໄໝສົງຄາມປີ ໑໘໔໗ ໄດ້ລະບາຍຄວາມທຸກຍາກກາກກຳຂອງຕົນ ທີ່ໄດ້ຕົກມາລຳບາກຢູ່ບາງກອກຍ້ອນບຸກຄົນທີ່ຜູ້ກ່ຽວເອີ້ນວ່າ " ເພື່ອນໄທ" ທີ່ເປັນນາຍຂອງເຂົາ (໔໑).

ຈົດໝາຍເຫດຫຍໍ້ເມືອງວຽງຈັນ ( ສະບັບວັດຫໍພະແກ້ວ ) ໄດ້ຂຽນວ່າ : ປີສັກກະລາດ ໑໑໗໓, ປີໂຮງມົດ ( ປີ ຄ.ສ. ໑໘໑໑ ) ເດືອນ ໑໐ ອອກໃໝ່ ໓ ຄ່ຳ, ເຈົ້າອະນຸ ແຕ່ງຄົນເມືອຄ້າເມືອງລື້ຊຸ້ມາຊີ້ຊ້າງ ", ອັນນີ້ແມ່ນການຢືນຢັນດັ່ງທຳອິດກ່ຽວກັບການຄ້າກັບເຂດແດນຈີນທີ່ພົງສາວະດານລາວໄດ້ ພາດ

ພິງເຖິງ, ເຈົ້າອະນຸອາດຈະຮູ້ລ່ວງກ່ອນໜ້າວ່າປະເທດສະຫຍາມ ກຽມພ້ອມທີ່ຈະປິດລ້ອມລາວໃນປີຕໍ່ໄປແລະຕັດເສັ້ນທາງການແລກ ປ່ຽນທີ່ມີມາແຕ່ໂບຮານນະການລະຫວ່າງລາວກັບສາກົນໂດຍຜ່ານ ຂະເໝນ. ອັນນີ້ກໍແມ່ນເພື່ອສ້າງການກະທົບກະເທືອນໃຫ້ແກ່ຜະ ລິດຕະພັນຂອງລາວ (໔໒). ເຖິງຢ່າງໃດກໍດີ ຕໍ່ໆມາສະຫຍາມກໍ ສຳເລັດໃນການຍຶດເອົາແຫລ່ງສິນຄ້າ ຂາອອກ ຂອງລາວ ດັ່ງ ດຽວກັບເຮັນຣີ ເບີເນ( Henry BURNEY ) ໄດ້ບັນທຶກໄວ້ ໃນປີ ໑໘໒໖: " ເກືອບທຸກໆສິນຄ້າ ຂາ-ອອກ ທີ່ມີຄ່າສູງຂອງ ສະຫຍາມເຊັ່ນ ຍາງ, ຝ້າຍ, ໄມ້ສັກ, ເງິນແຖ່ງ, ໜັງ;ຂີ້ງ ແລະ ອື່ນໆລ້ວນແຕ່ເປັນຜະລິດຕະພັນຂອງລາວ" (໔໓). ຍິ່ງ ໄປກວ່ານັ້ນ, "ປະຊາຊົນລາວໄດ້ເສຍສ່ວຍໃຫ້ແກ່ສະຫຍາມເປັນ ວັດຖຸດິບເຊັ່ນ: ຍາງ, ງາຊ້າງແລະວັດຖຸອື່ນໆ ..." (໔໔).

ຖ້າເບິ່ງບັນຫາດ້ານເສດຖະກິດແລ້ວ, ວິກິດການໃນປີ໑໘໒໗ ເປັນພຽງແຕ່ການສືບຕໍ່ສົງຄາມການຄ້າທີ່ປະເທດສະຫຍາມ ໄດ້ລິ ເລີ່ມຂຶ້ນໃນປີ ໑໘໑໐ ເພື່ອຕ້ານລາວ ແລະ ຕ້ານເຈົ້າອະນຸ . " ສົງຄາມຕ້ານລາວ (ໂຄລາດ ), ແລະ ຍຶດຊຽງແຕງ ". ອັນນີ້ແມ່ນຄຳເວົ້າແບບສັ້ນໆຂອງ ເປ. ສະໄວກຸດ( P.Schwei tzgut )

ຢູ່ໃນປື້ມຂອງຜູ້ກ່ຽວທີ່ພາດຫົວເລື່ອງວ່າ : "ໜຶ່ງສະຕະວັດແຫ່ງ ປະຫວັດສາດຂອງແຫລມອິນດູຈີນ " (໔໕).

ດີ.ຈີ.ອີ. ຮອນ ( D.G.E.HALL ) ໄດ້ອະທິບາຍຢ່າງ ລະອຽດກ່ຽວກັບເຫດການນີ້ດັ່ງຕໍ່ໄປນີ້ :" ໃນປີ໑໘໑໒ ລະຊາ ການທີສອງຂອງສະຫຍາມໄດ້ສົ່ງກຳລັງເຂົ້າມາແຊກແຊງ ຂະ ເໝນເພື່ອສະໜັບສະໜູນອຸ້ມຊູການກະບົດຂອງນອງເຈົ້າ ຊີວິດ ຂະເໝນ ອອງຈັນ ( Ongchanh ) ຊຶ່ງຈຳເປັນ ຕ້ອງ ໄປລີ້ໄພຢູ່ໄຊງ່ອນ. ກຳລັງທະຫານຫວຽດນາມໄດ້ພາອອງຈັນກັບ ມານະຄອນຫລວງຂະເໝນໃນປີຕໍ່ມາແລະປະເທດສະຫຍາມ ໄດ້ ຖອນອອກຢ່າງຄ່ຽມຄົມ ແລະ ໃຫ້ຜູ້ທີ່ຕົນສະໜັບສະໜູນໄປ ດຳ- ລົງຊີວິດຢູ່ບາງກອກເລີຍ. ກອງທະຫານຫວຽດນາມໄດ້ຄວບ ຄຸມ ກຳແພງຂອງພະນົມເປັນແລະໃນເວລານັ້ນອິດທິພົນຂອງສະຫຍາມ ຢູ່ຂະເໝນກໍໄດ້ຕົກຕ່ຳລົງ, ແຕ່ລັດຖະບານບາງກອກໄດ້ມີ ສະຕິ ກຽມພ້ອມຢູ່ສະເໝີເພື່ອຈັບເອົາທຸກກາລະໂອກາດທີ່ຈະ ເຂົ້າມາ ຄວບຄຸມຂະເໝນຄືນ. ຢ່າງໃດກໍຕາມ ລັດຖະບານ ບາງກອກກໍ່ ໄດ້ທົດແທນການເສຍຫາຍໃຫ້ແກ່ຕົນເອງດ້ວຍການສົ່ງກອງທັບໄປ ໂຄລາດໃນປີ ໑໘໑໔ ເພື່ອຍຶດຄອງເອົາໝົດແດນດິນທີ່ຕັ້ງຢູ່ ລະ ຫວ່າງຊາຍແດນຂອງແຂວງ ພລົມເທບ ( Phrom Thep ) ແລະ ສັນພູ ດົງເລັກ ( Dang Rek ) ແລະນອກຈາກນັ້ນຍັງ ໄດ້ຍຶດຄອງເອົາແຂວງມະລູເປລ (MLEOU PRE) ແລະແຂວງ

ຕົງເລເລປູ ( Tonlé Repou ) ທີ່ຢູ່ຫ່າງໄກໂພດຈາກ ອຸດົງ ( Oudong ) ຊຶ່ງລັດຖະບານກາງບໍ່ມີຄວາມສາມາດທີ່ ຈະຄຸ້ມຄອງໄດ້. ດັ່ງນັ້ນກອງທັບສະຫຍາມຈຶ່ງບໍ່ໄດ້ພົບກັບການ ຕ້ານທານ ແຕ່ຢ່າງໃດໝົດໃນການຍຶດຄອງດັ່ງນີ້ແລະກອງທັບ ສະຫຍາມຍັງໄດ້ຂ້າມນ້ຳຂອງໄປຍຶດເອົາຊຽງແຕງ. ດ້ວຍບາດກ້າວນີ້, ສະຫຍາມໄດ້ຄຸ້ມຄອງເອົາດິນແດນສ່ວນໜຶ່ງພາກເໜືອຂອງອະເໝນທັງຕອກຫລົ້ມໃສ່ລະຫວ່າງລາຊະອານາຈັກອະເໝນກັບລາຊະອານາຈັກວຽງຈັນທີ່ບໍ່ເທົ່າໃດປີຕໍ່ມາກໍ່ຖືກສະຫຍາມ ກືນກິນ "(໔໖). ນັກຄົ້ນຄວ້າບາງຄົນກໍໄດ້ຊີ້ແຈງໃຫ້ເຫັນວ່າ ພວກທີ່ໄດ້ຮັບຜົນປະໂຫຍດຈາກສິ່ງຄ້ານເສດຖະກິດ ຕ້ານລາວ ແລະ ຕັດຂາດສາຍພົວພັນການຄ້າຂອງລາວທີ່ຜ່ານອະເໝນນັ້ນແມ່ນ" ພະຍາບໍດິນທີ່ໄດ້ມີພູມສ່ວນຕົວໃນການຄ້າທາງບົກຈາກລັດລາວ ແລະລັດອະເໝນອັນໄດ້ຊ່ວຍຊູສ້າງຄວາມຮັ່ງມີໃຫ້ແກ່ກຸ່ມ ກຳອຳນາດບາງກອກ ກ່ອນເຄິ່ງສະຕະວັດທີ່໑໙ " (໔໗). ຊາວລາວ ກໍ່ບໍ່ໄດ້ລົດລະຄວາມພະຍາຍາມເພື່ອຕ້ານທານການປິດລ້ອມດັ່ງກ່າວ, ທັງຕ້ານທານການເສຍເລືອດເນື້ອຂອງຊາດຄືການຄ້າ ອາຫາດທີ່ເຈົ້າເມືອງໂຄລາດ ແລະ ບາງກອກໄດ້ລິເລີ່ມມາແຕ່ປີ ໑໗໙໑ (໔໘).

ຕາມຈອນ ຄຣາເຟີດ ( John CRAWFURD ) ລາຄາຂອງອາຫາດໄດ້ຖືບທະວີຂຶ້ນຢູ່ບາງກອກເປັນສາມທົບ. ອັນນີ້ກໍໄດ້ເປັນສິ່ງຊຸກຍູ້ໃຫ້ແກ່ການຫລັ່ງໄຫລເຂົ້າມາລ່າເອົາອາຫາດ ຢູ່ໃນ

ລາວ. ຕົວການສຳຄັນຂອງການຫລັ່ງໄຫລເຂົ້າມາລ່າອານານິຄົມກໍ່ຄື ເຈົ້າເມືອງໂຄລາດທີ່ບໍ່ສົ່ງເລໃຈໃນການຍຸແຍ່ໃນເລື່ອງທີ່ສູນ. ສຽບ ແຫລມໃຫ້ເກີດການລຸກຮື້ຂຶ້ນເພື່ອຕົນເອງຈະໄດ້ເກັບເອົາຜົນເກັບ ກ່ຽວໄປສ້າງຮັ່ງສູນມີໃຫ້ຕົນເອງ. ໃນປີ ໑໘໑໙ " ສະຫຍາມ ໄດ້ປາບປາມຊົນຊາດທີ່ໃນເມື່ອກ່ອນນັ້ນຢູ່ບາງແຫ່ງມີຈຳນວນຮອດ ສາມແສນຄົນແລະພາຍຫລັງມາບໍ່ເຫລືອຮອດ ໑.໐໐໐ ຄົນທີ່ລອດ ຈາກການຂ້າຟັນລັນແທງຢ່າງໂຫດຮ້າຍທີ່ສຸດ. ພວກປະຊາຊົນໄດ້ ສືບຕໍ່ເລົ່າລືກັນມາວ່າດິນນາຕາກາກໍ່ເຈືອນຈານໄປດ້ວຍເລືອດ , ຫ້ວຍນ້ຳລຳທານແລະຮ່ອມພູກໍ່ເຕັມໄປດ້ວຍຊາກສົບ" (໔໙) .

ໃນປີ ໑໘໔໗, ສົງຄາມຕານລາວ ແລະ ການກວດເອົາ ປະຊາ ຊົນຢ່າງເປັນລະບົບຈາກຝັ່ງຊ້າຍແມ່ນ້ຳຂອງກໍ່ແມ່ນໃສ່ກວດເອົາອາ ທາດເພື່ອໄປອອກແຮງງານໃຫ້ແກ່ຂະບວນພັດທະນາເສດຖະ ກິດ ຂອງບາງກອກທີ່ກ້າວເຂົ້າສູ່ລະດັບໃໝ່ຕາມການກຳນົດຂອງການ ຂະຫຍາຍເສດຖະກິດນາຍທຶນເຂົ້າມາໃນມຸມນີ້ຂອງໂລກ(໕໐) . ໂດຍສະເພາະຢູ່ໃນສັງຄົມສັກດີນາ, "ສົງຄາມຄົງເປັນກິດຈະການ ຕົ້ນຕໍຂອງລັດເນື່ອງຈາກວ່າສົງຄາມໄດ້ປ້ອນ ຊັບພະຍາກອນ ໃຫ້ ແກ່ລັດ ແລະ ຍັງປະກອບສ່ວນໃຫ້ແກ່ການສືບທົ່ມແທນແນວ ຂອງ ປະຊາກອນຜູ້ເປັນຂ້າທາດແລະຂອງລະບົບການເມືອງ" ໕໑) , ແລະ ດ້ານຍຸດທະສາດກໍ່ບໍ່ມີຊຸປະສົງເພື່ອໃຫ້ບາງກອກຊະນະ ສົງ ຄາມ, ເນື່ອງຈາກວ່າ:" ຈະຕີເມືອງວຽງຈັນຖະຫວາຍຈົກສອງ ສາມເມືອງເຫັນຈະງ່າຍ. . ." ອັນນີ້ແມ່ນຄຳເວົ້າຂອງ ຈອມທັບ



ຮູບແຜນທີ່ຍຸດທະສາດທີ່ກອງທັບຂອງບາງກອກໄດ້ໃຊ້ໃນເວລາ -
ເຂົ້າບຸກລຸກຮຸກຮານປະຊາຊົນລາວໃນປີ ໑໘໒໗.

ຮູບແຜນທີ່ນີ້ແມ່ນຄັດອອກຈາກບົດຂອງ ວູກຕູ ແກນເນີດ :
ແຜນທີ່ຂອງຕົ້ນສະຕະວັດທີ ໑໙ . ໑໙໓໐. ໜ້າ ນີ໕໘ .

ກົມພະລາຊະວັງ ບໍວອນ ທີ່ເປັນຈອມທັບມາທີ່ລາວ(໕໘). ໃນຕົວຈິງແລ້ວກໍຄົງຈະເປັນແບບນັ້ນແທ້, ໃນເມື່ອບາງກອກໄດ້ ຈົມເລີກເຂົ້າໃນການຊ່ວງເສັງປະກອບອ໌.ວຸດຈົນລົ້ນເຫລືອກ່ອນ ຈະເຮັດສົງຄາມກັບລາວ ( ໕໙).

ໃນຂະນະທີ່ຊາວລາວໄດ້ໃຊ້ມາດຕະການປ້ອງກັນໂຕ(໕໔ ) ແລະປະກາດເອກະລາດຂອງຕົນຂຶ້ນ, ບາງກອກກໍໄດ້ ສວຍ ໃຊ້ເອົາເປັນຂໍ້ອ້າງເພື່ອດຳເນີນເຮັດສົງຄາມຢ່າງເປີດແປນ. ພາຍຫລັງຖະຫລົ່ມເມືອງໂຄລາດທີ່ເປັນປ້ອມດ່ານໜ້າຂອງລັດທິແຜ່ຂະຫຍາຍອານາເຂດຂອງບາງກອກໄປເຖິງ ໘ ຝັ່ງແມ່ນ້ຳຂອງ , ເຈົ້າອະນຸກໍໄດ້ກັບຄືນເມືອວຽງຈັນຢ່າງສະບາຍ, ສະບາຍ ໂດຍປົ່ງໂຍກເຍກຢູ່ເທິງຫລັງຊ້າງຂອງເພິ່ນແລະ"ຖືໝວກແຂບ ດ້ວຍຜ້າສີແດງ " ຕາມຄຳເວົ້າຂອງພະຍານຜູ້ໜຶ່ງທີ່ໄດ້ ເຫັນເພິ່ນ (໕໕). ເພື່ອຕ້ານສະຫຍາມຄືນ, ເຈົ້າອະນຸກໍໄດ້ກຽມພ້ອມລ່ວງໜ້າໂດຍສ້າງປ້ອມທີ່ໝັ້ນຢູ່ໜອງບົວລຳພູ (໕໖) ເພື່ອປ້ອງກັນການຖອນທັບແລະການອົບພະຍົບຄົນລາວຢູ່ໃນຮາບສູງໂຄລາດມາວຽງຈັນ, ຫລວງພະບາງ ຫຼື ລ້ານນາ. ປະຊາຊົນສະລະບຸລິໄດ້ກັບຄືນມາວຽງຈັນດ້ວຍຄວາມຕື້ນຕັນໃຈ; ປະຊາຊົນໂຄລາດ ກໍດີໃຈເໝືອນກັນທີ່ຈະໄດ້ມາວຽງຈັນຕາມຄຳເວົ້າຂອງຄົນຜູ້ໜຶ່ງ ທີ່ໄດ້ເຫັນເຂົາເຈົ້າແລະຍັງໄດ້ເວົ້າຕື່ມວ່າພວກຄອບຄົວໂຄລາດທີ່ມີລູກຜົວຢູ່ໃນກອງທັບເຈົ້າພະຍາໂຄລາດນັ້ນກໍພາກັນໂສກເສົ້າ(໕໗) ໃນການຖອນທັບນີ້ເຈົ້າອະນຸແລະບຸກຄົນໃກ້ຊິດຂອງເພິ່ນກໍໄດ້ຮ່ວມ



ເຈົ້າອະນຸ ໄດ້ຂໍພະແກ້ວ ແລະ ຄົນລາວທີ່ຖືກກວດໄປຢູ່ປະເທດສະຫຍາມ ໃນປີ ໑໘໒໘ ໂດຍສະເພາະເປັນຂ້າທາດຢູ່ເມືອງສາລະບູລີ ໃຫ້ກັບຄືນມາຢູ່ລາວດັ່ງເດີມ .



ພາບໂດຍ ໂກລດ ແລງຊັງ ສະລ່ຽງຊ້າງທີ່ເຈົ້າອະນຸ ສົ່ງເຖິງ ເຈົ້າຊີວິດ ຫລວງພະບາງ .

ຮົບຫລາຍຄັ້ງຫລາຍຄາວ (໕໘). ເຈົ້ານ້ອຍຊຽງຂວາງກໍໄດ້ເອົາພົນມາຊ່ວຍເຈົ້າອະນຸ (໕໙), ຫລວງພະບາງທີ່ເຈົ້າອະນຸໄດ້ສົ່ງທູດໄປຫາໃນປີ ໑໘໒໐-໑໘໒໑ (ເພື່ອຕາມຄຳເວົ້າຂອງເຈົ້າອະນຸ:" ຮວມກຳລັງກັນບໍ່ໃຫ້ເມືອງລາວສືບຕໍ່ຂຶ້ນກັບສະຫຍາມ ແລະຖ້າສຳເລັດແລ້ວ ກໍຈະຖະຫວາຍເມືອງລາວໃຫ້ເຈົ້າຊີວິດ ຫລວງພະບາງເພື່ອໃຫ້ເມືອງລາວມີແຕ່ເຈົ້າດຽວແລະເປັນອັນໜຶ່ງ ອັນດຽວກັນເໝືອນດັ່ງແຕ່ກ່ອນ, ສ່ວນເຮົາເອງ( ເຈົ້າອະນຸ )ຈະໄປບວດຢູ່ວັດດີພະເຈົ້າຟ້າງຸ່ມ "), ໄດ້ລຳລຽງສະບຽງແລະຄົນມາເມືອງປາກລາຍຕາມເຈົ້າອະນຸໄດ້ຮ້ອງຂໍ (໖໐ ) ພວກຜູ້ນຳຂອງຊຽງໃໝ່ກໍໄດ້ຈັ້ງຢູ່ເມືອງລະແຫງ ( Rahèng ) ເໝືອນດັ່ງທີ່ເຈົ້າອະນຸໄດ້ຮ້ອງຂໍເພື່ອເປັນຍຸດທະວິທີຫລອກ ລວງແລະຖ່ວງດຶງການພັນຂະຫຍາຍເຫລົ່າຮົບຂອງບາງກອກທີ່ກຽມຈະມາຕີເມືອງລາວເປັນເວລາເຫິງນານແລ້ວ (໖໑). ເຈົ້າອະນຸແລະເຈົ້າລາຊະວົງໄດ້ບັງຄັບບັນຊາຈົນຮອດຂັ້ນສຸດທ້າຍຄື ບັ້ນຮົບອັນດຸເດືອດທີ່ສຸດທີ່ຕັດສິນຊີ້ຂາດ ຊະຕາກຳຂອງການລຸກຮື້ຂຶ້ນເພື່ອກອບກູ້ເອກະລາດ ແລະ ເອກະພາບຂອງຊາດລາວຢູ່ໃນທີ່ໝັ້ນທີ່ທົ່ງສົ້ມປ່ອຍແລະຊ່ອງເຂົ້າສານ (໖໒). ລຳພົນວຽງຈັນກໍໄດ້ເລົ່າວ່າພາຍຫລັງທີ່ພະຍາບໍດິນໄດ້ເຜົາຜານເມືອງວຽງຈັນ, ເຈົ້າລາຊະວົງ ໄດ້ສືບຕໍ່ການສູ້ຮົບຕ້ານສະຫຍາມເພື່ອຮັກສາອຸດົມການຈົນຮອດບັ້ນຮົບຕ່າງໆຢູ່ປະເທດຂະເໝນ (໖໓).

ນອກຈາກພົງສາວະດານ ແລະ ຈົດໝາຍເຫດ, ຍັງມີການ

ເລົ່າສືບກັນມາກ່ຽວກັບວິລະກຳອັນສັກກາລະບູຊາຂອງ ເຈົ້າອະນຸ ແລະຍິ່ງໄປກວ່ານັ້ນຂອງເຈົ້າລາຊະວົງຈາກແຕ່ລະຮຸ່ນຄົນຕິດຕໍ່ກັນມາ. ໃນຄວາມນຶກຄິດຂອງປະຊາຊົນ ໒ ຝັ່ງແມ່ນ້ຳຂອງ, ຊື່ຂອງເຈົ້າລາຊະວົງໄດ້ກາຍເປັນສັນຍາລັກຂອງຊາດລາວ, ຂອງນ້ຳໃຈສູ້ຮົບແລະຈິດໃຈຕໍ່ສູ້ໂດຍບໍ່ຍອມຈຳນົນ, ຂອງຄວາມ ເຊື່ອໝັ້ນຕໍ່ການຟື້ນຊີບຂອງປະເທດຊາດເພື່ອມຸ່ງໄປສູ່ອະນາຄົດ ອັນແຈ່ມໃສ. ປະຊາຊົນແຖບປາກຫີນບູນ, ໃນແຂວງຄຳມ່ວນ,ກໍໄດ້ສ້າງວັນນະກຳອັນໃຫຍ່ໂຕເພື່ອລະນຶກເຖິງເຈົ້າລາຊະວົງ ແລະພາດຫົວເລື່ອງວ່າ :" ທ້າວເຫລົາຄຳ-ພ້ນລາຊະວົງ "(໖໔)-ພົງສາວະດານເມືອງຍະໂສທອນກໍໄດ້ເອົາຊື່ເຈົ້າລາຊະວົງຕິດພັນໃສ່ທຸກຂັ້ນຮົບທີ່ໄດ້ດຳເນີນໃນປີ ໑໘໒໗ ຫາ ໑໘໒໘ (໖໕) . ຊາວພວນທີ່ໄດ້ຖືກກວາດຈາກຊຽງຂວາງໄປໄທນັ້ນ ຍັງຮ້ອງຫາເຈົ້າລາຊະວົງ ຈົນຮອດທຸກມື້ນີ້ແລະສະແດງຄວາມຜູກພັນກັບລາວໃນເພງທີ່ເຂົາເຈົ້າຮ້ອງເພື່ອກ່ອມລູກ (໖໖) ແລະກໍເປັນທີ່ໜ້າສັງເກດວ່າເວົ້າທົ່ວໄປແລ້ວປະຊາຊົນຂອງພາກຕາເວັນອອກສ່ຽງເໜືອຂອງໄທໃນປັດຈຸບັນກໍຄືປະຊາຊົນຫລວງພະບາງໄດ້ ຮ້ອງກາບເຈົ້າລາຊະວົງອັນດຽວກັນ (໖໗). ຊາວພູໄທກໍໄດ້ຮ້ອງຊື່ພູມິລຳເນົາໃໝ່ຂອງເຂົາເຈົ້າໃນເວລາຖືກກວາດໄປຢູ່ໄທ ວ່າ " ເມືອງພູລ້ານຊ້າງ" ( ໖໘ ). ດັ່ງນັ້ນຈຶ່ງມີກະແສອັນ ເລິກເຊິ່ງທີ່ຜູກພັນກຸ່ມເຜົ່າຊົນແລະຊົນຊາດຕ່າງໆຂອງປະຊາຊົນ ລາວ ແລະ ເຮັດໃຫ້ເຂົາເຈົ້າເປັນຈິດໜຶ່ງໃຈດຽວ. ຊື່ຂອງເຈົ້າ ລາ

ຊະວົງ ແລະ ຊື່ຂອງເຈົ້າອະນຸໄດ້ກາຍເປັນຄົນຫຼວງໃຫ້ແກ່ ຊາວລ້ານຊ້າງ. ການຜູກພັນແບບມະຫັດສະຈັນຂອງລາວກັບບ້ານເກີດເມືອງນອນຂອງເຂົາເຈົ້າໄດ້ຖືກຮັດແໜ້ນ ໂດຍການຫລໍ່ຫລອມໃນເຫດການສະໄໝນັ້ນ. " ໝາກໄມ້ບໍ່ຫລົ່ນໄກກົກ " ຕາມສຸພາສິດລາວ ( ໒໙) ຢູ່ໃນບັ້ນຣົບຕ່າງໆທີ່ເຂົາເຈົ້າໄດ້ສະຫລະຊີວິດ ຊາວລາວທີ່ໄປຈາກວຽງຈັນ, ຫລົ່ມສັກ, ເລີຍ, ຮ້ອຍເອັດ , ຂອນແກ່ນ, ຍະໂສທອນ ກໍ່ຄືສາກົນນະຄອນ, ສະລະບູລີ, ນະຄອນພະນົມ, ນະຫາໄຊ ແລະ ຊຽງຂວາງ ກໍ່ລ້ວນແຕ່ໄດ້ ເປັນ " ທະຫານລາວທີ່ເຕັມໃຈສູ້ຣົບເກືອບຈະທຸກຄົນເພາະລາວ ຮັກຄອບຄົວບ້ານເກີດເມືອງນອນຂອງລາວ" (໓໐) ຕາມຄວາມໃຫ້ການຂອງຈອມທັບກົມພະລາຊະວົງ ບໍ່ວອນທີ່ໄດ້ຂຽນລາຍງານໃຫ້ເຈົ້າຊີວິດສະຫຍາມລາຊະການທີ່ສາມ.ບ້ານເກີດເມືອງນອນຂອງລາວກໍ່ຄື " ປະເທດລາວອິດສະຫລະ " ເໝືອນດັ່ງນັກສອນສາສະໜາ ອາເມລິກາ ຊາກເລີ ກູດສະລາຟ ( Charles Gutslaff)ໄດ້ເອີ້ນຢູ່ໃນກອງປະຊຸມສຳມະນາທີ່ຜູ້ກ່ຽວໄດ້ ປາຖະກະຖາກ່ຽວກັບລາວໃນປີ ໑໘໔໘ ຢູ່ທີ່ລາຊະສະມາຄົມ ພູມີສາດ (Royal Géographical Society)ຢູ່ທີ່ ລອນດອນ(ອັງກິດ ) (໓໑). ອັນນີ້ກໍ່ດັ່ງດຽວກັນກັບທ່ານ ໄກສອນ ພົມວິຫານ ທີ່ເປັນຜູ້ໃຫ້ກຳເນີດແກ່ກອງລາຊະວົງ ທີ່ເປັນຕົ້ນກຳເນີດ ຂອງກອງທັບປະຊາຊົນລາວໄດ້ຂຽນຢູ່ໃນນິພົນ" ບາງບົດຂຽນ ຕົ້ນຕໍ ແລະ ບາງບັນຫາກ່ຽວກັບທິດທາງໃໝ່ຂອງການປະຕິວັດລາວ "

" ວ່າ:" ນັບແຕ່ສະຕະວັດທີ ໑໘ ເປັນຕົ້ນມາເຊິ່ງເປັນ ໄລຍະ ເສື່ອມໂຊມຂອງຊົນຊັ້ນສັກດີນາຜູ້ປົກຄອງ ປະເທດຊາດຂອງພວກເຮົາໄດ້ຖືກຕັດແບ່ງແລ້ວຖືກສັກດີນາສະຫຍາມມາຣຸກຮານ ຄອບຄອງ, ແຕ່ປະຊາຊົນເຮົາກໍ່ຍັງສາມັກຄີກັນລຸກຮືຂຶ້ນຕໍ່ສູ້ ຢ່າງເດັດດ່ຽວຂຽວຂາດບໍ່ຢຸດບໍ່ຢັ້ງ, ໃນນັ້ນອັນເດັ່ນກວ່າໝູ່ແມ່ນການລຸກຮືຂຶ້ນໃນຂະໜາດທົ່ວປະເທດໂດຍແມ່ນເຈົ້າອະນຸວົງ ວີລະຊົນແຫ່ງຊາດເປັນຜູ້ນຳພາ (ປີ ໑໘໒໗-໑໘໒໘ ). ເຖິງແມ່ນວ່າ ການລຸກຮືຂຶ້ນນັ້ນບໍ່ສຳເລັດຜົນກໍ່ຕາມແຕ່ມັນກໍໄດ້ຂຽນໄວ້ໃນໜ້າ ປະຫວັດສາດ ອັນສະຫວ່າງສະໄຫວຂອງຊາດເຮົາໃນພາລະກິດ ປົກປັກຮັກສາປະເທດຊາດແລະໄດ້ເລົ່າລືກັນມາຢູ່ໃນໝູ່ ປະຊາຊົນເຮົາຈົນຕະຫລອດສູ່ມື້ນີ້ "(໓໔) ເພາະວ່າບໍ່ມີຊາດໃດຊາດ ໜຶ່ງຈະປະລາໄຊຢ່າງສິ້ນເຊີງມີແຕ່ຊາດນັ້ນຈະລຸເຂົ້າຍອມຈຳນົນຫລືບໍ່ເທົ່ານັ້ນ .

## ເອກະສານອ້າງອີງຂອງບົດ

## " ເບື້ອງຫລັງຂອງສົງຄາມດັບສູນເຊື້ອຊາດ

## ລາວສະຫຍາມໄດ້ກໍ່ຂຶ້ນໃນປີ 1827 "

(໑) ຈອນ ຄຣາເຟິດ ( John CRAWFURD ) "ໜັງສື ຈົດໝາຍເຫດວ່າດ້ວຍການທູດຢູ່ທີ່ປະເທດສະຫຍາມແລະໂກແຊງ ຈີນ " ( ພາສາອັງກິດ ) ໂຮງພິມແຫ່ງມະຫາວິທະຍາໄລ ອົກ ເຊີຟອດ ( Oxford ) ລອນດອນ ກູລາລຳເປີ-ປີ໑໙໖໗ ໜ້າ ໔໔໖-໔໔໗.

(໒) ໝ່ອມເຈົ້າທັບ : ນິລາດທັບວຽງຈັນ " (ພາສາໄທ)ພິມ ຢູ່ໃນປຶ້ມຂອງກົມ ສິລະປະກອນ:"ປະຊຸມຈົດໝາຍເຫດ ເລື່ອງ ປາບກະບົດວຽງຈັນ" ໂສພົນ. ບາງກອກ. ປີ ໑໙໓໐. ໜ້າ ໙໐-໙໘.

(໓) ເຈົ້າພະຍາທິພະກໍາລະວົງ:"ພະລາຊະພົງສາວະດານ ກຸງ ລັດຕະນະໂກສິນ. ບາງກອກ ປີ ໑໙໖໑. ໜ້າ ໖໔ແລະ໗໕ .

(໔) ຟລັງຊິດ ກາກນີເອ ( Francis GARNIER ) " ການເດີນທາງມາສຳຫລວດຢູ່ອິນດູຈີນ" (ພາສາຝະລັ່ງ),ວາ ລະສານຕວກດູຍມົງເດີ(Revue TOUR DU MONDE,) ປາລີ

( Paris ) ປີ ໑໘໗໐-໑໘໗໑. ໜ້າ ໓໗໔.

(໔) ລູຍສ໌ເດີ ກາກເນີ ( Louis de CARNE )
" ການສຳຫລວດນ້ຳຂອງ ___/// . ວຽງຈັນແລະການຮຸກຮານ
ຍຶດຄອງຂອງສະຫຍາມ " ( ພາສາຝະລັ່ງ ), ວາລະສານເດ
ເດີມົງເດີ(Revue des Deux Mondes)ປາລີ (Paris)
ປີ ໑໘໖໙. ໜ້າ ໔໖໙.

(໖) ດີ.ຈີ.ອີ. ຮອນ ( D.G.E.HALL ):" ປະຫວັດ
ສາດ ອາຊີ-ອາຄະເນ " ( ພາສາອັງກິດ ) ມາກມິນລັງ -
( Macmillan ) ການພິມ, ລອນດອນ ປີ ໑໙໖໘. ໜ້າ
໔໔໑,

(໗) ອາກເທີ ຈີ-ໂດມແມນ ( Arthur.J.DOMMEN )
" ລາວ,ຂໍກຸນແຈ ຂອງອິນດູຈີນ " ( ພາສາອັງກິດ )ແວດສະ
ວິວ ໂປລໄຟເລີ(Westview Plofiles)ນິວຢອກ,ປີ ໑໙໘໖
ໜ້າ ໒໒.

(໘) ກ່ຽວກັບນັກປະຫວັດສາດໄທຜູ້ນັ້ນໍໃຫ້ເບິ່ງບົດຂອງດຣ.ຊານ
ວິດ ກະເສດສິລິ: " ບົພິນຕ່າງໆກ່ຽວກັບປະຫວັດສາດໄທແຕ່ ສະ
ໄໝເກົ່າແກ່ຈົນເຖິງສະໄໝປັດຈຸບັນ " ທີ່ພິມອອກຢູ່ໃນປຶ້ມຂອງ
ອັງໂຕນີ ແລດ ( Anthony REID ແລະ ເດວິດ ມາກ
( DAvid MARR )," ການເບິ່ງ ຄວາມເປັນ

ມາໃນອາຊີອາຄະເນ" ( ພາສາອັງກິດ )ອາຊາ ອາຊີ ອາຄະເນ ( **ASAA** Southeast Asia ) ຈຳໜ່າຍ.ສິງກະໂປ ປີ໑໙໗໖, ໜ້າ ໑໖໒.

(໙) ຄຳເວົ້າຂອງທາເດີ ຟລອດ ( Thadeus FLOOD ) " ຈິດ ພູມີສັກ " ( ພາສາອັງກິດ ): ວາລະສານອິນໂດສາຍນາ ໂຄລນິໂກນ (Indochina Chronicle) ປີ ໑໙໗໗, ໜ້າ ໑໒.

(໑໐) ໂກຈະບຸນ ນະ ຕາກສິນ:"ການເມືອງໄທໃນສາຍຕາຄົນຊາວໄຕ້" ( ພາສາອັງກິດ ) ວາລະສານ ຊາວ ອິດເອເຊຍໂຄລນິໂກນ (Southeast Asia Chronicle) ສະບັບ ຜົນ.໑-໒/໑໙໘໐, ໜ້າ ໒໓.

(໑໑) ຄຳເວົ້າຂອງສາດສະດາຈານ ວ.ວ.ໂວນເຕືອກເຊີ , ຄານຄາລ ເອ.ຫລອກກີ:" ວິໄຈເອກະສານກ່ຽວກັບໄທ - ອຳນາດແລະທັດສະນະ:"( ພາສາອັງກິດ) ວາລະສານ ບຸນເລີແຕງອອບຄອນເຊີອກເນີ ເອຊຽນ ສະໂກລາກສ໌(Bulletin of concerned Asian **scholars**) ເຫລັ້ມ ໑໓, ປີ໑໙໘໑ ໜ້າ ໖໔,

(໑໒) ແຄນນອນ ເບີລຊິນເລີ ( **Kennon BREAZEALE** ) " ບໍພົນດານປະຫວັດສາດຂອງພະຍາເ ດຳລົງ ລາຊານຸພາບ "

( ພາສາອັງກິດ ) ວິທະຍານິພົນ ມະຫາວິທະຍາໄລ ຮາວາຍ ( Hawai ) ປີ ໑໙໗໑. ໜ້າ ໑໖໕-໑໖໖.

(໑໓) ທະຫວັດ ປຸນໂນທົກ: "ເອກະສານການບັນລະຍາຍເລື່ອງພື້ນວຽງ : ເອກະສານບັນທຶກຄວາມອັດແຍງກໍລະນີເຈົ້າອະນຸ ໃນມະໂນທັດຂອງຊາວອີສານ" (ພາສາໄທ). ສະມາຄົມປະຫວັດສາດ. ບາງກອກ. ໒໕ ກໍລະກົດ ໒໕໒໕ ( ໑໙໘໒ )໗໕ໜ້າ ທະຫວັດ ປຸນໂນທົກ ລາຍງານການວິໄຈເລື່ອງພື້ນວຽງ: ການສຶກສາປະຫວັດສາດແລະວັນນະກຳອີສານ" ( ພາສາໄທ ) ໂຄງການສຶກສາວິໄຈສິລະປະວັນນະກຳທ້ອງຖິ່ນ ມະຫາວິທະ ຍາໄລ ທຳມະສາດ. ບາງກອກ-໒໕໒໓ (ປີ ໑໙໘໐ ). ໑໙໑ ໜ້າ . ສະລອງ ສູນຫລາວານິດ:" ສຳພັນທະພາບໄທ-ລາວ ໃນປະຫວັດສາດ ກ່ອນສະຕະວັດທີ ໒໐ "( ພາສາໄທ ) ພິມຢູ່ໃນປື້ມຂອງໂຄງການປີສັນຕິພາບ ໒໕໒໙:" ສຳມະນາ ສຳພັນທະໄມຕີ ໄທ-ລາວ " ບາງກອກ. ວັນທີ ໒໑ ມິຖຸນາ ໒໕໒໙(ປີ໑໙໘໖) ໜ້າ ໑-໙; ພັນສາ ສິນທະຫວັດ:" ຄວາມສຳພັນລະຫວ່າງກຸງເທບກັບເມືອງວຽງຈັນໃນລາຊະສະໄໝ ພະບາດສົມເດັດພະນັ່ງເກົ້າເຈົ້າຢູ່ຫົວ ພ.ສ ໒໓໖໗-໒໓໗໐ " ( ໑໘໒໔.໑໘໒໗) ວິທະຍານິພົນ ມະຫາວິທະຍາໄລ ສິລະປະກອນ. ບາງກອກ . ພ.ສ ໒໕໒໑ (ປີ ໑໙໗໘ ), ໑໗໗ ໜ້າ. ປະທີບ ຊຸມພົລ. " ພື້ນວຽງ:ວັນນະກຳແຫ່ງການກົດຂີ່ " ບາງກອກ, ສຳນັກພິມອາດິດ .໑໙໘໒ - ໑໘໙ ໜ້າ .

(໑໔) ເດວິດ ໄວຢັດ ( David K.WYATT ):"ສະຫຍາມກັບລາວ- ໑໗໖໗-໑໘໒໗ " ( ພາສາອັງກິດ ). ວາລະສານສຶກສາອາຊີອາຄະເນ ( ຊວກໂນນອອບຊາວອີດສ໌ ເອຊຽນ ສະຕຸຍດີສ໌(Journal of Southeast Asian Studies) ປີ ໑໙໗໔, ເຫລັ້ມ ໔, ສະບັບທີ ໒, ໜ້າ ໑໓-໓໑. ແຄນນອນ ເບລຊິນເລີ ( Kennon BREAZEALE ):"ການເອົາບັນດາລັດລາວເຂົ້າເປັນເມືອງຂຶ້ນຂອງລາຊະອານາຈັກ " ( ພາສາອັງກິດ ).ວິທະຍານິພົນ ມະຫາວິທະຍາໄລອອກສ໌ຟອດ ອັງກິດ. ປີ ໑໙໗໕. ໓໓໔ ໜ້າ, ສະບິດ ສະນຸກການ ແລະ ແຄນນອນ ເບລຊິນເລີ :" ຊາວພວນ, ວັດທະນະທຳ ອັນໜັ້ງທີ່ສະແຫວງຫາຄວາມຍືນຍົງຄົງຕົວ" ( ພາສາອັງກິດ ).ມະຫາວິທະຍາໄລ ຮາວາຍ, ໓໐໕ ໜ້າ.

(໑໕) ຕາມການສອບຖາມ ສາທຸໃຫຍ່ ຄຳຈັນ ວິລະຈິດ,ຫລວງພະບາງວັນທີ ໒໔ ເມສາ ປີ ໑໙໘໗.

(໑໖) ອັງລີ ເດດີເອ ( Henri DEYDIER ) :" ໂລກາປາລາ. ເທວະດາ, ຂອງສັກສິດແລະໜໍ່ຜີປູ່ທາງເໜືອ ຂອງລາວ" ( ພາສາຝະລັ່ງ ), ປາລີ ( Paris ) ປລັ່ງ,ການພິມປີ ໑໙໕໔ ໜ້າ ໑໑໗.

(໑໗) ມະຫາ ສີລາ ວິລະວົງ:" ພົງສາວະດານລາວ". ກະຊວງສຶກສາທິການ. ວຽງຈັນ. ລາຊະອານາຈັກລາວ ປີ໑໙໕໗.

24/VII
ຫ້າມຈຳໜ່າຍ

ມະຫາຄຳ ຈຳປາແກ້ວມະນີ:"ປະຫວັດສາດລາວ"ປີ ໑໙໘໐ . ສ.ປ.ປ.ລາວ ໓ ເຫຼັ້ມ .

(໑໘) ຕາມການລວບລວມໃບລານຢູ່ລາວ; ເອກະສານນີ້ຄວນມີຫລາຍສະບັບກ່ວານີ້. ຂໍໃຫ້ເບິ່ງລຸຍສ໌ ຟີໂນ(Louis FINOT) " ສຳຫລວດໃບລານວັດຢູ່ລາວ" ( ພາສາຝະລັ່ງ )ວາລະສານສະຖາບັນຝະລັ່ງຄົ້ນຄວ້າກ່ຽວກັບຕາເວັນອອກໄກ ( ບູນເລີແຕງ ເດີ ເລໂກນເລີ ຝະລັ່ງແຊເຊີ ເອກສະແຕລມເນີ ອໍລີອັງ (Bulletin de l'Ecole Française d'Extrème Orient) ປີ ໑໙໑໗, ໜ້າ ໔໒໙-໔໔໔.

(໑໙) ປະຊຸມພົງສາວະດານ ( ພາສາໄທ ) ເຫຼັ້ມ ໔໔ . ຄຸຣຸສະພາ ບາງກອກ, ປີ ໑໙໖໙. ໜ້າ ໑໓໑-໑໔໒.

(໒໐) ມິດສີອົງ ປາວີ ( Mission Pavie ):" ອິນດູຈີນ ໑໘໗໙-໑໘໙໔. ການຄົ້ນຄວ້າຕ່າງໆ / / : ຄົ້ນຄວ້າກ່ຽວ ກັບປະຫວັດສາດຂະເໝນ-ລາວແລະສະຫຍາມ"( ພາສາຝະລັ່ງ ) ປາລີ ( Paris ) ແອກແນດສ໌ ເລີລູ(Ernest Leroux) ພິມຈຳໜ່າຍ. ໑໘໙໘. ໜ້າ ໙໔ - ໑໐໒.

(໒໑) ຊາກເລີ ອາກແຊມໂບນ :" ພົງສາວະດານຂອງ ອະດີດລາຊະອານາຈັກຊຽງຂວາງ " ( ພາສາຝະລັ່ງ ) ວາລະ

ສານສະຖາບັນຟະລັ່ງຄົ້ນຄ້ວາກ່ຽວກັບຕາເວັນອອກໄກ.ປີ ໑໙໒໗ ໜ້າ ໔໘໐.

(໘໘) ກາລ໌ ເອ. ຕລິກກີ, ເບິ່ງການອ້າງອີງຂ້າງເທິງ ໜ້າ ໖໘. ແລະ ເບິ່ງ ບາອາດສ໌ ແທກວີແອນ(Baas TERWIEL) " ສັກເລກໃນປະຫວັດສາດໄທ " ( ພາສາອັງກິດ ) ວາລະສານຂອງ ລາຊະສະມາຄົມຄົ້ນຄ້ວາກ່ຽວກັບອາຊີ(ຊອກໂນນອອບເດີໂລຍຢານ ເອຊີເອຕິກໂຊໄຊຕີ(Journal of the Royal Asiatic Society ) ລອນດອນ, ປີ ໑໙໗໙, ໜ້າ໑໔໘ - ໑໖໖ .

(໘໙) ພະໂພທິຍັນວິໄສ:"ໜັງສືເລື້ອງພະຕາພະວໍ"(ພາສາໄທ) ໜອງບົວລຳພູ ປີ ໑໙໔໙, ໘໑ ໜ້າ.

(໘໔) ພັນສາ ສິນສະຫວັດ,ເບິ່ງການອ້າງອີງຂ້າງເທິງ, ໜ້າ ໔໔. ແຄມນອນ ເບລຊິນເລີ, ເບິ່ງການອ້າງອີງຂ້າງເທິງ , ໜ້າ ກ໘-ກ໙;ທະຫວັດ ປຸນໂນທົກ, ເບິ່ງການອ້າງອີງ ຂ້າງເທິງ ( ໑໙໘໐ ), ໜ້າ ໑໔.

(໘໔) ວັນເຕົກ ແວນລາ:" ປະເທດສະຫຍາມໃນສະໄໝ ລາຊະການທີ ໖ " ( ພາສາອັງກິດ ); ໂອຮູດສະຕິນຈຳໜ່າຍ,

ນິວຢອກ, ປີ ໑໙໕໓, ໜ້າ ໖.

(໔໖)ສະສົມເອກະສານຂອງເບີກເນ(The BURNEY Papers) ປີ ໑໙໑໐-ປີ ໑໙໑໔.ເຫລັ້ມ ໓ ພາກ ໔ , ໜ້າ ໓໘໔( ພາສາອັງກິດ, ບາງກອກ, ຫໍສະມຸດແຫ່ງຊາດ ວາຊິລະນະ ເປັນຜູ້ພິມອອກເຜີຍແຜ່. ກ່ຽວກັບການໃຊ້ຂໍ້ມູນດັ່ງກ່າວເຂົ້າໃນ ການຄົ້ນຄວ້າດ້ານວິທະຍາສາດນີ້ ໂລນານ ເລນາກ ( Ronald R.REYNARD ):" ບົດບາດຂອງຊາວກະຫລ່ຽງຢູ່ໃນສັງຄົມ-ໄທ " ພິມອອກຢູ່ໃນປຶ້ມຂອງ ດຣ. ກົງສະຕັງເຊີ ວິນຊອນ - ( Constance WILSON )" ເຈົ້າຊຸນມູນນາຍແລະ ໄພ່ບັນດານິພົນກ່ຽວກັບປະຫວັດສາດແຫ່ງການປົກຄອງ, ເສດຖະກິດ ແລະ ສັງຄົມຂອງໄທ" ວາລະສານ ຄອນຕລີບູຍເຊິນ ທູເອຊຽນສະຕູດີ(Constribution to Asian Studies ປີ໑໙໗໐ ເຫລັ້ມ ໑໕, ໜ້າ ໔໐.

(໔໗) ກົມສິລະປະກອນ " ຈົດໝາຍເຫດເລື່ອງປາບ ກະບົດວຽງຈັນ" (ພາສາໄທ). ບາງກອກ. ໂສພົນ. ປີ ໑໙໔໖ . ໗໔ ໜ້າ.

(໔໘) ຂໍໃຫ້ເບິ່ງບົດຄວາມຂອງຜູ້ກ່ຽວໃນເຈມສ໌ໂລ:" ວ່າດ້ວຍລັດຖະບານສະຫຍາມ" ( ພາສາອັງກິດ ) ວາລະສານ ເອ

ເຊຍຕິກ ລິເຊີອກເສີ, ກາລກູດຕາ, ປີ ໑໘໓໙. ກ່ຽວກັບການ ຕິລາຄາຂອງຂັ້ນເທິງຂອງຜູ້ກ່ຽວຂໍໃຫ້ເບິ່ງສະສົມເອກະສານເບີກ ເນີ (The Burney Papers ) ເຫລັ້ມ ໑, ພາກ ໔ , ໜ້າ ໔໗໙.

(໒໙) ສະສົມເອກະສານ ເບີກເນ ເຫລັ້ມ ໒ ພາກ ໔ ໜ້າ ໔໓ ແລະ ໑໓໔.

(໓໐) ສະສົມ ເອກະສານ ເບີກເນ( Burney Papers ) ເຫຼັ້ມ ໒ ພາກ ໔ ໜ້າ ໙.

(໓໑) ສະສົມ ເອກະສານ ເບີກເນ( Burney Papers ) ເຫລັ້ມ ໔ ພາກ ໑, ໜ້າ ໘໙, ສ່ວນຟລັງຊິດ ກາກນີເອ ( Francis GARNIER ) ນັ້ນໄດ້ຂຽນວ່າ : ໃນປີ໑໘໒໗ ບັນດາຜູ້ນຳຂອງວຽງຈັນໄດ້ພະຍາຍາມປະກາດເອກະລາດ ຂອງລາວອີກເທື່ອໃໝ່ແຕ່ການປາບປາມກໍ່ໄວທີ່ສຸດແລະໂຫດຫ້ຽມທີ່ສຸດ ເຈົ້າຊີວິດວຽງຈັນປະລາໄຊ" ( ໜ້າ໗໔) ເຈົ້າອະນຸກໍ່ໄດ້ຮຽກຮ້ອງຊຸກຍູ້ໃຫ້ຊຽງໃໝ່ສົມທົບກັບເພິ່ນເພື່ອກອບກູ້ເອົາເອກະລາດຊາດລາວຄືນ ..." ໜ້າ ໓໘໘; ຟລັງຊິດ ກາກນີເອໄດ້ອ້າງອີງມາຂ້າງເທິງແລ້ວດ້ວຍການຢືນຢັນຂອງຊາວອັງກິດແລະ ຊາວຝະລັ່ງໃນສະໄໝນັ້ນແລະໄດ້ອ້າງອີງມາຂ້າງເທິງນັ້ນກໍໄດ້ ເຫັນ

ວ່າພວກເຂົາເຈົ້າໄດ້ເປັນເອກະສັນກັບອັນທີ່ເຈົ້າພະຍາທິບພະກາລະວົງໄດ້ຂຽນວ່າ:" ເຈົ້າອະນຸໄດ້ເວົ້າຕໍ່ເພື່ອນຮ່ວມງານ ຂອງເພິ່ນວ່າ " ການເປັນ ເມືອງຂຶ້ນ ທີ່ (ກໍ່)ໜັກໜາແລ້ວ ເຮົາບໍ່ຄວນຈະເປັນເມືອງຂຶ້ນ ..." ໜ້າ ໓໙ ຂອງປຶ້ມເຈົ້າພະຍາທິບພະກາລະວົງຕາມໄດ້ອ້າງອີງມາຂ້າງເທິງແລ້ວ. ຍິ່ງໄປກວ່ານັ້ນນັກປະຫວັດສາດໄທທີ່ມີການຕິດພັນກັບລາຊະວົງວຽງຈັນຄື : ພະຍາປະມວນ ວິຊາພູນໄດ້ຂຽນວ່າ : ພະເຈົ້າອະນຸລຶດລາຊາ, ພະເຈົ້າລ້ານຊ້າງ ຣົ່ມຂາວວຽງຈັນ ( ເຊິ່ງໄທໄດ້ນັກເອີ້ນສັ້ນໆວ່າ : " ເຈົ້າອະນຸ " ຫລື " ເຈົ້າອະນຸວົງ" ) ເຫັນວ່າເມືອງລ້ານຊ້າງເຄີຍເປັນປະເທດເອກະລາດມາດົນນານແລ້ວ . ແຕ່ໄດ້ມາເສຍທີໃຫ້ແກ່ກອງທັບຂອງກຸງທົນບຸລີ ເມືອງລ້ານຊ້າງເຄີຍເປັນປະເທດເອກະລາດມາດົນແລ້ວ. ແຕ່ໄດ້ຕົກໄປເປັນປະເທດລາດຂອງກຸງເທບພ້ອມທັງຍັງໄດ້ເສຍພະແກ້ວມໍລະກົດ ເຊິ່ງເປັນສິ່ງສັກສິດທີ່ສຸດໄປດ້ວຍຈຶ່ງໄດ້ຕົກລົງໃຈຈະທຳສົງຄາມ ກູ້ຊາດ ...";

ພະຍາປະມວນ ວິຊາພູນ:"ພົງສາວະດານເມືອງລ້ານຊ້າງ " ( ພາສາໄທ ) ບາງກອກ. ໒໔ ກຸມພາ ປີ໒໔໘໔ ( ໑໙໓໙ ) ພິມຄັ້ງທີ ໒ ໜ້າ ໔໓.

(໓໒) ກ່ຽວກັບຊຸດົມການກອບກູ້ເອົາເອກະລາດຂອງເຈົ້າ ອະນຸນັ້ນກໍ່ໄດ້ສະແດງອອກໂດຍສະເພາະໃນປີ ໑໘໐໔ ໃນເວລາ ທີ່ເພິ່ນສົ່ງທູດໄປຍັງເຈົ້າຈັກກະພັດ ຢາລອງ ( Gia Long )

ໃນໂອກາດທີ່ ຢາລອງ ( Gia Long ) ຮັບ ລາຊາພິເສກຂຶ້ນຄອງລາຊະບັນລັງໃໝ່. ຂໍໃຫ້ເບິ່ງ ໂປນເດີ ບູລັງເຊ (Paul le Boulanger ):" ປະຫວັດສາດລາວ "( ພາສາຝະລັ່ງ ) ປາລີ, ໂປ່ລົງ ໑໙໓໒,ໜ້າ ໑໐໔ ແລະ ຂໍໃຫ້ເບິ່ງເຊັ່ນດຽວກັນປຶ້ມຂອງ ຫງວນ ເລທີ ( Nguyen LETHI ) (ຜູ້ຮັບໂຮມເອກະສານ ):"ປະມວນເອກະສານໂບຮານຫວຽດນາມທີ່ກ່ຽວພັນກັບລາວ" (ພາສາຫວຽດ )ສະຖາບັນຄົ້ນຄວ້າກ່ຽວກັບອາຊີອາຄະເນ,'ກໍາມະການ ວິທະຍາສາດ ສັງຄົມສາດຂອງ ຫວຽດນາມ, ຮ່າໂນ້ຍ, ປີ ໑໙໗໗. ໜ້າ໑໓໒.
ການທີ່ເຈົ້າຈັກກະພັດ ຢາລອງ ( Gia Long )ໄດ້ປະຕິເສດຊູດົນການຂອງເຈົ້າອະນຸນັ້ນຄົງສືບເນື່ອງມາຈາກເຫດການທີ່ວ່າ : ການພົວພັນລະຫວ່າງເວ້ກັບບາງກອກເປັນສາຍພົວພັນສົນທະໄມຕີຈິດ ສະນິດແໜ້ນໃນເວລານັ້ນ. ເຈົ້າຊີວິດສະຫຍາມລາຊະການທີ ໕ ( ໑໘໕໓. ໑໘໖໘-໑໙໑໐ ) ໄດ້ວິໄຈເຫດການຂອງສະໄໝນັ້ນວ່າ :"ເຖິງວ່າມີເຫດການເຊິ່ງຕ້ອງເຈລະ ຈາກັນຢູ່ໃນລະຫວ່າງສອງພະນະຄອນນີ້ດ້ວຍເລື່ອງຄວາມເມືອງ ຂະເໝນ ແຕ່ທາງໄມຕີຖານຂ່າວຄາວສຸກທຸກຢ້ຽມຢາມເປັນປົກກະຕິຮຽບຮ້ອຍ ບໍ່ມີອັນມົວໝອງໃດໆ". ຂໍໃຫ້ເບິ່ງປຶ້ມຂອງເຈົ້າ ບາລິນທອນເທວີ. " ຈົດໝາຍເຫດຄວາມຊົງຈຳກົມມະວັງ ບະລິນທອນເທວີ ແລະ ພະລາຊະວິຈານໃນພະບາດສົມເດັດ ພະຈຸລະຈອມເກົ້າເຈົ້າຢູ່ຫົວ" ( ພາສາໄທ ) ບາງກອກ. ຊຸສະ

ພາ, ພິມໃໝ່ໃນປີ ໑໙໖໘. ໜ້າ ໒໖໗ ຍິ່ງໄປກວ່ານັ້ນ ເຈົ້າ
ຈັກກະພັດ ຢາລອງ ( Gia Long ) ໃນດ້ານ ການ
ເມືອງເປັນ " ລູກບຸນທຳ " ຂອງເຈົ້າຊີວິດສະຫຍາມ ລາຊະ
ການທີ່ ໑ ແລ້ວ. ກ່ຽວກັບຈຸດນີ້ ຂໍໃຫ້ເບິ່ງວິທະຍານິພົນ ຂອງ
ພັນສາ **ສິນທະຫວັດ** ໜ້າ ໓໒. ຕາມການອ້າງອີງມາຂ້າງເທິງ
ນັ້ນແລະຂໍໃຫ້ເບິ່ງວິທະຍານິພົນຂອງລໍແລນເບີ ນາລີ **ເສນສິກ** -
( **Lorraine Marie GE SIK** ):" ການປົກຄອງແບບລາ
ຊາທິປະໄຕແລະການເຕົ້າໂຮມໃນປະເທດສະຫຍາມໂບຮານ ປີ
໑໗໖໗-໑໘໒໔ " ວິທະຍານິພົນ ມະຫາວິທະຍາໄລ ຄອກແນລ
( ພາສາອັງກິດ ) ປີ ໑໙໗໖, ໜ້າ ໑໒໔. ຜູ້ສືບທອດ ເຈົ້າ
ຈັກກະພັດ ຢາລອງ ( Gia Long ) ຄື ເຈົ້າຈັກກະພັດ
ມິນມັ້ງ ກໍ່ໄດ້ສົ່ງລາຊະທູດປະກອບດ້ວຍ: ເຈົ້າຈອມ ໔ ຄົນແລະ
ຜູ້ຕິດຕາມ ໓໐ ຄົນໄປຫາເຈົ້າອະນຸໃນເດືອນພະຈິກປີ໑໘໒໖ເພື່ອ
ຫ້າມເຈົ້າອະນຸບໍ່ໃຫ້ສ້າງຄວາມວຸ້ນວາຍໃຫ້ບາງກອກແລະ ບັງຄັບ
ໃຫ້ເຈົ້າອະນຸຮັບເອົາການສືບຕໍ່ເປັນເມືອງຂຶ້ນຂອງບາງກອກ .
ເອກະສານກ່ຽວກັບລາຊະທູດຂອງມິນມັ້ງ ( **Minh Manh** )
ໄປເຖິງເຈົ້າອະນຸນັ້ນກໍໄດ້ຮັກສາໄວ້ໃນຫໍສະມຸດແຫ່ງຊາດໄທ :
" ເອກະສານປາງລາຊະການ ທີ ໓ ເລກທີ (໑໙) ໑໑໘໙/໔
ພະຍາເພັດພິໄຊ ເຖິງ ພະຍາສີສະຫະເທບ **ລົງວັນທີ໑໗ ເມສາ**
ປີ ໑໘໒໗" ການທີ່ລາຊະວົງເວ້ປະຕິເສດບໍ່ຊ່ວຍເຈົ້າອະນຸນັ້ນ ກໍ່
ວິດຫລັງນ້ອຍໜຶ່ງພາຍຫລັງທີ່ລາຊະວົງເວ້ປະຕິເສດການສະເໜີ

ຂອງພະມ້າເພື່ອຜູກພັນ ພັນທະມິດ ທາງທະຫານຕ້ານບາງກອກ. ຂໍໃຫ້ເບິ່ງບົດຄວາມຂອງ ຊູ **ກລິດສະໜາ** ສັກເສນາ." ເຫດພົບທີ່ພາໃຫ້ພະມ້າສົ່ງທູດການເມືອງໄປຍັງປະເທດ ໂກແຊງຊິນ ( ໑໘໒໒-໑໘໒໔ ) ແລະພົບຂອງມັນ " ( ພາສາຝະລັ່ງ ) ວາລະສານຂອງສະຖາບັນຝະລັ່ງຄົ້ນຄວ້າກ່ຽວກັບຕາເວັນອອກໄກ ໑໙໕໘ ໜ້າ໕໗໔-໕໗໘(Bulletin de l'école Française d'Extrême Orient) ຊຸຍຊານເບີ **ກາກເປີແລດສ໌** (Suzanne **KARPELES**) " ໝາຍເຫດກ່ຽວກັບເອກະສານວ່າດ້ວຍ ການທູດຂອງພະມ້າໄປ ໂກແຊງຊິນ " ( ພາສາຝະລັ່ງ ) ວາລະສານຂອງສະມາຄົມສຶກສາກ່ຽວກັບ ອິນດູຈີນ ປີ ໑໙໔໙, ໜ້າ ໓໗-໔໔. ໃນຕົວຈິງແລ້ວ ການພົວພັນລະຫວ່າງ ລາຊະວົງເວ້ກັບລາຊະວົງບາງກອກໄດ້ເລີ່ມ ຊຸດໂຊມລົງຢ່າງໜັກໜ່ວງ ພາຍຫລັງທີ່ກອງທັບໄທໄດ້ລອບສັງຫານລາຊະທູດຂອງຫວຽດນາມທີ່ນະຄອນພະນົມໃນປີ ໑໘໒໘. ລາຊະທູດຫວຽດນາມນີ້ມີຈຸດປະສົງຈະມອບໜັງສືຂອງເຈົ້າຈັກກະພັດມິງມັ້ງ ( **Minh Manh** ) ທີ່ຂຽນຫາເຈົ້າອະນຸເພື່ອຮຽກຮ້ອງໃຫ້ເຈົ້າອະນຸຍອມຈຳນົນ ຕໍ່ໄທ ແລະກຳຈັບໃຫ້ເຈົ້າອະນຸຮັບເອົາການຄອບຄອງຂອງໄທຢູ່ລາວ , ຄົນໃນຍຸກນັ້ນໄດ້ວິຈານແບບຖືກຕ້ອງວ່າ ການລອບສັງຫານນີ້ ຈະນຳພາໃຫ້ສາຍພົວພັນພິເສດ ບາງກອກ-ເວ້ ພັງທະລາຍລົງ . ນາຍພົນເຈົ້າພະຍາ **ບໍດິນທອນເດຊາ ໄດ້ຂຽນໃນປຶ້ມ** ບັນທຶກຄວາມຊົງຈຳວ່າດ້ວຍສົງຄາມ ." ນາຍທະຫານໄທທຳການຜິດ ຕໍ່

ຄຳສັ່ງແລ້ວ, ພາຍໜ້າກໍຈະເກີດການໃຫຍ່ໂຕກັບຫວຽດເປັນແນ່ນອນ. ເຖິງເຊັ່ນນັ້ນກໍບໍ່ເປັນຫຍັງເພາະຊິງໄດ້ທຳການລ່ວງເກີນໄປແລ້ວ, ຈະທຳຢ່າງໃດແກ້ໄຂບໍ່ໄດ້ໃນຄັ້ງນີ້. ຈຳຈະຕ້ອງ ແກ້ສີມືປາຍມືຕາມບຸນຕາມກຳ" (ກ.ສ.ລ.ກູຫລາບ: " ອານາມແລະສະຫຍາມ " ( ພາສາໄທ ) ແພ່ພິທະຍາ-ບາງກອກ ເຫລັ້ມໜຶ່ງ ( ໑໙໒໑- ໜ້າ ໓໙໔ ). ສ່ວນເຈົ້າພະຍາທິບພະກາ ລະວົງນັ້ນໄດ້ຂຽນຢູ່ໃນພະລາຊະພົງສາວະດານວ່າ" ແມ່ທັບໄທລວງຂ້າພວກຍວນ." ເຈົ້າຊີວິດສະຫຍາມ ລາຊະການທີ ໔ ໄດ້ຕີລາຄາເຫດການນີ້ດັ່ງຕໍ່ໄປນີ້:" ການທີ່ທຳນັ້ນຈຶ່ງເປັນເຫດ ສຳຄັນເຊິ່ງໃຫ້ເກີດເມືອໝອງບາດໝາງທາງພະລາຊະໄມຕີ ລະຫວ່າງກຸງສະຫຍາມກັບກຸງອານາມສືບໄປພາຍໜ້າ " ( ລາຊະການທີ ໔ ສະເຫລີມພະກຽດພະບາດສົມເດັດພະຈຸລະຈອມເກົ້າເຈົ້າຢູ່ຫົວ" ( ພາສາໄທ ) ປະຊຸມພົງສາວະດານ ສະບັບກາວໜ້າ- ບາງກອກ. ປີ ໑໙໖໓. ເຫລັ້ມ ໒ ພາກ ໓໓. ໜ້າ ໓໔໓( ນັກບວດຊາວ ອາເມລິກາທີ່ມາຢູ່ບາງກອກໃນປີ ໑໘໒໘ຄື: ຊາກເລີກູດສະລາຟ ( Charles GUTZLAFF ) ໄດ້ຂຽນວ່າ:" ທູດຂອງຫວຽດນາມໄດ້ຖືກໄທຄາດຕະກຳຢ່າງປ່າເຖື່ອນ, ອັນນີ້ ພ້ອມດ້ວຍຄົນຕິດຕາມ ໑໐໐ ກ່ວາຄົນທັງທີ່ວ່າຄຽດແຄ້ນຕໍ່ການ ລະເມີດກົດໝາຍລະຫວ່າງຊາດຢ່າງໂຫດຫ້ຽມແຕ່ດ້ວຍຮູ້ສຶກວ່າບໍ່ມີ ກຳລັງພຽງພໍຈະລ້າງແຄ້ນຄືນດ້ວຍຄວາມໂຫດຮ້າຍເຊັ່ນກັນ, ຫວຽດນາມກໍໄດ້ສົ່ງທູດໄປບາງກອກໃໝ່ ... ປະກົດການອັນນີ້ກໍລ້ວນ ແຕ່

ອ່ອນໂຍນເໝືອນດັ່ງເນື້ອໃນໜັງສືທີ່ເຈົ້າຈັກກະພັດທວຽດນາມສົ່ງເຖິງເຈົ້າຊີວິດສະຫຍາມໃນໂອກາດນີ້ ..." ຊາກເລີກຸດສະລາຟ ( Charles GUTZLAFF ) " ໜັງສືບັນທຶກກ່ຽວກັບການເດີນທາງມາສາມຄັ້ງລຽບຝັ່ງຂອງຈີນໃນປີ ໑໘໓໑, ປີ໑໘໓໒ ; ປີ ໑໘໓໓ ກັບ ໝາຍເຫດກ່ຽວກັບປະເທດສະຫຍາມ ... " ( ພາສາອັງກິດ ).ລອນດອນແວດສ໌ລີ ແອນ ດາວິດ(Westly and Davis ) ປີ ໑໘໓໔. ໜ້າ ໗໗ ) ວາລແຕກ ຟ.ແວນລາ( Walter F.VELLA ) ໄດ້ລວມຄວາມວ່າ: "ອັງກິດໄດ້ພາບແພ້ ພະມ້າໃນປີ ໑໘໒໔-໑໘໒໖ໄດ້ດຶງເອົາການຂົ່ມຂູ່ທາງທະຫານຂອງພະມ້າອອກຈາກສະຫຍາມໃນພາກຕະເວັນ ຕົກ ແລະ ເປີດທົນທາງໃຫ້ກຳລັງຂອງໄທເຄື່ອນໄຫວໃນທຸກທິດ ການໄປຣົດສົງຄາມຕ້ານວຽງຈັນ(ຂອງໄທ)ໃນປີ ໑໘໒໘ໄດ້ຊຸກຍູ້ລະດົມໄທໃຫ້ສືບຕໍ່ຂະຫຍາຍອານາເຂດໄປໃນທິດນັ້ນ. ການທີ່ທວຽດນາມບໍ່ປົກປ້ອງການຮຽກຮ້ອງຂອງຕົນທີ່ຢາກໄດ້ລາວຝາກຕະເວັນອອກຕໍ່ການຍຶດຄອງທາງທະຫານຂອງສະຫຍາມກໍໄດ້ນຳພາ ໃຫ້ສະຫຍາມ ມີຄວາມຫວັງແກ່ຕົນວ່າ : ທວຽດນາມຄົງຈະປານີປານອມເໝືອນກັນກັບຂະເໝນໃຫ້ແກ່ໄທ ເຊັ່ນດຽວກັນ " ວາລແຕກ ຟ.ແວນລາ, ສະຫຍາມໃນສະໄໝລາຊະການທີ ໓ , ໜ້າ ໕໖.

(໓໓) ສະສົມເອກະສານເບີກເນ(The Burney Papers) ເຫລັ້ມ ໓. ພາກ ໑ ໜ້າ ໙໙.

(໓໔) ໜັງສືຂອງເຈົ້າອະນຸບໍ່ຖືກນຳມາພິມໂດຍຫໍສະມຸດ ແຫ່ງຊາດໄທ :" ປະຊຸມຈົດໝາຍເຫດນະຄອນ ລາຊະສີມາ "(ພາສາໄທ ). **ພະຈັກວິທະຍາ**, ບາງກອກ, ປີ ໑໙໖໘, ໜ້າ ໒໗-໒໙. ກ່ຽວກັບການພົວພັນລະຫວ່າງການສັກເລກ ໃນຫົວເມືອງລາວແລະການປົ່ນປ່ວນໂດຍສະເພາະໃນແຄ້ວນເມືອງ ກາລະສິນ; ຂໍໃຫ້ເບິ່ງ ວິທະຍານິພົນຂອງທິລະໄຊບຸນມາທູນ:" ປະຫວັດທ້ອງຖິ່ນຂອງຫົວເມືອງກາລະສິນ ພ.ສ ໒໓໓໖-໒໔໕໐ " ( ພາສາໄທ ) ວິທະຍານິພົນ ມະຫາວິທະຍາໄລ ຈຸລາລົງກອນ ປີ ໑໙໘໔-໒໓໔ ໜ້າ.

(໓໕) ທະຫວັດ ປຸນໂນທົກ (໑໙໘໒ ) ໜ້າ ໓໑.

(໓໖) ເຕີມ **ວິພາກພົຈນະກິດ:"ປະຫວັດສາດອີສານ"** (ພາສາໄທ ) ສະມາຄົມສັງຄົມສາດໄທ. ບາງກອກ-໑໙໗໐. ໜ້າ ໓໔໔-໓໔໗. ຊາວອັງກິດໃນເວລານັ້ນກໍໄດ້ຈົດຈຳວ່າ ຊາວລາວໄດ້ໄປເຮັດວຽກສັບພະທຸກຢູ່ປາກແມ່ນ້ຳເຈົ້າພະຍາເພື່ອສ້າງ ກິດຈະກຳປ້ອງກັນກາງທະເລ. ຊາວຕ່າງດາວໃນສະໄໝນັ້ນ ໄດ້ເອີ້ນກິດຈະກຳນັ້ນວ່າ : " ປ້ອມລາວເພື່ອສູ້ລົບ " ຂໍໃຫ້ເບິ່ງ ສະສົມເອກະສານຂອງເບີກເນ (The Burney Papers ) ເຫລັ້ມ ໑ , ພາກທີ ໑, ໜ້າ ໓໑.

(໓໗) ກ.ສ.ລ ກູຫລາບ:"**ອານາມສະຫຍາມຍຸດ**" ເຫລັ້ມ ໒

ໜ້າ ๑໗໕๐. ຄວາມຈິງແລ້ວ, ເຈົ້າອະນຸກໍສືບທອດເຊື້ອ ສາຍເຈົ້າຊີວິດລາວມາໄດ້ ໔.໐໐໐ ກ່ວາປີ, ຂໍໃຫ້ເບິ່ງປື້ມຂອງ ຄຳພົລ ສີຈັກ " ຊຸບັດບໍລົມມະຈັກ " (ພາສາໄທ ) ບາງກອກ. ສະໜຍາມວິທະຍາການປີ ๑໙໗໙ ໜ້າ ໔໖.

(໓໘) ຊາກເລີ ກູດສະລາຟ ( Charles GUTZLAFF ) ຂໍໃຫ້ເບິ່ງປື້ມທີ່ໄດ້ກ່າວມາຂ້າງເທິງນັ້ນໜ້າ ໗໖,ເພື່ອເບິ່ງກ່ຽວກັບການຕີຄວາມໝາຍທາງສັງຄົມສາດ, ຂໍໃຫ້ເບິ່ງວິທະຍານິພົນຂອງແອມ.ຈີ.ເປ. ບາກເບີກ ( M.J.P.BARBER ) " ການຕັ້ງພູມລຳເນົາໃໝ່ແລະການກ້າວເຂົ້າ ສູ່ຊີວິດ ທັນສະໄໝ. ສຶກສາການປ່ຽນແປງຢູ່ໃນສັງຄົມລາວ ".(ພາສາອັງກິດ) ວິທະຍານິພົນ ມະຫາວິທະຍາໄລ ຮູນ ( Hull ) ປີ๑໙໗໙. ໜ້າ ໔໔. ໔໕,๑໐๑.๑໐໔ ແລະ ໔໙໗.

(໓໙) ສ.ພລາຍນ້ອຍ( S.PLAYNOY ):"ສາລານຸກົມປະຫວັດສາດໄທ " (ພາສາໄທ ) ບາງກອກ. ຮ່ວມສະສົມ ປີ ๑໙໗໕, ໜ້າ ໔໕໖-໔໕໗ .

(໔໐) ພາສິດ ຈິດພາສາ " ພົດຈະນານຸກົມ ສະບັບ ນິຣຸຕິສາດ" ( ພາສາໄທ ) ວາລະສານ ສິລະປະວັດທະນະທຳ, ບາງກອກ ๑໙໗໔ ເຫລັ້ມ ๑ ໜ້າ ໖๑.

(໔๑) ປລານີ ວົງເທບ:" ພື້ນບ້ານພື້ນເມືອງ " ( ພາສາໄທ)

ສຳນັກພິມເຈົ້າພະຍາ. ບາງກອກ ປີ ໑໙໘໒ ໜ້າ ໑໘໗.

(໔໒) ກ່ຽວກັບທາງອອກທະເລຜ່ານກຳປູເຈຍເພື່ອສິນຄ້າ ຂອງ ລາວ, ຂໍໃຫ້ເບິ່ງປຶ້ມຂອງ ເປ.ກາບລີແອນ ເດີສັງໂຕນີໂອ ≁ ( P.GABRIEL de San Antonio ) :" ໝາຍເຫດສັ້ນໆແລະແທ້ຈິງກ່ຽວກັບເຫດການຢູ່ຂະເໝນ, ແລະໄດ້ຂຽນຂຶ້ນໃນປີ ໑໖໐໓" ( ພາສາຝະລັ່ງ ) ກາບາຕົງ( CABATON ) ປາລີ( Paris ) ເລີລູ( Leroux ) ປີ ໑໙໑໔, ໜ້າ

໗໘.ຂໍໃຫ້ເບິ່ງເຊັ່ນດຽວກັນປຶ້ມຂອງ ເປ.ເບ. ໂກລດສະລີເອ- ( P.B.GROSLIER ):" ອັງກໍແລະປະເທດຂະເໝນໃນສະຕະວັດທີ ໑໖..." ( ພາສາຜະລັ່ງ ) ການພິມຂອງມະຫາ ວິທະຍາໄລ ຝະລັ່ງ, ປາລີ ( Paris ) ປີ ໑໙໕໘. ໜ້າ ໑໖໒.

(໔໓) ສະສົມເອກະສານຂອງເບີກເນ( The Burney Papers) ເຫຼັ້ມ ໒ ພາກ ໔ ໜ້າ ໘໓.

(໔໔) ສະສົມ ເອກະສານຂອງເບີກເນ ( The Burney Papers) ເຫຼັ້ມ ໒ ພາກ ໔ . ໜ້າ ໑໙໖.

(໔໕) ປ.ສະແວດສະກຸດ ( P.SCHWEISGUTH ) "ສະຕະວັດໜຶ່ງແຫ່ງ ປະຫວັດສາດໃນແຫລມອິນດູຈີນ" (ພາສາ

ຝະລັ່ງ ) ປາລີ - ໑໙໔໔.

(໔໖) ດີ.ຈີ.ອີ.ຮອນ ( D.GE.HALL ):"ປະຫວັດສາດຂອງອາຊີອາຄະເນ " ໜ້າ ໔໖໔-໔໖໖ ອໍໃຫ້ເບິ່ງເໝືອນກັບຟລັງຊົດ ກາກນິເອ (Francis GARNIER) ອໍໃຫ້ເບິ່ງ ປື້ມຂອງຜູ້ກ່ຽວກ່າວມາຂ້າງເທິງນັ້ນ, ໜ້າ ໔໑.

(໔໗) ສະນິດ ສະມຸກກາລ ( Snit SMUCKARN )
ແລະ ແຄນນອນ ເບລຊິນເລີ ( Kennon BREAZEALE: )
"ຊາວພວນ..." ໜ້າ ໔໙.

(໔໘) ໝ່ອມ ອະໂນລາ ວົງວິຈິດ:" ພົງສາວະດານຫົວເມືອງມົນທົນອິສານ " ( ພາສາໄທ ) ປະຊຸມພົງສາວະດານ ເຫລັ້ມ ໔. ຈຸລສະພາ. ບາງກອກ, ປີ ໑໙໖໔. ໜ້າ ໘໑໔ ້໑໕ ,
ຈັດທັບ ນາກສຸພາ :" ຊຸດົນການຂອງຊາວຂະບວນຜູ້ມີບຸນຢູ່ ໃນພາກຕາເວັນອອກສ່ຽງເໜືອຂອງໄທ " ປົດຄວາມພິມຢູ່ໃນ ປື້ມຂອງເອນດລິວ ຕວກຕົງ ( Andrew TURTON )
ແລະ ຕານາເບ ( Shigeharu TANABE ) " ປະຫວັດສາດ ແລະ ຄວາມນຶກຄິດ ຂອງຊາວນາໃນອາຊີອາຄະເນ" .
( ພາສາອັງກິດ ) ຫໍສະໝຸດແຫ່ງຊາດດານສັງຄົມສາດ.ກຽວໂຕ ປີ ໑໙໘໔. ໜ້າ ໑໑໔.

(໔໙) ຈັດທິບ ບາກສຸພາ ເອກະສານກ່າວມາຂ້າງເທິງນັ້ນ , ໜ້າ ໑໖໕, ວຸທິໄຊ ມູລາຊິບ:" ກະບົດອ້າຍສະກຽດໂງ້ງ, ອີເຄາະຈາກ ເອກະສານພື້ນວຽງ" ພິມຢູ່ໃນປື້ມຂອງວຸທິໄຊ ມູລາຊິບ ແລະ ທຳມະນິດ ວາລາພົນ:" ກະບົດເຈົ້ານາ " (ພາສາໄທ ) ບາງກອກ - ສະມາຄົມສັງຄົມສາດ ໑໙໗໘ ໜ້າ ໔໕-໔໘.

(໕໐) ຫົງລີສາ ( Hong Lysa ):" ໄທໃນສະຕະວັດທີ ໑໙. ການເປັນມາຂອງເສດຖະກິດແລະສັງຄົມ", (ພາສາອັງກິດ) ສະຖາບັນຄົ້ນຄວ້າກ່ຽວກັບອາຊີອາຄະເນ-ສິງກະໂປ-໑໙໗໔ . ໑໗໘ ໜ້າ. ດຣ. ກົງສະຕັງເຊີ ວິນຊອນ( Constance WILSON ):" ພາກຕາເວັນອອກສ່ຽງໄຕ້ ແລະ ພາກກາງຂອງແອ່ງແມ່ນ້ຳຂອງຢູ່ໃນເສດຖະກິດຂອງໄທ. ໑໘໓໐-໑໘໗໐" ( ພາສາອັງກິດ ). ເອກະສານສະເໜີຢູ່ກອງປະຊຸມ ສາກົນຄົ້ນຄວ້າກ່ຽວກັບໄທ, ມະຫາວິທະຍາໄລແຫ່ງຊາດ. ອົດສະຕາລີ-ແຄນເບລາ ໘໖ ໜ້າ.

(໕໑) ອັງດລິວ ຕວກຕົງ ( Andrew TURTON ) " ສະຖາບັນຂອງໄທກ່ຽວກັບຂ້າທາດ" ພິມຢູ່ໃນປື້ມຂອງ ເຈມສ໌ ລ. ວັດສອນ ( James L.WATSON ) " ລະບົບ ຂ້າທາດຢູ່ໃນອາຊີ ແລະ ອາຟລິກກາ"(ພາສາອັງກິດ ) ມະຫາ ວິ

ທະຍາໄລ ກາລີຟອກເນຍ ການພິມ, ເບກເກີເລ(Berkeley) ໑໙໘໐ ໜ້າ ໔໗໙. ການອອກແຮງງານໂດຍຂ້າທາດ ເປັນໃຈກາງຂອງລະບົບສັງຄົມ ແລະ ເສດຖະກິດ ສະຫຍາມໃນຊຸມ ປີ ໑໘໔໐. ອໍໃຫ້ເບິ່ງການສະສົມ ເອກະສານຂອງ ຈອນຄຣາເຟີດ (The John CRAWFURD Papers) ທີ່ ແອນລີ ເບີອກແລກ ( Henri BERLAND ) ໄດ້ແປເປັນພາສາຝະລັ່ງ ແລະພິມອອກຢູ່ໃນວາລະສານ ສະມາຄົມສຶກສາ ກ່ຽວກັບ ອິນດູຈີນ ປີ ໑໙໔໑, ໜ້າ ໖໙, ກ໑,ກ໔.

(໕໔) ເຈົ້າພະຍາທິບພະກາລະວົງ ເອກະສານກ່າວມາ ຂ້າງເທິງນັ້ນ ໜ້າ ໖໓.

(໕໓) ໃນປີ ໑໘໔໖ ເອກະສານ ເບີກເນ(Burney Papers) ໄດ້ຂຽນວ່າ :" ສະຫຍາມຕ້ອງການລູກປືນໃຫຍ່ຫລາຍທີ່ສຸດ... ປືນ, ປືນຄາບສີລາ. ດຽວນີ້ບໍ່ໄດ້ຕ້ອງການຢ່າງຫລວງຫລາຍ ຄືກັບ໔ ຫລື ໓ ປີຫລັງ ". ສະສົມເອກະສານເບີກເນ( Burney Papers ) ເຫລັ້ມ ໓ ພາກ ໔ ໜ້າ ໑໐໑ . ກ່ຽວກັບ

ການຊ່ວງເສັງການປະກອບອາວຸດ ຂອງສະຫຍາມໃນເວລານັ້ນ, ອໍໃຫ້ເບິ່ງປື້ມຂອງ ພີດຈີເອ ( Pierre FISTIE ) " ການຄືບໜ້າຂອງປະເທດໄທໃນປັດຈຸບັນ" ( ພາສາຝະລັ່ງ) ໂກແລງ ປາລີ ( Collin-Paris ) ປີ ໑໙໖໗ .

ໜ້າ ໕໑ ແລະ ເບິ່ງເຊັ່ນດຽວກັນ ປຶ້ມຂອງວຽກຊິເນຍ ທອມ ຊັນ ( Virginia THOMPSON ) " ໄທແລນ;ສະຫຍາມໃໝ່" ( ພາສາອັງກິດ ) ປາລາກົງ ( Paragon ) ນິວຢອກ, ພິມໃໝ່ໃນປີ ໑໙໕໔ ໜ້າ ໓໑.

(໕໔) ພົງສາວະດານລາວ ທຸກໆສະບັບໄດ້ເວົ້າວ່າເຈົ້າອະນຸໄດ້ໄປຕີໂຄລາດເທື່ອນັ້ນແລະບໍ່ໄດ້ເອີຍເຖິງບາງກອກເລີຍ. ຢູ່ໃນບັນທຶກຊົງຈຳກ່ຽວກັບສົງຄາມສະໄໝນັ້ນ, ເຈົ້າພະຍາບໍດິນທອນເດຊາກໍ່ບໍ່ໄດ້ສັງເກດເຫັນການກະກຽມຢ່າງໃດໆຂອງຊາວລາວເພື່ອຮຸກຮານບາງກອກ. ແຕ່ວ່າແນວຄິດວ່າລາວຈະຮຸກຮານບາງກອກນັ້ນ ຄົງມາຈາກລາຍງານຂອງເຈົ້າເມືອງໂຄລາດທີ່ມັກໃຫຍ່ ໄຟ່ສູງ ແລະ ຕູ່ຫາວ່າ ຊາວລາວຈະຮຸກຮານບາງກອກ. ຂໍໃຫ້ເບິ່ງປຶ້ມຂອງກູດສະລາຟ ( GUTZLAFF ) ຕາມທີ່ໄດ້ກ່າວ ມາຂ້າງເທິງນັ້ນ. ໜ້າ ໗໕; ຟລັງຊິດ ກາກນີເອ ( Francis GARNIER ) ກໍໄດ້ຢືນຢັນ ທັດສະນະ ຂອງ ກູດສະລາຟ ( GUTZLAFF ) ເຊັ່ນດຽວກັນກັບເອກະສານທີ່ກ່າວມາຂ້າງເທິງນັ້ນ ໜ້າ ໓໘໘. ຂໍໃຫ້ເບິ່ງເຊັ່ນດຽວກັນພົງສາວະດານຂອງຫວຽດຢູ່ໃນປຶ້ມຂອງ ຫງວນ ເລທີ ຕາມເອກະສານທີ່ກ່າວມາຂ້າງເທິງນັ້ນ ໜ້າ ໓໘໘, ຂໍໃຫ້ເບິ່ງເຊັ່ນ ດຽວກັນ ພົງສາວະດານ ຂອງຫວຽດນາມຢູ່ໃນປຶ້ມຂອງຫງວນ ເລທີ ຕາມເອກະສານທີ່ໄດ້ກ່າວມາຂ້າງເທິງນັ້ນ, ໜ້າ ໑໓໔.ເອກະ

ສານພື້ນວຽງ ກໍໄດ້ເຕັມໄປດ້ວຍອໍ້ຕູ່ຫາເຈົ້າເມືອງໂຄລາດ ດັ່ງ ກ່າວ. ເຈົ້າເມືອງໂຄລາດເປັນຜູ້ຮັກສາປ້ອມດ່ານໜ້າຂອງ ນະໂຍບາຍແຜ່ອານາເຂດຂອງບາງກອກໄປທົ່ວເມືອງລາວແລະ ທົ່ວຣາບສູງໂຄລາດ; ເຈົ້າເມືອງໂຄລາດເປັນລູກນານທາງ ຂອງຕາກສິນ, ເປັນລູກເຂີຍເຈົ້າພະຍາບໍດິນທອນເດຊາ ແລະ ທັງເປັນພໍ່ເຖົ້າຂອງເຈົ້າຊີວິດລາຊະການ ທີ ໓ . ຜູ້ກ່ຽວເປັນ ຂ້າລາຊະການຝ່າຍພົນລະເຮືອນຢູ່ໃນລໍາດັບສູງສຸດໃນເວລານັ້ນ. ອໍໃຫ້ເບິ່ງກົມສິລະປະກອນ:" ຈົດໝາຍເຫດນະຄອນລາຊະສີມາ" ( ພາສາໄທ ) ພິມຄັ້ງທີ ໔ ບາງກອກ ປີ ໑໙໘໔. ໜ້າ ໕໕ -໗໒ ແລະ ໜ້າ ໒໘໓-໓໑໓.

(໕໕) ກົມ ສິລະປະກອນ:" ປາບກະບົດວຽງຈັນ " ໜ້າ ໖໐

(໕໖) ພາຍຫລັງທີ່ເຈົ້າອະນຸໄດ້ເຂົ້າເມືອງໂຄລາດແລ້ວ ແລະກ່ອນໜ້າການປະທະດ້ວຍກໍາລັງອາວຸດລະຫວ່າງກອງທັບລາວກັບກອງໜ້າຂອງກອງທັບບາງກອກທີ່ຄາຍມູນເຄັງ, ເຈົ້າອະນຸ ໄດ້ສົ່ງປະຊາຊົນທີ່ເປັນເຊື້ອສາຍລາວຂອງໂຄລາດນັ້ນແລະທົ່ວເມືອງຕ່າງໆຢູ່ໃນຣາບສູງຢູ່ໃນໂຄລາດນັ້ນໂດຍໄປທາງເມືອງໜອງບົວລໍາພູແລະສ່ວນພວກອື່ນນັ້ນໂດຍສະເພາະພວກໄທໂຄລາດແມ່ນສົ່ງໄປວຽງຈັນໂລດ. ອໍໃຫ້ເບິ່ງປຶ້ມຂອງກົມສິລະປະກອນ" ປາບກະບົດວຽງຈັນ ". ໜ້າ ໒໒.

(໕໗) ກົມສິລະປະກອນ:"ປາບກະບົດວຽງຈັນ" ໜ້າ ໒໓ . ເຈົ້າພະຍາທິບພະກາລະວົງ. ຂໍໃຫ້ເບິ່ງເອກະສານທີ່ກ່າວ ມາ ຂ້າງເທິງນັ້ນ, ໜ້າ ໔໖.

(໕໘) ຢູ່ໃນບົດລາຍງານທີ່ເຈົ້າໜ້າທີ່ໄທໄດ້ສົ່ງໄປຖະຫວາຍລາ ຊະການທີ ໓ ທີ່ບາງກອກ ແລະ ພາຍຫລັງນັ້ນປະທະກັບ ກອງທັບ ລາວທີ່ຄ້າຍມູນເຄັງແລະຝ່າຍໄທເອີ້ນວ່າ "ບັ້ນລົບທົ່ງສຳລິດ " ນັ້ນແມ່ນບໍ່ໄດ້ເອີຍຊື່ຜູ້ຍິງແມ້ນແຕ່ຜູ້ດຽວ. ຂໍໃຫ້ເບິ່ງປຶ້ມ ຫໍສະມຸດ ແຫ່ງຊາດຂອງໄທ. ຣວມເລື່ອງເມືອງນະຄອນ ລາຊະສີມາ " ໜ້າ ໒໙ ເຖິງ ໓໔. ຂໍໃຫ້ເບິ່ງປຶ້ມທະຫວັດ ປູນໂນທິກ(໑໙໘໐) ດັ່ງທີ່ໄດ້ກ່າວຂ້າງເທິງແລ້ວ. ໜ້າ ໘໗-໙໐; ໜ້າ໑໕໘-໑໖໓.

(໕໙) ຫໍສະມຸດແຫ່ງຊາດລາວ": ພົງສາວະດານເມືອງພວນ " ວຽງຈັນປີ ໑໙໖໙. ໜ້າ ໑໕ ເຖິງ ໑໘, ກ່ຽວກັບການທີ່ເຈົ້າ ນ້ອຍຊຽງຂວາງໄດ້ຊ່ວຍເຫລືອເຈົ້າອະນຸ, ຂໍໃຫ້ເບິ່ງການຢືນຢັນ ຈາກພົງສາວະດານຫວຽດນາມ, ຂໍໃຫ້ເບິ່ງໂງກາວລັງ:"ບັນທຶກ ທ່າທີທີ່ລາຊະວົງເວໄດ້ມີຕໍ່ກິດຈະການປະເທດສິບພັນຊ້າງ" ແປ ແລະພິມໂດຍສະຖາບັນຄົ້ນຄວ້າກ່ຽວກັບອາຊີອາຄະເນ, ຄະນະ ກຳມະການສັງຄົມສາດຂອງຫວຽດນາມ, ຮ່າໂນ້ຍ-໑໙໗໗ ໜ້າ ໒໘.

(໖໐) ກ່ຽວກັບທູດທີ່ເຈົ້າອະນຸສົ່ງໄປຍັງຫລວງພະບາງຂໍໃຫ້ເບິ່ງ

ປື້ມຂອງເຈົ້າຄຳໝັ້ນວົງກົດ ລັດຕະບະ:" ພົງສາວະດານ ຊາດ ລາວ" . ຫໍສະມຸດແຫ່ງຊາດລາວ-໑໙໖໗ ໜ້າ໔໕

ສ່ວນໜັງສືທີ່ເຈົ້າອະນຸໄດ້ຂຽນຫາເຈົ້າຊີວິດ ມັນທາທຸລາດ ຫລວງພະບາງເພື່ອຊັກຊວນໃຫ້ເຂົ້າຢູ່ໃນຂະບວນຂອງ ປະຊາຊົນ ລາວ ເພື່ອທັບມາງແອກຄອບຄອງຂອງບາງກອກນັ້ນ, ເຈົ້າຊີວິດ ມັນທາທຸລາດແຫ່ງຫລວງພະບາງໄດ້ຮັກສາໜັງສືດັ່ງກ່າວ, ຢ່າງ ຖະໜຸຖະໜອມ, ໄວ້ໃນວັດຂອງພະລາຊະວັງຄືວັດໃໝ່ນັ້ນເອງ.

ກ່ຽວກັບການຮອງຂໍຂອງເຈົ້າອະນຸມາເຖິງເຈົ້າຊີວິດ ຫລວງ ພະບາງໃນປີ ໑໘໒໗ ນັ້ນ, ຂໍໃຫ້ເບິ່ງເອກະສານທີ່ໄດ້ຮັກສາໄວ້ ໃນຫໍສະມຸດແຫ່ງຊາດຂອງໄທ ( ພະແນກຮັກສາເອກະສານເຄົ້າ) " ເອກະສານ ຂອງ ລາຊະການ ທີ ສາ (໑໑໙) ໑໑໘໙/໔ . ພະຍາ ເພັດພິໄຊ ເຖິງພະຍາສີສະຫະເທບ ໑໗ ເມສາປີ໑໘໒໗"

(ຜ໑) ຫໍສະມຸດແຫ່ງຊາດໄທ ( ພະແນກຮັກສາເອກະສານເຄົ້າ) " ເອກະສານ ລາຊະການທີ ສາ (໑໘) ໑໑໘໙/໔, ບັນທຶກລົງ ວັນທີ ໑໓ ມິຖຸນາ ໑໘໒໗. ເອກະສານຈາກ ພະຍາເພັດພິໄຊ. ລົງວັນທີ ໒໓ ພຶດສະພາ ໑໘໒໗". ເນື້ອໃນເອກະສານນີ້ໄດ້ ມີ ໃນຕອນໜຶ່ງດັ່ງນີ້:" ພະຍາເພັດພິໄຊ ໄດ້ຊາບວ່າພະຍາເມືອງ ນ່ານໄດ້ສົ່ງແສນຫລວງທິບສົມສັກໄປຫາອາຍພະຍາສຸລິຍະວົງສາທີ່ ເມືອງຫລົ່ມສັກ, ອະນຸໄດ້ຊຸກຍູ້ໃຫ້ເຈົ້າເມືອງນ່ານແລະແພ່ ຈຶ່ງ ລະດົມກອງທັບແລ້ວຕີໄປເມືອງພິໄຊແລະໃຫ້ເຈົ້າເມືອງລຳປາງ,

ຊຽງໃໝ່ ແລະ ລຳພູນ ຈຶ່ງໄປຕີເມືອງຕາກແລະໃຫ້ໄປ ບັນ ຈົບພົບກັນກັບກອງທັບຂອງເມືອງນ່ານແລະເມືອງແພ່ ຢູ່ທີ່ ເມືອງ ໄຊນາດ ...".

(໖໒) ກົມ ສິລະປະກອນ:" ປາບກະບົດວຽງຈັນ", ໜ້າ໔໕. ເວົ້າທົ່ວໄປແລ້ວໄດ້ມີບັກຄົ້ນຄວ້າ ສັນຊາດອັດສະຕລາລີຜູ້ໜຶ່ງ ທີ່ ໄດ້ສຶກສາຢ່າງລະອຽດກ່ຽວກັບການເຄື່ອນທັບຂອງລາວແລະ ໄທ ໃນປີ ໑໘໒໗ ແລະ ບັ້ນລົບຕ່າງໆໃນປີນັ້ນ, ຊື່ຂອງຜູ້ກ່ຽວ ແມ່ນ ວິກຕໍ ແຄນເນດີ( Victor KENNEDY ) ທີ່ເປັນບັນນາທິ ການ ວາລະສານເມືອງ ໂບຮານ. ຂໍໃຫ້ເບິ່ງ ບົດຄວາມ ຂອງ ວິກຕໍ ແຄນເນດີ ( Victor KENNEDY ):" ແຜນທີ່ ຂອງຕົ້ນສະຕະວັດທີ ໑໙ ວ່າດ້ວຍໄທພາກກາງ, ແລະ ຕາເວັນ ອອກສ່ຽງເໜືອ". ພິມອອກໃນປຶ້ມຂອງ ເຕດ ບຸນນາກ( Tej BUNNAG ) ແລະ ມິຄາຍແອນ ສະມິດທິ ( michaël SMITHIES ):"**ອະນຸສອນພະຍາອະນຸມານ** ລາຊະທົນ ", ( ພາສາອັງກິດ ) ສະມາຄົມສະຫຍາມ- ບາງ ກອກ-ປີ ໑໙໗໐ ໜ້າ ໖໑໔ ເຖິງ ໖໔໒, ກ່ຽວກັບເຫດການທີ່ ພາໃຫ້ເຈົ້າອະນຸຈຳເປັນຕ້ອງໜີອອກຈາກເມືອງວຽງຈັນນັ້ນ ,ຂໍ ໃຫ້ເບິ່ງຄຳໃຫ້ການຂອງເນຍເຈົ້າພະຍາໂຄລາດ ແລະເຈົ້ານາຍ ຂອງເມືອງໂຄລາດທີ່ເຈົ້າອະນຸໄດ້ສົ່ງມາເມືອງວຽງຈັນແລະ ໃກ້ ຊິດກັບເຫດການ: ພວກກ່ຽວໄດ້ເວົ້າວ່າ:"( ໃນວັນທີ ໒໖ ພຶດ

ສະພາ ໑໘໒໗ ) ລອງແພງຂອງເມືອງສະລະບູລີ ແລະ ສະໝຽນຕາຂອງເມືອງໂຄລາດໄດ້ນຳພາເມຍຂອງເຈົ້າພະຍາ ໂຄລາດ ແລະ ລູກສາມຄົນທີ່ແລ່ນໜີຈາກວຽງຈັນມາຫາຄາຍ ກອງທັບໄທ, ພວກເຂົາເຈົ້າໄດ້ເວົ້າວ່າພາຍຫລັງທີ່ເຈົ້າອະນຸໄດ້ຮູ້ວ່າກອງທັບບາງກອກໄດ້ພາບແພ້ກອງທັບລາວຢູ່ທີ່ດ່ານເຂົ້າສານແລວ ແຕ່ກອງທັບລາວບໍ່ໄດ້ຖອນມາເມືອງວຽງຈັນ, ດັ່ງນັ້ນເຈົ້າ ອະນຸຈະປັບປຸງກຳລັງຄືນເພື່ອປ້ອງກັນເມືອງວຽງຈັນນັ້ນແມ່ນບໍ່ໄດ້. . ເຈົ້າອະນຸແລະ ຄອບຄົວຈຶ່ງຈຳເປັນໜີໄປທາງເຣືອໃນວັນທີ(໒໒ ພຶດສະພາ ໑໘໒໗ )".

ຫໍສະມຸດແຫ່ງຊາດຂອງໄທ ( ພະແນກຮັກສາ ເອກະສານເກົ່າ ) " ເອກະສານ ລາຊະການທີ ໓ (໓໕) ໑໑໘໕/ ໑໐ ບັນທຶກລົງວັນທີ (໒໘ ພຶດສະພາ ໑໘໒໗ )". ໃນຕົວຈິງ ແລວກອງທັບລາວໄດ້ຖືກປິດລ້ອມແລະຖືກກຳລັງໄຟກອງທັບໄທ ດັບສູນເໝືອນດັ່ງພະຍາບໍດິນໄດ້ຂຽນໄວ້ໃນບັນທຶກຊ່ວຍຈຳຂອງເພິ່ນ . ສ່ວນພົງສາວະດານເມືອງນ່ານໄດ້ຂຽນວ່າ:" ພາຍຫລັງທີ່ ຂ່າວວ່າ ກອງທັບຢ່າງຫລວງຫລາຍຂອງໄທມຸ້ງໜ້າໃກ້ຈະຮອດເມືອງວຽງຈັນແລ້ວເຈົ້າອະນຸແລະປະຊາຊົນກໍໄດ້ແຕກຜ່າຍອອກ ຈາກເມືອງ ..." ພົງສາວະດານເມືອງນ່ານ( ແປໂດຍປະເສີດ ຈຸລັດຕະນະ ) ຄຳນຳ ໂດຍ ດາວິດ ໄວຍັດ(David WYATT) (.ພາສາອັງກິດ ) ມະຫາວິທະຍາໄລ ກອກແນລ(Cornell) ໑໙໗໕ - ໜ້າ ໕໙.

(໖໓) ທະຫວັດ ປຸນໂນທົກ ( ໑໙໗໐ ), ຂໍໃຫ້ເບິ່ງ ເອກະສານອ້າງອີງຂ້າງເທິງນັ້ນ, ໜ້າ ໔໕.

(໖໔) ເຫດການນີ້ປະຊາຊົນໄດ້ເອົາມາ ເລົ່າສືບຕໍ່ກັນມາຢູ່ໃນງານບຸນວັດຫລືໃນບຸນມະຫາຊົນແລະໃນບຸນບ້ານເຮືອນຕ່າງໆ... ໃນປີ ໑໙໔໘ ຈານເຄນ, ທີ່ໄດ້ເປັນນັກບວດໃນເມື່ອກ່ອນ ຢູ່ໃນແຄ້ວນປາກຊັນ ແລະ ໄດ້ສ້າງຄອບຄົວກັບຜູ້ຍິງຜູ້ໜຶ່ງທີ່ມາ ຈາກຣາຊສຳໂຄລາດໄດ້ຂຽນບັນທຶກການ ເລົ່າລື ດັ່ງກ່າວນັ້ນໄວ້ ໃນໃບລານປະກອບເປັນ ໗ ຜູກໃຫຍ່, ຜົນງານຂອງຈານເຄນນີ້ , ທາງຫໍສະມຸດແຫ່ງຊາດຂອງລາວໄດ້ພິມໄວ້ໃນຫົວເລື່ອງ:" ທ້າວເຫລົາຄຳ-ພື້ນເຈົ້າລາຊະວົງ". (ແມ່ນມະຫາກິແກ້ວ ຊຸດົມຊົມພູເປັນຜູ້ຈັດອອກພິມ ) ວຽງຈັນປີ ໑໙໗໖-໘໙໗ໜ້າ, ຂໍໃຫ້ເບິ່ງເຊັ່ນດຽວກັນ, ພະອາຈານວັນນະສຸລິຍະວົງ:"ລຳພື້ນເມືອງວຽງຈັນ ". ໑໙໗໕. ວັດມີໄຊ- ວຽງຈັນ. ສ.ປ.ປ.ລາວ ທີ່ເພີ່ນໄດ້ຂຽນອອກຈາກໂຕທຳມາເປັນໂຕລາວໃຫ້ພວກເຮົາ.

(໖໕) ພົງສາວະດານເມືອງ ຍະໂສທອນ, ພິມຢູ່ໃນພົງສາ ວະດານ ( ພາສາໄທ ) ເຫຼັ້ມ ໔໔, ພາກ ໗໐ ຄູຣຸສະພາ - ບາງກອກ- ໑໙໖໙- ໜ້າ ໗໔-໗໗.

(໖໖) ປລານີ ວົງເທບ:" ພື້ນບ້ານພື້ນເມືອງ". ພາສາໄທ .

ໜ້າ ໑໗໘ ເຖິງ ໑໘໗. ຕາມມະຫາວັນຄຳ ສຸລິຍະເດັດ, "ພົນ ເຈົ້າລາຊະວົງ" ທີ່ປະຊາຊົນ ເລົ່າລືກັນໃນຫລາຍທ້ອງຖິ່ນ ຂອງ ແອ່ງແມ່ນ້ຳຂອງນີ້, ໃນໂຕຈິງແລ້ວ, ຄືງເປັນພົນງານຂອງ ພະ ຍາ ຊຽງສາທີ່ເປັນແມ່ທັບເອກ ຂອງເຈົ້າອະນຸ, ຕາມມະຫາວັນ ຄຳ ສຸລິຍະເດັດ,ອັນທີ່ເພີ່ນເອີ້ນວ່າ "ພົນລາຊະວົງ"ນັ້ນ ໃນຕົວ ຈິງແມ່ນ "ກາບພະຍາ ຊຽງສາ " ທີ່ມະຫາ ວັນຄຳ ສຸລິຍະ ເດັດ ໄດ້ພົບເຫັນ ໃນວັນທີ ໑໐ / ໑ / ໑໙໔໔ ຢູ່ທີ່ວັດໜອງ ບົວຈັນ, ເມືອງຈຳພອນ, ແຂວງສະຫວັນນະເຂດ.

(໒໓) ຄຳບອກເລົ່າ ຂອງປ້າ ຄຳສຸກ ວົງວິຈິດ ນຳທ່ານ ສົມສີ ເດຊາຄຳພູ ເຊິ່ງໄດ້ ໒໐ປີກ່ວາມາແລ້ວ( ພວກເຮົາໄດ້ ສອບ ຖາມ ທ່ານ ສ.ເດຊາ ທີ່ວຽງຈັນໃນວັນທີ ໑໕ ສິງຫາ ໑໙໘໖). ພວກເຮົາກໍໄດ້ສອບຖາມ ໃນທຳນອງດຽວກັນກັບ ມະ ຫາສີລາ ວີລະວົງໃນວັນທີ ໑໑ ກຸມພາ ໑໙໗໘ ທີ່ໄດ້ຍືນຢັນເຊັ່ນ ດຽວກັນ. ສະບັບຕ່າງໆຂອງກາບລາຊະວົງນີ້, ທ່ານ ຈະເລີນ ພວງຈັນ ໄດ້ເກັບກຳ ແລະ ສະສົມໄວ້: " ຜ່ານປະຫວັດ ສາດ ລາວ ". ເອກະສານ ພິມດີດ. ເຫລັ້ມ ໓ ປີ ໑໙໗໙ ໜ້າ ໒໑-໒໒. ຂໍໃຫ້ເບິ່ງເຊັ່ນດຽວກັນປຶ້ມຂອງ ທ່ານ ສ.ເດຊາ " ກາງຄືນກໍເຫັນກາງເວັນກໍຮູ້ " " ກອນລຳປະຫວັດສາດ " ປີ ໑໙໗໗ ແລະ " ລາວດວງເດືອນ " ໑໙໘໑ ໂຮງພິມ ແຫ່ງ ລັດ . ສ.ປ.ປ.ລາວ.

(໖໘) ຈາລຸນູດ ເຣືອງສຸວັນ " ຄຳພຽນ " ສິລະປະ ວັດທະ
ນະທຳ-ພາສາໄທ- ບາງກອກ- ມິຖຸນາ - ໑໙໘໓. ໜ້າ ໔໓
(໖໙) ມະຍຸຣີ ໄດ້ຂຽນບົດຄວາມໜຶ່ງກ່ຽວກັບຄວາມຮັກ ຊາດ
ລາວໃນປະຫວັດສາດຄື :" ໝາກໄມ້ບໍ່ຫ່ອນຫລົ່ນໄກກົກ"
" ປະຊາຊົນ " ( ໜັງສືພິມລາຍວັນຂອງສູນກາງພັກປະຊາຊົນ
ປະຕິວັດລາວ ) ລົງວັນທີ ໘ ມິຖຸນາ ໑໙໘໗, ສະບັບເລກ ທີ
໓໖໓໔.

(໗໐) ກ.ສ.ລ. ກູຫລາບ :" ອານາມ ສະຫຍາມຍຸດ " ໜ້າ
໒໘໒.

(໗໑) ດຣ. ກູດສະລາຟ ( GUTZLAFF ):" ປະເທດ
ຂອງປະຊາຊົນລາວ ອິດສະຫລະ " ໜັງສືພິມຂອງລາຊະສະມາ
ຄົມຕົ້ນຄວ້າກ່ຽວກັບພູມສາດ-ພາສາອັງກິດ. ລອນດອນ ໑໘໔໗.
ໜ້າ ໓໓-໔໑.

(໗໒) ໄກສອນ ພົມວິຫານ:" ບາງບົດຮຽນຕົ້ນຕໍ ແລະ ບາງ
ບັນຫາກ່ຽວກັບທິດທາງໃໝ່ຂອງການປະຕິວັດລາວ ". ສຳນັກ
ພິມຈຳໜ່າຍ ສ.ປ.ປ.ລາວ. ໑໙໗໙- ໜ້າ ໗. ສ່ວນເລື່ອງ
ກອງລາຊະວົງ ຈຶ່ງເບິ່ງຢູ່ໃນປຶ້ມຂອງສີຊະນະແລະວົງໄຊ "ເລົ່າ
ເລື່ອງມູນເຊື້ອປະຕິວັດ". ສຳນັກພິມຈຳໜ່າຍ" ລາວຮັກຊາດ"
໑໙໗໐ ໜ້າ ໒໑-໒໔.

# 2. ຫມາກໄມ້ບໍ່ຫ່ອນລົ່ນໄກກົກ

















<u>ໝາຍເຫດ:</u>

ໜັງສືພິມ "ປະຊາຊົນ" ( ໜັງສືພິມລາຍວັນຂອງສູນກາງພັກປະຊາຊົນປະຕິວັດລາວ ) ໄດ້ພິມບົດຂອງດຣ. ມະຍຸລີ ເຫຼົ່າສີວັທນ໌ ລົງໃນວັນທີ ໒ ມິຖຸນາ ໑໙໘໓, ສະບັບເລກທີ ໓໖໓໔.

*ປະຊາຊາດໃດກໍຕາມເຖິງຈະຕົກຢູ່ໃນສະພາບໃດ, ຢູ່ແຫ່ງຫົນໃດກໍຍັງຄົງຮັກສາເອກະລັກຂອງຊາດຕົນໄວ້ບໍ່ຫລາຍກໍໜ້ອຍ, ປະຊາຊົນລາວບັນດາເຜົ່າກໍເຊັ່ນດຽວກັນ, ຄວາມຕິດພັນນຳຊາດ ຄວາມສຳນຶກໃນຊາດນັ້ນມັນເກີດຕິດຕົວມາແຕ່ເວລາອອກຈາກທ້ອງແມ່ ແລະ ຈະຖ່າຍທອດຕໍ່ໆກັນໄປເຖິງຫລາຍເສັ້ນຄົນ.

ປະເພນີທີ່ເລົ່າຂານກັນມາຫລາຍຍຸກກ່ຽວກັບ ວີລະກຳ ຂອງເຈົ້າ ອະນຸ ແລະ ຂອງເຈົ້າລາຊະວົງກໍເປັນຕົວຢ່າງອັນໜຶ່ງ . ບໍ່ວ່າຈະຖືກກວາດຕ້ອນໄປຢູ່ໃສກໍຕາມ ປະຊາຊົນລາວບັນດາເຜົ່າໄດ້ຍຶດໝັ້ນໃນແນວຄິດຮັກປະເທດຊາດບ້ານເກີດເມືອງນອນ, ໃນແນວຄິດຕໍ່ສູ້, ໃນແນວຄິດບໍ່ຍອມຈຳນົນ ໃນແນວຄິດເຊື່ອໝັ້ນໃນຄວາມເປັນຊາດໜຶ່ງ ແລະ ເຊື່ອໝັ້ນໃນອະນາຄົດອັນແຈ່ມ ໃສຂອງບ້ານເມືອງຕົນ.

ພົງສາວະດານຂອງເມືອງຍະໂສທອນ ໄດ້ເອົາຊື່ລາຊະ ວົງຕິດພັນກັບທຸກຂັ້ນຮົບໃນທຸກແຫ່ງແຕ່ປີ ໑໙໔໗ ເຖິງ ໑໙໔໙. ຊາວພວນທີ່ຖືກກວາດຕ້ອນໄປຢູ່ ສະຫຍາມ ໄດ້ກ່ອມລູກໂດຍຮອງການເຊີ້ງເຖິງ ລາຊະວົງ ແລະ ການຜູກພັນຂອງເຂົາເຈົ້າຕໍ່ປະເທດຊາດ. ( " ພື້ນບ້ານພື້ນເມືອງ" ໂດຍ ປລາບົ ວົງເທບ, ສຳນັກພິມເຈົ້າພະຍາ, ບາງກອກ. ປີ ໑໙໙໔, ໜ້າ ໑໗໙-໑໙໗)

ປະຊາຊົນລາວບັນດາເຜົ່າທີ່ຖືກກວາດຕ້ອນໄປເປັນ ສະເລີຍເສິກ ແລະ ຖືກຈຳຈອງເຮັດວຽກສັບພະທຸກທີ່ບາງກອກ ໄດ້ຖ່າຍທອດຄວາມຮູ້ສຶກ ເຊິ່ງກ່າຍອອກເປັນຄຳເວົ້າ,ເປັນທຳນອງລາວ

ທີ່ນິຍົມທີ່ສຸດໃນ" ເຫດການທີ່ສຳຄັນຄັ້ງນີ້ຍັງຢູ່ໃນຄວາມຊົງ ຈຳຂອງຊາວພວນເກືອບທຸກຄົນ ບໍ່ສະເພາະແຕ່ຈະສະທ້ອນອອກໃນບົດເພງກ່ອມລູກເຊື້ອຮ້ອງຂັບກ່ອມໄກວລູກໄດ້ຍິນໄດ້ຟັງ ແລະຈົດຈຳເຖິງຄວາມເປັນມາຂອງຊາວພວນເຫລົ່ານັ້ນ ແຕ່ມີຫລັກ ຖານວ່າເຫດການປະຫວັດສາດຄັ້ງນີ້ໄດ້ຖືກຖ່າຍທອດອອກເປັນບົດເພງທີ່ຮູ້ຈັກກັນດີຄືເພງ " ລາວແພນ ", (" ພື້ນບ້ານ ພື້ນເມືອງ" ໂດຍ ປລານີ ວົງເທບ, ປີ ໑໙໘໔, ບາງກອກ,ສຳນັກພິມເຈົ້າພະຍາ, ໜ້າ ໑໗໙). ຜູ້ຂຽນໄທອີກຜູ້ໜຶ່ງໄດ້ໃຫ້ຄຳເຫັນ ວ່າ " ລາວແພນເປັນຊື່ເພງໄທ ສຳນຽງລາວທີ່ມີຊື່ສຽງຫລາຍ ຈັດໄດ້ວ່າເປັນເພງຍອດນິຍົມຂອງວົງການດົນຕີໄທ ເພງໜຶ່ງ " "...ເປັນຊື່ເພງໄທ ທີ່ຍິ່ງໃຫຍ່ເພງໜຶ່ງໃນປະຫວັດສາດ ການດົນຕີຂອງໄທ ແລະ ຍັງເປັນເພງທີ່ສະທ້ອນເລື່ອງລາວ ປະຫວັດສາດໄທແລະລາວໃນສະໄໝ ລັດຕະນະໂກສິນ " (" ລາວແພນ" ໂດຍພູນພັດ ອະມະຕະຍະກຸນ ໃນໜັງສື ສິລະປະ ແລະ ວັດທະນະທຳ ເດືອນ ໘/໑໙໘໓, ໜ້າ ໑໙-໔໐).

" ລາວແພນ" ເຊິ່ງຖືກພຽນຊື່ອອກຈາກຄຳເດີມຂອງ"ລາວແຄນ" ຜູ້ຂຽນຜູ້ໜຶ່ງເວົ້າວ່າ " ທີ່ຈິງແພນ ຄຳນີ້ກໍຄືແຄນ ນັ້ນເອງ ເພາະກະວີບູຮານມັກໃຊ້ ພ ແທນ ຄ ເຊັ່ນ ເວີນຄົດຄີໂຕດວງ ເປັນ ພົດດວງ ຫລື " ນາກສະດຸ້ງພຸ້ງພົດໜ້າບັນ"ລາມະກຽນ ລ.໑ ); ນີ້ ກໍໝາຍເຖິງໃບລະກາທີ່ເປັນຮູບນາກ ສະດຸ້ງ ຄົດໄປ ຄົດມາ. ໃນ ພະລາຊະພົງສາວະດານຍັງວ່າ

ໄວ້ແຈ້ງ : ໃຫ້ລຳເຕັ້ນຫລິ້ນສະໜຸກກັນທຸກຄ່າຍສຽງຫລາຍນອນ ພະມ້າ ເຮຣ່າ ...ພວກຊຽງໃໝ່ໄດ້ແພນອໍ້ ຮ້ອງຊໍລາວ,ເຈົ້າສາວສາວເອີ້ຍເອີ້ຍລະນໍ"(ພຶດຈະນານຸກົມສະບັບ ນິຣຸດຕິສາດ"ວ່າດ້ວຍເລື່ອງຄວາມເປັນມາຂອງຄຳ ພາສິດຈິດພາສາ" ໃນໜັງ ສືສິລະປະແລະວັດທະນະທຳ ເດືອນ ໑໑/໑໙໘໔, ໜ້າ ໖໑ ). ຖ້າຈະເວົ້າແລ້ວບໍ່ພຽງແຕ່ມີການດັດແປງຊື່" ລາວແພນ " ຈາກ " ລາວແຄນ " ຫາກບາງເນື້ອໃນກໍມີອັນດັດແປງອີກດ້ວຍ.

ບາງຕອນຂອງເພງ ມີດັ່ງນີ້ : " ຝ່າຍພວກເຮົາລາວເປົ່າແຄນແສນສະເບາະ ມາພໍ່ເສາະເຂົ້າກັບແຄນແສນຂະໜັບ ເປັນໃຈຄວາມຍາມຕົກຍາກ ຈາກວຽງຈັນ ຕົກມາຢູ່ເຂດຂັບອາຍຸດທະຍາ ອີ່ແມ່ຂ້ອຍເອີຍ ຂ້ອຍບໍ່ເຄີຍຕົກຍາກ ຕົກລະກຳລຳບາກແສນຍາກນີ້ໜັກໜາ ພັດທີ່ກິນ ຖິ່ນຖານ ພັດທັງບ້ານເມືອງມາພັດທັງປູ່ ທັງຍ່າ ພັດທັງຕາ ທັງຍາຍ ພັດທັງແມ່ ລູກເມຍ ພັດທັງເສຍລູກເຕົ້າ ພັດທັງພົງທັງເຜົ່າ ລູກເຕົ້າກໍໜີຫາຍ ເພື່ອນໄທ ມັນຂ້ຽນ ເພື່ອນໄທມັນຂັງ ຈົນໄຫລຈົນຫລັງ ຂ້ອຍນີ້ລາຍ ຈະຕາຍເສຍແລ້ວໜາ ໃນປ່າດົງແດນ ຜ້າຂາວກໍ່ບໍ່ມີນຸ່ງ ຜ້າຖຸງກໍ່ບໍ່ມີຫົ່ມ ຄາດແຕ່ຕ່ຽວກຽວກົ້ມ ໜາວລົມນີ້ເຫລືອແສນລະເໜີ ລະທົກຕົກຍາກ ຕ້ອງເປັນຄົນກາກຄົນແກນ ມີແຕ່ແຄນອັນດຽວກໍພໍໄດ້ ທ່ຽວຂໍທານເຂົ້າກິນ ຕົກມາຢູ່ໃນເມືອງ ຕ້ອງຖືບກະເດື່ອງກະດອຍ ສືຊ້ອມຕ່ຳຕ້ອຍ ຕະບິດຕະບອຍ ບໍ່ຮູ້ໝົດ ຖືດຽວກ່ຽວໜ້າ ໄປໃຫ້ນ້ຳຂອງເພື່ອນມັນກິນ ທ່ຽວຊີມຊີມຊານຊານ ໄປທຸກບ້ານທຸກ ຖິ່ນ

ຈະໄດ້ກິນກໍແຕ່ເດນ ແສນອຶດ ແສນຈົນເໝືອນດັ່ງຄົນ ຕົກນາລົກ ... (" ພື້ນບ້ານ ພື້ນເມືອງ " ໂດຍ ປລານີ ວົງເທບ. ປີ ໑໙໘໔, ບາງກອກ ໜ້າ ໑໘໖; ແລະ " ລາວແພນ " ໂດຍ ພູນພິດ ອະມະຕະຍະກຸນ ໃນໜັງສືສິລະປະແລະວັດທະນະທຳ , ໜ້າ ໔໑, ເດືອນ ໘/໑໙໘໗).

ນອກຈາກເພງນີ້ແລ້ວກໍຍັງມີເປັນຄຳກອນ, ຄຳເຊີ້ງເປັນປະເພດ ຄຳເຕືອນສະຕິຖຸກເຕືອນຢູ່ບໍ່ຂາດບໍ່ໃຫ້ຫລົງລືມເຊື້ອ ຊາດ ແລະ ໄດ້ເລົ່າສືບຕໍ່ກັນມາ ເປັນຄຳກອນ ຄຳເຊີ້ງດ້ວຍຮູບ ການປິດລັບ, ເປັນຄວາມລະຫັດອັນເລິກລັບໃນປວງຊົນດັ່ງຄຳເຊີ້ງ ທີ່ວ່າ :

ໂອ້ນໂລ່ນຊາ ຈຳປາສີຕົ້ນ ໃຜບໍ່ໂອ້ນ ສີໂອນຫລົ້ນຜູ້ ດຽວ ຕົ້ນຕັບໄກ່ຂອງກິນໃຫເອີຍ ໃຫ້ກິນແລ້ວເສຍແນວໄກ່ຕໍ່ ກິນໝາກຄໍ້ ຄາຄໍ່ຈໍ່ລໍ່ ... ບາງເຈົ້າບ່າງ ບາງລາຊະວົງ ຂົງວຽງຈັນ ລາຊະວົງເປັນເຈົ້າ ເຫັນວ່າວຽງຈັນເສົ້າ ສາວເອີຍ ຢ່າຟ້າວ ວ່າມັນຊິໂປ້ບາດຫລ້າ ໝາກແຕງຊ້າງໜ່ວຍປາຍ " (" ຜ່ານປະຫວັດສາດຊາວລາວເຫລັ້ມ ໑" ໃນ" **ເຈົ້າອະນຸວົງ ກູ້ອິດສະຫຼະພາບ ຍົກກອງທັບໄປຕັ້ງຢູ່ບາງກອກ**" ໂດຍຈະເລີນ ພວງຈັນ ປີ ໑໙໗໗, ໜ້າ ໔໔.ໃນ " ພື້ນບ້ານພື້ນເມືອງ " ໂດຍປລານີ ວົງເທບ ສຳນັກພິມເຈົ້າພະຍາ. ປີ ໑໙໘໔, ໜ້າ໑໘໐-໑໘໑ ເຊິ່ງມີການດັດແປງ ). ນັກຂຽນໄທຜູ້ໜຶ່ງໄດ້ຂຽນວ່າ"ໃນຊ່ວງສຸດທ້າຍຂອງເພງບົດນີ້ ຍິ່ງສະທ້ອນໃຫ້ເຫັນຢ່າງຈະແຈ້ງ ເຖິງ

# ປວັດສາດ-ວັນນະຄະດີ ລາວ



ເຈົ້າລາຊະວົງສູ້ຈອມທັບໄທ ພະຍາບໍດິນ .

ຮູບແຕ້ມ ຂັດອອກຈາກ ສິນສີ ວິລະສານ " ປະວັດສາດ-ວັນນະ ຄະດີລາວ " ໑໙໗໑. ໜ້າປົກ.



ຮູບແຕ້ມ ຂັດອອກຈາກປຶ້ມຂອງ ອັງຣີ ມູໂຮ ການເດີນທາງມາ ໃນບັນດາ ລາຊະອານາຈັກ ສະຫຍາມະ, ກຳປູເຈັຍ, ລາວ, ປາຣີ ໑໘໔໘, ໜ້າ ໒໔໔ .

ຄວາມຊົງຈຳໃນປະຫວັດສາດທີ່ປະທັບໃຈ ຊາວພວນຍາກທີ່ຈະລືມໄດ້ ແມ້ໃນຊັ້ນລູກຫລານເຖິງຄາວຖືກກວາດຕ້ອນອົບພະຍົບ ມາຈາກວຽງຈັນ ໃນຖານະສະເລີຍເສິກແລະຕ້ອງຖືກຄົນໄທ ໃຊ້ໃຫ້ເຮັດວຽກຕ່າງໆ ທັງເຮັດອາຫານລ້ຽງຄື " ປີ້ງຕັບໄກ່ໃຫ້ໄທກິນ" (" ພື້ນບ້ານພື້ນເມືອງ" ໂດຍ ປລາບີ ວົງເທບ ຈາກ ສຳນັກພິມເຈົ້າພະຍາ, ປີ ໑໙໘໒, ໜ້າ ໑໘໐-໑໙໑-໑໙໔).

ຄວາມພະຍາຍາມຫວັງທຳລາຍຊາດລາວ ໄດ້ມີມາແຕ່ ສະໄໝ ເຈົ້າຕາກສິນ ( ຜູ້ທີ່ສ້າງກຸງ ທົນບູລີ ພາຍຫລັງທີ່ເສຍອະຍຸດທະຍາໃຫ້ພະມ້ານໃນປີ ໑໗໖໗ ) ຜູ້ເຊິ່ງກາອານາດໄດ້ ພຽງ ໑໐ ປີ ກໍສັ່ງເຜົາຜານທຳລາຍວຽງຈັນກຽງໃນປີ ໑໗໗໙. ຈົນຫລັງນັ້ນມາ ໕໐ ປີ ເຈົ້າອະນຸຜູ້ເປັນກະສັດອົງສຸດທ້າຍຂອງ ລາຊະວົງວຽງຈັນ( ເກີດເມື່ອປີ ໑໗໖໗ ) ໄດ້ລຸກຮື້ຂຶ້ນເພື່ອກອບກູ້ເອົາເອກະລາດຄືນມາ. ໃນປີ ໑໘໒໗ ນັ້ນເອງ ທີ່ເຈົ້າຊີວິດ ໄທໃນລາຊະການທີ ໓ ຂອງກຸງລັດຕະນະໂກສິນ ກໍໄດ້ສັ່ງໃຫ້ ທະຫານ ຂອງຕົນທຳລາຍວຽງຈັນໃຫ້ກ້ຽງ " ບໍ່ຄວນຈະເອົາ ໄວ້ເປັນບ້ານເມືອງຢູ່ສືບໄປ ໃຫ້ກັບຂຶ້ນໄປທຳລາຍລ້າງເສຍໃຫ້ສິ້ນ

ໃຫ້ຕັດຕົ້ນໄມ້ທີ່ມີໝາກກິນນັ້ນຖິ້ມໝົດສິ້ນ ແລ້ວໃຫ້ຖ່າຍສະບຽງອາຫານອອກຈາກເມືອງວຽງຈັນ ຂົນມາໄວ້ ໃນຄ້າຍພານພ້າວຈົນສິ້ນເຊິງ ແລ້ວໃຫ້ນຳໄຟໄປເຜົາເມືອງວຽງຈັນນຳ ແລ້ວໃຫ້ພົນທະຫານໄປຮື້ດິນຈີ່ ກຳແພງເມືອງ ວຽງຈັນ ໃຫ້ໝົດຮອບເມືອງ " (" ອານາມສະຫຍາມຍຸດ " ໂດຍກ.ສ.ຣ

ກູຫລາບ. ສຳນັກພິມ ແພຣ່ ພິທະຍາ ປີ ໑໙໗໑, ໜ້າ ໔໗໙ - ໔໘໐ ).

໔ ຕັ້ງປະຫວັດສາດໃຫຍ່ທີ່ສະຫຍາມໄດ້ທຳລາຍເຜົາ ຜານ ຫວັງຈະໃຫ້ປະເທດລາວ ເຫລືອພຽງແຕ່ຫຍ້າ ແກ້ແລະ ສັດປ່າ ເທົ່ານັ້ນ. ແຕ່ຈອມພົນສະຫຍາມ ກົມພະລາຊະວັງ ບົວວອນ ສະຖານມົງຄົນ ຕ້ອງໄດ້ຮັບຮູ້ໃນລາຍງານໃຫ້ເຈົ້າຊີວິດໄທໃນ ສະໄໝລາຊະການທີ ໓ ຂອງກູງ ລັດຕະນະໂກສິນ ຂອງສະຫຍາມ ວ່າ " ທະຫານຂອງລາວກໍເຕັມໃຈສູ້ຮົບເກືອບຈະທຸກຄົນ ເພາະ ລາວຮັກຄອບຄົວບ້ານເກີດເມືອງນອນຂອງລາວ " ( ອານາມ ສະຫຍາມຍຸດ " ໂດຍ ກ.ສ.ຣ. ກູຫລາບ, ສຳນັກພິມ ແພຣ່ ພິທະຍາ ປີ ໑໙໗໑, ໜ້າ ໔໘໔).

ຄຳເວົ້າຂອງຈອມພົນສະຫຍາມຜູ້ນັ້ນ ຍັງພິສູດໃຫ້ເຫັນ ອີກ ເທື່ອໜຶ່ງວ່າ ຜ່ານປະຫວັດສາດສູ້ຮົບຕ່າງໆ, ປະຊາຊົນລາວບັນ ດາເຜົ່າແມ່ນສຸດຫວງແຫນ ແລະ ຮັກປະເທດຊາດຂອງຕົນ ອັນ ເປັນມູນເຊື້ອສືບທອດກັນມາຈົນເທົ່າປະຈຸບັນ ດັ່ງບູຮານ ເພິ່ນໄດ້ ເວົ້າວ່າ: " ໝາກໄມ້ ບໍ່ຫລ່ນຫລື່ນໄກກົກ ".

3. ມະຫາອຳນາດໂລກກັບການເມືອງຂົງເຂດການພົວພັນແບບສາມຫລ່ຽມລະຫວ່າງອັງກິດກັບບາງກອກ ແລະປະຊາຊົນລາວໃນຊວງເວລາທີ່ ຈອນຄຣາເຟີດ (John CRAWFURD) (1821–1822) ແລະແຮນຣີເບີເນ (Henry BURNEY) (1825–1826) ຖືກສົ່ງມາເປັນທູດຢູ່ສະຫຍາມ

<u>ໝາຍເຫດ</u> :

- ບົດ[1]ນີ້ຖືກພິມລົງເປັນພາສາອັງກິດຢູ່ໃນ " ວາລະສານ ຂອງ ສະມາຄົມສະຫຍາມ "(Journal oftheSiam Society) ສະບັບ ກກ, ພາກ ທີ ໑, ປີ ໑໙໒໒.

"ທະຫານຈຳພວກນັ້ນພຽງແຕ່ຈະຖືກຈັບເປັນຊະເລີຍ ເສິກ ແລະ ຈະກາຍມາເປັນຂ້າທາດຕັດຫຍ້າປ້ອນຊ້າງຂອງເຈົ້າ ຊີວິດ ພະມ້າເທົ່ານັ້ນແລ້ວ " ອັນນີ້ແມ່ນຄຳເວົ້າຂອງເຈົ້າຊີວິດ ສະຫຍາມ, ລາຊະການທີສາມ (໑ກ໘ກ-໑໘໒໔-໑໘໕໑ ) ທີ່ໄດ້ເວົ້າຂຶ້ນດ້ວຍສຳນຽງເຍາະເຍີ້ຍໃນປີ ໑໘໒໔ ໃນເວລາທີ່ ບາງກອກໄດ້ຮູ້ຂ່າວວ່າທະຫານ ນາວິກໂຍທິນອັງກິດປະກອບດ້ວຍ ສິບພັນກວ່າຄົນນຳໂດຍ ເຊີ ອາກຊີບານ ເດີ ແຄມແບນ (Sir Archibalt de campbell) ໄດ້ຂຶ້ນບົກເພື່ອຍຶດເອົາ ຢ່າງກຸ້ງ ( Rangoon ) (໑) . ການຂາດຄວາມ ນັບຖືແລະການຫົວເຍາະເຍີ້ຍອັນນີ້ໄດ້ມາຈາກເຫດຜົນທີ່ວ່າລາຊະການທີສາມເປັນຄົນນັກອ່ານນິພົນຕ່າງໆຂອງເຈົ້າຈັກກະພັດ ນາໂປເລອົງ ( Napoléon ) ແລະ ໃນຂະນະນັ້ນກໍຢາກໝິ່ນ ປະໝາດທຸກສິ່ງທຸກຢ່າງທີ່ມາຈາກອັງກິດບໍ່ ? (໒). ໃນຕົວຈິງ, ຮູບໂສມຂອງອັງກິດໃນຂະນະນັ້ນກໍແມ່ນບໍ່ແຈ່ມໃຈເທົ່າໃດ, ອັນນີ້ກໍເນື່ອງຈາກວ່າພວກຜູ້ນຳໃນອາຊີປະພຶດຕໍ່ອັງກິດແບບອັດຕະວິໄສທີ່ສຸດແລະຂ່າວກ່ຽວກັບອັງກິດກໍ່ລ້ວນແຕ່ສັບສົນ. ດ້ານໜຶ່ງເໝືອນດັ່ງທີ່ເຈົ້າອາວາດ ບລູຍກິແຢ(Monseigneur BRUGUIERE) ໄດ້ຂຽນໃນຂະນະທີ່ຜູ້ກ່ຽວມາເຖິງບາງກອກໃນປີ ໑໘໒໙, ວ່າ: " ອິດທິພົນອັນມະຫາສານຂອງອັງກິດຢູ່ອິນເດຍໄດ້ສ້າງຄວາມສະທ້ານຢ້ານກົວໄປໝົດທົ່ວພາກຕະເວັນອອກ. ອິດທິພົນອັນ ເຫລືອເຊື່ອ ແລະ ນັບມື້ນັບຂະຫຍາຍຕົວອັນນີ້ໄດ້ເປັນການຂົ່ມຂູ່ທຸກໆລາ

ຊະວົງໃນອາຊີ. ເຈົ້າຊີວິດສະຫຍາມກໍຢ້ານຈະຖືກໂຄ່ນລົ້ມ ຈາກພະລາຊະບັນລັງ ບໍ່ມື້ໃດກໍ່ມື້ໜຶ່ງ. ຖ້າເຈົ້າຊີວິດສະຫຍາມ ເຫັນຄົນ ຢູໂລບຜູ້ໃດຜູ້ໜຶ່ງ ກໍຕູ່ຫາທັນທີວ່າເປັນນັກສືບອັງກິດ. ເພິ່ນບໍ່ສາມາດ ຈຳແນກລະຫວ່າງນັກບວດ ແລະ ສາມັນຊົນ, ລະຫວ່າງພວກຖືສາສະໜາເຢຊູ ແລະ ຄົນອັງກິດ " (໓). ອີກດ້ານໜຶ່ງ, ຍ້ອນການປະລາໄຊຢ່າງເນື່ອງນິດຢູ່ໃນພູມີພາກ ອື່ນຂອງອາຊີ, ອັງກິດກໍກາຍເປັນ " ເສືອກະດາດ ", ໃນປີ-໑໘໐໘, ຜູ້ວ່າ ລາຊະການປະຈຳອິນເດຍ ລອດມິນໂຕ ( - Lord MINTO ) ໄດ້ສົ່ງກຳປັ່ນຮົບ ໑໐ ກວ່າລຳໄປຕີເມືອງມາກາວ ( MACAO ). ໃນຂະນະເດີນທາງໄປນັ້ນກໍໄດ້ສົ່ງເຮືອຈຳນວນໜຶ່ງໄປຕັງແກງ ( Tonkin ເພື່ອຂົ່ມຂູ່ເຈົ້າຊີວິດຫວຽດ. ແຕ່ເຮືອສຳເພົາຫວຽດກໍໄດ້ໂຈມຕີເຮືອ ອັງກິດໃຫ້ຖອຍໄປ ແລະ ຍິ່ງໄປກວ່ານັ້ນຍັງໄດ້ທຳລາຍເຮືອ ອັງກິດຈຳນວນ ໖ ຫາ ໗ ລຳ. ພວກທີ່ເຫລືອຕາຍທີ່ມາຮອດ ມາກາວ ( MACAO ) ກໍໄດ້ຖືກທະຫານຈີນທີ່ສົ່ງມາແຕ່ ກວາງຕຸ້ງ ( Canton ) ປັດເຂ່ຍລົງທະເລ (໔) .

ແຕ່ມະຫາອຳນາດໂລກໃນຂະນະນັ້ນກໍ່ໄດ້ດູຖູກ ລາຊະວົງຂອງເວ້ ( Hué ), ຂອງບາງກອກ ແລະ ຂອງ ອາວາ ( Ava ) ໂດຍເວົ້າວ່າ ເປັນພວກ " ປ່າເຖື່ອນ " (໕). ຄຳສັບນີ້ກໍແມ່ນຕິຕຳລາຊະວົງຕ່າງໆ ໃນອາຊີແລະແນໃສ່ທົດແທນຄວາມຂົມຂື່ນທີ່ອັງກິດໄດ້ຮັບໃນການພົວພັນກັບບັນດາປະເທດເຫຼົ່າ

ນັ້ນ. ຈອນ ຄຣາເຟີດ ( John CRAWFURD )
ຫລື ເຮນຣີ ເບີກເນ ( Henry BURNEY ) ກໍໄດ້ ເລົ່າ
ແລ້ວເລົ່າອີກກ່ຽວກັບຜູ້ນຳສະຫຍາມວ່າ " ການໄຮການ ສຶກສາ
ອັນເລິກເຊິ່ງຂອງພວກເຂົາກ່ຽວກັບບັນດາປະຊາຊາດ ຕ່າງດ້າວ
ເຮັດໃຫ້ເຂົາເຫລົ່ານັ້ນອ່ອນແອ ແລະ ລົ່ງລົ່ງເລເລ, ຂວດ ອຶ່ງ
ທະນົງຕົວ; ທັງໂອຫັງຫັງບ້າຄົ່ງ ແລະ ພວກເຂົາຍັງຄິດວ່າ ບໍ່ມີ
ປະເທດໃດທີ່ລົບເຂົາໄດ້ຢູ່ໃນໜ່ວຍພິພົບນີ້ ແລະ ພວກເຂົາຍຶດຖື
ຢ່າງເອົາເປັນເອົາຕາຍວ່າປະເທດຂອງເຂົາເປັນປະເທດທີໜຶ່ງ
ໃນໂລກ " (໖).

ສົນທິສັນຍາທີ່ເຊັນກັນລະຫວ່າງອັງກິດແລະ ໂຮນລັນດາ
( Hollanda ) ໃນວັນທີ ໑໗ ພຶດສະພາ ປີ ໑໘໒໔
ກໍໄດ້ແບ່ງປັນພູມີທະວີບອາຊີອາຄະເນໃຫ້ກາຍເປັນເຂດ ອິດທິພົນ
ຂອງອັງກິດ. ເປົ້າໝາຍຂອງອັງກິດບົນພື້ນຖານໃນພາກນີ້ ຂອງ
ໂລກກໍເຈາະຈົງພຽງແຕ່ສາງຕັ້ງອິດທິພົນຂອງອັງກິດຢູ່ໃນລັດ ມາ
ລາຢູ ເພື່ອໃຫ້ເປັນບ່ອນຄ້ຳປະກັນໃຫ້ແກ່ຈັກກະພັດນິຍົມໃນ ດ້ານ
ການຄ້າ. " ບາງທີພວກເຮົາມີເມືອງຂຶ້ນຫລາຍເກີນກວ່າທີ່ພວກ
ເຮົາຈະຄຸ້ມຄອງໄວ້ໄດ້ ແລະ ພວກເຮົາກໍມີດິນແດນຫລາຍ ແຫ່ງ
ເພື່ອຂຸດຄົ້ນ ແລະ ສວຍໃຊ້, ແຕ່ພວກເຮົາຈະບໍ່ພຽງພໍ ຈັກເທື່ອ
ໃນດ້ານຄວາມຕ້ອງການມີແຫລ່ງອັນຮັບປະກັນເພື່ອການຄ້າ ຂອງ
ພວກເຮົາແລະພວກເຮົາກໍຈະບໍ່ຢຸດຢັ້ງຈັກເທື່ອໃນການຕ້ອງ ການ
ທ່າເຮືອເພື່ອລຳລຽງອາຫານໃຫ້ນາຍແລະລູກເຮືອພວກເຮົາແລະ

ສ້ອມແປງເຮືອຂອງພວກເຮົາ ". ອັນນີ້ແມ່ນຄວາມເວົ້າຂອງບາໂຣ ( BARROW ) ນັກການທູດອັງກິດທີ່ຂຽນຂຶ້ນໃນປີ ໑໘໐໖ (ກ). ເຖິງແນວໃດກໍດີ, ທັດສະນະການເມືອງແລະຍຸດທະສາດຂອງອັງກິດໄດ້ມອງເຫັນທະວີບອາຊີອາຄະເນ( ທີ່ອັງກິດ ເປັນຜູ້ເອີ້ນຜູ້ທຳອິດ ໂດຍເອີ້ນວ່າ " ອິນໂດ-ຈີນ " ແລະຈອນ ຄຣາເຟີດ(John CRAWFURD)ຂຽນວ່າ" ອິນດູ-ຈີນ") ເຊິ່ງປະກອບດ້ວຍສາມກຸ່ມໃຫຍ່ຄືພະມ່າ, ຂະຫຍາມແລະໂກແຊງຈີນ ( Cochinchine ) (ຫວຽດ),ສ່ວນສະຫຍາມນັ້ນຍັງປະກອບດ້ວຍສອງກຸ່ມນ້ອຍຄື " ລາວແລະຂະເໝນ" (ຂ).

ການຊີງຊາກຳລັງລະຫວ່າງອັງກິດກັບສະຫຍາມກໍແມ່ນຂາດຂັ້ນ ແລະ ເຮັດໃຫ້ການຄວບຄຸມຂອງອັງກິດຢູ່ໃນອາຊີອາຄະ ເນກາຍເປັນທີ່ໝັ້ນທີ່ຝ່າຝືນບໍ່ໄດ້. ໂດຍສະເພາະສະຫຍາມກໍບໍ່ ມີຄວາມສາມາດຈະມາແຕະຕ້ອງໄດ້ ເໝືອງດັ່ງ ຈອນ ຄຣາເຟີດ ( John CRAWFURD ) ໄດ້ຂຽນວ່າ :" ຂ້າພະເຈົ້າຢາກເນັ້ນຄືນອີກວ່າປະຊາຊົນສະຫຍາມ, ເມື່ອເບິ່ງຈຳນວນ ຫລືດິນແດນອັນກວ້າງໃຫຍ່ຂອງເຂົາແລ້ວ, ບໍ່ເປັນປະຊາຊາດ ທີ່ຈະເປັນໄພອັນຕະລາຍແກ່ພວກເຮົາແຕ່ຢ່າງໃດເລີຍແລະບໍ່ສາມາດທີ່ຈະຂົ່ມຂູ່ຈູດອ່ອນທີ່ສຸດຂອງພວກເຮົາຄື ເກາະແປລງເຊີ ອອບວານເລີ ( Prince of Wales) ການຂາດວິຊາ ການເດີນເຮືອທາງທະເລຢ່າງສິ້ນເຊີງເຮັດໃຫ້ພວກເຂົາບໍ່ມີຄວາມສາມາດໃດໆເລີຍທີ່ຈະທຳການຮຸກຮານພວກເຮົາໄດ້ແລະກໍເປັນການ

ຕັດຕົ້ນບັນຫາໃຫ້ແກ່ປະເທດໃກ້ຄຽງຂອງເຂົາຢູ່ອິນເດຍ ແລະ ຢູ່ອ່າວ ແປກຊິກ ( Persique ) ແລະ ອາຫລັບ ( Arabe ). ແຕ່ເຂົາຊໍ້າພັດເປັນໄພອັນຕະລາຍເພື່ອປູນຈີ້ປະຊາຊາດທີ່ສະຫງົບສຸກ ແລະ ຊຸດົມຮັ່ງມີທີ່ເປັນປະເທດຕິດ ກັບເຂົານັ້ນ. ອິດທິພົນແລະປະຊາຊົນຂອງສະຫຍາມແນ່ນນອນຢູ່ ໃນຫລັງແມ່ນໍ້າ( ແມ່ນໍ້າເຈົ້າພະຍາ ). ລະຫວ່າງແມ່ນໍ້າກັບຈຸດ ທີ່ເຂົາສາມາດຈະໂຈມຕີພວກເຮົານັ້ນ, ມັນກໍມີພູຜາປ່າໄມ້ ແລະຊຸປະສັກ ອັນກັບດານອື່ນໆທີ່ກີດຂວາງ. ສະຫຍາມມີພຽງແຕ່ ອໍານາດທີ່ຈະຮຸກຮານສັດຕູຂອງເຂົາທີ່ຕິດກັບຊາຍແດນຂອງເຂົາເຊັ່ນ ເກດາ ( Kedah ) ເທົ່ານັ້ນ, ແຕ່ເຂົາບໍ່ມີກໍາລັງພຽງພໍທີ່ຈະຮຸກຮານ ປີນັງ ( Penang ). ສະຫຍາມຈະບໍ່ເປັນໄພອັນຕະລາຍຈັກເທື່ອຕໍ່ພວກເຮົາ. ທະຫານຍ້ອນໜ້ອຍໜຶ່ງກໍພຽງພໍເພື່ອຕີຖອຍການຮຸກຮານຂອງສະຫຍາມຢ່າງໄວວາ " (ໝ ). ຍ້ອນເປັນຄົນເຫັນປະໂຫຍດຕົວຈິງເໝືອນກັບເພື່ອນຮ່ວມ ຊາດຂອງເຂົາທຸກຄົນ, ຈອນ ຄຣາເຟີດ ( John CRAWFURD ) ກໍໄດ້ມອງເຫັນອີກວ່າການຄົບຄ້າກັບໄທຈະເປັນປະໂຫຍດດີຊໍ້າ . ທູດ ຈອນ ຄຣາເຟີດ ( John CRAFURD ) ໄດ້ຂຽນທີ່ບາງກອກໃນວັນທີ ໑໔ ກໍລະກົດໃນປີ ໑໘໔໔ ວ່າ:" ຖ້າປະເທດສະຫຍາມກາຍມາເປັນບ້ານໃກ້ເຮືອນຄຽງຂອງພວກເຮົາແລ້ວ ຂ້າພະເຈົ້າປາກຢືນຢັນຢ່າງບໍ່ມີວັນຈະຖືກປະຕິເສດໄດ້ວ່າສະຫຍາມມີອໍານາດເໝືອນດັ່ງອໍານາດຂອງມາລາຍູເທົ່ານັ້ນແລ້ວ( ແປວ່າ

ໜ້ອຍທີ່ສຸດ ). ການຢູ່ໃກ້ຊິດກັບສະຫຍາມຈະພາໃຫ້ ພວກເຮົາ ຍັງຈະໄດ້ຮັບບາງຜົນຕອບແທນທີ່ພວກເຮົາບໍ່ໄດ້ຮັບຈາກ ອຳນາດ ມາລາຢູ ... " (໑໐). ໃນແງ່ການຄ້າແລ້ວ, ສິງກະໂປ(ທີ່ ອັງກິດສ້າງຂຶ້ນໃນປີ ໑໘໑໙ ) ກໍໄດ້ດູດດຶງເອົາສິນຄ້າຂອງ ສະ ຫຍາມຢ່າງໄວວາ ແລະ ກາຍ ເປັນຕະຫຼາດທີສອງຂອງ ສະ ຫຍາມ, ຮອງລົງມາຈາກຈີນ (໑໑) .

ໃນເມື່ອເປັນບ້ານໃກ້ເຮືອນຄຽງຂອງສະຫຍາມແລ້ວ,ພວກ ອັງກິດໄດ້ດູດດຶງເອົາສະຫຍາມ" ຊຶ່ງໃນຂະນະນັ້ນ ໄດ້ເຂັ້ມແຂງ ແລະຮັ່ງມີກວ່າເວລາໃດໆໝົດໃນປະຫວັດສາດຂອງຕົນ" (໑໒); ຕາມ ຈອນ ຄຣາເຟີດ ( John CRAWFURD ) ໄດ້ບັນ ທຶກ ໄວ້ໃນປີ ໑໘໒໔:" ດິນແດນຂອງສະຫຍາມກວ້າງໃຫຍ່ ໄພສານ ແລະ ມີດິນນາ ໆ ປະເພດແລະການຜະລິດ. ຂ້າພະເຈົ້າ ອາດ ເວົ້າໄດ້ວ່າບໍ່ມີປະເທດໃດໝົດໃນໂລກທີ່ ທຳມະຊາດເອື້ອ ອຳ ນວຍດີແນວນີ້. ການຜະລິດດ້ານບໍ່ແຮ່, ດ້ານພືດສາສາດ ແລະ ດ້ານສັດສາວາສິ່ງ ບໍ່ພຽງແຕ່ມີຫລາຍຊະນິດ, ແຕ່ຍັງເໝາະສົມ ເພື່ອຊຸກຍູ້ທຸລະກິດຈະການການຄ້າແລະດູດດຶງຄວາມສົນໃຈຂອງປະ ເທດຕ່າງດາວ "(໑໓).

ການທີ່ອັງກິດສົ່ງທູດ ຈອນ ຄຣາເຟີດ(JOHN CRAWFURD) ມາບາງກອກນັ້ນກໍແນໃສ່" ປັບປຸງການປົວແປງການຄ້າບົນ ພື້ນ ຖານອັນດີກວ່າເກົ່າ, ແລະ ຫລີກລ່ຽງການເຈລະຈາທີ່ມີ ການ ເກາະກ່າຍເຖິງບັນຫາດິນແດນ ບໍ່ວ່າຢູ່ໃສກໍຕາມ " ( ໑໔ ).

ພາຍຫລັງມາຮອດປະເທດສະຫຍາມໃນປີ ໑໘໒໑, ຈອນ ຄຣາເຟີດ ( John CRAWFURD ) ຈຳຕ້ອງສິ້ນສຸດໜ້າທີ່ ໃນປີ ໑໘໒໒ ດ້ວຍຄວາມອຶນອື່ນ. ໃນໜັງສືສະບັບໜຶ່ງລົງວັນທີ໑໕ ມິຖຸນາປີ ໑໘໒໒, ນາຍໝໍທີ່ຕິດຕາມຄະນະທູດ ຈອນ ຄຣາເຟີດ ( John CRAWFURD ) ຄື ຈອກຟິນເລຊັນ (Georgis FINLAYSON ) ໄດ້ເວົ້າເຖິງບັນຍາກາດຂອງການພົບປະດັ່ງນີ້ " ມັນບໍ່ຈຳເປັນຈະເວົ້າອີກວ່າເປັນໜ້າຍັງພາລະໜ້າທີ່ຂອງ ພວກເຮົາໄດ້ ລົ້ມເຫລວໄປເພາະພວກເຮົາເວົ້າໄດ້ວ່າຈະຫລີກ ລ່ຽງຄວາມລົ້ມເຫລວບໍ່ໄດ້ເດັດຂາດ. ຕາມແງ່ຂະຫຍາຍຂອງ ວຽກງານການທູດໃນພາກນີ້ຂອງໂລກ, ມັນດີແລ້ວເພື່ອທີ່ພວກເຮົາຈະອຳລາຈາກປະເທດສະຫຍາມໄປໂດຍບໍ່ໄດ້ຖືກ ໝິ່ນປະໝາດນິນທາຫລືຮ້າຍແຮງກວ່ານັ້ນ ..." (໑໕).

ບັນຍາກາດດ້ານຄວາມນຶກຄິດ, ການກະທົບທີ່ເປັນປໍລະປັກກັນດ້ານວັດທະນະທຳການເມືອງເໝືອນດັ່ງໄດ້ເອີຍມາຂ້າງເທິງນັ້ນເປັນເຫດຜົນສ່ວນໜຶ່ງຂອງຄວາມລົ້ມເຫລວ. ນອກຈາກນັ້ນ, ມັນກໍຍັງມີເຫດຜົນອັນທົ່ວໆໄປແຕ່ເປັນພື້ນຖານ. ອັນທີ່ພວກອັງກິດຮຽກຮ້ອງຕໍ່ຝ່າຍສະຫຍາມນັ້ນກໍແມ່ນເຮັດໃຫ້ການຜູກຂາດ ດ້ານການຄ້າທີ່ສາງຮັງຄູນມີໃຫ້ເຈົ້າຂຸນມູນນາຍນັ້ນເປັນໂມຄະແລະໃນຂະນະດຽວກັນນັ້ນ, ປະເທດສະຫຍາມກໍບໍ່ໄດ້ຮັບສິ່ງໃດຕອບແທນເລີຍ ໂດຍສະເພາະອາວຸດທີ່ຊຶນຊັ້ນກຳອຳນາດຂອງໄທສົນໃຈ ທີ່ສຸດຢາກຊື້ຈາກອັງກິດ :" ສິ່ງທີ່ພວກເຮົາຕ້ອງການຈາກ ພວກ

ທ່ານກ່ອນອື່ນໝົດແມ່ນອາວຸດປືນຜາໜ້າກະບອກ ", ອັນນີ້ ກໍແມ່ນຄວາມເວົ້າທີ່ມີເນື້ອໃນພຽງເທົ່ານີ້ຢູ່ໃນຄວາມເວົ້າອື່ນໆ ທີ່ເປັນພຽງແຕ່ຄວາມເວົ້າພິທີການທີ່ເຈົ້າຊີວິດສະຫຍາມລາຊະການທີສອງໄດ້ກ່າວຕໍ່ນັກເຈລະຈາອັງກິດໃນຄັ້ງທຳອິດທີ່ຜູ້ກ່ຽວໄດ້ເຂົ້າຢ້ຽມຄຳນັບພາຍຫລັງໄດ້ມາເຖິງບາງກອກ (໑໖). ລັດຖະມົນຕີກະຊວງການຕ່າງປະເທດສະຫຍາມດີ ພະຄັງ ກໍອົດທີ່ຈະຖາມທູດອັງກິດບໍ່ໄດ້ວ່າ : " ສົມມຸດວ່າ ພວກເຮົາຕົກລົງກັນໄດ້ກ່ຽວກັບສັນຍາ (ການຄ້າ)...ພວກທ່ານຈະບໍ່ອະນຸຍາດໃຫ້ກຳປັ່ນ ສະຫຍາມໄປຊື້ແລະຂົນເອົາປືນຜາໜ້າກະບອກແລະປືນຢ່າງເຊລີ ຢູ່ໃນທ່າກຳປັ່ນຕ່າງໆ ຂອງອັງກິດບໍ່ ?"(໑໗) . ອາດຈະ ເວົ້າອີກຄວາມໜຶ່ງວ່າສະຫຍາມຢາກເອົາສົນທິສັນຍາການຄ້າ ແລກປ່ຽນປືນໃຫຍ່. ໃນເມື່ອວ່າເວລານັ້ນອັງກິດບໍ່ຢາກກະທຳອັນໃດທີ່ອາດກະທົບກະເທືອນຕໍ່ພະມ້າທີ່ຍັງມີການພົວພັນອັນດີຢູ່ກັບອັງກິດ, ອັງກິດກໍເລີຍໃຫ້ຄຳຕອບໄປໃນທາງປະຕິເສດຕໍ່ສະຫຍາມໃນການທີ່ສະຫຍາມຂໍຊື້ອາວຸດ. ເພື່ອຜ່ານຜ່າອຸປະສັກດັ່ງກ່າວນັ້ນກໍໄດ້ ມີສອງທັດສະນະທີ່ເກີດຂຶ້ນໂລດ. ໃນເມື່ອຕົນໄດ້ເສຍໜ້າ ພາຍຫລັງຄວາມລົ້ມເຫລວຂອງການເຈລະຈາກັບສະຫຍາມ, ຈອນ ຄຣາເຟີດ (John ORAFURD ) ໄດ້ຮຽກຮ້ອງໃຫ້ໃຊ້ໄມ້ແຂງຕໍ່ສະຫຍາມໂລດ ແລະ ສະເໜີແລ້ວສະເໜີອີກໃຫ້ປິດລ້ອມບາງກອກ ທາງທະເລເພື່ອໜີບໃຫ້ສະຫຍາມຍອມຈຳນົນ ຮັບເອົາເງື່ອນໄຂຂອງອັງກິດ. " ການຄ້າຕ່າງປະເທດຂອງ ສະຫຍາມ

ສ່ວນໃຫຍ່ແມ່ນໄດ້ລຳລຽງໄປທາງແມ່ນ້ຳ ( ເຈົ້າພະຍາ ) , ແລະຍ້ອນເສັ້ນທາງຄົມມະນາຄົມສາຍນີ້, ລາຊະອານາຈັກ ສະຫຍາມໄດ້ຮັບຜົນປະໂຫຍດອັນຕົ້ນຕໍແລະເຈົ້າໜ້າທີ່ລັດຖະບານ ກໍໄດ້ຮັບລາຍໄດ້ຂອງເຂົາໂດຍພື້ນຖານ. ດັ່ງນັ້ນມັນຕ້ອງການພຽງແຕ່ກຳປັ່ນຮົບລຳດຽວເທົ່ານັ້ນເພື່ອອັດເສັ້ນທາງນ້ຳນີ້ແລະ ຍຸດຕິການຈໍລະຈອນການຄ້າຢ່າງສິ້ນເຊີງ, ແລະ ກຳປັ່ນຮົບອີກ ພຽງສອງລຳເທົ່ານັ້ນກໍຈະສາມາດມ້າງເພທຳລາຍນະຄອນຫລວງຂອງສະຫຍາມໄດ້ຢ່າງບໍ່ມີການຕໍ່ສູ້ແລະຕ້ານຄືນແຕ່ຢ່າງໃດໝົດ ຈາກປະຊາຊົນ. ກຳປັ່ນຮົບມີຄວາມສາມາດເດີນໄດ້ທຸກລະດູການ ໃນໜ້າແມ່ນ້ຳ ( ເຈົ້າພະຍາ ), ບໍ່ມີອຸປະສັກໃດໆເລີຍທີ່ຈະເປັນໄພອັນຕະລາຍແກ່ການເດີນເຮືອຮົບດັ່ງກ່າວ. ອາດຈະຍ້ອນການສົງໄສການຈາລະກຳພາຍໃນຫລືຍ້ອນການເລີ້ເຊີ, ອັນນີ້ ພາໃຫ້ນະຄອນຫລວງ ( ບາງກອກ ) ບໍ່ໄດ້ມີປືນໃຫຍ່ເພື່ອປ້ອງກັນ ."
( ລາຍງານຂອງຈອນ ຄຣາເຟີດ ( John CRAFURD ) ຂຽນທີ່ບາງກອກລົງວັນທີ ໑໔ ກໍລະກົດປີ ໑໘໔໔ ) (໑໘).

ເພື່ອບັນລຸເປົ້າໝາຍນີ້, ຈອນ ຄຣາເຟີດ ( John CRAFURD ) ໄດ້ເກັບກຳຂໍ້ມູນຍຸດທະສາດຕ່າງໆ. ອັນນີ້ກໍເປັນເຫດພົນເຮັດໃຫ້ລາຊະວົງບາງກອກມີຄວາມແຄ້ນອົກແຄ້ນໃຈ ຕໍ່ຈອນ ຄຣາເຟີດ ( John CRAFURD )." ຈອນ ຄຣາເຟີດ ( John CRAFURD ) ເປັນຄົນສະຫລຽວສະຫລາດ, ຜູ້ສັງເກດການສຽບແຫລມແລະຈຸດປະສົງຂອງເຂົາກໍແມ່ນສະແຫວງຫາ

ເກັບກຳຂໍ້ມູນກ່ຽວກັບລາຊະອານາຈັກສະຫຍາມ, ກ່ອນພວກ ອັງກິດຈະສົ່ງກຳປັ່ນຮົບຂອງເຂົາມາຍຶດຄອງເອົາສະຫຍາມ. ອັນນີ້ແມ່ນເຫດຜົນອັນໜຶ່ງທີ່ເຮັດໃຫ້ຈອນ ຄຣາເຟີດ ( John CRAFURD) ນາຍທະຫານ ດັງເກີຟິນ( DANGERFIELD ) ນາຍແພດ ແລະນາຍທະຫານອັງກິດອື່ນໆ ໄດ້ລັກສຳຫລວດ ເບິ່ງແມ່ນ້ຳລຳເຊ, ເກາະນ້ອຍແລະໃຫຍ່, ສຶກສາເບິ່ງປະຊາຊົນພົນລະເມືອງ, ຊອກຮູ້ຫລາຍສິ່ງຫລາຍຢ່າງແລະໄດ້ຮັບການແນະນຳກ່ຽວກັບເລື່ອງອື່ນໆໂດຍມີເຈດຕະນາເພື່ອການບຸກລຸກ". ( ໜັງສືກະຊວງການຕ່າງປະເທດສະຫຍາມສົ່ງເຖິງຜູ້ສຳເລັດລາຊະການອັງກິດຢູ່ອິນເດຍລົງວັນທີ ໒໐ ກຸມພາປີ ໑໘໒໓) (໑໙). ທັງທີ່ວ່າຜູ້ກ່ຽວໄດ້ປະຕິເສດຫລາຍຄັ້ງຫລາຍຄາວກໍຕາມ ແຕ່ໃນທີ່ສຸດຈອນ ຄຣາເຟີດ (John CRAFURD ) ກໍໄດ້ໃຫ້ການແບບຄ້າຍຄືກັນກັບພະຄັງ ( Phra Klang ) ໄດ້ຕູ່ຫາຜູ້ກ່ຽວ. "ຂ້າພະເຈົ້າຂໍຮັບສາລະພາບຢ່າງພາກພູມໃຈທີ່ສຸດທີ່ວ່າຂ້າພະເຈົ້າໄດ້ຈັບເອົາທຸກໂອກາດເພື່ອສະແຫວງຫາຂ່າວຄາວກ່ຽວກັບສະພາບການຂອງປະເທດສະຫຍາມແລະໂດຍສະເພາະຜົນປະໂຫຍດດ້ານການຄ້າ. ຂ້າພະເຈົ້າກໍໄດ້ຮັບຄຳສັ່ງໃນທຳນອງນີ້ " (໒໐), ດ້ວຍຄວາມກະຕືລືລົ້ນ, ຂັ້ນສູງຂອງຈອນ ຄຣາເຟີດ(John CRAWFURD) ກໍໄດ້ຂຽນວ່າ :" ການຕີລາຄາຂອງທ່ານ ຈອນ ຄຣາເຟີດ - ( John CRAFURD ) ກ່ຽວກັບຄວາມເຂັ້ມແຂງທາງທະຫານຂອງສະຫຍາມ ແລະ ການແນະນຳຂອງທ່ານກ່ຽວກັບຈຸດ

ອ່ອນໃນດິນແດນຂອງສະຫຍາມນັ້ນກໍດູດດຶງຄວາມສົນໃຈຂອງພວກເຮົາທີ່ສຸດ ". ( ໜັງສືລົງວັນທີ ໗ ສິງຫາ ປີ ໑໘໒໓ ຂອງຜູ້ສຳເລັດລາຊະການອັງກິດຢູ່ອິນເດຍ ) (໒໑).

ຍ້ອນວ່າ ບາງກອກໄດ້ປະທ້ວງຢ່າງຮຸນແຮງຕໍ່ການ ກະທຳຂອງຈອນ ຄຣາເຟີດ ( CRAWFURD ), ໃນສຸດ ທ້າຍເຈົ້າໜ້າທີ່ອັງກິດກໍໄດ້ປະຕິເສດທູດຂອງຕົນເອງ (໒໒).

ດັ່ງນັ້ນກໍໄດ້ມີທັດສະນະອັນແຫລມຄົມກວ່າເກົ່າທີ່ໄດ້ຖືກ ຄົ້ນຄິດ ແລະ ນຳມາປະຕິບັດໄປພ້ອມ ກັນກັບໃນເວລາທີ່ສົງຄາມລະຫວ່າງອັງກິດກັບພະມ້າໄດ້ລະເບີດຂຶ້ນ. ບັນຫາມັນແມ່ນວ່າ ຈະເຮັດແນວໃດທີ່ຈະຫັນປ່ຽນສະຫຍາມໂດຍສັນຕິວິທີເພື່ອໃຫ້ ສະຫຍາມຮັບເຊັນສົນທິສັນຍາການຄ້າກັບອັງກິດ. ອັນນີ້ກໍເນື່ອງຈາກວ່າ, ຕາມການສັງເກດຂອງ ເຮນຣີ ເບີກເນ ( Henry BURNEY )(ທີ່ພວມເດີນທາງໄປເຈລະຈາຢູ່ ສະຫຍາມ ) ທີ່ໄດ້ລະບຸໄວ້ໃນລາຍງານສະບັບໜຶ່ງລົງວັນທີ ໒ ກັນຍາ ປີ ໑໘໒໔ :" ຕາບໃດສົງຄາມພະມ້າ ( ອັງກິດ ) ຍັງສືບຕໍ່ໄປຢູ່, ຂ້າພະເຈົ້າບໍ່ແມ່ນເຫັນຄວາມສາມາດຈະໄກ່ເກ່ຍ ເອົາສະຫຍາມເພື່ອແກ້ໄຂໄປໃນທາງບວກ ບັນຫາການຄ້າ ແລະ ບັນຫາຊາຍແດນ..."(໒໓). ເຖິງແນວໃດກໍດີ, ອັງກິດກໍໄດ້ວາງມາດຕະການຕ່າງໆ ບາງ ທີ່ມີຈຸດເລັງໃສ່ເຮັດໃຫ້ສະຫຍາມອ່ອນຂໍ້. ພວກພໍ່ຄ້າກໍຄືເຈົ້າໜ້າທີ່ອັງກິດໄດ້ຮັບຄຳສັ່ງໃຫ້ຕິດແທດດ້ານການເມືອງຢ່າງແນບແນ່ນກັບບາງເຈົ້າໜ້າທີ່ຊັ້ນສູງຂອງໄທທີ່ອັງ

ກິດໄດ້ເລືອກເຟັ້ນເອົາເປັນເປົ້າໝາຍ. ນອກຈາກນັ້ນຢູ່ທຸກບ່ອນ ແລະ ທຸກເວລາ, ອັງກິດກໍສະແດງທັດສະນະຢາກເປັນມິດ ສະເໝີ. ໃນວັນທີ ໔ ຕຸລາປີ ໑໘໒໔, ຈອນ ຄຣາເຟີດ( John CRAWFURD ) ໄດ້ສັ່ງໃຫ້ນາຍ ກິລີ (GILLIE) ທີ່ພວມຂຶ້ນອາວຸດເຕັມກຳປັ່ນໄປບາງກອກວ່າ :" ໃຫ້ໃຊ້ທຸກໂອກາດ , ທຸກເວລາ, ເພື່ອເຮັດໃຫ້ສະຫຍາມເຊື່ອໝັ້ນຕໍ່ການເປັນມິດຂອງພວກເຮົາ, ຊາວສະຫຍາມບໍ່ມີຫຍັງໝົດຈະລະແວງສົງໄສ. ກົງກັນຂ້າມຊໍ້າ, ພວກເຂົາກໍລ້ວນແຕ່ຈະໄດ້ຮັບຜົນດີຈາກສົງຄາມ - ( ພະມ້າ - ອັງກິດ ) (໒໔). ຈອນ ຄຣາເຟີດ ( John CRAWFURD ) ກໍພຽງແຕ່ປະຕິບັດ, ໃນຕົວຈິງ,ອັນທີ່ຜູ້ກ່ຽວໄດ້ສະເໜີໃນລາຍງານສະບັບໜຶ່ງອັນຍືດຍາວທີ່ຜູ້ກ່ຽວໄດ້ມອບ ໃຫ້ຂັ້ນເທິງຂອງອັງກິດໃນວັນທີ ໑໘ ກໍລະກົດ ປີ ໑໘໒໘ ພາຍຫລັງການເຈລະຈາຢູ່ບາງກອກເປັນເວລາ ໔ ເດືອນ :" ຖ້າ ພວກເຂົາໄດ້ມີການພົວພັນສະໜິດແໜ້ນກັບພວກເຮົາ,ພວກສະຫຍາມກໍຈະຮູ້ແລະຮັບຮູ້ຢ່າງເລິກເຊິ່ງກວ່າເກົ່າເຖິງທັດສະນະແລະ ອຳນາດອິດທິພົນຂອງພວກເຮົາ, ພວກເຂົາຈະສະແຫວງຫາ ມິດຕະພາບແລະຄວາມປາຖະໜາດີຂອງພວກເຮົາ; ສຸດທ້າຍ, ເຂົາຈະຕີລາຄາສູງເຖິງການປະນີປະນອມແລະການອ່ອນໂຍນ ຂອງພວກເຮົາ; ພວກເຂົາຈະມີຄວາມໄວ້ເນື້ອເຊື່ອໃຈຕໍ່ພວກເຮົາ ທີ່ລ້ວນແລ້ວແຕ່ລະແວງສົງໃສພວກເຮົາມາເລື້ອຍໆຈົນຮອດປັດຈຸບັນ ອັນນີ້ກໍຍ້ອນຄວາມໂງ່ຈ້າຫລ້າຫລັງຂອງພວກເຂົາ, ຖ້າເມື່ອ ໃດ

ພວກເຂົາໄດ້ປະຕິບແບວຄິດເຫລົ່ານີ້ແລ້ວ, ຄົງຈະມີຜົນກະທົບ ອັນໜ້າພໍໃຈກ່ຽວກັບການຂະຫຍາຍໂຕຂອງກິດຈະການການຄ້າຂອງພວກເຂົາ ແລະ ຈະພາໃຫ້ພວກເຂົາລ້ຽງເຄີຍແລະຮູ້ຈັກກ່ຽວ ກັບຄວາມອຸດົມສົມບູນຂອງປະເທດສະຫຍາມທີ່ກວ້າງໃຫຍ່ ແລະພວກເຂົາຕ້ອງການບຸກເບີກຄວາມອຸດົມສົມບູນນີ້ " (໔໔).ໃນ ສະພາບທີ່ເປັນນິງຄືນນີ້, ລອນດອນ ( ນະຄອນຫລວງຂອງອັງກິດ) ທີ່ເປັນມະຫາອຳນາດໂລກໃນໄລຍະນັ້ນກໍໄດ້ອະນຸຍາດໃຫ້ ຂາຍອາວຸດແກ່ສະຫຍາມໃນປີ ໑໘໔໓. ເຫດຜົນຕົ້ນຕໍອັນໜຶ່ງ ຂອງການປະຕິບັດສະບະນີ້ກໍເນື່ອງຈາກວ່າອັງກິດ ແລະ ອາເມລິກາກໍບໍ່ຖືກກັນ ແລະ ໃນຂະນະນັ້ນ ອາເມລິກາ ໄດ້ກາຍເປັນປະເທດອັນດັບໜຶ່ງທີ່ຂາຍອາວຸດໃຫ້ສະຫຍາມ. ລັດຖະມົນຕີກະຊວງການຕ່າງປະເທດສະຫຍາມໄດ້ເວົ້າຕໍ່ ຈອນ ຄຣາເຟີດ ( John CRAWFURD ) ໃນວັນທີ ໔໑ ພຶດສະພາ ປີ ໑໘໔໔ ວ່າ :
" ຊາວ ອາເມລິກາ ໄດ້ລຳລຽງມາໃຫ້ພວກເຮົາສິ່ງທີ່ພວກເຮົາຕ້ອງການຢາກໄດ້ທີ່ສຸດຄື : ອາວຸດ ແລະ ເງິນທີ່ເອົາມາໃຫ້ ພວກເຮົາຢ່າງອຸດົມສົມບູນແລະພວກເຂົາເຈົ້າກໍໄດ້ຊື້ນ້ຳຕານແລະ ສິນຄ້າອື່ນໆ ຈາກປະເທດພວກເຮົາເປັນຈຳນວນຫລາຍກຳປັ່ນ" (໔໕)

ທັງຍຸແຍ່ອຳນາດທີ່ຢູ່ນອກອົງເຂດອາຊີອາຄະເນແລະທັງສວຍໃຊ້ການຂັດແຍ່ງລະຫວ່າງບັນດາອຳນາດດັ່ງກ່າວກໍເປັນສະຕິອັນອັນແອບແຝງມາແຕ່ດຶກດຳບັນ ແລະ ທັງເປັນສິລະປະການເນື່ອງ ອີກດ້ວຍສຳລັບ ບາງພວກສັກດີນາ ກຳອຳນາດໃນສະ **ສະໄໝນັ້ນ**

"ຊາວອາເມລິກາໄດ້ຂົນໄປໃຫ້ເປັນກຳປັ່ນທີ່ເຕັມໄປດ້ວຍປືນ, ໝໍ້, ແລະ ເງິນໂດລາທີ່ຊາວສະຫຍາມສະແຫວງຫາທີ່ສຸດ... ໃນປີ ໑໘໑໘ ນາຍເຮືອ ຮາຣີ ( HARRY ) ໄດ້ເອົາເຮືອ ອາເມລິກາລຳໜຶ່ງມາຈອດຢູ່ທ່າ ບາງກອກ ແລະ ໃຫ້ຄຳໝັ້ນສັນຍາຈະກັບຄືນມາ ( ໂດຍລຳລຽງອາວຸດຍຸດໂທປະກອນມານຳ ). ຜູ້ກ່ຽວໄດ້ສະໜອງຕາມຄວາມຮຽກຮ້ອງຂອງຝ່າຍໄທທີ່ໄດ້ ສະແດງຄວາມພໍອົກພໍໃຈຂອງຕົນໂດຍໄດ້ມອບຍົດຖາບັນດາສັກແຫ່ງ ສັກດິນາສະຫຍາມໃຫ້ນາຍເຮືອ ອາເມລິກາ ຮາຣີ ( HARRY ) ຄືໃຫ້ເປັນ" ຫລວງ " ໃນສັງຄົມສັກດິນາຂອງສະຫຍາມ ແລະສະຫຍາມຍັງໄດ້ສະເໜີຕື່ມອີກໃຫ້ ລັດຖະບານ ອາເມລິກາມາຕິດຕັ້ງໂຮງງານ( ຜະລິດອາວຸດ ) ຢູ່ບາງກອກ, ຊາວອາເມລິກາຫຼາຍຄົນກໍໄດ້ມາຢຸດຈອດຢູ່ບາງກອກ ເນື່ອງຈາກວ່າ ພວກເຂົາໄດ້ເຫັນຄວາມສຳເລັດຂອງນາຍເຮືອ ຮາຣີ ( HARRY )..."(໔໗). ອັນນີ້ແມ່ນລາຍງານຂອງ ເຮນຣີ ເບີກເນ (Henry BURNEY)

ພໍ່ຄ້າອາວຸດອັງກິດກໍໄດ້ຍາດຊິງເອົາຕະຫລາດອາວຸດແລະໄດ້ກອບໂກຍເອົາເງິນຄຳອັນມະຫາສານຢູ່ສະຫຍາມຈົນວ່າພໍ່ຄ້າອາວຸດອັງກິດຜູ້ໜຶ່ງໄດ້ຮັບນາມມະຍົດເປັນ "ຫລວງອາວຸດວິເສດ"(໔໘) ຈັ່ງຫວະຂອງການລຳລຽງອາວຸດມາໃຫ້ສະຫຍາມກໍແມ່ນມະຫັດສະຈັນເພາະວ່າພຽງແຕ່ ໓ ປີ ເທົ່ານັ້ນ ສະຫຍາມໄດ້ປະກອບ ອາວຸດຢ່າງຖ້ວມລົ້ນແລະກາຍເຖືອດ (໔໙). ອັນນີ້ແມ່ນໃນປີ໑໘໔໙ ນັ້ນເອງຄືກ່ອນໜ້າໜ້ອຍໜຶ່ງທີ່ຈະເລີ່ມສົງຄາມທີ່ສະຫຍາມ ດຳ

ເນີນຕ້ານປະຊາຊົນລາວ. ອາວຸດຍຸດໂທປະກອນດັ່ງກ່າວໄດ້ເຮັດໃຫ້ສະຫຍາມມີກຳລັງໄຟອັນຂາດຂັ້ນເພື່ອດັບສູນປະຊາຊົນລາວໃນປີ ໑໘໒໗ ( ນ໐ ).

ເຖິງແນວໃດກໍດີ, ປະເທດສະຫຍາມຍັງສົງໄສຢູ່ວ່າອັງກິດຈະຊະນະ ພະມ້າ ຫລືບໍ່, ອັນນີ້ກໍເນື່ອງຈາກວ່າຢູ່ໃນຂົງເຂດນີ້, ຖືກັນວ່າພະມ້າເປັນ" ມະຫາອຳນາດ " ອັນໜຶ່ງຖັດຈາກຈີນ . ສະຫຍາມເອງກໍບໍ່ສາມາດໂຄ່ນລົ້ມພະມ້າໄດ້ຈັກເທື່ອທັງທີ່ເຮັດສົງຄາມກັບພະມ້າມາໄດ້ຫລາຍຮ້ອຍປີ, ແລະມີແຕ່ພະມ້າທີ່ ສາມາດມາຈູດເຜົານະຄອນຫລວງອະຍຸທະຍາຢ່າງຮາບຄາບ, ດັ່ງນັ້ນ, ຖ້າວ່າສະຫຍາມຈະດູຖູກພະມ້າ ບາງ ປະການກໍຕາມ, ແຕ່ ກໍບໍ່ປາສະຈາກການຢຳເກງພະມ້າ, ອັງກິດກໍເປັນມະຫາອຳນາດໃໝ່ຢູ່ໃນພາກພື້ນນີ້ເພື່ອຄືນຜູ້ນຳຜູ້ນັ້ນຂອງສະຫຍາມທີ່ຍັງບໍ່ທັນລື້ງເຄີຍປານໃດກັບອິດທິພົນຂອງອັງກິດດ້ວຍຕົນເອງແລະຖືວ່າພະມ້າໃຫຍ່ກວ່າອັງກິດເພາະລົ້ງເຄີຍທັງເປັນປໍລະປັກກັບພະມ້າ ຫລາຍກວ່າ "ເຈົ້າພະຍາ ມະຫາໂຍທາຖືກສົ່ງໄປເພື່ອຍຶດຄອງເອົາເມືອງ ມາກຕາບັງ ( MARTABAN ) ແຕ່ຢູ່ໃນຖົງຂອງຜູ້ກ່ຽວນັ້ນຊ້ຳພັດມີໜັງສືສອງສະບັບເພື່ອມອບໃຫ້ອັງກິດຫລືພະມ້າແລ້ວແຕ່ຝ່າຍໃດຈະເປັນຝ່າຍຊະນະໃນສົງຄາມ " (ນ໑). ການເມືອງແບບສອງໜ້າຂອງສະຫຍາມນີ້ໄດ້ເຮັດໃຫ້ ເຮັນຣີເບີກເນ ( Henry BURNEY ) ຫົວເຍາະເຍີ້ຍໂດຍສະເພາະການເມືອງດັ່ງກ່າວນັ້ນແມ່ນສະຫຍາມເອງເປັນຜູ້ດຳເນີນທັງໆທີ່ ສະ

ຫຍາມເຄີຍປະກາດວ່າຕົນເປັນພັນທະມິດຂອງອັງກິດແລະຕ້ານພະມ້າ, ເຮນຣີ ເບີກເນ ( Henry BURNEY ) ຍັງໄດ້ສະແດງຄວາມຮູ້ສຶກຂອງຕົນອອກມາອີກຕໍ່ການທີ່ພູກຽວເອີ້ນວ່າ " ຄວາມໂງ່ຈ້າຂອງບາງກອກທີ່ບໍ່ເຊື່ອໝັ້ນຕໍ່ອຳນາດ ຂອງອັງກິດກໍ່ຄືຕໍ່ໄຊຊະນະຂອງອັງກິດ (ໃນສົງຄາມກັບພະມ້າ) ຈົນຮອດປານນີ້ ".

ໄຊຊະນະຂອງອັງກິດຢູ່ພະມ້າເປັນບາດຄ້ອນໂຫມະຫືວ ຈົນຊັ້ນກຳອຳນາດບາງກອກທີ່ໄດ້ສະແດງຄວາມກະວົນກະວາຍ ໂດຍສະເພາະຢູ່ໃນກອງປະຊຸມສະພາລັດຖະມົນຕີຕາມທີ່ເຮນຣີເບີກເນ ( Henry BURNEY ) ໄດ້ບັນທຶກໄວ້ໃນລາຍງານສະບັບໜຶ່ງດັ່ງນີ້ :" ໃນໂອກາດນັ້ນ, ເຈົ້າຊີວິດສະຫຍາມ ໄດ້ເວົ້າ ຕໍ່ວັງໜ້າ ( ທີ່ຊາວປອກຕູຍການ ( Portugal ) ເອີ້ນວ່າເຈົ້າຊີວິດຜູ້ທີສອງ ) :" ພະມ້າທີ່ມີປະຊາຊົນ ໑໐ເທົ່າລື່ນປະຊາຊົນສະຫຍາມຍັງບໍ່ສາມາດຈະຕໍ່ສູ້ຕ້ານອັງກິດໄດ້. ບາດນີ້ ອັງກິດກໍ່ຫຍັບມາໃກ້ສະຫຍາມແລ້ວ, ພວກເຮົາຈະເຮັດ ຫຍັງໄດ້ກັບກຳລັງອັນໜ້ອຍໆຂອງພວກເຮົາ ". ວັງໜ້າໄດ້ຕອບວ່າ: " ສະຫຍາມເປັນປະເທດທີ່ມີປະຊາຊົນອັນຫລວງຫລາຍເພື່ອທີ່ຈະຮັກສາປະເທດຊາດແລະຍິ່ງໄປກວ່ານັ້ນຍັງມີຊາວຈີນຢ່າງ ຫລວງຫລາຍອີກ ". ພະຄັງກໍ່ມີຄວາມເຫັນຄືກັນກັບວັງໜ້າ. ກົມມະກູນ ແລະ ກົມມະສູລິນ ກໍ່ບໍ່ໄດ້ເວົ້າຫຍັງເພາະຖືວ່າໃຜກໍ່ຮູ້ ໝົດແລ້ວ ຄຳຕອບຂອງພວກກ່ຽວຈະເວົ້າອອກມາ. ໃນເມື່ອເປັນດັ່ງ

ນັ້ນເຈົ້າຊີວິດສະຫຍາມເລີຍຕັດສິນວ່າ: "ເຮົາຄິດວ່າມັນຖືກ ຕ້ອງແລ້ວທີ່ພວກເຮົາຕ້ອງສືບຕໍ່ເສີມຂະຫຍາຍການພົວພັນມິດຕະ ພາບກັບອັງກິດແລະມີແຕ່ເຮັດແບບນີ້ເຮົາຈຶ່ງຈະສືບຕໍ່ເປັນເຈົ້າຊີວິດໄດ້ຢູ່ແລະຈະສືບຕໍ່ປົກຄອງປະເທດຊາດໄດ້. ຖ້າເຮົາເຮັດໄປ ແບບອື່ນ, ເຮົາກໍຈະເສັຽພະລາຊະບັນລັງ, ຈະຖືກຂັບໄລ່ໃຫ້ໄປ ລີ້ຊ່ອນຢູ່ໃນປ່າແລະຈະຕົກເປັນເຫຍື່ອໃຫ້ເສືອກິນເທົ່ານັ້ນແຫລະ " ( ໓໒) .

ດັ່ງນັ້ນ ອາດຈະເວົ້າໄດ້ວ່າທູດອັງກິດທີ່ແທນ ຈອນຄຣາເຟີດ ( John CRAWFURD ) ເພື່ອມາເຈລະຈາຢູ່ບາງກອກໃນປີ ໑໘໒໔ ກໍແມ່ນຈຳກັດທາງເລືອກໃຫ້ເຈົ້າຊີວິດສະຫຍາມໃໝ່ ແຕ່ພຽງສອງເສັ້ນທາງເທົ່ານັ້ນທີ່ຈະເລືອກເອົາຄື: ຮັກສາພະລາຊະບັນລັງແລະເຊັນສັນຍາກັບອັງກິດຫລືຖືກໂຄ່ນລົ້ມແລະກາຍເປັນ ຜູ້ຮັບເຄາະຮ້າຍ. (໓໓).

ລາຊະການທີສາມຮູ້ດີວ່າພວກອັງກິດໄດ້ພະຍາຍາມຊື້ ຈ້າງຈອມອອຍນາຍພົນສະຫຍາມທີ່ຖືກສົ່ງໄປຮ່ວມມືກັບອັງກິດ" ຕີ " ພະມ້າ ແລະ ພວກອັງກິດຍັງໄດ້ເຊື່ອງຊ້ອນເຈດຈຳນົງ ຈະແຕ່ງຕັ້ງຜູ້ກ່ຽວໃຫ້ເປັນປະມຸກຂອງ " ລັດແຫ່ງພວກມອນ "(໓໔) . ລັດມອນນີ້ເປັນອຸປະສັກປຽບດັ່ງຄວາມຝັນຮ້າຍມາແຕ່ໃດໆ ສຳລັບພວກກຳອຳນາດສະຫຍາມ. ໃນເວລາທີ່ຈອນ ຄຣາເຟີດ(John CRAWFURD ) ຢູ່ບາງກອກເພື່ອປະຕິບັດໜ້າທີ່ນັ້ນ, ເຈົ້າຊຸນມູນນາຍສະຫຍາມສອງຄົນ ໄດ້ໄປຫາຜູ້ກ່ຽວແລະສະເໜີໃຫ້

ຜູ້ກ່ຽວຂະຫຍາຍອິດທິພົນຂອງອັງກິດມາປົກຄຸມປະເທດຂອງ ເຂົາເຈົ້າແລະຍັງໄດ້ສະເໜີອີກວ່າຈະເຕົ້າໂຮມທະຫານປະມານ ໒໐ ພັນຄົນເພື່ອອຳນວຍຄວາມສະດວກໃນການແຜ່ອິດທິພົນຂອງອັງກິດດັ່ງກ່າວ (໓໔). ສ່ວນເຈົ້າອະນຸເອງ ( ໑໗໗໘-໑໘໐໔ - ໑໘໒໙ ) ກໍໄດ້ໄປພົບ ຈອນ ຄຣາເຟີດ(John CRAWFURD) ໃນວັນອາທິດ ໑໙ ພຶດສະພາ ປີ ໑໘໒໒ (໓໕). ເຈົ້າອະນຸ ທີ່ເປັນ " ນັກຕໍ່ສູ້ເພື່ອເອກະລາດ " (໓໗) ແລະເພື່ອຄວາມ-ເປັນເອກະພາບຂອງຊາດລາວທັງປວງ ກໍໄດ້ຫລໍ່ລ້ຽງອຸດົມການມາຢ່າງເປັນປະຈຳເພື່ອກອບກູ້ອິດສະຫລະພາບໃຫ້ແກ່ ປະເທດຊາດຂອງຕົນຈາກແອກຄອບຄອງຂອງສະຫຍາມທີ່ໄດ້ຍຶດຄອງລາວມາແຕ່ປີ ໑໗໗໘. " ໃນຕົ້ນສະຕະວັດທີ ໑໙, ໃນຂະນະທີ່ເຈົ້າອະນຸຂຶ້ນຄອງພະລາຊະບັນລັງໃນປະເທດລາວ; ວຽງຈັນກໍໄດ້ ມີຂະບວນການເມືອງເກີດຂຶ້ນ ພາຍໃຕ້ການນຳພາຂອງເຈົ້າ ອະນຸເອງ. ເຈົ້າອະນຸເຮັດໃຫ້ວຽງຈັນກາຍເປັນສູນກາງການ ເມືອງອັນໜຶ່ງອັນດຽວຂອງລາວແລະໄດ້ນຳພາປະຊາຊົນລາວອອກຈາກອິດທິພົນການເມືອງຂອງສະຫຍາມ ". ອັນນີ້ກໍແມ່ນການຕີລາຄາຂອງສາດສະດາຈານໄທຜູ້ໜຶ່ງທີ່ມະຫາວິທະຍາໄລຈຸລາລົງ ກອນໃນປີ ໑໙໘໕ (໓໘).

ສະພາບການສາກົນກໍບໍ່ໄດ້ອຳນວຍປານໃດໃຫ້ແກ່ເຈົ້າອະນຸໃນເວລານັ້ນ. ລາຊະວົງເວ້ ( Hué ) ກໍບໍ່ເຫັນພ້ອມນຳຄວາມພະຍາຍາມຂອງເຈົ້າອະນຸເພື່ອປົດແອກຂອງ ສະຫຍາມ

(໓໙). ເຖິງແນວໃດກໍດີ, ເຈົ້າອະນຸວົງກໍໄດ້ອອກ ເຣື່ອເຫ ແຮງຜ່ານທາງການປົດລ້ອມດ້ານການທູດທີ່ສະຫຍາມໄດ້ບັງຄັບ ໃຫ້ລາວເຮົາຕົກຢູ່. ການແຜ່ອິດທິພົນຂອງອັງກິດມາໃນພາກພື້ນ ອາຊີໃນຊ່ວງເວລານັ້ນກໍພາໃຫ້ເຈົ້າອະນຸຄົ້ນຄິດບັນຫາສ້າງສາຍ ພົວພັນກັບອັງກິດທີ່ສະຫຍາມເປັນປໍລະປັກຢູ່ໃນເວລານັ້ນ. ໃນ ສາຍຕາຂອງເຈົ້າອະນຸ, ອັງກິດກໍມີແງ່ດີເນື່ອງຈາກວ່າໄດ້ກະທຳ ໄປໃນທາງເປັນພົນດີຕໍ່ເຈົ້າຊີວິດປະເທດ ເກດາ ( KEDAH ) ( ລັດໜຶ່ງຂອງມາເລຊີໃນຂະນະນັ້ນ ) ພາຍຫລັງທີ່ເຈົ້າ ຊີວິດປະເທດ ເກດາ ( KEDAH ) ຈຳເປັນຕ້ອງເນລະເທດ ຕົນເອງອອກຈາກປະເທດໄປ ຍ້ອນສະຫຍາມຮຸກຮານ ເກດາ( KEDAH ) (໔໐). ສ່ວນອັງກິດກໍມີບາງທ່າອຽງທີ່ໄດ້ ສະແດງອອກໃນຄຳສັ່ງທີ່ ຈອນ ຄຣາເຟີດ ( John CRAWFURD ) ໄດ້ຖືກຮັບມອບໝາຍໃຫ້ເປັນຜູ້ປະຕິບັດກໍແຈ້ງດີສົມຄວນຄື ຈອນ ຄຣາເຟີດ( John CRAFURD ) ຕ້ອງຊອກຄົ້ນຫາ " ທຸກກໍລະນີ ພິພາດທີ່ມີລະຫວ່າງສະຫຍາມແລະບັນດາ ປະເທດສະລາດທີ່ຂຶ້ນກັບສະຫຍາມ ... " (໔໑) ແລະ " ກ່ຽວກັບຄວາມສາມາດຈະສ້າງຕັ້ງສາຍພົວພັນການຄ້າໂດຍກົງລະຫວ່າງອັງກິດ ກັບເມືອງຂຶ້ນຕ່າງໆ ຂອງລັດຖະບານສະຫຍາມ" (໔໒). ໃນສາຍຕາອັງກິດແລ້ວແລະຕາມການຮັບຮູ້ຢ່າງເປັນເອກະສັນຂອງຄົນສະໄໝນັ້ນ, ລາວ ( ໝາຍຄວາມວ່າປະເທດລາວ ) ເປັນພາກສ່ວນອັນສຳຄັນແລະໜ້າສົນໃຈອັນດັບໜຶ່ງຂອງສະຫຍາມ" (໔໓) .

ແຕ່ເນື່ອງຈາກວ່າຊາວອັງກິດເປັນປະຊາຊາດທີ່ມີທັດສະນະ ຕິດແທດຕົວຈິງ, ເຂົາເຈົ້າກໍ່ບໍ່ເຄີຍໄດ້ເວົ້າເໝືອນນັກຂຽນ ຢູໂລບ ແລະ ອາເມລິກາທົ່ວໆໄປທີ່ເຄີຍເວົ້າວ່າປະເທດຂອງລາວ ເປັນ "ໝາກຫົວໃຈ ", ເປັນ " ຂໍກຸນແຈ " ຫລືວ່າ " ຜູ້ໃດ ກໍາລາວໄດ້, ຜູ້ນັ້ນກໍ່ກໍາອາຊີອາຄະເນ " (໔໔), ຫລືວ່າ " ອໍານາດໃດທີ່ກໍາຫລວງພະບາງ, ອໍານາດນັ້ນກໍ່ຈະກາຍມາເປັນ ຜູ້ຄອບຄອງອິນດູຈີນ ..." (໔໕). ແຕ່ໃນໂຕຈິງອັງກິດກໍ່ໄດ້ປະຕິບັດເໝືອນດັ່ງນັກຂຽນໄດ້ເວົ້າໄດ້ຕີລາຄານັ້ນ, ເຖິງແມ່ນວ່າອັງກິດຈະຫລີກໃຊ້ສັບຂອງນັກຂຽນນັ້ນກໍ່ຕາມ. ອັງກິດຍັງສົນໃຈ ຕໍ່ເມືອງລາວກໍ່ " ເນື່ອງຈາກວ່າຫູກສິນຄ້າ ຂາອອກຂອງ ສະຫຍາມທີ່ມີລາຄາສູງເຊັ່ນຍານ, ຝ້າຍ, ໄມ້ສັກ, ເງິນແຖ່ງ , ໜັງ, ຂີ້ງ ... ແມ່ນລ້ວນແຕ່ເປັນຜະລິດຕະພັນມາຈາກ ລາວທັງນັ້ນ ແລະ ລາວເອງກໍ່ເປັນດິນແດນອັນກວ້າງໃຫຍ່ທີ່ລາຊະອານາຈັກສະຫຍາມຍຶດເອົາ " (໔໖). ອັນນີ້ຍິ່ງເຮັດໃຫ້ ອັງກິດເພີ່ມທະວີສົນໃຈຕໍ່ລາວເພື່ອສ້າງຕັ້ງການພົວພັນການຄ້າ ໂດຍກົງ ແລະ ອື່ນໆກັບລາວ. ໃນປີ ໑໘໒໘ ຈອນ ຄຣາເຟີດ( John CRAWFURD ) ເອງກໍ່ໄດ້ຄົ້ນຄ້ວາກ່ຽວກັບບໍລິມາດ ການຄ້າ ແລະ ປະເພດສິນຄ້າທີ່ມີລະຫວ່າງຈີນກັບສະຫຍາມໂດຍ ສະເພາະການຄ້າທາງບົກຜ່ານລາວ, ນອກຈາກນັ້ນຜູ້ກ່ຽວຍັງໄດ້ ວິໄຈຊັບພະຍາກອນຂອງລາວເຊັ່ນ" ຍານ ເປັນຜະລິດພັນອັນຕົ້ນຕໍຂອງລາວ ... ໃຜໆກໍ່ຄິດວ່າສິນຄ້ານີ້ແມ່ນຜະລິດພັນຂອງເກາະ

ສຸມາຕລາ ( **Sumatra** ) ແລະ ບອກເນໂອ(**BOR NEO** ) ແຕ່ໃນຕົວຈິງແມ່ນມາຈາກລາວ ... ຊຶ່ງທີ່ມີ ຄຸນະພາບດີທີ່ສຸດແລະເປັນສິນຄ້າທີ່ມີລາຄາສູງທີ່ສຸດໃນໂລກແມ່ນເກັບກູ້ສ່ວນໃຫຍ່ຈາກລາວແລະພາກເໜືອຂອງສະຫຍາມ " ( ໔໗ ). ການຖະຫລຳເລິກທາງການທູດຂອງເຈົ້າອະນຸກັບອັງກິດກໍໄດ້ເຮັດໃຫ້ພວກກຳອຳນາດບາງກອກມີຄວາມກັງວົນ, ໂດຍສະເພາະສະຫຍາມລະແວງສົງໄສອັງກິດຢູ່ແລ້ວ ," ອັງກິດເປັນ ປະຊາຊາດໜຶ່ງທີ່ເປັນໄພອັນຕະລາຍຕໍ່ຜູ້ໃດກໍຕາມທີ່ມີການພົວພັນເພາະຊາວອັງກິດບໍ່ພຽງແຕ່ເປັນຄົນທີ່ມີຄວາມສາມາດສູງທີ່ສຸດແຕ່ຍັງເປັນປະຊາຊາດທີ່ທະເຍີທະຍານທີ່ສຸດໃນບັນດາປະຊາຊາດຢູໂລບທີ່ມີ ກິດຈະການຢູ່ໃນພາກຕະເວັນອອກນີ້ ( ອາຊີອາຄະເນ )...ຊາວອັງກິດສະຫລາດສະຫລຽວແລະຂະຫຍັນຫ້າວຫັນທີ່ສຸດແລະບໍ່ໄວ ກໍຊ້າ ສະຫຍາມກໍຈະຕົກເຂົ້າໃນເງື້ອມມືຂອງເຂົາແລະເຂົາ ມີຄວາມສາມາດເຮັດໃຫ້ພວກເຮົາຈຳເປັນຕອງ( ຂອກຈາກພະລາຊະວັງ ) ໄປນອນຢູ່ຕາມທົ່ງຫາງຫລື ໄຮ່ນາຕາກາ ". ອັນນີ້ແມ່ນຄວາມເວົ້າຂອງເຈົ້າໜ້າທີ່ຊັ້ນສູງຂອງສະຫຍາມຜູ້ໜຶ່ງ ໃນຂະນະທີ່ ຈອນ ຄຣາເຟີດ ( **CRAWFURD** )ຍັງດຳເນີນໜ້າທີ່ຢູ່ບາງກອກ. ການທີ່ເຈົ້າອະນຸໄດ້ຢ້ຽມຢາມທູດອັງກິດ ນັ້ນໄດ້ສ້າງຄວາມຄິດໃໝ່ໃຫ້ຜູ້ນຳລາວບາງຄົນທີ່ຢາກປົດແອກ ຈາກສະຫຍາມ. ເຈົ້າຊຽງໃໝ່ເອງໄດ້ຂຽນໜັງສືສະບັບໜຶ່ງໄປຫາເມືອງມູລະແມ່ງ ( **Moulmein** ) ( ທີ່ຕັ້ງບ່ອນໜຶ່ງຂອງ

ອັງກິດທີ່ຍຶດຄອງຢູ່ພະມ້າ )ເພື່ອສະເໜີຜູກສຳພັນມິດຕະພາບກັບ
ອັງກິດ. ເຫດການນີ້ໄດ້ເກີດຂຶ້ນ ຜິ ເດືອນກ່ອນທີ່ທູດອັງກິດເຮັນ
ຣີ ເບີກເນ ( BURNEY ) ຈະມາເຖິງບາງກອກ .
ເມື່ອມາຮອດຜູ້ກ່ຽວກໍພະຍາຍາມຢ່າງບໍ່ລົດລະທີ່ຈະເຂົ້າຫາບັນດາ
ເຈົ້າຄອງຊຽງໃໝ່, ແລະເວົ້າລວມ ລ້ານນາ, ແຕ່ບັນດາ ຜູ້ນຳ
ຂອງບາງກອກກໍບໍ່ໄດ້ລົດລະເໝືອນກັນທີ່ຈະກີດກັນການສະແຫວງ
ຫາຂອງອັງກິດ (໔໙).

ເຈົ້າຊີວິດຄົນໃໝ່ຂອງສະຫຍາມຄື ລາຊະການທີສາມ ກໍ
ໄດ້ພະຍາຍາມຈູງໃຈພວກອັງກິດດ້ານການເມືອງ, ລາຊະການທີ
ສາມ ໄດ້ວ່າມຂ່າວວ່າຕົນເອງແຕກຕ່າງກັບເຈົ້າຊີວິດອົງກ່ອນຄື ພໍ່
ໂຕເອງ, ລາຊະການທີສອງ. ລາຊະການທີສາມໄດ້ອັດ ເຮືອນ
ນ້າງສະໜົມ, " ອ່ອນນ້ອມຕໍ່ອັງກິດ " ແລະ ເປີດກວ້າງການ
ຄ້າກັບຕ່າງປະເທດ, ທຸກສິ່ງທຸກຢ່າງນີ້ກໍເປັນພຽງແຕ່ຍຸດໂທບາຍ
ຂອງນັກການເມືອງທີ່ໃນປາງລາຊະການທີສອງໄດ້ເປັນ ຫົວໜ້າ
ກຸ່ມຕ້ານອັງກິດແລະພາຍຫລັງທີ່ກາຍເປັນເຈົ້າຊີວິດແລ້ວກໍໄດ້ກາຍ
ເປັນຫົວໜ້າກຸ່ມທີ່ພ້ອມອັງກິດ (໕໐) .

ຂ່າວຊ່າລື່ກ່ຽວກັບການຮຸກຮານສະຫຍາມຂຶ້ນໃນມໍ່ໆນີ້ ກໍໄດ້
ແຜ່ລາມທົ່ວບາງກອກ. ພູດທະທຳນາຍອັນເກົ່າແກ່ກໍໄດ້ເວົ້າວ່າ
"ເຈົ້າຊີວິດຕ່າງດ້າວຈະມາຄອງສະຫຍາມ" (໕໑). ກຳລັງທະ
ຫານອົງຄະລັກ ຂອງລາຊະການທີສາມເອງກໍໄດ້ ເສຍແນວຄິດ
ແລະກຽມຈິດກຽມໃຈຈະຍອມຈຳນົນຕໍ່ພວກທີ່ຈະມາຮຸກຮານ ສະ

ຫຍາມຄືຊາວອັງກິດ. ປະຊາຊົນບາງກອກກໍ່ເລີ່ມກະວົນ ກະວາຍ ແລະທະຍອຍອອກຈາກບາງກອກ ( ໕໒). ເຫດການນີ້ໄດ້ເກີດ ຂຶ້ນໃນເດືອນສິງຫາປີ ໑໘໒໖. ພາຍຫລັງສົນທິສັນຍາຢັງດາບາວ ( **YANGDABAO** ). ໄດ້ຮັບການລົງນາມລະຫວ່າງອັງກິດກັບ ພະມ້າໃນວັນທີ ໒໔ ກຸມພາ ປີ ໑໘໒໖ ເພື່ອຍຸດຕິສົງຄາມຄັ້ງທີ໑ ລະຫວ່າງ ໒ ປະເທດດັ່ງກ່າວ; ໃນສົນທິສັນຍານັ້ນ, ສະຫຍາມ ກໍ່ໄດ້ມີຊື່ປະເທດຂອງຕົນລະບຸໄວ້ໃນນາມເປັນ" ພັນທະມິດ ຂອງ ອັງກິດ " ສະຫຍາມເອງກໍ່ໄດ້ເຊັນສົນທິສັນຍາກັບອັງກິດຊຶ່ງພາຍ ຫລັງມາໄດ້ເອີ້ນວ່າສັນຍາ " ເບີກເນ " ( BURNEY ) ຕາມຊື່ຂອງນັກເຈລະຈາອັງກິດ ໃນວັນທີ ໒໐ ມິຖຸນາປີ໑໘໒໖. ເຖິງແນວໃດກໍ່ດີ, ສະຫຍາມໄດ້ຜິດຫວັງພາຍຫລັງສົງຄາມອັງກິດ -ພະມ້າໄດ້ສິ້ນສຸດລົງ ເນື່ອງຈາກວ່າຕົນເອງບໍ່ໄດ້ຮັບການ ຕອບ ແທນຢ່າງໃດໝົດດ້ານດິນແດນ ທັ້ງໆທີ່ຕົນເອງກໍ່ເປັນອັນທີ່ເອີ້ນ ວ່າ " ພັນທະມິດຂອງອັງກິດ ". ແຕ່ " ຫວານກໍ່ໄດ້ກືນ ຂົມກໍ່ ໄດ້ກືນ ", ເນື່ອງຈາກວ່າສະຫຍາມປະເຊີນກັບ " ຄວາມ ຈຳ ເປັນຈະຕ້ອງຫລີກລ່ຽງທຸກການເປັນປໍລະປັກກັບຈັກກະພັດ ອັງກິດ ທີ່ແຜ່ອຳນາດຢູ່ອິນເດຍ, ທັງນີ້ກໍຍອມວ່າບັນຫາອັນຮີບດ່ວນ ແລະ ຄວນແກ້ໄຂຂອງສະຫຍາມໄດ້ເກີດຂຶ້ນໃນແຖບຊາຍແດນລາວແລະ ຂະເໝນ " (໕໓). ຕາມລາຍງານລົງວັນທີເດືອນ ຕຸລາ ປີ ໑໘໒໖ ທີ່ ເຈມໂລ ( James LOW ) ໄດ້ຂຽນຫາຂັ້ນ ເທິງ ຂອງຜູ້ກ່ຽວທີ່ການກູດຕາ ( CALCUTTA ) ແລະ ລອນ

ດອນ ( London ) ວ່າ: " ປະເທດໃກ້ຄຽງຂອງ ສະຫຍາມທີ່ຢູ່ທາງເໜືອນັ້ນ, ຄືຊາວລາວຊຽງໃໝ່ແລະລ້ານ ຊ້າງ ໄດ້ກຽມພ້ອມສະເໝີເພື່ອກອບກູ້ເອົາເອກະລາດ " (໕໔ ). ເຈມໂລ ( James LOW ) ເປັນຮ້ອຍເອກໃນກອງທັບອັງກິດ ທັງເປັນນັກຄົ້ນຄວ້າກ່ຽວກັບບັນຫາໄທແລະທັງເປັນຄົນອັງກິດຜູ້ທຳອິດໃນສະຕະວັດນັ້ນທີ່ປາກພາສາໄທໄດ້, ຄົນອັງກິດຄົນທີ ໒ ທີ່ປາກໄທໄດ້ໃນຍຸກນັ້ນກໍຄືນັກເຈລະຈາ ເຮນຣີ ເບີກເນ ( Henry BURNEY ) ນັ້ນເອງ, ອັງກິດໄດ້ຈັດສອນພາສາໄທຂຶ້ນເທື່ອທຳອິດພາຍຫລັງສາງສິງກະໂປຂຶ້ນໃຫ້ເປັນ " ທໍລະບຽງ ເພື່ອສອດຊ່ອງເບິ່ງອາຊີອາຄະເນ ".

ໃນຕົ້ນປີ ໑໘໒໗, ເຈົ້າອະນຸໄດ້ຂຽນໜັງສືສະບັບ ໜຶ່ງເຖິງລາຊະການທີສາມເພື່ອແຈ້ງໃຫ້ເຈົ້າຊີວິດສະຫຍາມຊາບກ່ຽວກັບການພັນລະຫຍາຍຂອງກອງທັບລາວໄປສູ່ຮາບສູງໂຄລາດ . ອັນນີ້ກໍເນື່ອງຈາກວ່າລາຊະການທີສາມໄດ້ຂຽນໜັງສືມາຂໍຮ້ອງໃຫ້ເຈົ້າອະນຸລົງໄປຊ່ວຍຕົນເພື່ອຕ້ານທານກັບການຮຸກຮານ ຂອງອັງກິດ ທີ່ຈະມາທາງທະເລຕາມທີ່ພວກກຳອຳນາດສະຫຍາມຄິດວ່າຈະເກີດຈິງ (໕໕). ໃນຕົວຈິງແລ້ວເຈົ້າອະນຸກໍໄດ້ສວຍ ໃຊ້ການຮ້ອງຂໍອັນນີ້ ( ຫລືເວົ້າຢ່າງໜຶ່ງລາຊະການທີສາມຊອກວິທີຍູແຍ່ " ລໍ້ເສືອອອກຈາກຖ້ຳ " ເພື່ອເຮັດໃຫ້ລາວຕົກໃນ ແຮວຂອງສະຫຍາມ. ຕາມກອນລຳຕ່າງໆທີ່ໄດ້ເລົ່າກັນມາຢ່າງເນື່ອງນິດແຕ່ຄັ້ງນັ້ນມາຢູ່ພາກອີສານຂອງໄທ ) ເພື່ອເອົາກອງທັບ ມາ

ທັບນາງປ້ອມໜັ້ນໂຄລາດທີ່ເປັນປ້ອມແນວໜ້າຂອງນະໂຍ ບາຍຂະຫຍາຍອານາເຂດແລະຍຶດຄອງຂອງສະຫຍາມບົນດິນແດນອ່າງແມ່ນ້ຳຂອງ, ໃນເວລາດຽວກັນນັ້ນເຈົ້າອະນຸກໍໄດ້ກວດຕ້ອນເອົາພົນລະເມືອງໃນຮາບສູງໂຄລາດນັ້ນກັບຄືນໄປຝັ່ງຊ້າຍແມ່ນ້ຳຂອງໝົດເພື່ອບໍ່ໃຫ້ເປັນກຳລັງໃຫ້ແກ່ກອງທັບສະຫຍາມທີ່ກຽມພ້ອມມາໄດ້ຫຼາຍປີແລ້ວເພື່ອບຸກລຸກແລະຍຶດຄອງ ບັນດາຫົວເມືອງ ລາວ ແລະເຮັດໃຫ້ຮາບສູງໂຄລາດກາຍເປັນບ່ອນເປົ່າຫວ່າງຕໍ່ ໜ້າກອງທັບສະຫຍາມ, ເຈົ້າອະນຸຍັງໄດ້ສົ່ງເຈົ້າລາຊະວົງ ລົງໄປຮອດສະລະບຸລີ ເພື່ອຕ້ອນເອົາຄົນລາວທີ່ສະຫຍາມກວາດເອົາໄປແຕ່ປີ ໑໗໗໘- ລາຊະການທີສາມໄດ້ສວຍໃຊ້ເຫດການນັ້ນເປັນຂໍ້ອ້າງ. ຫລາຍແຫລ່ງຂ່າວທີ່ໜ້າເຊື່ອຖືໄດ້ຢືນຢັນວ່າລາຊະການທີສາມເອງເປັນຜູ້ອະນຸຍາດໃຫ້ເຈົ້າອະນຸເອົາປະຊາຊົນລາວ ທີ່ກວາດຕ້ອນມາໄວ້ທີ່ສະລະບຸລີນັ້ນກັບຄືນເມືອງວຽງຈັນ( ໕໖ ). ຢ່າງໃດກໍດີ ຂະນະດຽວກັນນັ້ນລາຊະການທີສາມໄດ້ປ່ອຍກອງທັບສ່ວນໜຶ່ງໄວ້ທີ່ປາກນ້ຳເພື່ອຕ້ານທານການຮຸກຮານຂອງອັງກິດ ທີ່ອາດຈະເກີດຂຶ້ນ. ອັນນີ້ກໍເນື່ອງຈາກວ່າຜູ້ສຳເລັດລາຊະການອັງກິດທີ່ສິງກະໂປຄື ຟູນເລີຕັນ ( FULLERTON )ກໍໄດ້ສະແດງແສນຍານຸພາບຕໍ່ໜ້າສະຫຍາມເພາະມີແນວຄິດຕ້ານສະຫຍາມສຸດຂະໜາດ ( ໕໗).

ເຈົ້າອະນຸໄດ້ຖືກຈັບ, ແລະ ພາຍຫລັງຖືກຄຸມຂັງທໍລະມານເປັນເວລາສາມມື້ຢູ່ບາງກອກແລ້ວກໍເຖິງແກ່ກຳ. "ຊາວສະຫຍາມ

ໄດ້ທຳລາຍວຽງຈັນຢ່າງຮາບຄາບ " (໔໘). ອັນນີ້ແມ່ນ ຄຳເວົ້າຂອງນັກປະຫວັດສາດອັງກິດ ດີ.ຈີ.ຮອນ (D.G.HALL) ໂດຍໄດ້ທຽບສິ່ງທີ່ສະຫຍາມເຮັດຕໍ່ປະຊາຊົນລາວກັບສິ່ງທີ່ ຮິດແລ ( Hitler ) ໄດ້ເຮັດຕໍ່ປະຊາຊົນຢູໂລບ. ໃນປີ ໑໙໘໕ ອາກເທີກ ດົມແມນ (Arthur DOMMEN) ນັກຂຽນ ອາເມລິກາ ທີ່ຄົ້ນຄວ້າກ່ຽວກັບບັນຫາລາວໄດ້ຂຽນວ່າ : " ຊາວ ສະຫຍາມ **ທີ່ໃນເວລານັ້ນ** ໄດ້ປະຕິບັດນະໂຍບາຍແຜ່ອິດທິພົນ ຢ່າງຂະຫຍັນມັງມໍ່ຢູ່ໃນດິນແດນຂອງລາວນັ້ນໄດ້ຕອບໂຕ້ຕໍ່ການ ກະທຳອັນບັງອາດ ແລະ ຢ່າງເຜີຕົວ ( ຂອງເຈົ້າອະນຸ ) ທີ່ມາ ຍຶດເອົາໂຄລາດໂດຍໄດ້ທຳລາຍວຽງຈັນຢ່າງຮາບກ້ຽງເໝືອນ ດັ່ງພວກໂລມັນ ( ROMAN ) ໄດ້ທຳລາຍ ກາກຕາເຈີ(CAR-THAGE ) ຢ່າງຮາບກ້ຽງໃນສົງຄາມປູນິກ( PUNIC) ( ພັນປີກ່ອນ )" ( ໔໙ ).

ລາຊະການທີສາມທີ່ໄດ້ສົ່ງການແຕ່ມຂຶ້ນຄອງອຳນາດ ໃຫ້ຍຶດຄອງເມືອງລາວໂດຍໃຊ້ວິທີການສັກເລກພິແລະເມືອງລາວໃຫ້ກາຍເປັນຄົນໄທກໍໄດ້ເຄື່ອນໄຫວຍາດແຍ່ງເອົາສາກົນເພື່ອປົກປິດການປາບພາຍໃນໝາຍຄວາມວ່າປາບປະຊາຊົນລາວ, ໂດຍໄດ້ເຊັນສົນທິສັນຍາກັບອັງກິດ. ການກະທຳຂອງລາຊະການ ທີສາມກໍບໍ່ແຕກຕ່າງຫຍັງກັບການກະທຳຂອງສະຫຍາມໃນປາງຕາກສິນ ເມື່ອ ໔໐ ປີກ່ອນໜ້ານັ້ນ, ຕາກສິນໄດ້ຈຳແນກພະມ້າແລະລາວເປັນສັດຕູຕົວຕົ້ນຕໍຂອງຕົນ ( ໕໐ ). ຕາກສິນຍອມຮັບໃຫ້

ມີການເຊັນສັນຍາຊົ່ວຄາວໃນປີ ໑໗໗໖ ກັບນາຍພົນພະມ້າ ອີເຊ ວຸນກີ ( ASVENKI ). ປີ ຕໍ່ມາຄືໃນປີ ໑໗໗໗ , ກອງທັບສະຫຍາມກໍໄດ້ລຸຫລັ່ງທົ່ງເຫລົ້າໄປຮຸກຮານ ຂະເໝນ, ພາຍຫລັງນັ້ນກໍແມ່ນຮອດຖ້ອວຂອງລາຊະອານາຈັກຈຳປາສັກແລະ ສຸດທ້າຍໃນປີ ໑໗໗໘ ສະຫຍາມກໍໄດ້ເຂົ້າມາຮຸກຮານ ວຽງຈັນ. ໕໐ ປີຕໍ່ມາ, ສະຫຍາມຍຸກລາຊະການທີສາມທີ່ " ຖືຊາວ ລາວ ແລະ ຊາວອັງກິດເປັນສັດຕູໃນລະດັບດຽວກັນ " (ຜ໑) ກໍໄດ້ ເຊັນສັນຍາ " ເບີກເນ " ( BURNEY ), ແລ້ວ ກໍໄດ້ເຂົ້າມາຮຸກຮານແລະຍຶດຄອງລາວໃນປີຕໍ່ມາທັນທີ. ອາດຈະ ເຫັນໄດ້ວ່າວິທີການທີ່ຖືກນຳມາປະຕິບັດປາງຕາກສິນແລະປາງລາ ຊະການທີສາມກໍເປັນແບບດຽວກັນອ້ອຍຕ້ອຍ.

ການທີ່ສະຫຍາມຈຳແນກສັດຕູຂອງຕົນນັ້ນກໍພາໃຫ້ສະຫຍາມ ບູກລູກໂຈມຕີປະຊາຊົນລາວກ່ອນໝູ່ເພື່ອບັງລັບເອົາ" ກົດໝາຍ ແລະລະບຽບ " ຫລືເວົ້າຢ່າງໜຶ່ງຄືອັນທີ່ເອີ້ນວ່າ "ສັນຕິພາບ ຂອງສະຫຍາມ " ມາຢູ່ໃນອັນທີ່ສະຫຍາມຖືວ່າເປັນ" ຫລັງບ້ານ" ຂອງຕົນ ເພື່ອວ່າຫລັງຈາກນັ້ນກໍຈະຊອກຫາວິທີແກ້ໃຂບັນຫາ ອັນ ຍາວນານກັບສັດຕູຕົວພື້ນຖານເໝືອນກັນແຕ່ໃຫຍ່ແລະເຂັ້ມແຂງ- ກວ່າຂອງສະຫຍາມຄືພະມ້າໃນປີ ໑໗໗໘ ແລະ ອັງກິດໃນ ປີ ໑໘໔໗ .

ກ່ອນລາຊະການທີສາມຈະເຖິງແກ່ມໍລະນະກຳ, ຜູ້ກ່ຽວໄດ້ ເວົ້າຢູ່ເທິງຕຽງກ່ອນສິ້ນໃຈໂດຍໄດ້ກຳຊັບວ່າ :" ພວກເຮົາຈະ

ບໍ່ມີສົງຄາມອີກແລ້ວກັບຫວຽດນາມແລະພະມ້າ. ພວກເຮົາ ຈະມີສົງຄາມກັບປະເທດຕາເວັນຕົກ. ໃຫ້ລະມັດລະວັງແລະບໍ່ໃຫ້ ສູນເສັຍສິ່ງໃດໆໝົດ ແກ່ພວກເຂົາ. ທຸກສິ່ງທຸກຢ່າງທີ່ປະເທດ ຕາເວັນຕົກສະເໜີຕໍ່ພວກເຮົາ, ພວກເຮົາຕ້ອງພິຈາລະນາຕຶກຕອງຢ່າງຖີ່ຖ້ວນກ່ອນຈະຮັບເອົາແລະບໍ່ໃຫ້ໄວ້ວາງໃຈພວກເຂົາ ຢ່າງຫູໜວກຕາບອດ " (ຜ໒໘) .ຜູ້ຂຶ້ນລາຊະບັນລັງແທນລາຊະການທີສາມຄື ພະນົງກຸດ ຊຶ່ງເປັນຄົນກະຕືລືລົ້ນຢາກຫັນປ່ຽນສະຫຍາມໂດຍກ່າຍເອົາແບບຕະເວັນຕົກຢ່າງຕ່າວປັ້ນຄືນບໍ່ໄດ້.ແຕ່ຜູ້ກ່ຽວໄດ້ຂຽນຫາທູດຂອງສະຫຍາມປະຈຳຢູ່ປາລີ ( Paris ) ໃນປີ ໑໘໔໗ ວ່າ " ທັງຝະລັ່ງ, ທັງອັງກິດຄຶງຄິດວ່າພວກເຮົາເປັນສັດສາວາສິ່ງທີ່ພວກເຂົາລ້ຽງໄວ້ເພື່ອກັດກິນ ;ພວກເຂົາຢາກສວຍໃຊ້ພວກເຮົາຄືພວກເຮົາເປັນງົວຫລືເປັນຄວາຍ "(ຜ໒໙).

ສຸດທ້າຍນີ້ອາດຈະເປັນບັນຫາປະຫວັດສາດທີ່ຄວນຍົກຂຶ້ນວ່າພາຍຫລັງທີ່ໄດ້ໄປພົບປະກັບທູດອັງກິດຢູ່ບາງກອກແລ້ວເຈົ້າ ອະນຸວົງກໍໄດ້ມີຄວາມຄິດຄວາມເຫັນໃນທ່ານອງໃດແທ້ ?ລວມຄວາມແລ້ວເພິ່ນໄດ້ໃຫ້ຄຳຕອບຢູ່ໃນສານລຶບພະສຸນວ່າ :

" ຮຽນຢາກໄປວານຝູງພີ່ນ້ອງວົງວານໃຫ້ມາຊ່ວຍ ຊີຄືລີທັງໝູ່ ທີ່ກະເລີງພ້ອມພ່ຳແກວ ... "(ຜ໒໔).ເພິ່ນຍັງໄດ້ເວົ້າອີກວ່າ :

"ພີ່ນີ້ເປັນດັ່ງໃບບົວຂ້ອງ ພາຍສານສົນປະໂຍກ ຈິງແລ້ວໂອ້ໂອຍເອົາແນ່ປ້ອງປຸ່ນສ້ອມຊ່ວຍແຫລມ ກໍບໍ່ລຸລາບສ້າງຊ້ຳເລົ່າ

ພອຍສລາງ ມະໂນວານຫຼກ ທົ່ງໂຮມຮາວບ້າ ເປັນດັ່ງອັກຄີໄໝ້ ພ່ອນຟາງເຟືອຍຍ່ຳ ຄິດໃດ່ຫອມແມ່ນກໍ້ທັງທ້າອາບສຶງ ກໍບໍ່ເປັນ ໄປໄດ້ ໂດຍດັ່ງມະໂນນຶກ ເພາະວ່າມະຫານະທີ ທັງເປັງ ຈານ ຢູ່ກວງໄກ້ຮາຍ " (໖໔). ໝາຍຄວາມວ່າອັງກິດທີ່ຢູ່ ທາງ ເປັງຈານນັ້ນ ແປວ່າ ບັງກາລ ( Bengale )( ອິນເດຍ) ນັ້ນແມ່ນຢູ່ແສນໄກໂພດ ແລະ ກໍຄືງບໍ່ເປັນປະໂຫຍດຍຸດທະ ສາດ ໃຫ້ແກ່ລາວໄດ້ເໝືອນດັ່ງທ່ານ ສ.ເດຊາ ໄດ້ຕີຄວາມໝາຍວ່າ " ສານຂຽນວ່າ :"ວ່າຈັກພາຍພົບລ້ອມ ມະຫານົນຮຽງຜ່າງ "

ອັນນັ້ນ, ແມ່ນປະສົງກໍ່ສ້າງ ກອງແກ້ວແກນທະຫານ
ເພື່ອທຳການຕໍ່ຕ້ານ ກູ້ຊາດຊີງໄຊ
ບໍ່ອາດອີງອາໄສ ອື່ນໄກແທນໄດ້ " ( ໖໖).

ເຈົ້າອະນຸທີ່ເປັນນັກສ້າງວັດວາອາຮາມຢູ່ທັງ ໔ ຟັ່ງ ແມ່ນກໍ້ ຂອງຄົງຈະຈື່ມຄາຖາ " ອະຕະທີອະຕະໂນນາໂຖ "ເປັນປະຈຳ.

## ເອກະສານອ້າງອີງຂອງບົດ

" ມະຫາອຳນາດໂລກ ກັບ ການເມືອງອົງເຂດ ການພົວພັນ ແບບສາມຫລ່ຽມລະຫວ່າງອັງກິດກັບ ບາງກອກ ແລະ ຊາວລາວໃນຊ່ວງເວລາທີ່ ຈອນ ຄຣາເຟີດ (John CRAWFURD) (໑໘໒໑-໑໘໒໒) ແລະ ເຮນຣີ ເບີກເນ(Henry BURNEY) (໑໘໒໕-໑໘໒໖) ຖືກສົ່ງມາເປັນທູດຢູ່ສະຫຍາມ ".

(໑) ເອກະສານເບີກເນ (The Burney Papers) (ພາສາອັງກິດ ) ຫໍສະມຸດວາຊິລະບະແຫ່ງຊາດ ໑໙໑໐-໑໙໑໔ ເຫຼັ້ມ ໓. ພາກ ໔. ໜ້າ ໔໖. ໃນຕົວຈິງແລ້ວອັງກິດ ຕ້ອງຂົນທະຫານມາຈົນເຖິງ ໔໐.໐໐໐ ກ່ວາຄົນ ຈຶ່ງຈະຊະນະພະມ້າ. ໃນນັ້ນ ໑໕.໐໐໐ ກ່ວາຄົນ ກໍໄດ້ເສຍຊີວິດຢູ່ພະມ້າ. ຂໍໃຫ້ເບິ່ງ ດ.ຈ.ອ. ຮອນ ( D.G.E.HALL ) " ປະຫວັດສາດຂອງອາຊີອາຄະເນ ". ( ພາສາອັງກິດ ). ມາກມິລລານ ( The Macmillan ) ການພິມ ( Press ) ໝູນເບີນ ( Melbourne ) ພິມຄັ້ງທີ ໓ ໃນປີ ໑໙໗໖ . ໜ້າ ໔໙໙.

(໒) ໃນເວລາທີ່ຍັງດຳລົງຕຳແໜ່ງນາຍົກ ລັດຖະມົນຕີຂອງພໍ່ເພິ່ນຄື ລາຊະການທີ ໒ ນັ້ນຜູ້ຈະຂຶ້ນຄອງບັນລັງແລະເປັນເຈົ້າຊີວິດສະຫຍາມລາຊະການທີ ໓ ນັ້ນໄດ້ເອົາເງິນຈາກ ທ່ານ

ກົງສຸນ ຂອງປະເທດ ປອກຕຸຍການ ( Portugate ) ທີ່ມາປະຈຳໜ້າທີ່ຢູ່ບາງກອກໃຫ້ແປນິພົນຕ່າງໆຂອງເຈົ້າ ຈັກກະພັດ ນາໂປເລອົງ ( NAPOLEON ) ແຫ່ງປະເທດ ຝະລັ່ງເສດໃຫ້ເພິ່ນ. ສ່ວນເຈົ້າຊີວິດລາຊະການທີ ໔ ໄດ້ຂໍໃຫ້ຈອນ ຄຣາເຟີດ ( John CRAWFURD ) ຕັດເຄື່ອງເພື່ອມານຸ່ງ ໃຫ້ຮູບຫຸ່ນຂອງເຈົ້າ ຈັກກະພັດ ນາໂປເລອົງ( NAPOLEON ) ທີ່ເພິ່ນເຄົາລົບ; ຂໍໃຫ້ເບິ່ງປື້ມຂອງ ຈອນ ຄຣາເຟີດ ( John CRAFURD ) " ໜັງສືຊົງຈຳກ່ຽວກັບການທູດຢູ່ ປະເທດສະຫຍາມແລະໂກແຊງຊິນ " ( ອະລຳພະບົດຂຽນໂດຍໄວຢັດ ( WYATT ) . ມະຫາ ວິທະຍາໄລ ອອກສະຟອດ ( Oxford ) ການພິມ, ກູລາລຳເປີ, ໑໙໖໗, ໜ້າ ໑໙໔ ແລະ ໔໑໑. ຍິ່ງໄປກວ່ານັ້ນຢູ່ໃນພະລາຊະວັງກໍຄືຢູ່ໃນບັນດາວັດວາອາລາມເຈົ້າຊຸນມູນນາຍໄທໄດ້ເອົາຮູບ ເຈົ້າຈັກກະພັດ ນາໂປເລອົງ ມາວາງໄວ້ຂ້າງຮູບພະເພື່ອຈະເຄົາລົບບູຊາ ຂໍໃຫ້ເບິ່ງບົດຄວາມຂອງ ປາລເລີກົວ ( Pallegoix ) " ລາຊະອານາຈັກສະຫຍາມ. ນັກບວດ ກາໂຕລິກ( Catho-lique ) ມາຢ້ຽມຢາມເຈົ້າຊຸນມູນນາຍໄທທີ່ເປັນນັກບວດ." ວາລະສານຕາເວັນອອກໄກ ( ພາສາຝະລັ່ງ ) ປາລີ ( Paris ) ປີ ໑໘໔໔, ເຫລັ້ມ ໔ . ໜ້າ ໑໔໑-໑໔໓ ; ການເທີດເທີນ ເຈົ້າຈັກກະພັດ ນາໂປເລອົງ( NAPOLEON ) ນັກເຮັດໃຫ້ເຂົ້າໃຈຄວາມເວົ້າຂອງເຈົ້າໜ້າທີ່ອັງກິດຜູ້ໜຶ່ງ ຄື

ອານແດກຊັນ ( Anderson ), ທີໄດ້ຂຽນວ່າ:"ສົມເດັດເຈົ້າຊີວິດຂອງສະຫຍາມ ( ລາຊະການທີ ໓ ) ແມ່ນຄືກັບຜູ້ນຳນັກໃຫຍ່ໄຟ່ສູງຂອງຝະລັ່ງເສດ ນາໂປເລອົງ ( NAPO LEON ) ..." ຂໍໃຫ້ເບິ່ງເອກະສານ ເບີກເນ ( The Burney Papers)ເຫລັ້ມ ໕. ພາກ ໑. ໜ້າ ໘.

(໓) ວາລະສານ ສະມາຄົມເພື່ອເຜີຍແຜ່ ສາດສະໜາ-ເຢຊູ ( Annale de l'Association pour la propagation de la foi,) ປາລີ ( Paris ) ກໍລະກົດ. ປີ ໑໘໓໑. ເຫລັ້ມ ໔໕. ໜ້າ ໑໓໘-໑໓໙.

(໔) ຂໍໃຫ້ເບິ່ງ ອະລຳພະບົດ ຂອງ ເຮນລີ ແບກລັງ ( Henri BERLAND ) ຢູ່ໃນເອກະສານ ຄຣາເຟີດ - ( CRAWFURD Papers ) ເປັນພາສາຝະລັ່ງ ວາລະສານ ສະມາຄົມສຶກສາກ່ຽວກັບອິນດູຈີນ(Bulletin de la société d'Etudes Indochinoises )ປີ ໑໙໔໑. ໜ້າ ໑໖.

(໕) ເອກະສານ ຄຣາເຟີດ ( The CRAWFURD Papers ) ໜ້າ ໕໐ ແລະ ໗໘.

(໖) ເອກະສານ ຄຣາເຟີດ ( The CRAWFURD Papers ) ໜ້າ ໓໐ ແລະ ໓໘. ຂໍໃຫ້ເບິ່ງ ດັ່ງດຽວ

ກັບ ຈອນ ຄຣາເຝີດ ( John CRAWFURD ):" ໜັງສືຊົງຈຳ ..." ( ເອກະສານ ອ້າງອີງດັ່ງກ່າວຂ້າງເທິງນັ້ນ) ໜ້າ ໑໓໖ .

(໗) ເຮບລີ ແບກລັງ ( Henri BERLAND ) ຢູ່ໃນເອກະສານ ຄຣາເຝີດ ( The CRAWFURD Papers) ໜ້າ ໑໓.

(໘) ເອກະສານ ເບີກເນ( Burney Papers ) ເຫລັ້ມ ໑. ໜ້າ ໗໒໗ ແລະ ໗໔໔. ເຫລັ້ມ ໑ ພາກ ໔ . ໜ້າ ໔໗໘-໔໗໙, ເຫລັ້ມ ໒, ພາກ ໔, ໜ້າ ໑໐໔. ກ່ຽວກັບສັບ:" ອິນດູຈີນ ", ຂໍໃຫ້ເບິ່ງ ຈອນ ຄຣາເຝີດ( John CRAWFURD ):" ໜັງສືຊົງຈຳ..." ໜ້າ໔໓໙

(໙) ເອກະສານ ຄຣາເຝີດ(The CRAWFURD Papers) ໜ້າ ໘໐.

(໑໐) ເອກະສານ ຄລາເຝີດ(The CRAWFURD Papers) ໜ້າ ໓໗ .

(໑໑) ເອກະສານ ຄລາເຝີດ(The CRAWFURD Papers) ໜ້າ ໘໔-໙໘-໙໙.

(໑໘) ເອກະສານ ຄລາເຟີດ(The CRAWFURD Papers) ໜ້າ ໖໑ ແລະ ໜ້າ ໙໘,໙໒,໖໙, ແລະ ໘໐ .

(໑໙) ເອກະສານ ຄລາເຟີດ(The CRAWFURD Papers) ໜ້າ ໖໙.

(໑໔) ເອກະສານ ຄລາເຟີດ(the CRAWFURD Papers) ໜ້າ ໘໙.

(໑໕) ເຮນລີ ແບກລັງ ( Henri BERLAND ) ( ຜູ້ພິມເຜີຍແຜ່ ):" ໜັງສືຊີງຈຳຂອງຟິນເລຊອນ, ນາຍໝໍຂອງທູດ ຄລາເຟີດ ". ວາລະສານ ສະມາຄົມ ສຶກສາ ກ່ຽວກັບອິນດູຈີນ ( Bulletin de la société d'Etudes Indochinoises) ປີ ໑໙໓໙ ໜ້າ ໑໕.

(໑໖) ຈອນ ຄລາເຟີດ ( John CRAWFURD ) "ໜັງສືຊີງຈຳ..." ໜ້າ ໑໖໗.

(໑໗) ຈອນ ຄລາເຟີດ ( John CRAWFURD ) " ໜັງສືຊີງຈຳ ..." ດັ່ງກ່າວມາຂ້າງເທິງ. ສ່ວນ ວຽກຊີນີອາ ທອມຊອນ ( virginia THOMPSON ) ໄດ້ຂຽນໃນ ປີ ໑໙໔໑ ວ່າ: " ໃນເວລາທີ່ ຄລາເຟີດ( CRAWFURD )

ພະຍາຍາມເຈລະຈາ ສົນທິສັນຍາ ກັບ ລາຊະການທີ ໔ , ຜູ້ກ່ຽວໄດ້ສັງເກດເຫັນວ່າ ສະຫຍາມຄົງຈະຍິນດີກັບຮ່າງສົນທິ ສັນຍາການຄ້າຂອງອັງກິດຖ້າວ່າອັງກິດຈະຂາຍອາວຸດໃຫ້ໄທ". ຂໍໃຫ້ເບິ່ງປຶ້ມຂອງວຽກຊີນີອາ ທອມຊອນ ( Virginia THOMPSON ) " ໄທແລນ. ສະຫຍາມໃໝ່ ". ປາລາກົງ ( Paragon repint ) ພິມຈຳໜ່າຍ. ນິວຢອກ. ປີ ໑໙໖໗ . ໜ້າ ໓໑.

(໑໘) ເອກະສານ ຄລາເຟີດ ( The CRAWFURD Papers) ໜ້າ ໓໘-໓໙ ແລະ ໜ້າ ໔໕,໘໐,໘໑,໙໑ແລະ ໙໗,

(໑໙) ເອກະສານ ຄລ່າເຟີດ ( the CRAWFURD Papers) ໜ້າ ໑໔໗.

(໔໐) ເອກະສານ ຄລາເຟີດ (The CRAWFURD Papers ) ໜ້າ ໔໔-໔໕.

(໔໑) ເອກະສານ ຄລາເຟີດ (The CRAWFURD Papers ) ໜ້າ ໙໑.

(໔໔) ເອກະສານ ຄລາເຟີດ ( the CRAWFURD Papers ) ໜ້າ ໑໐໘.

(໘໓) ເອກະສານ ເບີເນ ( The BURNEY Papers ) ເຫລັ້ມ ໑.ພາກ໑, ໜ້າ ໑໖໘.

(໘໔) ເອກະສານ ຄລາເຝີດ ( The CRAWFURD Papers ) ໜ້າ ໑໐໔. ກ່ຽວກັບຄວາມ ພະຍາຍາມອື່ນໆອີກເພື່ອດູດດຶງເຈົ້າໜ້າທີ່ຊັ້ນສູງຂອງສະຫຍາມນັ້ນຂໍໃຫ້ເບິ່ງໜ້າ ໑໐໐-໑໐໓ ແລະ ໑໕໐ ແລະ ຂໍໃຫ້ເບິ່ງເຊັ່ນດຽວກັນກັບປື້ມຂອງ ຟິນເລຊອນ ( FINLAYSON ):" ໜັງສືບັນທຶກ ..." ໜ້າ ໑໔.

(໘໕) ເອກະສານ ຄລາເຝີດ ( The CRAWFURD Papers ) ໜ້າ ໓໙.

(໘໖) ຈອນ ຄລາເຝີດ( John CRAWFURD ) " ໜັງສືຊົງຈຳ..." ໜ້າ ໘໔໓.

(໘໗) ເອກະສານ ເບີເນ (The BURNEY Papers ) ເຫລັ້ມ ໘, ພາກ໔. ໜ້າ ໕໔.

(໘໙) ໂລເບີດ ຮູນເຕີ ( Robert HUNTER ) ໄດ້ສົ່ງກຳປື່ນໄປຍັງບາງກອກທີ່ບັນທຸກແຕ່ປືນໃຫຍ່, ປືນນ້ອຍແລະລູກປືນເພື່ອຂາຍໃຫ້ສະຫຍາມ ..."( ເອກະສານ ຄລາເຝີດ ( The CRAWFURD Papers ) ໜ້າ ໑໐໐ ແລະ໑໐໑ )

ຈະເປັນ " ພໍ່ຄ້າອັງກິດທີ່ປະຈຳຢູ່ບາງກອກແລະໄດ້ຮັບນາມ ມະຍົດເປັນຫລວງ ອາວຸດວິເສດ " ( ວຽກຊີເນຍ ທອມຊອນ - ( Virginia THOMPSON ) (ເອກະສານ ດັ່ງໄດ້ກ່າວມາຂ້າງເທິງນັ້ນ. ໜ້າ ໓໑ ).ໃນທຳນອງດຽວກັນ ຂໍໃຫ້ເບິ່ງປື້ມຂອງເວນລາ :" ສະຫຍາມໃນສະໄໝ ລາຊະການ ທີ ໓ " ( ພາສາອັງກິດ ) ໂອກູດສະແຕງ ( Augustin ) ຈຳໜ່າຍ ນິວຢອກ ໑໙໕໗, ໜ້າ ໑໒໗.

(໒໙) ເອກະສານ ເບີກເນ ( the BURNEY Papers ) ເຫລັ້ມ ໓. ພາກ ໔ , ໜ້າ ໑໐໑, ໄດ້ບັນທຶກໄວ້ໃນປີ ໑໘໒໖ ວ່າ:ສະຫຍາມມີຄວາມຕ້ອງການລູກປືນ, ປືນໃຫຍ່ຢ່າງຫລວງຫລາຍ, ສ່ວນປືນນ້ອຍ, ປືນຄາບສີລາ ກໍ່ບໍ່ໄດ້ຕ້ອງການຢ່າງຫລວງຫລາຍເໝືອນດັ່ງສອງສາມປີຫລັງ " ການປະກອບອາວຸດຢ່າງລົ້ນເຫລືອສືບເນື່ອງມາຈາກ ສາຍເຫດ ທີ່ວ່າການລຳລຽງຂາຍອາວຸດໃຫ້ໄທໄດ້ດຳເນີນໄປດ້ວຍຈັງຫວະໄວ ທີ່ສຸດ ເໝືອນດັ່ງເອກະສານ ຄລາເຟີດ( The CRAWFURD Papers ) ໄດ້ບັນທຶກວ່າ :" ໃນວັນທີ ໙ ກັນຍາ໑໘໒໓ ຄລາເຟີດ ( CRAWFURD ) ໄດ້ແຈ້ງຂ່າວໃຫ້ພະຄັງຊາບຈາກ ສິງກະໂປວ່າ:" ຂ້າພະເຈົ້າມີຄວາມພໍໃຈແຈ້ງໃຫ້ພະນະທ່ານ ຊາບວ່າ ບາດນີ້ບໍ່ມີສິ່ງຂັດຂ້ອງຫຍັງໝົດແລ້ວທີ່ຈະໃຫ້ພໍ່ຄ້າຢູ່ເມືອງອັງກິດມາຂາຍ ອາວຸດ ຍຸດໂທປະກອບໃຫ້ລັດຖະບານສະຫຍາມ, ກຳປັ່ນຂອງທ່ານ ຢິນລີ( GILLIES )

ໄດ້ປະກອບເຕັມໄປດ້ວຍສິ່ງເຫລົ່ານັ້ນທັງໝົດ" ( ໜ້າ ໗໔ ) ໃນວັນທີ ໑໔ ສິງຫາ ໑໙໘໔ ກຳປັ່ນ " ຊານນອນ " - ( Shannon ) ໄດ້ອອກຈາກນະຄອນຫລວງ ລອນດອນຂອງ ອັງກິດມາຍັງບາງກອກເພື່ອຂົນຜະລິດຕະພັນຂອງອັງກິດມາ ຢ່າງ ຫລວງຫລາຍພ້ອມດ້ວຍປືນ ໔.໐໐໐ ກະບອກ ແລະ ລູກປືນ ໃນ ບໍລິມາດຢ່າງຫລວງຫລາຍ" (ໜ້າ໒໐໐) ໃນໜັງສືລົງວັນທີ ໒໙ ສິງຫາ ໑໙໘໔, ສົ່ງມາຈາກສິງກະໂປ,ຈອນ ມອກແກນ( John MORGAN ) ,ພໍ່ຄ້າ ອາວຸດອັງກິດ ອີກຜູ້ໜຶ່ງໄດ້ແຈ້ງໃຫ້ຜູ້ ວ່າລາຊະການອັງກິດວ່າ:ພັກພວກໄດ້:" ຂົນອາວຸດຍຸດໂທປະກອນ ໄປຂາຍໃຫ້ໄທ, ໃນນັ້ນມີປືນ ໑໐.໐໐໐ ກະບອກ ແລະ ພວກຮູ້ ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກລັດຖະບານສະຫຍາມແລະ ໄດ້ ສຳເລັດໃນ ໓ ປີຫລັງນີ້ໃນການສ້າງກິດຈະການໃຫຍ່ໂຕກັບ ລັດ ຖະບານ ສະຫຍາມ ... ຂ້າພະເຈົ້າໄດ້ສຳເລັດການສ້າງແລະ ຂະຫຍາຍ ກິດຈະການອັນຊຸດົມສົມບູນຢູ່ສະຫຍາມ " (ໜ້າ໑໐໑ -໑໐໒ ) ພໍ່ຄ້າອາວຸດ ຈອນ ມອກແກນ ( John MORGAN ) ໃນວັນທີ໒໐ພະຈິກ ໑໙໘໔ ໄດ້ມອບເປັນຂອງຂວັນໃຫ້ເຈົ້າ ຊີວິດ ສະຫຍາມ ລາຊະການທີ ໔ ປືນຈຳນວນ ໔໐໐ ກະບອກ ແລະ ໑໔໐ ກະບອກ ມອບໃຫ້ແກ່ຜູ້ຈະກາຍເປັນ ລາຊະການທີ ໓ . ແລະອີກຈຳນວນ ໑໐໐ ກະບອກໃຫ້ພະລັງ ແລະ ປືນໃຫຍ່ ຈຳ ນວນ ໒໐ ກະບອກອີກເພື່ອບັນຈຸປ້ອມປາກນ້ຳ ( ໜ້າ ໑໐໓ ) ປ້ອມປາກນ້ຳມີໜ້າທີ່ຈະປ້ອງກັນບາງກອກຕ້ານການຮຸກຮານຂອງ ອັງກິດທີ່ອາດຈະເກີດຂຶ້ນມາທາງທະເລ.

(໑໐) ກ່ຽວກັບການໃຊ້ອາວຸດຍຸດໂທປະກອບທີ່ສະສົມ ໄວ້ຢ່າງຫລວງຫລາຍເພື່ອຕ້ານຊາວລາວນັ້ນ, ຂໍໃຫ້ເບິ່ງປື້ມຂອງຫົງລີສາ ( HONG LYSA ): " ປະເທດໄທ ໃນສະຕະວັດທີ ໑໙ ການຄືບໜ້າຂອງເສດຖະກິດ ແລະສັງຄົມ" ( ພາສາອັງກິດ ) ສະຖາບັນຄົ້ນຄວ້າກ່ຽວກັບອາຊີອາຄະເນ- ສິງກະໂປ, ໑໙໘໔. ໜ້າ ໖໔. ຂໍໃຫ້ເບິ່ງເຊັ່ນດຽວກັນບົດຄວາມຂອງ ອາເດ ມໍເລີ (Adey MOORE ) " ພໍ່ຄ້າອັງກິດຜູ້ທຳອິດຢູ່ທີ່ບາງກອກ" . ວາລະສານຂອງສະມາຄົມ ສະຫຍາມ ( Siam Society Journal ) " ບົດຄວາມເລືອກເຟັ້ນ ຈາກ ວາລະສານ-ສະມາຄົມ ສະຫຍາມ " ເຫລັ້ມ ๒:" ການພົວພັນຂອງ ສະຫຍາມກັບຝະລັ່ງ ອັງກິດ ແລະ ເດນມາກ ", ບາງກອກ ປີ ໑໙໕໙. ໜ້າ ໔໕໖, ຂໍໃຫ້ເບິ່ງເຊັ່ນດຽວກັບປື້ມຂອງ ນັກຂ່າວອັງກິດ ໃນສະໄໝເຈົ້າອະນຸ, ດັ່ງທີ່ມໍເລີ ( MOORE ) " ໝາຍເຫດກ່ຽວກັບຂ່າວອິນເດຍແລະປະເທດ ແຄມຝັ່ງ " ( ພາສາອັງກິດ ), ສິງກະໂປ ປີ ໑໘໓໗. ໜ້າ ໔໐໔. ກອງທັບໄທໄດ້ໃຊ້ ອາວຸດຍຸດໂທປະກອບອັນທັນສະໄໝດັ່ງກ່າວນັ້ນເປັນເທື່ອທຳອິດໃນປີ ໑໘໔໗ ເພື່ອຕ້ານລາວ, ສ່ວນປະຊາຊົນ ລາວສ່ວນໃຫຍ່ແມ່ນໄດ້ຕ້ານຄືນດ້ວຍມີດພ້າ ແລະ ອາວຸດເປັນໄມ້ . ນາຍພົນ ບໍດິນທອນເດຊາ ກໍໄດ້ສ້າງ ອິດທິພົນໃນສົງຄາມນີ້ຍອນກຳລັງໄຟທີ່ໄດ້ມາຈາກປືນ ແລະ ອາວຸດຍຸດໂທປະກອບທີ່ ປອກຕຸຍການ ( PORTUCAL ) ອາເມລິກາ ແລະອັງກິດໄດ້ຂາຍປະກອບໃຫ້ກອງທັບໄທ ຢ່າງຫລວງຫລາຍ. ຕົວຢ່າງ

ຂໍໃຫ້ເບິ່ງໜັງສືຂອງສູນກາງບັນຊາການຂອງກອງທັບໄທ ຂຽນ
ໂດຍພະຍາ ຈ່າແສງນະກອນ(Phraya CHA. SENGNAKONE)
ທີ່ເປັນຜູ້ສັງເກດເຫັນວ່າອາວຸດຍຸດໂທປະກອນສ່ວນໃຫຍ່ແລວແມ່ນ
ໄດ້ສົ່ງໃຫ້ພະຍາ ລາສຸພາວະດີ ( ພາຍຫລັງໄດ້ກາຍເປັນພະຍາ
ບໍດິນທອນເດຊາ ) ແລະໃຫ້ກອງທັບຂອງເຈົ້າເມືອງ ໂຄລາດ
ທີ່ສະນູດແຕ່ງຊາດຂອງໄທ (ພະແນກຮັກສາ ເອກະສານ ເຄົ້າ)
(Thai National Library Manuscripts Division)
"ເອກະສານ ລາຊະການທີ່ ສີ (໔ກ ) ໑໑໘໙/໑໐ ເຫລັ້ມ ໔
ຊຸນ" ກົນສີລະປະກອນ:" ປາຍກະບົດວຽງຈັນ (ພາສາໄທ )
ບາງກອກ. ໂສພົນ ( Sophon ) ໑໙໔໓ ໜ້າ ກ ເຖິງ
໑໐.

(ສີ໑) ເອກະສານ ເບີກເນ ( The BURNEY Papers ) ເຫລັ້ມ ໔. ພາກ ໔, ນ້າ ໔໖.

(ສີ໔) ເອກະສານ ເບີກເນ( The BURNEY Papers ) ເຫລັ້ມ ໔, ພາກ ໔ , ໜ້າ ໑໔.

(ສີສີ) " ຊາວໄທໄດ້ເບິ່ງສົນທິສັນຍາໄປໃນແງ່ຄວາມຈຳ
ເປັນທາງດ້ານການເມືອງ " ອັນນີ້ແມ່ນຄວາມສັງເກດຂອງ ເວ
ລາ ( VELLA ):" ສະໜາມໃບສະໄໝ ລາຊະການ
ທີ ສີ " ໜ້າ ໑໔໑.

(໓໔) ຈອນ ຟ.ເຄດີ (     John F.CADY     )
"ການຂະຫຍາຍຕົວດ້ານປະຫວັດສາດຂອງອາຊີອາຄະເນ" ( ພາສາອັງກິດ ) ແມກ ກລາວ-ຮິລ ( Mc GRAW-HILL     ) ບຸກ ( Book     ) ນີວຢອກ ປີ ໑໙໖໔, ໜ້າ ໓໓໔.

(໓໕) ໃນລາຍງານສະບັບໜຶ່ງລົງວັນທີ ໒ ຕຸລາ ໑໘໒໕ ຈອນ ຄລາເຟີດ(John CRAWFURD) ທີ່ມາປະຕິບັດໜ້າທີ່ ຢູ່ສິງກະໂປໄດ້ບັນທຶກກ່ຽວກັບເຫດການນີ້ວ່າ : ຂ້າພະເຈົ້າໄດ້ລົມກັບເຈົ້ານາຍ ສະຫຍາມ ໒ ຄົນຢູ່ທີ່ບາງກອກເຂົາເຈົ້າໄດ້ ເວົ້າວ່າເຂົາເຈົ້າຈະປີຕິຊົມຊື່ນຖ້າວ່າອັງກິດໄດ້ເຂົ້າມາຍຶດເອົາ ປະເທດສະຫຍາມແລະເຂົາເຈົ້າຈະປະກອບອາວຸດໃຫ້ ໑໒-໔໐ ພັນຄົນເພື່ອລຸກຮື້ຂຶ້ນເພື່ອເຮັດໃຫ້ເປົ້າໝາຍດັ່ງກ່າວປະກົດ ເປັນຈິງຂ້າພະເຈົ້າໄດ້ຕອບເຂົາເຈົ້າວ່າ :ພວກທ່ານຄວນລໍຖ້າເວລາມາເຖິງແລ້ວ ພວກທ່ານຫາກຈະໄດ້ມາຢູ່ກ້ອງອຳນາດຂອງ ອັງກິດ " ເອກະສານ ເບີກເນ ( The Burney Papers     ) ເຫຼັ້ມ ໒ . ພາກ ໔ ໜ້າ ໑໔ ). ພວກເຮົາອາດຈະ ເຫັນໄດ້ວ່າ : ອີກຢ່າງໜຶ່ງວ່າເຈົ້າຊີວິດ ລາຊະການທີ ໓ ກໍບໍ່ໄດ້ມີຄວາມນິຍົມຊົມຊອບເທົ່າໃດເພາະກ່ອນຈະຂຶ້ນຄອງ ລາຊະບັນລັງນັ້ນເພິ່ນກໍໄດ້ຖືກໜັງສືບັດສົນເທ່ກ່າວໂຈມຕີເພິ່ນ.(ຂໍໃຫ້ເບິ່ງປຶ້ມຂອງເຈົ້າພະຍາດຳລົງ ລາຊານຸພາບ:" ພະລາຊະພົງ ສາວະດານ ກຸງລັດຕະນະໂກສິນ ລາຊະການທີ ໒ "(ພາສາໄທ)ບາງກອກ. ຄຸລຸສະພາ. ໑໙໗໓. ໜ້າ ໑໖໕-໑໖໖;

(ນັຜ) ທູດອັງກິດ ຈອນ ຄລາເຟີດ ( John CRAWFURD)ໄດ້ຂຽນວ່າ:" ການຢ້ຽມຢາມຂອງຜູ້ນຳລາວຜູ້ໜຶ່ງ ໃນຕອນແລງມື້ນີ້ ( ໑໙ ພຶດສະພາ ໑໘໒໒ ). ຂ້າພະເຈົ້າໄດ້ ຮັບການຢ້ຽມຢາມຖາມຂ່າວຈາກຜູ້ນຳຊາດໜຶ່ງ; ຂ້າພະເຈົ້າກໍບໍ່ໄດ້ ຖືກຕ້ອນຮັບດີແບບນີ້ຈັກເທື່ອເນື່ອງຈາກວ່າເຮືອນຂອງຂ້າພະເຈົ້າ ຕິດກັບເຮືອນຂອງພະຄັງ ( ທີ່ເປັນ ລັດຖະມົນຕີຂອງ ສະຫຍາມ) ແລະຍ້ອນຢ້ານມີການສົງໄສຈາກ ລັດຖະບານ ສະຫຍາມຈຶ່ງເຮັດ ໃຫ້ຫລາຍຄົນບໍ່ກ້ານາຢ້ຽມຢາມຂ້າພະເຈົ້າທັງທີ່ວ່າເຂົາເຈົ້າ ກໍມີ ເຈດຕະນາດີ ທີ່ຈະຢາກມາຢ້ຽມຢາມຂ້າພະເຈົ້າ. ທ່າທີຂອງ ຜູ້ ນຳລາວຜູ້ນີ້ກໍເປັນໜ້າພິຈາລະນາ. ໃນເວລາເຂົາເຈົ້າເຂົ້າມາ ໃນຫ້ອງເຮືອນຂອງ ຂ້າພະເຈົ້ານັ້ນ, ຂ້າພະເຈົ້າໄດ້ເຊີນ ເຂົາ ເຈົ້ານັ່ງຕັ່ງ. ແຕ່ກ່ອນທີ່ເຂົາເຈົ້າຈະນັ່ງລົງນັ້ນ ເຂົາເຈົ້າໄດ້ກົ້ມ ຫົວນົບສາມເທື່ອໄປທາງທິດຂອງພະລາຊະວັງ (ຂອງເຈົ້າຊີວິດສະ ຫຍາມ ລາຊະການທີ ໒ ). ອີກສາມເທື່ອໄປໃນທິດຂອງເຮືອນ ຂອງພະຄັງ ແລະ ອີກສາມເທື່ອໄປຍັງບຸກຄົນທີ່ຢູ່ຕໍ່ໜ້າເຂົາເຈົ້າ ການສົນທະນາຂອງຜູ້ກ່ຽວດຳເນີນໄປດ້ວຍ ບັນຍາກາດທີ່ເຕັມໄປ ດ້ວຍນ້ຳໃສໃຈຈິງ ແລະ ຄວາມສະຫລຽວສະຫລາດ ແລະຜູ້ກ່ຽວ ກໍເປັນຄົນທີ່ເກັບກຳສະພາບການຂອງປະເທດຕົນເອງໄດ້ ຢ່າງ ໜັກແໜ້ນ ແລະ ປະເທດຂອງຜູ້ກ່ຽວກໍເປັນສ່ວນໜຶ່ງທີ່ ກວ້າງ ໃຫຍ່ ແລະ ເປັນໜ້າສົນໃຈຂອງລາຊະອານາຈັກສະຫຍາມແລະ ຊາວ ຢູໂລບ ເຊິ່ງມີຄວາມຮູ້ເລັກນ້ອຍກ່ຽວກັບປະເທດນັ້ນ "

( " ຈອນ ຄລາເຟີດ ( John CRAWFURD )

" ໜັງສືຊີວຈຳ"... ໜ້າ ໒໔໐ ) ຂໍ້ມູນອັນເລະອຽດ ທີ່ຈອນ ຄລາເຟີດ ( John CRAWFURD ) ໄດ້ພິມເຜີຍແຜ່ກ່ຽວກັບປະເທດລາວພາໃຫ້ພວກເຮົາເຊື່ອແນ່ວ່າແຂກມາ ຢ້ຽມຢາມ ຈອນຄລາເຟີດ ( John CRAWFURD ) ນັ້ນແມ່ນເຈົ້າອະນຸເອງ, ເນື່ອງຈາກວ່າອີງຕາມຄວາມເວົ້າຂອງຈອນຄລາເຟີດ ( John CRAWFURD ), ແຂກຜູ້ມາຢ້ຽມຢາມເປັນ:" ຫົວໜ້າຂອງປະເທດໜຶ່ງທີ່ເປັນສ່ວນໜຶ່ງ ອັນກວ້າງໃຫຍ່ ແລະ ໜ້າສົນໃຈຂອງສະຫຍາມ ", ປະໂຍກນີ້ ກໍແມ່ນປະໂຍກ ທີ່ຊາວຢູໂລບໃຊ້ເພື່ອເຈາະຈົງໃສ່ ລາຊະ ອານາຈັກວຽງຈັນ ແລະເຈົ້າຊີວິດຂອງລາຊະອານາຈັກນັ້ນ ເພື່ອຄວາມເຫັນອັນດຽວກັນ ກັບພວກເຮົາ, ຂໍໃຫ້ເບິ່ງປຶ້ມຂອງເຈົ້າ ພະຍາດຳລົງລາຊານຸພາບ ( ເອກະສານ ອ້າງອີງມາຂ້າງເທິງ ນັ້ນແລ້ວ ) ເຫລັ້ມ໒ ໜ້າ ໑໕໔-໑໕໕. ຂໍໃຫ້ເບິ່ງໃນ ທຳນອງດຽວກັນປຶ້ມຂອງທ້າວ ຍຸ່ນ ອ່ອນພົມ( ThaoYoune OONEPHOM ):" ພົງສາວະດານລາວສະໄໝ ຕົກເປັນຫົວເມືອງຂຶ້ນຂອງປະເທດສະຫຍາມ ແລະ ປະເທດຝະລັ່ງເສດ"

ວຽງຈັນ .໑໙໗໑, ໜ້າ ໒໐;ພັນສາ ສິນສະຫວັດ:" ຄວາມສຳຄັນ ລະຫວ່າງ ກຸງເທບ ແລະ ເມືອງ ວຽງຈັນໃນລາຊະສະໄໝ ພະບາດ ສົມເດັດ ພະນັ່ງເກົ້າເຈົ້າຢູ່ຫົວ. ພສ. ໒໓໖໗-໒໓໗໐ ". ວິທະຍານິພົນ ມະຫາວິທະຍາໄລ ສິລະປະກອນ . ບາງກອກ. ໑໙໗໘. ໜ້າ ໖໐.

(໖໗) ອັນນີ້ແມ່ນຄວາມເວົ້າຂອງອາຈານ ຟະລັ່ງ ເລີລູຍແຢ ( LE RUYER ) ໃນຄຳປາໄສໃນໂອກາດພິທີມອບບຳເນັດຢູ່ໂຮງຮຽນ ອຸດົມວຽງຈັນໃນວັນທີ ໒໘ ມິຖຸນາ. ໑໙໗໑ ຜູ້ກ່ຽວໄດ້ເວົ້າວ່າ:" ປະຫວັດສາດອາດມີບົດບາດສົ່ງຄືນເໝືອນດັ່ງຢູ່ໃນຢູໂຣບໃນສະຕະວັດທີ ໑໙ ໂດຍສະເພາະວິລະບູລຸດຂອງລາວບາງຄົນໃນສະໄໝສັກດີນາ ອາດເປັນສິ່ງລະດົມຈິດໃຈ ໄດ້ ແລະ ຂ້າພະເຈົ້າຄິດເຖິງ ຟ້າງຸ່ມທີ່ເປັນນັກກອບກູ້, ສາມແສນໄທທີ່ເປັນນັກຈັດຕັ້ງ, ເສດຖາທິລາດທີ່ເປັນນັກກໍ່ສ້າງແລະບູລະນະ, ເຈົ້າອະນຸທີ່ເປັນນັກຕໍ່ສູ້ເພື່ອເອກະລາດແຫ່ງຊາດ ...".

(໖໘) ສະລອງ ສູນທລາວານິດ :" ສຳພັນທະພາບໄທ-ລາວກ່ອນສະຕະວັດທີ ໒໐ ". ຢູ່ໃນປຶ້ມຂອງໂຄງການປີ ສັນຕິພາບ ໒໕໒໙ " ສຳມະນາ ສຳພັນທະໄມຕີ ໄທ-ລາວ, ໒໑ ມິຖຸນາ ໒໕໒໙. ໜ້າ ໘. ຄວາມເຫັນອັນນີ້ກໍກົງກັນຢ່າງ ພິສະດານກັບທັດສະນະ ລວມໆ ທີ່ມີຢູ່ໃນສະຕະວັດທີ ໑໙ ໃນ ເວລາເກີດເຫດຕົວຢ່າງ: ຟລັງຊິດ ກາກນີເອ ( Francis GARNIER ) ໄດ້ຂຽນວ່າ:" ໃນປີ ໑໘໖໗, ພວກເຈົ້າວຽງຈັນໄດ້ພະຍາຍາມອີກເທື່ອໜຶ່ງເພື່ອປະກາດເອກະລາດຂອງລາວ; ແຕ່ການປາບປາມກໍ່ເໝືອນສາຍຟ້າແລບແລະ ໂຫດຫ້ຽມໄປພ້ອມ ...". ( ໜ້າ ໕໕ ); " ເຈົ້າຊີວິດ ອະນຸໄດ້ຂໍຢ່າງອົບອຸ່ນໄປຍັງຊຽງໃໝ່ເພື່ອໃຫ້ຊຽງໃໝ່ເຂົ້າຮ່ວມກອບກູ້ເອົາເອກະລາດຂອງຊາດລາວ " ( ໜ້າ ໖໘໘ ).ປຶ້ມ

ຂອງ ຟລັງຊິດ ກາກນີເອ ( Francis GARNIER )
" ການເດີນທາງສຳຫລວດອິນດູຈີນ ( ພາສາຝະລັ່ງ )ວາລະ
ສານຮອບໂລກ ( Revue tour du Monde )
ປາລີ ( Paris ) ປີ ໑໘໗໐-໑໘໗໑. ສ່ວນພະລາຊະ ພົງ
ສາວະດານໄທເອງກໍໄດ້ເວົ້າວ່າເຈົ້າອະນຸໄດ້ເວົ້າ ໃນທຳນອງ
ດຽວກັນຄືໂດຍໄດ້ເວົ້າບຳຄືນໄກຊິດດັ່ງນີ້:" ການເປັນ( ເມືອງ
ຂຶ້ນ )ທີ່ໜັກໜາແລ້ວ ບໍ່ຄວນເຮົາຈະເປັນເມືອງຂຶ້ນ ... "
( ເຈົ້າພະຍາ ທິບພະກາລະວົງ. ພະລາຊະພົງສາວະດານ ກຸງ
ລັດຕະນະໂກສິນ ລາຊະການ ທີ ໓ ເຫລັ້ມ໑ ບາງກອກ ຄູລູສະ
ພາ ປີ ໑໙໓໑. ໜ້າ ໓໙ ) ນອກນັ້ນ, ນັກປະຫວັດສາດໄທທີ່
ເປັນເຊື້ອສາຍກັບກະສັດວຽງຈັນຄື ພະຍາ ປະມວນ ວິຊາພູມ -
(Phraya Pramouane visaphoum)ໄດ້ຂຽນວ່າ:ພະເຈົ້າອະ
ນຸລູດລາຊາ, ພະເຈົ້າລ້ານຊ້າງຣົ່ມຂາວວຽງຈັນ( ເຊິ່ງໄທ ໃດ້
ນັກເອີ້ນສັ້ນໆວ່າ:" ເຈົ້າອະນຸ " ຫລື " ເຈົ້າອະນຸວົງ " )
ເຫັນວ່າເມືອງລ້ານຊ້າງເຄີຍເປັນປະເທດ ເອກະລາດ ມາດົນ
ນານແລ້ວແຕ່ມາເສຍທີ່ແກ່ກອງທັບຂອງກຸງທົນບຸລີເມືອງລ້ານຊ້າງ
ວຽງຈັນ ຈຶ່ງຕົກໄປເປັນປະເທສະລາດຂອງກຸງເທບພອມທັງເສຍ
ພະແກວ ມໍລະກົດ ເຊິ່ງເປັນ ສີພະນະຄອນໄປດ້ວຍຈຶ່ງໄດ້ຕົກລົງ
ໃຈຈະທຳສົງຄາມກູ້ຊາດ ..."ພະຍາປະມວນ ວິຊາພູມ:" ພົງ
ສາວະດານເມືອງລ້ານຊ້າງ " ( ພາສາໄທ ) ບາງກອກ.໒໕
ກຸມພາ, ໒໔໗໔ (໑໙໓໑). ພິມຄັ້ງທີ ໒ ໜ້າ ໔໓. ເຈົ້າລາ
ຊະວົງ, ຜູ້ເປັນລູກຊາຍຂອງເຈົ້າອະນຸແລະທັງເປັນຕົວຈັກ ຫລັກ

ແຫລ່ງຂອງການລຸກຮືຂຶ້ນຂອງປະຊາຊົນລາວປີ ໑໘໒໗ ນັ້ນກໍໄດ້ມີທັດສະນະອັນດຽວກັນຕາມທີ່ເຈົ້າລາຊະວົງ ເທີກົມໝື່ນຈະລັດສະພົງປະຕິທານ(Ratsavong charathsphon patithane) ໄດ້ບັນທຶກໄວ້ວ່າ:"... ເມື່ອເວລາເດີນ ( ຈາກບາງກອກ) ກັບຄືນເມືອວຽງຈັນນັ້ນ, , ລາຊະວົງຮອງລົງມາແຕ່ຫລັງ ຊາງເວົ້າກັບພວກບ່າວໄພ່ເປັນຄວາມລາວວ່າ:" ເຮົາຢູ່ເມືອງໄທ ບໍ່ໄດ້ກິນເຂົ້າໃໝ່ທັງປາກໍ່(ເປັນ) ກາງ,ກັບໄປເມືອງລານຊາງຈະໄດ້ກິນເຂົ້າໃໝ່ ". ແລວກໍ່ຟາວເດີນທາງກັບຄືນຮອດ ເມືອງວຽງຈັນກໍ່ຟ້າວເຂົ້າເຝົ້າເຈົ້າອະນຸຜູ້ເປັນບິດາແລ້ວເວົ້າວ່າ : " ຂ້າພະເຈົ້າບໍ່ຂໍເປັນ (ຂີ້) ຂ້າ (ຂອງ) ພວກໄທອີກແລວ. ບັດນີ້ຈະຕ້ອງຄິດການໃຫຍ່ ບິດາຈະເຫັນເປັນປະການໃດ " ( ສ. ພລາຍນ້ອຍ, ສາລານຸກົມປະຫວັດສາດໄທ, ບາງກອກ, ຮ່ວມສະສົມ, ປີ ໑໙໒໔, ໜ້າ ໘໔໖-໘໔໗ ), ເວົ້າລວມ ແລ້ວກ່ຽວກັບເລື່ອງນີ້ຂໍໃຫ້ເບິ່ງປຶ້ມຂອງມະຫາສິລາ ວີລະວົງ:"ພະລາຊະປະຫວັດຂອງສົມເດັດ ພະເຈົ້າອະນຸວົງ, ກະສັດອົງ ສຸດທ້າຍແຫ່ງພະລາຊະວົງວຽງຈັນ ". ກະຊວງ ທຳມະການ ວຽງຈັນປີ ໑໙໖໙, ໗໔ ໜ້າ, ຂໍໃຫ້ເບິ່ງເອັ້ນດຽວກັນ ບົດທີ ໓: " ເຈົ້າອະນຸກູ້ອິດສະລະພາບແຍກຈາກໄທ, ສະຫຍາມ ", ຢູ່ໃນ ປຶ້ມຂອງ ເຕີມ ສິງຫາສະຖິດ :" ຝັ່ງຂວາແມ່ນ້ຳຂອງ" ສຳນັກ ພິມຄັງວິທະຍາ ບາງກອກ.ປີ ໑໙໕໖. ແຕ່ ໑໔໙ ໄປ ແລະ ຂໍໃຫ້ເບິ່ງບົດທີ ໔ :" ການກູ້ອິດສະລະພາບຂອງເຈົ້າ ອະນຸວົງ ຢູ່ໃນປຶ້ມຂອງ ເຕີມ ວິພາຈະນະກິດ :" ປະຫວັດສາດລາວ" (ພາ

ສາໄທ ) ມູນບັທຶກໂຄງການຕຳລາສັງຄົມສາດ ແລະ ມະນຸດສາດ-ບາງກອກ, ສິງຫາຄົມ ໔໕໖໐ ( ໑໙໘໗ ) ແຕ່ໜ້າ ໘໓ໄປ.

(໖໘) ກ່ຽວກັບຊຸດີນການກອບກູ້ເອົາເອກະລາດຂອງເຈົ້າອະນຸນັ້ນກໍໄດ້ສະແດງອອກໂດຍສະເພາະໃນປີ ໑໘໐໔ໃນໂອກາດທີ່ເພິ່ນໄດ້ສົ່ງທູດໄປຫາເຈົ້າຈັກກະພັດ ຢາລອງ (Gia Long) ເພື່ອທາບທາມຈະປົດແອກຄອບຄອງຂອງສະຫຍາມຢູ່ລາວ- ເຈົ້າຈັກກະພັດ ຢາລອງ ( GIALONG ) ກໍໄດ້ປະຕິເສດ ອໍໃຫ້ເບິ່ງປຶ້ມຂອງໂປນເລີ ບູລັງເຊ "ປະຫວັດສາດລາວ..." (ພາສາຝະລັ່ງເສດ) ປາລີ( ) ປລົງ) ການພິມ ໑໙໖໔. ໜ້າ ໑໐໔.ອໍໃຫ້ເບິ່ງເຊັ່ນດຽວກັນປຶ້ມຂອງຫງວນເລທີ(ຜູ້ຮັບໂຮມເອກະສານ):"ປະມວນ ເອກະສານ ໂບຮານຫວຽດທີ່ກ່ຽວພັນ ກັບລາວ ( ພາສາຫວຽດ ) ສະຖາບັນຄົ້ນຄວ້າກ່ຽວກັບ ອາຊີ ອາຄະເນ . ກຳມະການ ວິທະຍາສາດ ສັງຄົມຂອງຫວຽດນາມ - ຮ່າໂນ້ຍ ປີ ໑໙໗໗ ໜ້າ ໑໖໔. ໃນເວລາທີ່ເຈົ້າອະນຸແລະປະຊາຊົນໄດ້ຮອບຮົມ ຕ້ານທານ ແຜນການຂອງສະຫຍາມເພື່ອ ກືນກິນລາວດ້ວຍວິທີການສັກເລກປະຊາຊົນລາວ, ເຈົ້າອະນຸ ໄດ້ຮັບຄະນະທູດໜຶ່ງຂອງເຈົ້າຈັກກະພັດມິງມັ່ງ( Minh Manh ) ໃນເດືອນພະຈິກ-໑໘໒໗,ເພື່ອນຳເອົາຄວາມເວົ້າຂອງເຈົ້າ ຈັກກະພັດມິງມັ່ງມາເຖິງເຈົ້າອະນຸ ໂດຍຫ້າມບໍ່ໃຫ້ເຈົ້າອະນຸ ສ້າງຄວາມວຸ້ນວາຍໃຫ້ສະຫຍາມຫລືປົດ ແອກຄອບຄອງ ຂອງສະຫຍາມຢູ່ລາວ, ອໍໃຫ້ເບິ່ງເອກະສານທີ່ຮັກສາໄວ້ຢູ່ ຫໍສະ ມຸດ

ແຫ່ງຊາດຂອງໄທ ( ພະແນກ ເອກະສານເກົ່າ ) " ເອກະສານລາຊະການທີ ມີ (໑໙) ໑໑໘໙/໔. ບັນທຶກຂອງ ພະຍາເພັດພິໄຊ ສົ່ງເຖິງພະຍາ ສີສະຫະທິບ. ລົງວັນທີ໑໗.໔.໑໘໒໗" ຂໍໃຫ້ເບິ່ງທັດສະນະດຽວກັນກ່ຽວກັບທ່າທີຂອງລາຊະວົງເວັຕໍ່ເຈົ້າອະນຸໃນບັນດາບົດຄວາມດັ່ງຕໍ່ໄປນີ້ ; ຟາມຫງວນລອງ ( Pham Nguyen Long ) ," ການລຸກຮືຂຶ້ນຂອງປະຊາຊົນລາວ-ພາຍໃຕ້ການນຳພາຂອງເຈົ້າອະນຸ (໑໘໒໗-໑໘໒໙) ຕ້ານແອກຄອບຄອງຂອງສະຫຍາມ" ( ພາສາຫວຽດ ) ວາລະສານ ຄົ້ນຄວ້າກ່ຽວກັບປະຫວັດສາດ ຮ່າໂນ້ຍ ປີ ໑໙໗໒. ສະບັບເລກ ທີ ໑໔໓, ໜ້າ ໑໔ ບຸຍກວາງຕຸງ:" ເຈົ້າອະນຸ, ເຈົ້າຊີວິດວຽງຈັນຕາມເອກະສານຫວຽດ" (ພາສາຝະລັ່ງເສດ) ວາລະສານ-ຂອງສະມາຄົມສຶກສາກ່ຽວກັບອິນດູຈີນ. ໄຊງ່ອນປີ ໑໙໔໘, ໜ້າ ໔໐໑-໔໐໖. ຊາກເລີ ອາກແຊມໂປລ ( Charles Archaimbault ):" ພົງສາວະດານຂອງອະດີດລາຊະອານາຈັກ ຊຽງຂວາງ " ( ພາສາຝະລັ່ງເສດ ). ວາລະສານຂອງສະຖາບັນຝະລັ່ງເສດຄົ້ນຄວ້າກ່ຽວກັບຕາເວັນ ອອກໄກ. ປີ ໑໙໖໗, ໜ້າ ໕໘໒, ໖໒໐,໖໔໔, ພົນສາ ສົນສະຫວັດ( ເບິ່ງເອກະສານອ້າງອີງຂ້າງເທິງນັ້ນ ) ໜ້າ ໙໓-໙໖ ວູດຊາຍເດີ ( WOODSIDE A.B. ) :" ຫວຽດນາມແລະຕົວຢ່າງຂອງຈີນ- ການຄົ້ນຄວ້າເພື່ອສົມທຽບວິທີປົກຄອງຂອງລາຊະວົງ ຫງວນ ແລະ ຂອງ ລາຊະວົງ ຊິງ ( NGUYEN Ching ) ໃນຕົ້ນທຳອິດຂອງ ສະຕະວັດທີ ໑໙" ( ພາສາ

ອັງກິດ ). ການພິມຂອງມະຫາວິທະຍາໄລຮາກວາດ(Harvard University ). ປີ ໑໙໗໑. ໜ້າ ໒໕໘-໒໕໙.

(໔໐) ກ່ຽວກັບບັນຫານີ້ຂໍໃຫ້ເບິ່ງເອກະສານ ຄລາເຟີດ ( The CRAWFURD Papers ) ໜ້າ ໓໑-໓໙.

(໔໑) ເອກະສານ ຄລາເຟີດ ( The CRAWFURD Papers ) ໜ້າ ໒໖.

(໔໒) ເອກະສານ ຄລາເຟີດ ( The CRAWFURD PAper ) ໜ້າ ໕໓.

(໔໓) ຈອນ ຄລາເຟີດ ( John CRAWFURD ) " ໜັງສືຊົງຈຳ ... " ໜ້າ ໔໓໖" ດິນແດນສ່ວນໃຫຍ່ຂອງ ລາວ" ( ໜ້າ ໔໓໗ ). ເອກະສານ ເບີກເນ ( The Burney Papers ) ເຫລັ້ມ ໒. ພາກ ໔, ໜ້າ ໘໒ ໄດ້ຈາະຈົງວ່າ :" ປະເທດລາວ, ສ່ວນໃຫຍ່ໄດ້ຖືກ ລາຊະ ອານາຈັກສະຫຍາມຍຶດຄອງໃນປັດຈຸບັນ ", ສ່ວນຊາກເລີ ກູດ ສະລາຟ(Charles GUTZLAAFF)ໄດ້ຂຽນວ່າ:" ລາຊະອາ ນາຈັກ ສະຫຍາມ ແມ່ນປະກອບດວຍສ່ວນໃຫຍ່ຂອງປະເທດລາວ ..." ( ໜ້າ໒໐ ) ຂໍໃຫ້ເບິ່ງປື້ມຂອງກູດສະລາຟ (GUTZLAFF) ໜັງສືກ່ຽວກັບການເດີນທາງສາມເທື່ອງມາຈີນໃນ ປີ ໑໘໓໑, ປີ ໑໘໓໒ ແລະ ປີ ໑໘໓໓ ແລະ ການບັນທຶກກ່ຽວ

ກັບສະຫຍາມ ..." ( ພາສາອັງກິດ ) ລອນດອນ, ແວດ ສະເລ ( Westley ) ແລະ ເດວິດ ( Davis ) ການພິມ ປີ ໑໘໓໔.

(໔໔) ອາກເທີກ ໂດມແມນ ( Arthur DOMMEN ) " ປະເທດລາວ ອໍາມູນແຈ ຂອງອິນດູຈີນ " ( ພາສາອັງກົດ ) ແວດສະວິວ ໂປລຟາຍເລີ ( Westview Profiles ) ນິວຢອກ. ໑໙໘໓-໑໘໔ ໜ້າ ແພລີໂອນ ( PERREOL ) "ປະເທດລາວ ທາງຄົບຕອງຍຶດເອົາ" ວາລະສານ ປາລີ - ( La Revue de Paris ). ເດືອນ ໑-໑໙໕໐ ໜ້າ ໕໗-໖໖. ວາລະສານ ຢູແອດສ໌ ແອນວອນລີປອກ (U.S News and world Report ):" ລາວກາຍເປັນແດງ , ລາວເປັນອໍາມູນແຈເພື່ອອາຊີແຫບໍ ? " ສະບັບລົງວັນທີ ໑໗-໒-໑໙໖໑, ໜ້າ ໑໒-໑໑.

(໔໕) ອານແບກ ເຊບຕັງ ( Albert SEPTANS ) "ການສ້າງຕັ້ງໃນຕອນຕົ້ນຂອງອິນດູຈີນຝະລັ່ງ ຕາມດັ່ງສາງເອກະສານຂອງກະຊວງກອງທັບເຮືອແລະຫົວເມືອງຂຶ້ນແລະຕາມບັນທຶກຊ່ວຍຈໍາຂອງສະໄໝນັ້ນ " ( Les commencements de l'Indochine Française d'après les archives du Ministère de la Marine et des Conies et les Memoires du temps (ພາສາຝະລັ່ງ)

ປາຣີ (Paris) ຊາລລາເເມນ (Challamel) ການພິມ. ໑໘໘໗ . ໜ້າ ໑໙໙.

(໔໖) ເອກະສານເບີກເນ(The Burney Papers) ເຫລັ້ມ ໒. ພາກ ໔. ໜ້າ ໘໒.

(໔໗) ເອກະສານ ຄລາເຟິດ( The CRAWFURD Papers ) ໜ້າ ໖໔, ເອກະສານ ເບີກເນ(The Burney Papers ) ເຫລັ້ມ ໒, ພາກ ໔, ໜ້າ ໑໐໔.

(໔໘) ເອກະສານ ບັນທຶກຂອງລາຊະສະພາອັງກິດ-ເຫຼັ້ມ ໔໐,ປີ ໑໘໖໗:" ໜັງສືຂອງຮ້ອຍເອກ ແມກເລອົດ ແລະຂອງ ດຣ. ລິຊາກຊອນ " ( W.C McLEOD and Dr D. RICHARDSON ). ໜ້າ ໓, ນີເເຊນ ບລາຍເລ ( Nigel BRAILEY ):" ຕົ້ນເຫດຂອງ ຂະ ບວນຂອງສະຫຍາມໜຶ່ງໜ້າເຂົ້າໄປຟາກຕາເວັນຕົກຂອງລາວ, ປີ ໑໘໔໐ ເຖິງປີ ໑໘໙໒ ". ວິທະຍານິພົນ ມະຫາວິທະຍາໄລ ລອນດອນ ປີ ໑໙໖໘, ໜ້າ ໖໓.

(໔໙) ເອກະສານ ເບີກເນ ( The Burney Papers) ເຫລັ້ມ ໒. ພາກ ໑. ໜ້າ ໑໖ ແລະ ໔໖.

(໔໐) ເອກະສານ ເບີກເນ ( The Burney Papers ) ເຫລັ້ມ ໑, ພາກ ໑, ໜ້າ ໔໑ ແລະເຫຼັ້ມ ໒, ພາກ ໔, ໜ້າ ໘ ແລະ ໑໑໓.

(໔໑) " ພົນຂອງສົງຄາມພະມ້າໄດ້ນຳພາໃຫ້ມີການ ປຸ່ກປັ້ນໃນດ້ານແນວຄິດຂອງພວກຜູ້ນຳສະຫຍາມຕໍ່ອຳນາດ ອິດທິພົນຂອງອັງກິດ ... ການເຊັນສັນຍາ ເບີກເນ ( Treaty's Burney ) ໄດ້ເຮັດໃຫ້ສະຫຍາມຕ້ອງນັບຖື ລັດຖະບານ ອັງກິດ ..." ແຕ່ຫລັງຈາກທີ່ ເບີກເນ ເດີນທາງອອກຈາກ ບາງກອກແລ້ວ. ຄວາມຢ້ານຂອງຊາວສະຫຍາມຕໍ່ກອງທັບອັງກິດທີ່ຈະ ເຂົ້າມາຍຶດເອົາເມືອງສະຫຍາມນັ້ນແມ່ນໃຫຍ່ໂຕທີ່ສຸດແລະຄວາມພະຍາຍາມທຸກຢ່າງຂອງພວກຂ້າພະເຈົ້າເພື່ອລະງັບຂ່າວອະກຸສົນດັ່ງກ່າວ ແລະເຮັດໃຫ້ຜູ້ນຳໄທຫຼຸ່ນຫ່ຽວນັ້ນບໍ່ມີຜົນເຊື່ອຖືຂອງຜູ້ນຳໄທຕໍ່ ການທຳນາຍດັ່ງນາຍ. ກົງກັນຂ້າມຍິ່ງເຮັດໃຫ້ພວກເຂົາເຈົ້າມີ ຄວາມຢ້ານເພາະການທຳນາຍໄດ້ເວົ້າວ່າອັງກິດຈະມາຍຶດເອົາສະຫຍາມ ແລະຜູ້ນຳໄທກໍໄດ້ຄິດວ່າໃນທີ່ສຸດ ກໍຈະເປັນໃນທຳນອງນັ້ນແທ້ . ເອກະສານ ເບີກເນ ເຫລັ້ມ ໒. ພາກ ໔. ໜ້າ ໒໒໔.

(໔໒) ເອກະສານ ເບີກເນ(The Burney Papers) ເຫລັ້ມ ໒ . ພາກ ໔, ໜ້າ ໘.

(໔໓) ຈ.ຟ. ກາດີ ( John-F. CADY )

( ເບິ່ງເອກະສານທີ່ກ່າວມາຂ້າງເທິງນັ້ນ ) ໜ້າ ໓໓໔.

(໕໔) ເອກະສານ ເບີກເນ(The Burney Papers) ເຫຼັ້ມ ໔. ພາກ ໑, ໜ້າ ໘໙.

(໕໕) ຫໍສະໝຸດ ແຫ່ງຊາດ ຂອງໄທ ( ພະແນກ ເອກະສານເກົ່າ ) " ເອກະສານ ລາຊະການທີ ໓ (໖) ໑໑໘/໒໐ ໜັງສືຂອງເຈົ້າວຽງຈັນເຖິງລາຊະການທີ ໓ ລົງວັນທີ ໑໕.໑-໑໘໒໗ ແລະ ເຖິງບາງກອກ ວັນທີ ໒໓.໒.໑໘໒໗. ໜັງສືສະບັບນີ້ສົ່ງເຖິງເຈົ້າຊີວິດໄທ ໄດ້ຖືກພິມລົງໃນປຶ້ມຫໍສະໝຸດແຫ່ງຊາດ " ຮ່ວມເອກະສານ ກ່ຽວກັບນະຄອນລາຊະສີມາ " ບາງກອກ, ພະຈັກວິທະຍາ ໑໙໖໘, ໜ້າ ໒໗-໒໙, ທະຫວັດ ປຸນໂນທົກ:" ລາຍງານກ່ຽວກັບພື້ນວຽງ: ບົດຄົ້ນຄວ້າກ່ຽວກັບ ວັນນະກຳອີສານ " ( ພາສາໄທ ) ບາງກອກ. ມະຫາວິທະຍາໄລ ທຳມະສາດ ໑໙໘໐ ໜ້າ ໑໕໕-໑໕໖.

(໕໖) ໃນເວລາເກີດເຫດການໃນປີ ໑໘໒໗ ມີຊາວເມືອງສະລະບຸລີທີ່ໄດ້ໃຫ້ການແກ່ກອງທັບໄທວ່າ: "(ໃນວັນທີ ໓໐-໔-໑໘໒໗ ) ຂ້າພະເຈົ້າໄດ້ໄປຍັງບາງກອກທາງເຮືອເພື່ອຊື້ເຄື່ອງ ໄດ້ພົບຄົນລາວຢູ່ບາງກອກພວກຄົນລາວນັ້ນໄດ້ເວົ້າວ່າ: (ເຈົ້າຊີວິດຂອງສະຫຍາມໄດ້ເຫັນດີໃຫ້ເຈົ້າວຽງຈັນເອົາຄອບຄົວຈາກ໔ບ້ານ ສະລະບຸລີກັບຄືນເມືອ ວຽງຈັນໝົດ ແລະ ເຈົ້າລາຊະວົງ ວຽງ

ຈັບຄໍໄດ້ລົງມາສະລະບູລີເພື່ອເອົາເຂົາເຈົ້າເມືອງວຽງຈັນ. ຂ້າພະເຈົ້າກໍໄດ້ກັບເມືອບ້ານດ້ວຍຄວາມຟ້າວຟັ່ງ. ແຕ່ກອງທັບລາວໄດ້ເອົາຄົນອອກຈາກບ້ານຂ້າພະເຈົ້າເມືອໝົດແລ້ວ, ສ່ວນເຮືອນແລະສາງເຂົ້າກໍບໍ່ໄດ້ຖືກຈູດ..." ຄຳໃຫ້ການນີ້ແມ່ນຖືກຮັກສາຢູ່ໃນ ຫໍສະໝຸດຂອງໄທ (ພະແນກຮັກສາ ເອກະສານເກົ້າ) "ເອກະສານ ປາງລາຊະການທີ ມີ (໒໐) ໑໑໘໙/໔ ຄຳໃຫ້ການຂອງ ຄົນນະຍາ ( ເທື່ອວັນທີ ໑໐.ຜ.໑໘໒໗ ). ສ່ວນເຈົ້າອະນຸເອງ ພາຍຫຼັງທີ່ວ່າໄປຂໍລີ້ໄພຢູ່ກັບຫວຽດນາມແລ້ວໄດ້ ຂຽນໜັງສືໄປຫາເຈົ້າ ຈັກກະພັດມິງມັ່ງວ່າ: " ຫວ່າງປີມັງ ມານີ້-ເຈົ້າຊີວິດ ສະຫຍາມໄດ້ໂຈມຕີເອົາດົງຫລັກຮວາຂອງລ້ານຊ້າງ, ຈັບເອົາປະຊາຊົນ, ຫລັງຈາກນັ້ນເຈົ້າຊີວິດລ້ານຊ້າງໄດ້ ໄປພົບປະກັບເຈົ້າຊີວິດສະຫຍາມທີ່ໄດ້ມອບປະຊາຊົນທີ່ຖືກຈັບໄປນັ້ນ ສົ່ງຄືນໃຫ້. ໃນເດືອນ ໒ປີນີ້ ເຈົ້າຊີວິດ ອານາຈັກລ້ານຊ້າງໄດ້ພາລູກຂອງຕົນຄື ລາຊະວົງ ແລະ ສຸທິສານ ... ໄປຮ່ວມພິທີ ສົ່ງສະການແມ່ເຈົ້າຊີວິດສະຫຍາມ, ພາຍຫລັງທີ່ວຽກການໄດ້ ສຳເລັດແລ້ວກໍຂໍກັບເມືອວຽງຈັນໂດຍຜ່ານເມືອງ ໂຄລາດທີ່ຂຶ້ນກັບດິນແດນ ສະຫຍາມ, ປະຊາຊົນເຂດນີ້ພ້ອມກັບປະຊາຊົນຫຼັກຮວາທີ່ຖືກບັງຄັບໄປຢູ່ດິນແດນຂອງສະຫຍາມໃນປີກ່ອນໆນັ້ນກໍໄດ້ ຫລັ່ງໄຫລຂໍກັບຄືນເມືອລ້ານຊ້າງນຳ ... ແລ້ວກໍເຫັນກອງທັບ ສະຫຍາມໄລ່ນຳຕີພວກເຈົ້າຊີວິດລ້ານຊ້າງແລະຈັບເອົາປະຊາຊົນທີ່ຂໍໄປນຳນັ້ນ ແລະ ໂຮມຢູ່ບ້ານ ຈຳລັດທີ່ຂຶ້ນກັບແດນດິນຂອງ ລ້ານ

ຊ້າງ ..." ປື້ມຂອງ ໂງກາວລັງ:" ເອກະສານບັນທຶກ ການປະພຶດຕໍ່ອານາຈັກ ລ້ານຊ້າງຂອງລາຊະວົງ ຫງວນ" ( ພາສາຫວຽດ ) ແປໂດຍ ສະຖາບັນຄົ້ນຄ້ວາ ກ່ຽວກັບ ອາຊີອາຄະເນ ຄະນະກຳມະການສັງຄົມສາດຂອງຫວຽດນາມ. ຮ່າໂນ້ຍ ປີ໑໙໗໗ ໜ້າ ໒. ໒ ແຫລ່ງຂ່າວທີ່ກ່າວມານີ້ກໍກົງກັນຢ່າງມະຫັດ ສະຈັນກັບການບອກເລົ່າກັນມາໃນຫລາຍເຊື່ນຄົນ ໃນໝູ່ປະຊາຊົນຢູ່ຮາບສູງໂຄລາດຕາມທີ່ສາດສະດາຈານ ສະເນີ ນາລະຄົນ ໄດ້ບັນທຶກໄວ້ດັ່ງຕໍ່ໄປນີ້:" ຊາບຈາກຄົນແກ່ຄົນເຖົ້າຜູ້ສົນໃຈ ເລື່ອງລາວຂອງວຽງຈັນຄັ້ງໂບຮານວ່າ : ເຈົ້າອະນຸບໍ່ໄດ້ເປັນ ກະບົດແຕ່ເຈົ້າອະນຸມາຖະຫວາຍບັງຄົມ ພະບໍລົມມະສົບ ລາຊະການທີ ໒ ແລ້ວກັບເມືອວຽງຈັນ ເວລານັ້ນຄົນໄທທີ່ມີເຊື້ອສາຍມາ ຈາກວຽງຈັນ ເຫັນວ່າສົ້ນແຜ່ນດິນ ລາຊະການທີ ໒ ແລ້ວ ກໍຢານວ່າບ້ານເມືອງຈະບໍ່ສົງບເນື່ອງຈາກວ່າ ລາຊະການທີ ໓ ຍັງມີສັດຕູຢູ່ຄືເຈົ້າຟ້າມົງກຸດ, ປະຊາຊົນເຫລົ່ານັ້ນຈຶ່ງໜີຕາມເຈົ້າອະນຸກັບມາວຽງຈັນ, ແຕ່ທາງຝ່າຍໄທເຂົ້າໃຈຜິດ" ສາດສະດາຈານສະເນີ ນາລະຄົນ :" ຊາວພູໄທ ", ບົດຄວາມພິມຢູ່ໃນ ວາລະສານ ອີສານຄະດີ ໜັງສື ຊຸດຄວາມຮູ້ ນໍລະດົກ ອີສານ ວິທະຍາໄລຄູ, ມະຫາສາລະຄາມ. ໑໕-໑໗, ສິງຫາ, ໒໕໒໑ (໑໙໗໘) ໜ້າ ໑໖໖.

(໕໗)" ໃນປີ ໑໘໒໕ ກໍເປັນປີທີ່ວ່າ ສະຫຍາມໄດ້ແຜ່ອາ

ມາຂອດໄປຍັງ ເຊລັງກໍ ແລະ ເປລັກ (Selangor and PERAK) ແລະ ໃນປີນັ້ນໄດ້ມີຜູ້ສຳເລັດ ລາຊະການຜູ້ໃຫມ່ແລະທັງກະທາຍສົງຄາມໄດ້ມາປະຈຳຫນ້າທີ່ຢູ່ ມາລາຍາ-ໃນເດືອນ ໔.໑໘໒໔ ຟູລແລກໂຕນ ( FULLERTON ) ກໍໄດ້ສົ່ງກອງທັບເຮືອອັງກິດໄປສະແດງ ແສງຍານຸພາບຢູ່ປາກນ້ຳຕລັງ ( Trang River ) ເພື່ອໃຫ້ສະຫຍາມຢຳເກງ, ເລື່ອງນີ້ກໍໄດ້ຮັບຜົນດີ..." (ວຽກຊິເນຍ ທອມສອນ Virginia THOMPSON -ເອກະສານທີ່ກ່າວມາຂ້າງເທິງນັ້ນ, ຫນ້າ ໑໔໐-໑໔໑ ) ໃນປີ ໑໘໒໗ ປາກົດວ່າ ຟູລແລກໂຕນ ( FULLERTON ) ກໍໄດ້ໃຫ້ກອງທັບເຮືອອັງກິດສະແດງແສນຍານຸພາບແບບດຽວກັນນີ້ແຕ່ເຈົ້ານາຍຂອງຟູລແລກໂຕນ ( FULLERTON ) ໄດ້ຮູ້ຂ່າວໄວ ແລະ ໄດ້ສັ່ງໃຫ້ ຟູລແລກໂຕນ ( FULLERTON ) ຢຸດການສະແດງ ແສນຍານຸພາບ, ຂໍໃຫ້ເບິ່ງເອກະສານ ເບີກເນ ( The Burney Papers ) ເຫລັ້ມ ໒ ພາກ ໓ ຫນ້າ ໒໓໒-໒໘໓ ລາຍງານທີ່ ນັກສືບຂອງ ສະຫຍາມທີ່ປະຈຳການຢູ່ ປີນັງ(Penang) ໄດ້ຢືນຢັນເຖິງການເຫນັງຕີງດັ່ງກ່າວຂອງກອງທັບອັງກິດ. ຂໍໃຫ້ເບິ່ງເອກະສານຢູ່ຫໍສະມຸດແຫ່ງຊາດຂອງໄທ ( ພະແນກຮັກສາ-ເອກະສານເກົ່າ ) " ເອກະສານ ລາຊະການທີ ໓ (໑໔) - ໑໑໘໘/໒໐ ( ກ່ຽວກັບເຫດການຢູ່ປີນັງ. ເດືອນ ໓- ໑໘໒໗) ແລະ ເອກະສານຫມາຍເລກ (໑໓) ໑໑໘໘/໒໐ ( ກ່ຽວ ກັບ

ເທດການຢູ່ມູນເມນ ( Moulmein ) ວັນທີ໑.໔.໑໘໒໗)

(໕໘) ຣອນ. ປະຫວັດສາດຂອງອາຊີອາຄະເນດັ່ງກ່າວມາ ຂ້າງເທິງນັ້ນ, ໜ້າ ໔໕໑,

(໕໙) ໂດມເມນ ( DOMMEN ):" ປະເທດລາວ. ຂໍສູນແຈຂອງອິນດູຈີນ " ດັ່ງກ່າວມາຂ້າງເທິງນັ້ນ. ໜ້າ ໒໒.

(໖໐) ກ່ຽວກັບທັດສະນະຂອງ ຕາກສິນ ຕໍ່ລາວ, ຂໍໃຫ້ເບິ່ງປຶ້ມຂອງ ນາກຕິນ ເນີປີຢັດ.( ) ( ຜູ້ແປແລະພິມ ):" ພະລາຊະພົງສາວະດານຂະເໝນ ". ວາລະສານຂອງ ສະມາຄົມກ່ຽວກັບອິນດູຈີນ. ປີ ໑໙໗໔. ໜ້າ ໖໘, ເຈົ້າຊີວິດ ນົງກຸດ ກໍໄດ້ຮັບຮູ້ສະພາບນີ້ໃນເວລາທີ່ເພິ່ນໄດ້ ເວົ້າສູ່ນັກບວດ ອາເມລິກາຟັງໃນວັນທີ ໓໐ ຕຸລາ. ໑໙໘໑ : "ຊາດຂອງຕົນເອງຄືຊາດຂອງສະຫຍາມກໍໄດ້ປະພຶດຢ່າງຮ້າຍກາດທີ່ສຸດໃນສົງຄາມຕ້ານ ພະມ້າ ແລະ ຕ້ານລາວ ", ( ຕອມລິນ TOMLIN J ): ໜັງສືຈົດຈຳຂຽນຢູ່ສິງກະໂປແລະສະຫຍາມແຕ່ເດືອນ ໔.໑໘໓໐ ຮອດເດືອນ ໑.໑໘໓໒ (ພາສາອັງກິດ ) ການພິມຂອງ ໄບດມາລາກາ ປີ ໑໘໓໒. ໜ້າ໕໗) ແລະ ຂໍໃຫ້ເບິ່ງ ເອກະສານ ເບີກເນ ( The Burney Papers ) ເຫຼັ້ມ ໒. ພາກ ໔ ໜ້າ ໕໑ ແລະ ໕໓.

(໕໑) ເອກະສານ ເບີກເນ ( The Burney Papers ) ເຫລັ້ມ ໑ ພາກ ໑ ໜ້າ ໒໔.

(໕໒) ເຈົ້າພະຍາທິພະກາລະວົງ:"ພະລາຊະພົງ ສາວະດານ ລາຊະການທີ ໓ ..." ( ເອກະສານທີ່ໄດ້ກ່າວມາຂ້າງເທິງນັ້ນ ) ເຫລັ້ມ ໒ ໜ້າ ໑໒໒.

(໕໓) ໝາຍເຫດ ແລະ ວິຈານ ຂອງຈະດິນ-ຕາເດີດສ໌ ຟລອດ( Chadin- Thadeus FLOOD) ຢູ່ໃນປຶ້ມ ຂອງ ເຈົ້າພະຍາ ທິພະກາລະວົງ ):" ພະລາຊະພົງສາວະດານກຸງລັດຕະນະໂກສິນ ລາຊະການ ທີ ໔ ", ( ຈະດິນ-ຕາເດີດສ໌-ຟລອດ ( Chadin- Thadeus FLOOD ) (ແປເປັນພາສາອັງກິດ ) ສະຖາບັນຄົ້ນຄ້ວາກ່ຽວກັບອາຊີຕາເວັນອອກ. ໂຕກຽວ, ໑໙໕໔ ເຫລັ້ມ ໔ ໜ້າ ໒໓໐.

(໕໔) ຄະນະກຳມະການ ວັນນະຄະດີ ( ຜູ້ຮຽບຮຽງ "ສານລຶພສູນ ", ສະພາບັນດິດ ວຽງຈັນ. ໑໙໖໗. ໜ້າ ໑໗.

(໕໔) ຄະນະກຳມະການ ວັນນະຄະດີ ( ຜູ້ຮຽບຮຽງ "ສານລຶພສູນ ". ສະພາ ບັນດິດ ວຽງຈັນ. ໑໙໖໗ ໜ້າ ໓ - ໜ້າ ໔.

(໖໖) ສ.ເດຊາ " ເຜີຍສານລຶບບໍ່ສູນ " ສຳນັກພິມແລະຈຳໜ່າຍປື້ມ ສ.ປ.ປ.ລາວ ໑໙໘໔. ໜາ ໖໖.

## 4 · ຣາວທຽນຂອງວັດສີສະເກດ

<u>ໝາຍເຫດ</u> :

ວາລະສານ " ວັນນະສິນ " (ກະຊວງວັດທະນະທຳ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ), ໄດ້ພິມພາກສ່ວນ ໜຶ່ງຂອງບົດຄວາມຂອງ ດຣ. ນະຍຸຣີ ເຫງົ້າສີວັດນີ້ໃນສະບັບທີ ໙໖ ກຸມພາ ໑໙໘໘. ໜ້າ ໔ ແລະ ໑໗.



ຮູບຮາວທຽນ ວັດສີສະເກດ ຂັດອອກຈາກປຶ້ມຂອງ ອັງລີ ມາກ ຊານ :" ສິນລະປະໃນການປະດັບວັດຂອງລາວ " ປາຣີ. ປີ ໑໙໖໔. ຮູບ ໓໖.

ວັດສີສະເກດເລີ່ມສ້າງຂຶ້ນໃນວັນທີ໔/໓/໑໘໑໘ແລະສຳເລັດລົງໃນ ໖ ປີຕໍ່ມາ. ຫລັງຈາກນັ້ນກໍໄດ້ຈັດໃຫ້ມີພິທີສະຫລອງໃນມື້ຂຶ້ນ ໙ ຄ່ຳ ເດືອນ ໖ ປີ ໑໘໒໔. ບຸນສະເຫລີມສະຫລອງ ໄດ້ດຳເນີນໄປ ໗ ມື້ ໗ ຄືນ. ໝາຍຄວາມວ່າ ບຸນນີ້ໄດ້ ດຳເນີນໄປລື່ນບຸນສະຫລອງການປະຕິສັງຂອນວັດຫໍພະແກວ ໒ ມື້. ລາຍການບຸນດັ່ງກ່າວມີຂະບວນແຫ່ວຽນທຽນ ໓ ມື້ ໓ ຄືນ ອອນ ບໍລິເວນ ວັດສີສະເກດ ( ຮົ້ວອ້ອມວັດມີລວງຍາວ ໘໐ມ ແລະລວງກວ້າງ ໖໐ ມ ) ແລະ ອ້ອມ ພະລາຊະວັງ, ລາຍຈ່າຍ ໃນການ ສ້າງວັດສີສະເກດຕີກເປັນມູນຄ່າ ໖໗.໗໔໑ ບາດ ໝາຍຄວາມວ່າຫລາຍກວ່າລາຍຈ່າຍທີ່ເຈົ້າອະນຸໄດ້ຈ່າຍເພື່ອ ປະຕິສັງຂອນ ວັດຫໍພະແກ້ວ ເຊິ່ງຕີກເປັນມູນຄ່າ ໒໑.໒໘໒ ບາດ, ຫີນສີລາຈາລຶກ ເປັນຫີນສີດຳເຫລື້ອມ ເຊິ່ງເອົາມາແຕ່ ຊຽງຂວາງໄດ້ຈາລຶກການສ້າງວັດສີສະເກດນີ້, ນັກຄົ້ນຄ້ວາໄດ້ພົບຫີນ ສີລາຈາລຶກນີ້ຢູ່ດ້ານຕາເວັນຕົກຂອງວັດສີສະເກດແລະໃນປີ໑໙໒໐ ນັກຄົ້ນຄ້ວາຜູ້ນັ້ນໄດ້ເອົາຫີນສີລາຕັ້ງຕິດໃສ່ຝາຜະນັງຂອງກົມມະລຽນວັດສີສະເກດ ເຊິ່ງຕັ້ງຢູ່ດ້ານຂວາມື ເວລາຍ່າງເຂົ້າໄປໃນ ວັດສີສະເກດ. ຕາມສາດສະດາຈານຜູ້ໜຶ່ງທີ່ສອນ ພາສາ ຕາເວັນອອກໄກຢູ່ສະຖາບັນ ພາສາສາດ ຂອງຝະລັ່ງເສດໄດ້ຂຽນ ກ່ຽວກັບສີລາຈາລຶກນີ້ວ່າ : " ຢູ່ເທິງໜ້າໜຶ່ງຂອງສີລາຈາລຶກ ປະກອບດ້ວຍການບັນທຶກເປັນໜັງສື ໔໑ແຖວ...ເມື່ອສັງເກດເຫັນໂຕໜັງສືທີ່ແນບນຽນໜ້າອອນຊອນທີ່ສຸດ ທັງແຈ່ມແຈ້ງດີແລະທັງ

ຂຽນເປັນໂຕໜັງສືທີ່ສະນ່ຳສະເນີແລ້ວສາມາດຕີລາຄາໄດ້ວ່າສິ່ງເຫລົ່ານີ້ແມ່ນຕົວແທນທີ່ງາມທີ່ສຸດອັນໜຶ່ງຂອງສິລາຈາລຶກລາວ " (໑). ສິ່ງເຫລົ່ານີ້ໄດ້ເຮັດໃຫ້ຜູ້ມາຢ້ຽມຢາມວັດສີສະເກດສຳນຶກໄດ້ວ່າແມ່ນເຈົ້າອະນຸເປັນຜູ້ປັບປຸງໂຕໜັງສືລາວ ແລະ ໄດ້ເຮັດໃຫ້ໂຕໜັງສືລາວຄົງຕົວມາເຖິງປະຈຸບັນ(໔).ຖ້າພວກເຮົາຍ່າງກ້າວເຂົ້າໄປໃນ ສິມ ວັດສີສະເກດ, ພວກເຮົາຈະສັງເກດເຫັນວ່າຢູ່ໃນສິມທີ່ມືດງແຄບນັ້ນຈະມີປັດໄຈອັນໜຶ່ງທີ່ໂອບອ້ອມໄປ ດ້ວຍແສງສະຫວ່າງເປັນຕາອຸ່ນໃຈຈາກທຽນທີ່ຄູບາອາຈານແລະປະຊາຊົນທົ່ວໄປໄດ້ໄຕ້ໄວ້. ສິ່ງນັ້ນແມ່ນຮາວທຽນເຊິ່ງເປັນປັດໄຈ ອັນທຳອິດທີ່ດູດດຶງຄວາມສົນໃຈຂອງທຸກໆຄົນທີ່ເຂົ້າໄປໃນສິມດັ່ງກ່າວ.

" ຂ້າພະເຈົ້າໄດ້ແຍງເບິ່ງໄມ້ຄວັດຂະໜາດນ້ອຍທີ່ເປັນ ຜະລິດຕະພັນອັນຍອດຢ້ຽມອັນໜຶ່ງເຊິ່ງມີລັກສະນະເປັນແບບກຳບັງ ຄ້ຳດ້ວຍເສັ້ນເຫລັກບາງໆ ເສັ້ນໜຶ່ງເພື່ອບັນຈຸທຽນທີ່ດັບໄຕ້ ແລ້ວເອົາມາຕິດຕັ້ງໄວ້ຕໍ່ໜ້າຮ້ານພະ. ປະຕິມາກຳອັນນີ້ມີຮູບຮ່າງ ທີ່ເປັນສີພອກຄຳ, ປະກອບດ້ວຍຮູບສີສັນແປກປະຫລາດທີ່ ກົມກຽວກັນຢ່າງມີຄວາມໝາຍ. ຮູບຫາງຂອງນາກສອງໂຕໄດ້ກອດກຽວກັນເປັນວົງມົນໜ້າອອນຊອນທີ່ສຸດໃນສາຍຕາຂອງ ຂ້າພະເຈົ້າແລະມີສອງແຂນດ່ອອກມາເພື່ອຄ້ຳຮາວທຽນໄວ້. ຢູ່ທາງ ກາງຂອງກຳບັງນັ້ນ ລາຍຄືມືພື້ນໂບຮານ ທີ່ປະກອບສີຄຳປະສານ ກັບແສງສະຫວ່າງຂອງທຽນແລ້ວປະສານກົມກຽວເຂົ້າກັນຢ່າງ ໜ້າຊື່ນຊົມ"(໕) ນີ້ຄືຄວາມເວົ້າຂອງ ລຸຍເດີ ກາກເນີ (Louis

de CARNE ) ເຊິ່ງເປັນຄົນຕາເວັນຕົກ ຜູ້ທຳອິດທີ່ໄດ້ມາສັງເກດໃນປີ ໑໘໖໗ , "ຕໍ່ໜ້າຮານພະ, ພວກເຮົາພາກັນຕົກສະເງີ້ເບິ່ງໄມ້ຄວັດທີ່ເປັນຮາວທຽນອັນມີເອກະລັກໃນການແຕ້ມຢ່າງປະດິດສ້າງທັງໄດ້ສະແດງອອກໃຫ້ເຫັນ ການອອກແຮງງານດ້ວຍຄວາມລະອຽດອ່ອນຢ່າງມະຫັດສະຈັນ" (໔). ນີ້ຄືຄວາມເວົ້າຂອງຟລັງຊິດ ກາກນີເຍ ( Francis GARNIER ) ທີ່ໄດ້ມາເຫັນຮາວທຽນ ວັດສີສະເກດ-ໃນປີດຽວກັນນັ້ນ. ຟລັງຊິດ ກາກນີເຍ(Francis GARNIER) ກໍໄດ້ໃຫ້ນັກແຕ້ມທີ່ຕິດຕາມມານຳເຊິ່ງມີຊື່ວ່າ ເດີລາ ປອກເຕີ້ - ( *DE LAPORTE ) ແຕ້ມເພື່ອພິມເຜີຍແຜ່ໃນ ວາລະສານຮອບໂລກໃນປີ ໑໘໗໐." ເວົ້າລວມແລ້ວ, ຮູບແຕ້ມນີ້ຄືໂຕຈິງທີ່ສຸດ " (໕). ຕາມຄວາມເວົ້າຂອງອັງລີ ປາກມັງຕີເຍ( Henri PARMENTIER ) ທີ່ໄດ້ຂຽນກ່ຽວກັບ "ອູປະກອນໃຊ້ສອຍ " ຄື ຮາວທຽນ ວັດສີສະເກດ, ເປັນ ໔ ໜ້າໃນປຶ້ມຂອງຜູ້ກ່ຽວທີ່ພາດຫົວເລື່ອງວ່າ :" ສິລະປະລາວ ".ຄວາມເວົ້າຂອງອັງລີ ມາກຊານ ( Henri MARCHAL ) ທີ່ໄດ້ຂຽນຢູ່ໃນປຶ້ມຂອງເພິ່ນກ່ຽວກັບຮາວທຽນ ວັດສີສະເກດດັ່ງນີ້:"ຮາວທຽນທີ່ເຮັດດ້ວຍໄມ້ຟອກຄຳອັນນີ້...ເປັນງານປະຕິມາກຳ ຊິ້ນເອກທີ່ມີລັກສະນະ ພາກພຽນທີ່ສຸດ ແລະ ມີສີໄມ້ລາຍມີ ຈຳນານທີ່ສຸດໃນການຄວັດ. ຮູບພາບລວມຂອງໄມ້ຄວັດນີ້ສົມສ່ວນທີ່ສຸດ ; ຫົວຂອງນາກສອງໂຕໂງຫົວຂຶ້ນດ້ວຍຄວາມຄຽດແຄ້ນ, ສອງຝາກ

ຂ້າງຂອງຮູບຄວັດຍິ່ງເຮັດໃຫ້ຄວາມສົມສ່ວນນັ້ນເດັ່ນຂຶ້ນອີກ;ລາຍລະອຽດຂອງປີກຍ່ອຍນີ້ປະທັບໃຈທີ່ສຸດ " (ຝ). ພວກເຮົາຄວນອີກກ່ອງຄວາມເວົ້າທີ່ມີຄວາມໝາຍດີ:"ໂງທີວຂຶ້ນ ດ້ວຍຄວາມຄຽດແຄ້ນ ", ສ່ວນ ອັງລີ ປາກມັງຕີເອ ( Henri PARMENTIER) ຍັງໄດ້ຂຽນວ່າ: " ທີວ ຂອງນາກ ສະຫງ່າງາມທີ່ສຸດ " ເໝືອນກັບວ່າ " ມີຊີວິດຊີວາເທິງເວທາຢູ່ແຕ່ລະຟາກຂອງຮາວທຽນ ພ້ອມທັງເງີກທີວຂຶ້ນ..." (ກ). ນິຄການຕິລາຄາດ້ານ ສິລະປະກຳຂອງຕ່າງປະເທດກ່ຽວກັບຮາວທຽນ ວັດສີສະເກດ. ຄວາມງາມອັນເດັດຖານຂອງຮາວທຽນນີ້ຖືກກ່າຍ ອອກເປັນຮູບຈຳລອງເພື່ອໄປວາງສະແດງເປັນປະຕິມາກຳອັນ ຍອດຢ້ຽມອັນໜຶ່ງຂອງລາວທີ່ປາລີ ( Paris ) ໃນປີ ໑໙໓໑ ແລະ ຢູ່ເມືອງ ໂອສະກາ (ປະເທດຍີ່ປຸ່ນ ) ໃນປີ ໑໙໗໐.ແຕ່ຄຽງຄູ່ກັບຄວາມໝາຍທາງດ້ານສິລະປະແລວ, ຮາວທຽນ ວັດສີສະເກດ ຍັງມີເນື້ອໃນທາງດ້ານການເມືອງທີ່ພວກເຮົາຄົ້ນພົບ ອໍກູນແຈທີ່ປະຊາຊົນລາວສ່ວນໜຶ່ງໄດ້ຫລົງລືມໄປ ພາຍຫລັງມະຫາໄພພິບັດໃນຊຸມປີ ຈຸນຫລັງປີ ໑໙໔໕.

ນາກເປັນສັນຍາລັກ ອັນຍອດຢ້ຽມຂອງປະເທດລາວ ຂອງພວກເຮົາໃນໂບຮານນະການ ແລະ ຊື່ຂອງປະເທດລາວໃນຄາວກ່ອນໄດ້ກຳເນີດມາໂດຍຖືເອົາຕາມສັນຍາລັກຂອງໂຕນາກ ແລະຖືກເອີ້ນວ່າ ເມືອງສີສະຕະນາຄະນະຫຸດ, ໝາຍຄວາມວ່າເມືອງຂອງຊາວນາກ, ເມືອງຂອງຊາວນາກໄດ້ພະຍາຍາມຢ່າງບໍ່ ລົດ

ລະໃນການຕໍ່ສູ້ກັບການຍຶດຄອງຂອງສະຫຍາມມາແຕ່ປີ ໑໗໗໘ ຄື ຕໍ່ສູ້ຕ້ານການບີບບີ້, ຕ້ານການຂູດຮີດທີ່ນັບມື້ນັບຮ້າຍກາດໂດຍສະແດງອອກໃນຮູບນາກທີ່ " ໂງຫົວຂຶ້ນດ້ວຍຄວາມຄຽດແຄ້ນ " , ຍຶດຕີນໂຕອອກ, ດຶງຕົວດ້ວຍກຳລັງທັງໝົດທີ່ອອກມາຈາກຄວາມຄຽດແຄ້ນສັດຕູກໍ່ຄືອອກມາຈາກຄວາມມຸ່ງຫວັງອັນແຮງກ້າ ໃນຄວາມເປັນເອກະພາບຊອງຊາດລາວແລະຄວາມເປັນເອກະລາດເຊິ່ງໄດ້ສະແດງອອກໃນຮູບໂຕນາກ. " ໂຕນາກໄດ້... ເງີກຫົວຂຶ້ນ..." ເໝືອນດັ່ງວ່າຈະປະກາດກ້ອງຂຶ້ນວ່າ "ພໍແລ້ວ ". ລຳພື້ນເມືອງຕ່າງໆເຄີຍເລົ່າແຕ່ສະໄໝກ່ອນໆວ່າ ສິທະນົບໄຊ- ( ຊຽງໝຽງ ) ໄດ້ອັດຮູບນາກ, ແລະ ຖ້າຈະອະທິບາຍ ຢ່າງແຈ້ງໆແລ້ວກໍເວົ້າໄດ້ວ່າສະຫຍາມໄດ້ຮັດໃຫ້ຊາວລາວ ເສຍທິດ (໘). ໃນປີ ໑໗໗໘, ເມືອງວຽງຈັນທີ່ຖືກກອງທັບສະຫຍາມ ປິດລ້ອມມາໄດ້ ໑ ປີ ແລ້ວນັ້ນ ປະຊາຊົນລາວໄດ້ອຶດເຂົ້າຕາຍ ທັງຍັງໄດ້ເຫັນປະກົດການອັນປ່າເຖື່ອນຂອງກອງທັບສະຫຍາມ ທີ່ໄດ້ຕັດຫົວປະຊາຊົນລາວໃສ່ເຕັມລຳເຮືອແລ້ວບັງຄັບໃຫ້ຜູ້ຍິງ ລາວເປັນຜູ້ພາຍເຮືອນັ້ນລ່ອງໄປລ່ອງມາຢູ່ຕໍ່ໜ້າເມືອງວຽງຈັນ ແລະບັງຄັບໃຫ້ຮ້ອງວ່າ: " ຊື້ໝາກແຕງໂມ, ຊື້ໝາກແຕງໂມ ". ເວລາຜ່ານໄປ, ຫາດຢູ່ກາງນ້ຳຂອງກໍໄດ້ຟູຂຶ້ນ ແລະ ໃຫຍ່ຂຶ້ນ "ແລະອາດເປັນເຫດໃຫ້ເມືອງວຽງຈັນຕ້ອງຕົກຢູ່ໃນເງື້ອມມື ຂອງກອງທັບສະຫຍາມທີ່ເຂົ້າຍຶດເອົານະຄອນຫລວງວຽງຈັນ ໄດ້ໂດຍງ່າຍໃນເມື່ອບໍ່ມີກຳແພງປ້ອງກັນທາງຝາກນ້ຳຂອງ "(໙) ແຕ່

ນັ້ນມາ ນາກກໍໄດ້ພະຍາຍາມສຸດຂີດທີ່ຈະມ້າງເພກາມກົດດັນ ອັນເກີດມາຈາກການອັດຊຸນາກນັ້ນ, ໝາຍຄວາມວ່າປະຊາຊົນລາວໄດ້ຮັດທຸກວິທີທາງເພື່ອກຳຈັດການຄອບງຳຂອງຕ່າງດາວ.

ເຖິງແນວໃດກໍດີ, ຖ້າພວກເຮົາສືບຕໍ່ຄົ້ນຫາຄວາມ ໝາຍອັນລຶກແລບຂອງຮາວທຽນວັດສີສະເກດ ພວກເຮົາອາດຈະຄົ້ນພົບເສັ້ນທາງເຂົ້າສູ່ການພົວພັນກັບດວງວິນຍານຂອງປະຊາຊົນ ລາວໂບຮານອີກດ້ວຍ ຜູ້ເຊິ່ງໄດ້ສ້າງຜະລິດຕະພັນນີ້ຂຶ້ນມາດ້ວຍຄວາມໃຝ່ຝັນອັນໃດອັນໜຶ່ງຢ່າງແນ່ນອນ ນອກເໜືອໄປຈາກການສ້າງຮາວທຽນອັນງາມທີ່ສຸດອັນໜຶ່ງ ພວກເຮົາອາດຈະເອົາການວິໄຈຂອງນັກຄົ້ນຄວ້າ ອັງລີມາກຊານ ( Henri MARCHAL )ເປັນສາຍຈູງເພື່ອເດີນທາງຜ່ານໄລຍະເວລາ ໑໒໐ ກ່ວາປີທີ່ໄດ້ລ່ວງເລີຍໄປແລ້ວນັ້ນ ເພື່ອຊອກເຂົ້າໃຈຄວາມໝາຍດັ່ງກ່າວນັ້ນ. ອັງລີມາກຊານ ( Henri MARCHAL ) ໄດ້ຂຽນໃນເວລາທ່ານພິມປຶ້ມຄວາມຍຶດໜຶ່ງທີ່ຍືດຍາວກ່ຽວກັບສິລະປະລາວ: "ຢູ່ວັດສີສະເກດວຽງຈັນ, ຂ້າພະເຈົ້າໄດ້ເຫັນຮາວທຽນເຮັດດ້ວຍ ໄມ້ຄວັດຟອກຄຳທີ່ງາມສະຫງ່າທີ່ສຸດ. ຮາວທຽນນີ້ຄວນຈັດເຂົ້າ ໄວ້ໃນປະເພດແບບຢ່າງອັນງາມເລີດ ຂອງສິລະປະລາວ. ຜູ້ທີ່ ສົນໃຈອາດຈະໄປເບິ່ງຮູບຈຳລອງທີ່ນຳເອົາມາໄວ້ວັດຫໍພະແກ້ວຂອງເມືອງວຽງຈັນ. ຢູ່ດ້ານເທິງຂອງຜົນງານຊິ້ນເອກນີ້, ທາງລວງກວ້າງປະກອບດ້ວຍ ຕົນໂຕຂອງນາກ ສອງໂຕທີ່ເອົາຫາງ ກອດກ່ຽວກັນຢູ່ທາງກາງເປັນກົງມົນຫລາຍຮອບ, ສ່ວນຫົວນາກ ທີ່ພົ້ນ

ອອກຈາກປາກ ມະກະລະໂຕໜຶ່ງໄດ້ຟືດຫົວຂຶ້ນ, ຫົວນາກ ເຕັມໄປດ້ວຍຫອນທີ່ຖືກຈີກສ້ອຍໝົດ, ຫລັງຂອງນາກ ເຕັມໄປດ້ວຍແປວໄຟ ແລະ ຢູ່ກ້ອງທ້ອງຂອງນາກມີ ຂາສັ້ນໆເດ່ອອກມາ . ແຜ່ນພະນັງຢູ່ກາງໄມ້ຄວັດປະກອບດ້ວຍເສັ້ນໄມ້ບາງໆ ແລະ ມີຮູບພະອິນຢູ່ເທິງຊ້າງໄອລະວະຕະທີ່ຕິດຢູ່ເທິງຈອມບ່ອນໜຶ່ງ.ຮູບນົກທີ່ເຫັນທາງຂ້າງຢູ່ອ້ອມຂ້າງຮູບພະອິນ ແລະ ຊ້າງ ໄອລະວະຕະ ໄມ້ຄ້ຳຢູ່ທາງ ໔ ຟາກຂ້າງເຕັມໄປແຕ່ລວດລາຍເໝືອນກັບຮູບປະກອບທີ່ຍົກໂຕຂອງນາກໄວ້, ຢູ່ພື້ນຂອງໄມ້ຄວັດມີເສັ້ນຊື່ງທີ່ມີຮູບຊົວເໝືອນກັບຕົນໂຕທີ່ເຕັມໄປດ້ວຍເກັດຂອງງູທີ່ປະກົດລອຍຢູ່ໃນກາງນ້ຳ ແລະ ຢູ່ທ່າມກາງຟອງນ້ຳທີ່ເປັນຮູບເຄິ່ງວົງມົນ ; ໃນນ້ຳນັ້ນກໍມີຮູບປາໂລມາ. ແຕ່ເປັນໜ້າສົນໃຈທີ່ເຫັນໂຕງູວະສຸກີປາກົດຢູ່ໃນຮູບຄວັດນັ້ນ, ໂຕງູ ວະສຸກີ ເປັນສັນຍາລັກຂອງ ນິລັນດອນ. ການມີໜ້າຂອງໂຕງູ ວະສຸກີດັ່ງກ່າວຢູ່ໃນວັດກໍ ແປກປະຫລາດເຊັ່ນດຽວກັນກັບຮູບພະອິນທີ່ຕາມປົກກະຕິແລ້ວ ລ້ວນແຕ່ຕິດຢູ່ໜ້າສົມວັດເທົ່ານັ້ນ " (໑໐). ຮູບຂອງງູວະສຸກີແລະຂອງພະອິນຕິດຢູ່ຮູບຄວັດນັ້ນກໍເປັນອັນແປກປະຫລາດແທ້ແຕ່ກໍມີ ຄວາມໝາຍຢ່າງໃດຢ່າງໜຶ່ງສຳລັບປະຊາຊົນລາວໂບຮານທີ່ຮູ້ການກຳເນີດ ວັດທະນະທຳ ວ່າ ມາຈາກສາສະໜາພຸດ " ງູວະສຸກີ , ສັນຍາລັກແຫ່ງນິລັນດອນ ", ສຳລັບປະຊາຊົນລາວໃນສະໄໝ-ນັ້ນ, ຄຳວ່ານິລັນດອນມີຄວາມໝາຍຢ່າງຈະແຈ້ງທີ່ສຸດ ແລະ ຄວາມໝາຍນັ້ນກໍໄດ້ສືບທອດຈາກປຶ້ມຄູ່ມືການເມືອງຂອງເຂົາເຈົ້າ

ເທົ່ານັ້ນຄືເປັນ " ສານລຶບພະສູນ ", " ສານລຶບພະສູນ "ແມ່ນ ສານຊື່ວບໍລັນດອນ, ຫມາຍຄວາມວ່າແມ່ນສານທີ່ແຕ່ລະເຊື້ນ ຄົນ ຕ້ອງເຊື່ອມຊຶມໜ້າທີ່ອັນສັກກາ ລະບູຊາຂອງຕົນຈົນຮອດມື້ທີ່ພາລະ ໜ້າທີ່ນັ້ນໄດ້ປາກົດເປັນຈິງ, ໂດຍສະເພາະ ໔ ພາລະໜ້າທີ່-ອັນ ອະນະຕະທີ່ເຊື່ນຄົນສະໄໝພໍ່ເຈົ້າອະນຸຄືປາງ ເຈົ້າສີລິບຸນ ຍະສານ, ທີ່ເຊື່ນຄົນສະໄໝອ້າຍເຈົ້າອະນຸຄື ເຈົ້າ ນັນທະເສນ ແລະ ເຈົ້າອິນທະວົງ, ທີ່ເຊື່ນຄົນສະໄໝເຈົ້າອະນຸ ແລະ ລູກ ຂອງເພີ່ນຄືເຈົ້າ ລາຊະວົງ ໄດ້ຝັງໄວ້ໃນດວງຈິດວິນຍານ ຢ່າງ ອົງອາດກ້າຫານຄື: ຄວາມເປັນເອກະພາບ ແລະ ຄວາມ ເປັນ ເອກະລາດຂອງເມືອງລາວ. ໔ ພາລະໜ້າທີ່ນີ້ຈະປາກົດເປັນ ຈິງໄດ້ຢ່າງສົມບູນກໍໃນເມື່ອວ່າຕ້ອງໄດ້ໃຊ້ຄວາມຮຸນແຮງເທົ່ານັ້ນ ເພື່ອຈະທັບມ້າງແອກຄອບຄອງຂອງສັກດິນາສະຫຍາມ (໑໑) ດັ່ງ ນັ້ນຈຶ່ງອະທິບາຍໄດ້ວ່າຮູບຂອງພະອິນຢູ່ເທິງຮູບຄວັດ ຮາວທຽນ ວັດສີສະເກດນັ້ນທັງທີ່ວ່າຮູບ " ພະອິນຢູ່ເທິງຫລັງຊ້າງໄອລະວະ ຕະເປັນລວດລາຍອັນຜິດປົກກະຕິຢູ່ທີ່ນີ້ ", ເໝືອນກັນກັບ ອົງລິ ປາກມັງຕີເອ ( Henri PARMENTIER ) ໄດ້ຢ້ຳຄືນ ອີກ " ຜິດປົກກະຕິ ", ຫລື ເວົ້າອີກຢ່າງໜຶ່ງກໍແມ່ນພິເສດເໝືອນ ກັນກັບການຕໍ່ສູ້ອັນບໍ່ທໍ້ຖອຍຂອງຄວາມພະຍາຍາມຢ່າງ ມະຫັດສະ ຈັນທີ່ເປັນລວດລາຍ ຍອດຢ້ຽມຂອງສິລະປະຍຸດທະວິທີ ດ້ານການ ເມືອງຄືການລຸກຮື້ຂຶ້ນເພື່ອປົດແອກການຄອບຄອງຂອງສັກດິນາສະ ຫຍາມ, ການຟື້ນຊີບຂອງປະຊາຊົນລາວ, ດັ່ງນັ້ນຈຶ່ງເຫັນພະອິນ

ຢູ່ເທິງຮາວທຽນຂອງວັດສີສະເກດ ເພາະພະອິນແມ່ນ ເທວະດາ ແຫ່ງຟ້າຜ່າ, ແຫ່ງສົງຄາມ. ສົງຄາມຕ້ານການແບ່ງແຍກ ທີ່ສັກດີນາພາຍນອກ ໄດ້ດຳເນີນຕ້ານລາວ; ສົງຄາມຕ້ານແອກ ຍຶດຄອງຂອງບາງກອກ; ສົງຄາມເພື່ອເຕົ້າໂຮມປະເທດລາວ ໃຫ້ເປັນອັນໜຶ່ງອັນດຽວກັນ; ສົງຄາມເພື່ອປົດປ່ອຍປະເທດຊາດ .
" ຖ້າພວກເຮົາຈຳແນກໄດ້ວ່າຮູບຢູ່ໃນໄມ້ຄວັດຮາວທຽນຂອງວັດສີສະເກດແມ່ນພະອິນ, ຍັງມີຫລາຍຮູບເທວະດາຢູ່ບ່ອນອື່ນຫລາຍບ່ອນທີ່ພວກເຮົາບໍ່ສາມາດຈະເບິ່ງເຂົ້າໃຈໄດ້ " (໑໓) ອັນນີ້ແມ່ນຄວາມເສຍດາຍທີ່ອົງລີປາກມັງຕີເອ ( Henri PARMENTIER)ໄດ້ສະແດງອອກມາໃຫ້ຮູ້. ອັນນີ້ກໍຄືກັນກັບວ່າ ມີແຕ່ວຽກງານອັນດຽວອັນຕົ້ນຕໍເພື່ອຄົນລາວໃນສະໄໝນັ້ນ ທີ່ພຸ່ງອອກມາເພື່ອດູດດຶງເຕົ້າໂຮມກຳລັງພະລັງຈິດ, ພະລັງໃຈ ຂອງຊາວລາວໃນສະໄໝນັ້ນແທ້, ວຽກນັ້ນກໍ່ແມ່ນວຽກທີ່ປະກອບເຂົ້າຢູ່ໃນຮູບຂອງພະອິນ, "ເທວະດາແຫ່ງເທວະດາ " ທີ່ມີພຽງແຕ່ເປັນກົຕິນະສັກໃຫ້ພາລະໜ້າທີ່ອັນສູງສົ່ງໃຫ້ປະຊາຊົນລາວໃນສະໄໝນັ້ນຄືເຕົ້າໂຮມແຮງກັນເພື່ອປົດປ່ອຍຊາດດ້ວຍຄວາມ ຮຸນແຮງ. ຮູບພະອິນປາກົດຖືກນຳເອົາມາ " ຕິດ " ໃສ່ໄມ້ ໑໔ ເສັ້ນທີ່ມີຮູບຜາສາດ, ໂດຍເຫັນແຕ່ເຄິ່ງດຽວ, ທີ່ຕິດຢູ່ຈອມຂອງແຕ່ລະໄມ້, ມີແຕ່ໄມ້ເສັ້ນກາງທີ່ມີຮູບຜາສາດສົມບູນ."ລວດລາຍໃຈກາງຂອງຮາວທຽນແມ່ນເສັ້ນໄມ້, ໃນລວງຕັ້ງ,ເປັນຈຳນວນ ໑໔ ເສັ້ນ. ບັນດາເສັ້ນໄມ້ນັ້ນໄດ້ຄ້ຳຫາງຂອງນາກທີ່ພັນກຽວກັນ

ເປັນອິງນິນ, ແລະໄມ້ ໑໔ ເສັ້ນນັ້ນໄດ້ບັນຈົບເປັນປາຍຫອກ " (໑໓) . ອີກປະການໜຶ່ງ, ແຕ່ລະຝາກຂອງຮາວທຽນວັດສີສະ ເກດ ມີເສັ້ນໄມ້ ກ ເສັ້ນ ທີ່ຈົບລົງດ້ວຍຮູບຜາສາດທີ່ເຫັນ ແຕ່ ເຄິ່ງດຽວ. ເລກ ກ ນີ້ກໍຄືຈະບໍ່ແມ່ນຄວາມບັງເອີນໃດໆ.ເພາະ ຕາມການຮັບຮູ້ໃນສະໄໝນັ້ນ, ປາກົດວ່າຊາດລາວໄດ້ ປະກອບ ເປັນ ກ ເມືອງລາວ, ນັກບວດປານເລີກົວ( Pallegoix ) ໄດ້ໃຫ້ລາຍລະອຽດດັ່ງຕໍ່ໄປນີ້: ໃນບົດຄວາມບົດໜຶ່ງຢູ່ທີ່ເມືອງ-ອາຍຸດທະຍາທີ່ພາດຫົວຂໍ້ວ່າ :" ໝາຍເຫດກ່ຽວກັບເມືອງລາວ" " ເມືອງລາວເປັນຫົວເມືອງກວ້າງໃຫຍ່ສົມຄວນແລະເຕັມ ໄປ ດ້ວຍແຕ່ພູຜາ, ນອກຈາກເຂດຢູ່ແຄມຝັ່ງນ້ຳ ຂະໜອນ ( ໃນ ສະໄໝນັ້ນ ຊາວຢູໂລບ ເອີ້ນແມ່ນ້ຳຂອງວ່າແມ່ ນ້ຳຂະໜອນ) ທີ່ເປັນທົ່ງພຽງອັນສວຍສົດງົດງາມ. ເມືອງລາວໄດ້ແບ່ງເປັນ ກ ລາຊະອານາຈັກ ນ້ອຍ... ຊື່ຂອງ ກ ເມືອງລາວນັ້ນແມ່ນ ຊື່ ຂອງນະຄອນຫລວງຂອງແຕ່ລະຊະອານາຈັກຄື: ເມືອງລົມ , ເມືອງວຽງຈັນ, ເມືອງຫລວງພະບາງ, ເມືອງພວນ. ໔ເມືອງ ນີ້ແມ່ນຊາວລາວ " ພຸງຂາວ " ຕັ້ງພູມລຳເນົາ,ສ່ວນລາວ"ພຸງ ດຳ " ແມ່ນຢູ່ໃນ : ເມືອງພະແລ, ເມືອງນ່ານ, ເມືອງຊຽງ ໃໝ່ ...ແຕ່ກ່ອນ, ເມືອງວຽງຈັນເປັນເມືອງທີ່ສຳຄັນກວ່າໝູ່ ແລະອາດຈະຍ້ອນເຫດຜົນອັນນີ້ທີ່ພາໃຫ້ນັກພູມີສາດ(ຢູໂລບ) ຖື ເອົາເມືອງວຽງຈັນເປັນນະຄອນຫລວງຂອງປະເທດລາວແລະ ຢູ່ ໃນແຜນທີ່(ຢູໂລບ) ນັກແຕ້ມແຜນທີ່ໄດ້ເອົາຊື່ລ້ານຊ້າງມາໃສ່ໃຫ້

ເມືອງວຽງຈັນ. ແຕ່ດຽວນີ້ເປັນອັນແນ່ນອນແລ້ວທີ່ວ່າແຕ່ ລະ ເມືອງລາວລ້ວນແຕ່ເປັນເມືອງພໍໃຜພໍມັນ ແລະ ບໍ່ຂຶ້ນກັບ ເມືອງ ລາວເມືອງໃດເມືອງໜຶ່ງ ... " (໑໔). ໃນໂຕຈິງແລ້ວ , ເຈົ້າອະນຸໄດ້ສົ່ງຄະນະທູດໄປຫາຫົວເມືອງທັງ ໆ ທີ່ແຕກແຍກກັນ ແລະ ພິດຖຽງກັນມາແຕ່ປີ ໑໗໐໗ , ເພື່ອລະດົມໃຫ້ປຸມລຸມ ສາ ມັກຄີເປັນອັນໜຶ່ງອັນດຽວກັນເພື່ອບັນລຸເປົ້າໝາຍອັນສັກກາລະດີ ປົດປ່ອຍຊາດລາວ. ແຕ່ລະເສັ້ນໄມ້ຂອງຣາວທຽນວັດສີສະເກດ, ແມ່ນຕາງໜ້າໃຫ້ແຕ່ລະ ໆ ເມືອງລາວທີ່ເປັນເຈົ້າກົກບໍ່ ສົມບູນ ເໝືອນດັ່ງພາສາດທີ່ເຫັນແຕ່ເຄິ່ງດຽວເພາະບໍ່ໄດ້ຮ່ວມແຮງ ກັນ ເປັນອັນໜຶ່ງອັນດຽວກັນ, ຖ້າວ່າທັງ ໆ ເມືອງນັ້ນສາມາດເຕົ້າ ໂຮມເຂົ້າກັນໄດ້ກໍຈະເປັນປຶກແຜ່ນແໜ້ນໜາດີຢູ່ໃນໃຈກາງຂອງ ຣາວທຽນວັດສີສະເກດແລະ ທັງເປັນພະລັງແຮງອັນແໜ້ນໜາ , ສຽບແຫລມແລະເດັດຂາດເໝືອນດັ່ງຄວາມຮູ້ສຶກທີ່ທຸກຄົນຄົງ ຈະ ສຳຜັດໄດ້ໃນເວລາທີ່ເຂົ້າມາເຫັນຣາວທຽນວັດສີສະເກດ ແລະ ພະລັງແຮງຂອງ ໆ ເມືອງລາວນັ້ນຄົງເປັນສະພາບອັນ ຍອດຢ້ຽມ ເພື່ອເຮັດໃຫ້ຄວາມປາຖະໜາຂອງປະຊາຊົນລາວຜ່ານຜ່າ ອຸປະ ສັກໄດ້ຢ່າງມີໄຊເໝືອນດັ່ງຮູບຫາງນາກ ໘ ໂຕ ທີ່ກອດກ້ຽວກັນ ຍອງຢູ່ເທິງໄມ້ ໆ ເສັ້ນທີ່ໂຮມກັນໃຫ້ໄມ້ໜຶ່ງຢູ່ກາງທີ່ສົມບູນແລະ ມີພາສາດສົມບູນເໝືອນກັນເຊິ່ງໝາຍເຖິງຄວາມເປັນ ເອກະ ພາບຂອງລາວທີ່ຈະເຮັດໃຫ້ພາລະກິດສຳເລັດຜົນ. ຖ້າເອົາ ນິ ທານຂອງສາສະໜາພຸດມາເຍືອງເບິ່ງແລ້ວ, ຫາງນາກ ໘ ໂຕ

ຢູ່ກາງຣາວຫຼຽນ ວັດສີສະເກດກໍ່ມີຄວາມໝາຍຂອງມັນ ຄືວ່າມື້ໜຶງ ພະພຸດທະເຈົ້າ ຢາກຂ້າມແມ່ນ້ຳກວ້າງໃຫຍ່ໄພສານແຕ່ບໍ່ມີພາຫະນະ ແລະ ແມ່ນນາກ ໒ ໂຕທີ່ເອົາຫາງຂອດເຂົ້າກັນເພື່ອເປັນຂົວໃຫ້ເພິ່ນໄຕ່ຂ້າມນ້ຳໄດ້.

ສ່ວນຢູ່ຕີນຂອງຣາວຫຼຽນນັ້ນ, ພວກເຮົາອາດຈະເຫັນ ຮູບຫິນດິນຈີ່ທີ່ລຽນໆກັນໄປຄືກັບເປັນກຳແພງອັນໜຶ່ງຂອງຄວາມເປັນເອກະພາບຂອງ ກ ເມືອງລາວທີ່ສາມາດຈະຕ້ານທານກັບ ການຂົ່ມຂູ່ຈາກພາຍນອກໄດ້.

ຈອມຂອງຣາວຫຼຽນ ວັດສີສະເກດ ແຫລມຄືປາຍຫອກແລະຫາງພົ້ນໜ້າແໜ້ນຄືກຳແພງ, ອັນນີ້ກໍໝາຍເຖິງຄວາມ ສຳພັນແບບກາຍະອິນຊີ ລະຫວ່າງການປົກປັກຮັກສາແລະການກໍ່ສ້າງ , ແລະ ຕ້ານໄພອັນຕະລາຍທີ່ມາແຕ່ທິດດຽວໃນສະໄໝ ໑໘໒໘ - ແລະ ທິດທີ່ ວັດສີສະເກດ ຫັນໜ້າມາ ກໍ່ສາມາດຊີ້ໃຫ້ເຫັນຢ່າງຈະແຈ້ງທີ່ສຸດ ແລະເຮັດໃຫ້ ປະຊາຊົນລາວທຸກຄົນໃນສະໄໝນັ້ນສະດຸ້ງທັນທີ ເພາະ ວັດສີສະເກດ ບໍ່ໄດ້ຫັນໜ້າໄປ ທິດດຽວກັນຄືວັດອື່ນໆຂອງເມືອງວຽງຈັນ ເຊິ່ງລ້ວນແຕ່ປິ່ນຂ້າງ ໃສ່ແມ່ນ້ຳຂອງ. ອັນນີ້ກໍ່ແປກປະຫລາດແລະມີຄວາມໝາຍຈະແຈ້ງທີ່ສຸດສຳລັບຄົນໃນສະໄໝນັ້ນຄືວັດສີສະເກດປິ່ນໜ້າໃສ່ ນ້ຳຂອງ ແລະກົງກັບທິດ... ບາງກອກ, ຄື ໔໐ ອົງສາ ທິດໄຕ້ຕາເວັນຕົກ.

# ເອກະສານອ້າງອີງເພື່ອບົດຄົ້ນຄ້ວາ
# ''ຣາວຫຽນວັດສີສະເກດ''

(໑) ເອຕຽນ ແອໂມນີເອ ( Etienne AYMONIER ) ຂະແມ ເຫລັ້ມ ໒ :" ແຂວງຂອງສະຫຍາມ." ( ພາສາຝະລັ່ງເສດ ) ປາລີ ( Paris ). ເລີລູ ( Leroux ) ການພິມ ປີ ໑໙໐໑ ໜ້າ ໑໔໗ .

(໒) ມະຫາສິລາ ວິລະວົງ :" ປະຫວັດໜັງສືລາວ ". ໃຜ່ ໜານ ວຽງຈັນ ປີ ໑໙໗໓. ໜ້າ ໑໘ ແລະ ຕໍ່ໆໄປ.

(໓) ລຸຍ ເດີ ກາກເນີ(Louis de CARNE):"ການສຳຫຼວດ ແມ່ນ້ຳຂອງ.ພາກ ໓:ວຽງຈັນ ແລະ ການ ຍຸກລຸກຍຶດຄອງຂອງ ສະຫຍາມ ."( ພາສາຝະລັ່ງເສດ ) ວາລະສານ ໒ ໂລກ ປາລີ,ເຫລັ້ມ LXXXII,ປີ ໑໘໖໙ ໜ້າ ໔໘໙.

(໔) ຟລັງຊິດ ກາກນີເອ ( Francis GARNIER ) " ເດີນທາງສຳຫລວດຢູ່ອິນດູຈີນ ." ( ພາສາຝະລັ່ງເສດ) ວາລະສານຮອບໂລກ, ປາລີ-ປີ ໑໘໗໐-໑໘໗໑ ໜ້າ ໓໙໑.

(໕) ອັງລີ ປາກມັງຕີເອ ( Henri PARMENTIER ) " ສິລະປະລາວ" ( ພາສາຝະລັ່ງເສດ): ສະຖາບັນຂອງ ຝະ

ລັ່ງເສດເພື່ອຄົ້ນຄວ້າກ່ຽວກັບຕາເວັນອອກໄກ. ປາລີ-ປີ ໑໙໕໔ ໜ້າ ໔໖໔.

(໖) ອັງລີ ມາກຊານ ( Henri MARCHAL )

" ສິລະປະໃນການປະດັບວັດຂອງລາວ ." ( ພາສາຝະລັ່ງເສດ) ວາລະສານ ສິລະປະອາຊີ - ປາລີ ປີ ໑໙໖໔.ເຫລັ້ມ ໑໐ ຮູບ ນັ້ນ.

(໗) ອັງລີ ປາກມັງຕີເອ ( Henri PARMENTIER )
(ປື້ມທີ່ກ່າວມາຂ້າງເທິງນັ້ນ) ໜ້າ ໔໖໓.

(໘) ອ່ໃຫ້ເບິ່ງປື້ມຂອງຈານ ວິຣິໂຍ:" ໜັງສືເລື່ອງວຽງຈັນ, ກອນລຳແລະເລົ່າປະຫວັດສາດເປັນພາສາລາວ ."(ໜັງສືໄທ ) ໜ້າ ໑໓ ບໍ່ເຫັນໝາຍເຫດກ່ຽວກັບບ່ອນແລະປີພິມ. ແຕ່ແມ່ນເຮັດຢູ່ໄທ. ອ່ໃຫ້ເບິ່ງເອັ້ນດຽວກັບປື້ມ:" ລຳພື້ນວຽງຈັນ, ພາສາໄທ", ( ໂດຍສະເພາະກອນລຳທີ ໙ ) ບໍ່ມີໝາຍເຫດກ່ຽວກັບປີ ແລະ ບ່ອນພິມ.ແຕ່ແນ່ນອນແມ່ນຢູ່ໄທ.

(໙)ອັງລີ ປາກມັງຕີເອ ( Henri PARMENTIER )
( ປື້ມກ່າວມາຂ້າງເທິງນັ້ນ ) ໜ້າ ໕໙.

(໑໐) ອັງລີ ມາກຊານ ( Henri MARCHAL )

( ປື້ມກ່າວມາຂ້າງເທິງນັ້ນ ). ໜ້າ ໑໔-໑໕. ທັດພູດເປັນ ຜູ້ຄວັດຮູບຈຳລອງຂອງຮາວທຽນທີ່ເອົາມາບັນໆໄວ້ວັດທໍພະແກ້ວ.

(໑໑) ແຕ່ເຈົ້ານັບທະເສນເອງທີ່ເປັນເຈົ້າຊີວິດລາວຄົນທຳອິດທີ່ຖືກບາງກອກແຕ່ງຕັ້ງໃຫ້ມາປົກຄອງວຽງຈັນກໍໄດ້ຕີລາຄາ, ພາຍຫລັງປະສົບການອັນເຈັບແສບ, ວ່າວິທີແກ້ໄຂໂດຍສັນຕິວິທີ ກັບບາງກອກແມ່ນບໍ່ໄດ້ຜົນຫຍັງ ແລະ ຕ້ອງໃຊ້ກຳລັງຮຸນແຮງ; ຂໍໃຫ້ເບິ່ງວິທະຍານິພົນຂອງພັນສາ ສິນສະຫວັດ:" ຄວາມສຳພັນ ລະຫວ່າງກຸງເທບກັບວຽງຈັນໃນລາຊະສະໄໝພະບາດສົມເດັດ ພະນັ່ງເກົ້າເຈົ້າຢູ່ຫົວ ພ.ສ ໒໓໖໗-໒໓໗໐ ". ( ພາສາໄທ )ມະຫາວິທະຍາໄລ ສິລະປະກອນ,ບາງກອກ. ພ.ສ. ໒໕໒໑ ໜ້າ ໓໘ .

(໑໒) ອັງລີ ປາກມັງຕີເອ ( Henri PARMENTIER ) ( ປື້ມກ່າວມາຂ້າງເທິງນັ້ນແລ້ວ ) ໜ້າ ໒໖໓ ແລະ ອັງລີ ປາກມັງຕີເອ ( Henri PARMENTIER ):"ຊຸນສ່ວນຂອງວັດລາວ ." ( ພາສາຝະລັ່ງເສດ ) ວາລະສານເພື່ອນມິດຂອງປະເທດລາວ ປີ ໑໙໓໙ ໜ້າ ໕໙.

(໑໓) ອັງລີ ປາກມັງຕີເອ ( Henri PARMENTIER ) ( ປື້ມອ້າງອີງມາຂ້າງເທິງນັ້ນ ) ໜ້າ ໒໖໓.

(໑໔) ປານເລີກົວ ( Pallegoix ):" ໝາຍເຫດກ່ຽວກັບປະເທດລາວ". ( ພາສາຝະລັ່ງເສດ ) ວາລະສານ ສະມາຄົມພູມິສາດ, ປາລີ. ເຫລັ້ມ ໔ ປີ ໑໘໖໖, ໜ້າ ໔໐-໔໑.

## ຊີວະປະວັດຫຍໍ້ຂອງຜູ້ຂຽນ

ດຣ. ມະຍຸຣີ ເຫງົ້າສີວັດທນ໌ ໄດ້ຮັບ ປຣິນຍາ ດ້ານກົດໝາຍ , ປຣິນຍາ ດ້ານພາສາສາດ, ສະຖາບັນການປົກຄອງ ນານາຊາດ ( ປາຣີ, ຝລັ່ງເສດ );

- ເຄີຍເປັນອາຈານສອນກົດໝາຍທີ່ ປາຣີ ( ຝລັ່ງເສດ )ແລະ ກົດໝາຍຢູ່ລາວ ;
- ເປັນນັກອົບຂວາຍຊຸດທຳອິດເພື່ອກຽມສ້າງຕັ້ງ ສ.ປ.ປ.ລາວ, ເປັນປະທານຄະນະອົບຂວາຍສ້າງຕັ້ງແມ່ຍິງລາວຮັກຊາດ(ກະຊວງ ຍຸດຕິທຳ ); ເປັນຄະນະສູນກາງ ກຳມະບານ (ຂະແໜງ ກະ ຊວງການຕ່າງປະເທດ );
- ແຕ່ປີ ໑໙໗໕ - ໑໙໗໘ ເປັນຮອງຫົວໜ້າກົມຜູ້ທີ ໑ ຢູ່ກະ ຊວງຍຸດຕິທຳ ;
- ແຕ່ປີ ໑໙໗໙ - ໑໙໘໖ ເປັນຮອງຫົວໜ້າກົມຢູ່ກະຊວງ ການ ຕ່າງປະເທດ ( ສອນກົດໝາຍກົງສູນນຳອີກ ).
- ຖືກເຊີນໄປຮ່ວມປະຊຸມຢູ່ອິນເດຍ, ຟີລິບປິນ, ມາເລເຊຍ, ໄທ, ສະຫະພາບໂຊວຽດ, ຫວຽດນາມ, ສ.ປ.ເຍຍລະມັນ,ຝລັ່ງເສດ ອິດສະຕາລີ ... ກຽວກັບບັນຫາແມ່ຍິງໃນປະເທດດ້ອຍພັດທະນາ ກຽວກັບກົດໝາຍສັງຄົມນິຍົມ ແລະ ປະຫວັດສາດ ;
- ເຄີຍເປັນຫົວໜ້າຜູ້ແທນຕາງໜ້າກຳມະບານສູນກາງ ແລະກົມ ກົງສູນໄປເຄື່ອນໄຫວຢູ່ຕ່າງປະເທດ ;

- ແຕ່ປີ ໑໙໘໖ ເປັນຕົ້ນມາເປັນນັກຄົ້ນຄວ້າກ່ຽວກັບ ບັນຫາຜູ້ຍິງໃນປະເທດດ້ອຍພັດທະນາ ແລະ ປະວັດສາດອາຊີອາຄະເນ .
- ໄດ້ຮັບການຍ້ອງຍໍຈາກລັດຖະບານຫລາຍຄັ້ງໃນການ ປະຕິບັດວຽກງານ .
- ໄດ້ປະກອບສ່ວນຂຽນບົດຄວາມໃນໜັງສືພິມ " ວັນນະສິນ ", " ປະຊາຊົນ " ແລະ ວາລະສານ ແມ່ຍິງສາກົນ .

ດຣ. <u>ເພີຍພັນ ເຫຼົ້າສີວັທນ໌</u> ໄດ້ຮັບປລິນຍາເອກ ດ້ານກົດໝາຍ, ປລິນຍາໂທ ດ້ານເສດຖະສາດການເມືອງແລະ ສຳເລັດສະຖາບັນ ລັດຖະສາດ ຈາກມະຫາວິທະຍາໄລ ປາລີ ( ນະຄອນຫລວງປະເທດຝລັ່ງເສດ );
- ເຄີຍເປັນສາດສະດາຈານສອນກົດໝາຍ, ການເງິນ, ສັງຄົມສາດ ແລະ ສິດທິມະນຸດທີ່ມະຫາວິທະຍາໄລ ປາລີ ( ປະເທດ - ຝລັ່ງເສດ );
- ແຕ່ປີ ໑໙໗໕ ຮອດ ໑໙໘໖ ໄດ້ເປັນຫົວໜ້າພະແນກ,ຮອງຫົວໜ້າກົມ ແລະ ຫົວໜ້າກົມ, ກົມ ໔ ກະຊວງການຕ່າງປະເທດທີ່ໄດ້ຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ລັດ ຕໍ່ປະເທດນາຍທຶນຕາມການຊີ້ນຳຂອງຂັ້ນເທິງ;
- ແຕ່ປີ ໑໙໘໖ ເປັນຕົ້ນ ມາເປັນນັກຄົ້ນຄວ້າກ່ຽວກັບ ປະຫວັດສາດອາຊີອາຄະເນ ແລະ ຊ່ຽວຊານ ດ້ານການພົວພັນ ລາວ-ໄທ ແລະ ປະເທດໄທ ;

- ເຄີຍໄດ້ຮັບລາງວັນຊະນະເລີດ ເຊີງມະຫາວິທະຍາໄລ ປາລີ ( ປະເທດຝລັ່ງເສດ ) ໄດ້ເປັນຜູ້ມອບໃຫ້ ເນື່ອງຈາກວ່າ ວິທະຍານິພົນ ປລິນຍາເອກເປັນພົນງານດີເລີດກວ່າໝູ່ໃນຮູນປີ ໑໙ກ໖ ຢູ່ທີ່ປະເທດຝລັ່ງເສດ ;

- ເຄີຍໄດ້ຮັບຫລຽນໄຊ ແຮງງານຊັ້ນ ໑ ;

- ໃນເວລາເກີດບັນຫາ ນີ້ ໝູ່ບ້ານໄດ້ພິມບົດຄວາມ " ການທູດ ສ.ປ.ປ. ລາວ ປະເຊີນໜ້າກັບລັດທິໄທໃຫຍ່ " ພິມຢູ່ ວາລະສານ ທີ່ປະເທດ ຊູຍແອດ, ອັງກິດ, ຝລັ່ງເສດ, ສະຫະລັດ ອະເມລິກາ ແລະ ອິດສະຕາລີ .

* ທັງສອງຄົນພວມກຽມປື້ມທີ່ພາດຫົວເລື່ອງ:" ລາວ-ໄທ. ນິລັນດອນ " ແລະ ບົດຄວາມ " ແມ່ນ້ຳຂອງໃນປະຫວັດສາດ ".

## ແກ້ຄຳຜິດຂອງປຶ້ມ "ເຈົ້າອະນຸ ໑໗໖໗ - ໑໘໒໙..."

| ລ/ດ | ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|---|
| ໑ | ໓ | ໓ | ຄະບວນ | ຂະບວນ |
| ໒ | ໔ | ໒ | ຮ້ອນເຂກ | ຮ້ອຍເຂກ |
| ໓ | ໖ | ໔ | ເຫງົ້າສີວັດ | ເຫງົ້າສີວັທນ໌ |
| ໔ | ໑໑ | ໑໗ | ການເອົາລັດ | ການເອົາຂັບດາລັດ |
| ໕ | ໑໒ | ໑ | Dvid WYTT | David WYATT |
| ໖ | ໑໒ | ໔ | ສິ່ງທີ່ຫາຍາກທີ່ສຸດ | "ສິ່ງທີ່ຫາຍາກທີ່ສຸດ " |
| ໗ | ໑໔ | ໘ | ເຫດການດຽວກັນ | ເຫດການດຽວກັນ (໑໕໕໙ເຖິງ໑໘໒໗) |
| ໘ | ໑໕ | ໙-໑໐ | ລ້ານຊ້າງຮົ່ມຂາວ | ລ້ານຊ້າງຮົ່ມຂາວ" |
| ໙ | ໑໕ | ໑໓ | ບອກວ່າ | ບອກຈາກວ່າ |
| ໑໐ | ໑໕ | ໑໘ | ທັບທີ່ | ທັບມິ |
| ໑໑ | ໑໗ | ໘ | ຫວຽດ | ຫວຽດນາມ |
| ໑໒ | ໑໘ | ໓ | ອາເບເດ | ອາເມເດ |
| ໑໓ | ໒໑ | ໖ | ແຂວງໜຶ່ງ | "ແຂວງໜຶ່ງ" |
| ໑໔ | ໒໕ | ໖ | ແກ້ແຄ້ນຕອບແທນ ກັບໄທ..." | ແກ້ແຄ້ນກັບໄທ..." |
| ໑໕ | ໒໗ | ໑ | ຮູ້ລ່ວງກ່ອນໜ້າ | ຮູ້ລ່ວງໜ້າກ່ອນ |
| ໑໖ | ໓໐ | ໘ | ເຈືອນຈານ | ເຈືອຈານ |
| ໑໗ | ໓໐ | ໑໑ | ກໍແນໃສ່ | ແນໃສ່ |

| ລ/ດ | ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|---|
| ໑໙ | ໓໐ | ໑໙ | ລະບົບການເມືອງ<br>໕໑) | ລະບົບການເມືອງ<br>(໕໑) |
| ໑໘ | ໓໒ | ໑ | ຈອມທັບມາທີ່ລາວ | ຈອມທັບມາຕີລາວ |
| ໒໐ | ໓໔ | ໑ | ແລງຊັງ | ແວງຊັງ |
| ໒໑ | ໓໕ | ໓ | ເພື່ອຕາມຄຳເວົ້າ | ເພື່ອ,ຕາມຄຳເວົ້າ |
| ໒໒ | ໓໕ | ໙ | , ໄດ້ລຳລຽງ | ໄດ້ລຳລຽງ |
| ໒໓ | ໓໘ | ໑໓ | ພະກຳລະວົງ | ພະກາລະວົງ |
| ໒໔ | ໔໓ | ໗ | ລາຊະອານາຈັກ | ລາຊະອານາຈັກສະ<br>ໜຍາມ". |
| ໒໕ | ໔໙ | ໑໐ | ອອກະລາດດົນນານ<br>ແລ້ວ | ອອກະລາດດົນນານ<br>ແລ້ວ, |
| ໒໖ | ໔໙ | ໑໑ | ກຸງທົນບູລີ | ກຸງທົນບູລີ; |
| ໒໗ | ໔໙ | ໑໒ | ມາດົນແລວ, | ມາດົນແລວ. |
| ໒໙ | ໕໐ | ໗ | GE SIK | GENSICK |
| ໓໐ | ໕໒ | ໑ | ຫວຽດ | ຫວຽດນາມ |
| ໓໑ | ໕໒ | ໑໒ | ໕ | ໕: |
| ໓໒ | ໕໒ | ໒໐ | ຫວຽດນາມ | ໂກແຊງຊິນ |
| ໓໓ | ໕໗ | ໒ | D.GE HALL | D.G.E.HALL |
| ໓໔ | ໕໘ | ໔ | ເບືອກແລກ | ເບືອກແລບ |
| ໓໕ | ໕໘ | ໑໘. | Collin | A Collin |

| ລ/ດ | ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|---|
| ໓໖ | ໖໓ | ໑໑ | (໑໑໙) | (໑໙) |
| ໓໗ | ໖໓ | ໒໐ | ຕິໄປ | ໄປຕີ |
| ໓໘ | ໖໕ | ໑໔ | ພາຍຫລັງທີ່ຂ່າວ | ພາຍຫລັງທີ່ໄດ້ຂ່າວ |
| ໓໙ | ໗໑ | ໑ | ທີ່ສູດໃນ" | ທີ່ສູດໃນ |
| ໔໐ | ໗໑ | ໒ | ຊາວນພວນ | ຊາວພວນ |
| ໔໑ | ໗໑ | ໙ | ຊື່ສຽງຫລາຍ | ຊື່ສຽງຫລາຍ, |
| ໔໒ | ໗໗ | ໙ | ອານາມ | "ອານາມ |
| ໔໓ | ໗໙ | ໖ | ອັາກິດ | ອັງກິດ |
| ໔໔ | ໘໐ | ໑໒ | ຫວຽດ | ຫວຽດນາມ |
| ໔໕ | ໘໒ | ໑໓ | ເໜືອງດົ່ງ | ເໜືອບດົ່ງ |
| ໔໖ | ໘໕ | ໖ | Goorgis Filason | Georges Finla-son |
| ໔໗ | ໙໐ | ໔ | ກິຣິ | ກິບລິ |
| ໔໘ | ໙໐ | ໙ | (ພະມ້າ-ອັງກິດ) | (ພະມ້າ-ອັງກິດ)" |
| ໔໙ | ໙໑ | ໑໙ | ສະຕິອັບອັບ | ສະຕິອັບ |
| ໕໐ | ໙໔ | ໑໔ | ບາດ | ບັດ |
| ໕໑ | ໙໗ | ໑ | ເຣືອເທ | ເທືອເທ |
| ໕໒ | ໑໐໑ | ໑໖ | ຈັກກະພັດ | ຈັກກະພົບ |
| ໕໓ | ໑໐໒ | ໑໑ | ໑໙໒໗ | ໑໘໒໗ |
| ໕໔ | ໑໐໓ | ໓ | ແມ່ນ້ຳຂອງ, | ແມ່ນ້ຳຂອງ. |
| ໕໕ | ໑໐໓ | ໘ | ກອງທັບສະຫຍາມ, | ກອງທັບສະຫຍາມ. |

| ລ/ດ | ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|---|
| ໕໖ | ໑໑໐ | ໑໐ | ແບກລັງ | ແບກແລບ |
| ໕໗ | ໑໑໑ | ໕ | ແບກລັງ | ແບກແລບ |
| ໕໘ | ໑໑໑ | ໘ | ——— | ພາກ ໑ |
| ໕໙ | ໑໑໒ | ໗ | ແບກລັງ | ແບກແລບ |
| ໖໐ | ໑໑໓ | ໑ | ສິນທິສັນຍາ | ສິນທິສັນຍາການຄາ |
| ໖໑ | ໑໑໓ | ໕ | " ໄທແລນ | " ໄທແລນ : |
| ໖໒ | ໑໑໓ | ໖ | Repint | Reprint |
| ໖໓ | ໑໑໔ | ໕ | ເພືອດູດດຶງ | " ເພືອດູດດຶງ" |
| ໖໔ | ໑໑໔ | ໗ | ໑໒໗ | ໑໒໖ |
| ໖໕ | ໑໑໔ | ໒໑ | ຢິບລິ | ກິນລິ |
| ໖໖ | ໑໑໖ | ໖ | ( ໜ້າ ໒໐໐) | (ໜ້າ ໑໐໐ ) |
| ໖໗ | ໑໑໗ | ໑໒ | ໑໙໓໙ | ໑໙໕໙ |
| ໖໘ | ໑໑໘ | ໓ | ເຫັນວ່າອາວຸດ | ເຫັນວ່າ "ອາວຸດ |
| ໖໙ | ໑໑໘ | ໔ | ໄດ້ສິ່ງ | ໄດ້ສິ່ງ |
| ໗໐ | ໑໑໘ | ໕ | ໂດລາດ | ໂດລາດ" |
| ໗໑ | ໑໑໘ | ໗ | ບໍ່ວ່າ:ຂ້າພະເຈົ້າ | ບໍ່ວ່າ :"ຂ້າພະເຈົ້າ |
| ໗໒ | ໑໑໙ | ໑໒ | ເຈົ້າວ່າ: ພວກ | ເຈົ້າລ່າ: ພວກ |
| ໗໓ | ໑໑໙ | ໑໓ | ຂອງອັງກິດ | ຂອງອັງກິດ" |
| ໗໔ | ໑໑໙ | ໑໔ | " ເອກະສານເບີກເບ | " ເອກະສານເບີກເບ" |
| ໗໕ | ໑໒໐ | ໑໕ | ເອົາເຈົ້າ | ເອົາເຈົ້າ. |

| ລ/ດ | ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|---|
| ໗໖ | ໑໒໐ | ໒໒ | (John CRAWFURD) | (John CRAWFURD): |
| ໗໗ | ໑໒໑ | ໑໐ | ອານາຈັກນັ້ນ | ອານາຈັກນັ້ນ. |
| ໗໘ | ໑໒໒ | ໑໒ | ໄທ-ລາວ | ໄທ-ລາວ" |
| ໗໙ | ໑໒໒ | ໑໖ | ໑໘໓໖ | ໑໘໒໖ |
| ໘໐ | ໑໒໓ | ໒ | ອິນດູຈີນ | ອິນດູຈີນ" |
| ໘໑ | ໑໒໓ | ໖ | ໜັກໜາແລ້ວບໍ່ຄວນ ເຮົາຈະເປັນເມືອງ ຂຶ້ນ" | ກໍ່ໜັກໜາຢູ່ແລ້ວ, ບໍ່ຄວນທີ່ພວກເຮົາ ຈະຍອມເປັນເມືອງ ຂຶ້ນຕໍ່ໄປອີກເລີຍ." |
| ໘໒ | ໑໒໓ | ໗ | :ພະລາຊະພົງສາວະ ດານ | :"ພະລາຊະພົງສາ ວະດານ |
| ໘໓ | ໑໒໓ | ໘ | ທີ ໓ | ທີ ໓" |
| ໘໔ | ໑໒໔ | ໘ | ໄດ້ກິນເຂົ້າໃໝ່ | ໄດ້ກິນເຂົ້າໃໝ່ແລະ ທັງປາກໍມັນ" |
| ໘໕ | ໑໒໕ | ໙ | ( ) | (Paris) |
| ໘໖ | ໑໒໕ | ໑໑ | ຫວຽດ | ຫວຽດນາມ |
| ໘໗ | ໑໒໕ | ໑໒ | ຫວຽດ | ຫວຽດນາມ |
| ໘໘ | ໑໒໖ | ໓ | ໑໘໒໗ | ໑໘໒໗" |
| ໘໙ | ໑໒໖ | ໕ | ຕໍ່ໄປນີ້ | ຕໍ່ໄປນີ້: |
| ໙໐ | ໑໒໖ | ໘ | ຫວຽດ | ຫວຽດນາມ |

| ລ/ດ | ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|---|
| ໙໑ | ໑໒໖ | ໑໑ | ທວຽດ | ທວຽດນາມ |
| ໙໒ | ໑໒໖ | ໑໗ | ໖໕໔, | ໖໕໔; |
| ໙໓ | ໑໒໖ | ໒໑ | Nguyen | Nguyen ແລະ |
| ໙໔ | ໑໒໖ | ໑໘ | ໜັງສື | "ໜັງສື |
| ໙໕ | ໑໒໘ | ໒໐ | Conies | Colonies |
| ໙໖ | ໑໒໙ | ໑໗ | ເຫລັ້ມ ໒ | ເຫລັ້ມ ໑ |
| ໙໗ | ໑໓໐ | ໙ | ແລ້ວ | ແລ້ວ, |
| ໙໘ | ໑໓໐ | ໑໓ | ດັ່ງນາຍ | ດັ່ງກ່າວ |
| ໙໙ | ໑໓໐ | ໑໕ | ນັ້ນແທ້ | ນັ້ນແທ້" |
| ໑໐໐ | ໑໓໑ | ໕ | ໑໑໘ | ໑໘໘ |
| ໑໐໑ | ໑໓໑ | ໑໑ | ກ່ຽວກັບວັນ | ກ່ຽວກັບປະຫວັດສາດ ແລະວັນ |
| ໑໐໒ | ໑໓໕ | ໒ | ຣອນ | .ດີ.ຈີ.ອີ.ຣອນ |
| ໑໐໓ | ໑໓໕ | ໒ | ປະຫວັດສາດຂອງອາຊີອາຄະເນ | "ປະຫວັດສາດຂອງອາຊີອາຄະເນ" |
| ໑໐໔ | ໑໓໕ | ໘ | ມາກຕິນເນີປີຢັດ | ມາກຕິນເນີ ປີຢັດ |
| ໑໐໕ | ໑໓໕ | ໘ | ( ) | (Martine PIAT ) |
| ໑໐໖ | ໑໓໕ | ໑໒ | ໑໙໘໑ | ໑໘໓໑ |
| ໑໐໗ | ໑໔໒ | ໒ | ສັງເກດ | ສັງເກດຣາວຫຽນ |
| ໑໐໘ | ໑໔໒ | ໑໘ | ດ້ວຍໄມ້ | ດ້ວຍໄມ້ຄ້ວດ |

| ລ/ດ | ໜ້າ | ແຖວ | ຄຳຜິດ | ຄຳຖືກ |
| --- | --- | --- | --- | --- |
| ໑໐໙ | ໑໔໒ | ໒໐ | ທີ່ສຸດ; | ທີ່ສຸດ. |
| ໑໑໐ | ໑໔໒ | ໒໑ | ຄຽດແຄ້ນ, | ຄຽດແຄ້ນ. |
| ໑໑໑ | ໑໔໓ | ໑໑ | ຂອງລາວທີ່ປາລີ | ຂອງລາວແລະຂອງ<br>ໂລກໃນຕະລາດນັດ<br>ແຫ່ງຊາດທີ່ປາລີ |
| ໑໑໒ | ໑໔໔ | ໒໑ | ຫລາຍຮອບ, | ຫລາຍຮອບ. |
| ໑໑໓ | ໑໔໖ | ໑ | ໄດ້ຝຶດຫົວຂື້ນ | ໄດ້ຝຶດຫົວຂື້ນ. |
| ໑໑໔ | ໑໔໖ | ໒ | ສອຍໝົດ, | ສອຍໝົດ. |
| ໑໑໕ | ໑໔໖ | ໘ | ນາກໄວ້, | ນາກໄວ້ . |
| ໑໑໖ | ໑໔໖ | ໑໒ | ຄັວດນັ້ນ, | ຄັວດນັ້ນ. |
| ໑໑໗ | ໑໔໗ | ໑ | "ສານລຶບພະສູນ", | "ສານລຶບພະສູນ." |
| ໑໑໘ | ໑໔໗ | ໒ | ນາຍຄວາມ | ໝາຍຄວາມ |
| ໑໑໙ | ໑໔໘ | ໘ | (໑໓) | (໑໒) |
| ໑໒໐ | ໑໔໙ | ໑໔ | ລະຊະ | ລະລາຊະ |
| ໑໒໑ | ໑໔໙ | ໑໖ | ລຳເນົາ, | ລຳເນົາ. |
| ໑໒໒ | ໑໕໓ | ໑໒ | ວຽງຈັນ | ວຽງຈັນ" |
| ໑໒໓ | ໑໕໓ | ໑໓ | ສາໄທ" | ສາໄທ |
| ໑໒໔ | ໑໕໗ | ໒ | ປລິນຍາ | ປລິນຍາເອກ |
| ໑໒໕ | ໑໕໗ | ໑໗ | ພັດທະນາ | ພັດທະນາ, |

<u>ພາຍເຫດ</u> : ສະບັບຂອງ ສ.ເດຊາ ເປັນ "ສານລຶບບໍ່ສູນ" ບໍ່ເປັນ "ສານລຶບພະສູນ".

ພວກຂ້າພະເຈົ້າຄິດວ່າປຶ້ມຫົວນີ້ຍັງບໍ່ທັນສົມບູນ, ແຕ່ເນື່ອງຈາກຄວາມຟ້າວຟັ່ງ, ອາດຈະມີອັນໃດຂາດຕົກບົກພ່ອງໃນທຸກດ້ານ, ພວກຂ້າພະເຈົ້າຂໍອະໄພແລະຂໍຄວາມເຫັນໃຈຈາກບັນດາທ່ານຜູ້ອ່ານ ທຸກທ່ານ. ອີກຢ່າງໜຶ່ງກໍ່ເປັນຄັ້ງທຳອິດໃນຊີວິດຂອງພວກຂ້າພະເຈົ້າທີ່ໄດ້ຄົ້ນຄ້ວາແລະພິມປຶ້ມໃນປະເພດນີ້.

ປະຫວັດສາດກ່ຽວກັບເຈົ້າອະນຸຍັງບໍ່ທັນໝົດເພາະເປັນ" ເລື່ອງເກົ່າ, ບັນຫາໃໝ່". ການຄົ້ນຄ້ວາຍັງຈະສືບຕໍ່ແລະ ຈະໃຫ້ໄດ້ພິມຢ່າງຄົບຖ້ວນກວ່ານີ້, ຖ້າຫາກວ່າພວກເຮົາມີເງື່ອນໄຂໃນດ້ານການພິມ.

<u>ຄຳຂອບໃຈ</u>

ປຶ້ມຫົວນີ້ໄດ້ອອກມາສູ່ສາຍຕາທ່ານຜູ້ອ່ານ, ນັກຣຽນ, ນັກສຶກສາ, ພະນັກງານ, ນັກຄົ້ນຄ້ວາ ແລະ ນັກປະຫວັດສາດ, ໄດ້ໃນຄັ້ງນີ້ກໍ່ຍ້ອນຄວາມຊ່ວຍເຫລືອທຸກໆດ້ານຂອງເພື່ອນ ແລະ ບັນດາອາຈານຕ່າງໆ. ດັ່ງນັ້ນພວກຂ້າພະເຈົ້າທັງສອງ, ຈຶ່ງຂໍຖືໂອກາດນີ້ຂອບໃຈຢ່າງສຸດໃຈນຳທ່ານສີຊະນະສີສານ, ລັດຖະມົນຕີ, ປະທານ ຄະນະກຳມະການວິທະຍາສາດແລະສັງຄົມແຫ່ງຊາດທີ່ໄດ້ກວດແລະຂຽນຄຳນຳໃຫ້; ທ່ານທອງສິງທຳມະວົງ, ລັດຖະມົນຕີກະຊວງວັດທະນະທຳທີ່ໄດ້ໃຫ້ອະນຸຍາດ; ທ່ານຫົວໜ້າແລະຄະນະກົມພິມຈຳໜ່າຍ ແລະ ເພື່ອນໄກ້ຊິດພ້ອມດ້ວຍອາຈານອື່ນໆທີ່ຢູ່ໃກ້ ແລະ ຢູ່ໄກໄດ້ໃຫ້ຄວາມຊ່ວຍເຫລືອທຸກດ້ານແກ່ພວກເຮົາ ແລະ ພວກຂ້າພະເຈົ້າບໍ່ລືມອີກໄດ້ກໍ່ແມ່ນທາງຄະນະເຕັກນິກ ແລະ ອ້າຍເອື້ອຍນ້ອງຂອງສຳນັກ ໂຮງພິມແຫ່ງລັດທີ່ໄດ້ເອົາໃຈໃສ່ເປັນພິເສດ.